# ເຫດການກ່ອນໜ້າ,ອຸປະຕິເຫດ ແລະ ຜົນກະທົບ

## ການສຶກສາແບບວິທີການປະສົມປະສານຜູ້ລອດຊີວິດຜູ້ໃຫຍ່ ແລະ ເດັກນ້ອຍ ຈາກອຸປະຕິເຫດ ລບຕ ໃນຊ່ວງປີ 2020-2024 ໃນຢູ່ ສປປ ລາວ

ທັນວາ 2025

ສະໜັບສະໜູນໂດຍ:

ກະກຽມໂດຍ:

## ສົ່ງບົດລາຍງານໃຫ້:

ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ
ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ)
ບ້ານໜອງບອນ,ເມືອງໄຊເສດຖາ
ຕູ້ ປ.ນ 7261
ນະຄອນຫຼວງວຽງຈັນ
ສປປ ລາວ

## ກະກຽມໂດຍ:

ສະຖາບັນວິໄຈ ແລະ ຝຶກອົບຮົມ JSI, Inc.
44 ຖະໜົນ Farnsworth St.
ບອສຕັນ, MA 02210
ສະຫະລັດອາເມລິກາ

# ຄຳຂອບໃຈ

ພວກເຮົາຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈ ກະຊວງການຕ່າງປະເທດ ແລະ ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ອົງການສະຫະປະຊາຊາດເພື່ອການພັດທະນາ, ອົງການ ຢູນິເຊັບ ປະຈຳ ສປປ ລາວ, ສຳລັບການສະໜັບສະໜູນໃນການສຶກສາຄົ້ນຄ້ວາຄັ້ງນີ້ ແລະ ສຳລັບຄວາມມຸ່ງໝັ້ນຂອງເຂົາເຈົ້າໃນການແກ້ໄຂບັນຫາກ່ຽວກັບ ລະເບີດບໍ່ທັນແຕກທີ່ຕົກຄ້າງຢ່າງຕໍ່ເນື່ອງ. ພວກເຮົາຂໍຂອບໃຈມາຍັງກະຊວງ ການຕ່າງປະເທດ ແລະ ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ສຳລັບການປະສານງານ ແລະ ການຕິດຕາມ, ໂດຍສະເພາະແມ່ນຂໍຂອບໃຈເປັນຢ່າງຍິ່ງມາຍັງ ຫ້ອງການ ຄຊກລ ສຳລັບການຮ່ວມມືຢ່າງໃກ້ຊິດ ແລະ ການປະກອບຂໍ້ມູນເຂົ້າໃນຂັ້ນຕອນຕ່າງໆຂອງການສຶກສາຄົ້ນຄ້ວາ ນັບຕັ້ງແຕ່ການທົບທວນເຄື່ອງມືການສຶກສາຄົ້ນຄ້ວາ, ການເກັບກຳຂໍ້ມູນ, ການວິເຄາະ ແລະ ການຕີຄວາມໝາຍຂອງຂໍ້ມູນ. ພວກເຮົາຂໍຂອບໃຈອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ອົງການ ຢູນິເຊັບ ປະຈຳ ສປປ ລາວ ທີ່ໄດ້ໃຫ້ການຊ່ວຍເຫຼືອດ້ານງົບປະມານໃນຄວາມພະຍາຍາມທີ່ສຳຄັນຄັ້ງນີ້ ແລະ ຂອບໃຈສຳລັບການສະໜອງຂໍ້ມູນທີ່ເລິກເຊິ່ງດ້ານວິຊາການ ເຊິ່ງຊ່ວຍໃຫ້ພວກເຮົາສາມາດກຳນົດທິດທາງໃນການສຶກສາຄົ້ນຄ້ວາຄັ້ງນີ້.

ພວກເຮົາຂໍສະແດງຄວາມຊົມເຊີຍ, ຂອບໃຈ ແລະ ຍ້ອງຍໍຜູ້ເຂົ້າຮ່ວມໃນການສຶກສາຄົ້ນຄ້ວາຄັ້ງນີ້ ລວມທັງຜູ້ໃຫຍ່ ແລະ ເດັກຜູ້ລອດຊີ ວິດຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ຜູ້ເບິ່ງແຍງເດັກຈາກແຂວງ ຊຽງຂວາງ, ສະຫວັນນະເຂດ, ຄຳມ່ວນ, ສາລະວັນ ແລະ ເຊກອງ. ຖ້າບໍ່ມີການປະກອບສ່ວນຂອງເຂົາເຈົ້າ, ການສຶກສາຄົ້ນຄວ້າຄັ້ງນີ້ຈະບໍ່ສາມາດປະສົບຜົນສຳເລັດໄດ້. ພວກເຮົາຂອບໃຈສຳລັບການເສຍສະລະເວລາ ແລະ ຄວາມກ້າຫານຂອງພວກທ່ານໃນການແບ່ງປັນເລື່ອງລາວຕ່າງໆຂອງພວກທ່ານ. ພວກເຮົາຫວັງເປັນຢ່າງຍິ່ງວ່າບົດລາຍງານສະບັບນີ້ຈະເປັນແຮງບັນດານໃຈໃຫ້ມີການຈັດຕັ້ງປະຕິບັດໃນອະນາຄົດທີ່ເປັນຜົນເນື່ອງມາຈາກການປະກອບສ່ວນຂອງພວກທ່ານ ໃນການປ້ອງກັນອຸປະຕິເຫດ ແລະ ການສະໜັບສະໜູນຜູ້ລອດຊີວິດຈາກອຸປະຕິເຫດທີ່ເກີດຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ໃຫ້ດີຂຶ້ນ.

ສຸດທ້າຍ, ພວກເຮົາຂໍສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ທຸກຄົນ, ບໍ່ວ່າຈະເປັນບັນດາບຸກຄົນທີ່ໄດ້ກ່າວມາແລ້ວ ຫຼື ບໍ່ໄດ້ກ່າວເຖິງກໍ່ຕາມທີ່ເສຍສະລະເວລາ, ປະກອບສ່ວນດ້ານຄວາມຊ່ຽວຊານ ແລະ ການສະໜັບສະໜູນອື່ນໆ ເພື່ອເຮັດໃຫ້ຄວາມພະຍາຍາມໃນການສຶກສາຄົ້ນຄວ້ານີ້ ແລະ ການຂຽນບົດລາຍງານຄັ້ງນີ້ ປະສົບຜົນສຳເລັດ.

# ຄຳນຳ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຍັງໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກລະເບີດບໍ່ທັນແຕກທີ່ຕົກຄ້າງແຕ່ປາງສົງຄາມ (ລບຕ). ໃນທົ່ວປະທດ, ໂດຍສະເພາະໃນເຂດຊົນນະບົດຫ່າງໄກສອກຫຼີກ ແລະ ພື້ນທີ່ ທີ່ມີຄວາມຫຼາກຫຼາຍທາງດ້ານຊົນຊາດຊົນເຜົ່າ, ລະເບີດບໍ່ທັນແຕກທີ່ຕົກຄ້າງ ຍັງສືບຕໍ່ເປັນໄພຂົ່ມຂູ່ຕໍ່ຊີວິດ, ເປັນອຸປະສັກຕໍ່ວິຖີການດຳລົງຊີວິດແບບກະສິກຳ, ຈຳກັດການພັດທະນາ ແລະ ສ້າງພາລະອັນໜັກໜ່ວງໃຫ້ກັບຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າ. ເຖິງແມ່ນວ່າມີຄວາມຄືບໜ້າໃນດ້ານການສຳຫຼວດກວດກູ້, ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ, ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ, ແຕ່ສິ່ງທ້າທາຍເຫຼົ່ານີ້ ຍັງສືບຕໍ່ສົ່ງຜົນກະທົບຕໍ່ການດຳລົງຊີວິດປະຈຳວັນຂອງປະຊາຊົນເຮົາ.

ບົດລາຍງານ *ເຫດການກ່ອນໜ້າ, ອຸບັດຕິເຫດ ແລະ ຜົນກະທົບ: ການສຶກສາແບບປະສົມປະສານກ່ຽວກັບຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກນ້ອຍ ຈາກອຸບັດຕິເຫດຈາກ ລບຕ ໃນ ສປປ ລາວ* ໃນລະຫວ່າງປີ 2020–2024 ໃຫ້ຂໍ້ມູນທີ່ສຳຄັນກ່ຽວກັບສິ່ງທ້າທາຍເຫຼົ່ານີ້ທີ່ກຳລັງດຳເນີນຢູ່. ຜ່ານການມີສ່ວນຮ່ວມໂດຍກົງກັບຜູ້ລອດຊີວິດ, ລວມທັງເດັກນ້ອຍ ແລະ ໄວໜຸ່ມ ທີ່ທັດສະນະຂອງພວກເຂົາຖືກເບິ່ງຂ້າມຕະຫຼອດມາ, ການສຶກສາຄັ້ງນີ້ ນຳສະເໜີຄວາມເຂົ້າໃຈເຊີງຫຼັກຖານກ່ຽວກັບການເກີດອຸບັດຕິເຫດຈາກ ລບຕ, ສະຖານະການໃດທີ່ເຮັດໃຫ້ບຸກຄົນມີຄວາມສ່ຽງ ແລະ ວິທີການທີ່ຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າຮັບມືກັບມັນໃນປີຕໍ່ໆໄປ. ຜົນການສຶກສາ ຊີ້ໃຫ້ເຫັນເຖິງບັນຫາທີ່ຍັງຄົງຄ້າງຢູ່ ເຊັ່ນ: ຄວາມຊັກຊ້າໃນການເຂົ້າເຖິງການດູແລທາງການແພດ, ຂໍ້ຈຳກັດໃນການບໍລິການຟື້ນຟູສຸຂະພາບ, ຜົນກະທົບທາງດ້ານຈິດຕະສັງຄົມ ແລະ ການສູນເສຍວິຖີການດຳລົງຊີວິດໃນໄລຍະຍາວ. ສິ່ງເຫຼົ່ານີ້ຍັງສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ອຸບັດຕິເຫດຈາກ ລບຕ ບໍ່ແມ່ນເກີດຂຶ້ນໂດຍບັງເອີນ, ແຕ່ມັນກ່ຽວພັນຢ່າງເລິກເຊິ່ງກັບຄວາມບອບບາງທາງດ້ານເສດຖະກິດ-ສັງຄົມ, ວິຖີການດຳລົງຊີວິດແບບຊົນນະບົດ ແລະ ຊ່ອງຫວ່າງໃນການຮັບຮູ້ ແລະ ການບໍລິການ.

ບົດລາຍງານສະບັບນີ້ ນຳສະເໜີອົງຄວາມຮູ້ທີ່ສຳຄັນເພື່ອເປັນແນວທາງໃນການດຳເນີນງານລະດັບຊາດ ເພື່ອບັນລຸເປົ້າ ໝາຍ **" ເສັ້ນທາງກ້າວສູ່ຄວາມປອດໄພ III (2021–2030) "** ແລະ ເປົ້າໝາຍການພັດທະນາແບບຍືນຍົງ ທີ 18: **"ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ".** ການສຶກສາຄົ້ນຄວ້າເໜັ້ນໜັກເຖິງຄວາມສຳຄັນຂອງການສ້າງຄວາມເຂັ້ມແຂງໃນການປະສານງານລະຫວ່າງອົງການປະຕິບັດງານພາກລັດ, ຄູ່ຮ່ວມພັດທະນາ ແລະ ຊຸມຊົນທ້ອງຖິ່ນ ເພື່ອໃຫ້ໝັ້ນໃຈວ່າ ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຖືກຕອບສະໜອງໄດ້ວ່ອງໄວຂຶ້ນ, ການຊ່ວຍເຫຼືອຜູ້ເຄາະຮ້າຍແບບປະສົມປະສານ ແລະ ການສະໜັບສະໜູນດ້ານການດຳລົງຊີວິດທີ່ຖືກເປົ້າໝາຍ. ປະເດັນສຳຄັນຄື ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບປະສົບການຂອງເດັກນ້ອຍ, ໂດຍເໜັ້ນໜັກເຖິງຄວາມຈຳເປັນໃນການໃຊ້ແນວທາງທີ່ເໜັ້ນເດັກນ້ອຍເປັນສູນກາງ ທັງໃນດ້ານການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແລະ ການສະໜັບສະໜູນໄລຍະຍາວ.

ໃນນາມ ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດທີ່ຕົກຄ້າງ ຢູ່ ສປປ ລາວ, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), ກອງທຶນຊ່ວຍເຫຼືອເດັກແຫ່ງສະຫະປະຊາຊາດ (UNICEF) ແລະ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ JSI ສຳລັບການຮ່ວມມືທີ່ເຂັ້ມແຂງ ແລະ ການນຳພາດ້ານວິຊາການຕະຫຼອດການສຶກສາຄົ້ນຄວ້ານີ້. ນອກນັ້ນ, ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ຜູ້ລອດຊີວິດ ແລະ ຄອບຄົວ ທີ່ໄດ້ແບ່ງປັນປະສົບການຂອງເຂົາເຈົ້າຢ່າງກ້າຫານ, ລວມທັງອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ ທີ່ໄດ້ໃຫ້ການສະໜັບສະໜູນຂະບວນການສຶກສາຄົ້ນຄວ້ານີ້.

ໃນຖານະທີ່ເປັນອົງການປະຕິບັດງານພາກລັດ ທີ່ໄດ້ຮັບມອບໝາຍໃຫ້ປະສານງານໃນຂະແໜງການແກ້ໄຂບັນຫາ ລບຕ, ຫ້ອງການ ຄຊກລ ໃຫ້ຄຳໝັ້ນສັນຍາຈະນຳໃຊ້ຜົນການຄົ້ນຄວ້າ ແລະ ຂໍ້ສະເໜີແນະຈາກການສຶກສາຄັ້ງນີ້ ເພື່ອເສີມສ້າງນະໂຍບາຍ, ປັບປຸງການໃຫ້ບໍລິການ ແລະ ສະໜັບສະໜູນໃຫ້ມີການເພີ່ມຊັບພະຍາກອນ ເພື່ອຮັບປະກັນວ່າ ບໍ່ມີຜູ້ລອດຊີວິດຖືກປະຖິ້ມໄວ້ທາງຫຼັງ ແລະ ຊຸມຊົນທີ່ມີຄວາມສ່ຽງສູງ ຈະໄດ້ຮັບການສະໜັບສະໜູນຢ່າງທັນການ ແລະ ມີປະສິດທິພາບ. ບົດລາຍງານສະບັບນີ້ ເປັນທັງການຮຽກຮ້ອງໃຫ້ມີການປະຕິບັດ ແລະ ທັງເປັນແຜນງານ ເພື່ອສົ່ງເສີມຄວາມຮັບຜິດຊອບຮ່ວມກັນຂອງພວກເຮົາໃນການປົກປ້ອງຊີວິດ, ສົ່ງເສີມການພັດທະນາແບບມີສ່ວນຮ່ວມ ແລະ ນຳພາ ສປປ ລາວ ໃຫ້ກ້າວສູ່ອະນາຄົດທີ່ປົດສະຈາກຄວາມອັນຕະລາຍຈາກ ລບຕ.

**ບຸນເພັງ ສີສະຫວັດ**

ຫົວໜ້າຫ້ອງການ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ

# ສາລະບານ


ຄຳຂອບໃຈ........................................................................................................3

ຄຳນຳ..............................................................................................................4

ບັນດາຮູບພາບ ແລະ ຕາຕະລາງ...........................................................................7

ຕົວຫຍໍ້ & ຄຳຫຍໍ້...............................................................................................8

ບົດສະຫຼຸບຫຍໍ້....................................................................................................9

ພາກແນະນຳ.....................................................................................................17

ວິທີການ..........................................................................................................24

ຄຳຖາມບົດຄົ້ນຄ້ວາ ທີ 1: ມີສະຖານະການສະເພາະໃດແດ່ກ່ຽວຂ້ອງກັບອຸປະຕິເຫດ ແລະ ແມ່ນສະຖານະການໃດທີ່ນຳໄປສູ່ການເກີດອຸປະຕິເຫດ?.....32

ຄຳຖາມບົດຄົ້ນຄວ້າ ທີ 2: ຜູ້ຖືກເຄາະຮ້າຍກຳລັງເຮັດຫຍັງໃນເວລາເກີດອຸປະຕິເຫດ ແລະ ມີໃຜແດ່ທີ່ກ່ຽວຂ້ອງກັບອຸປະຕິເຫດ? .....41

ຄຳຖາມບົດຄົ້ນຄວ້າ ທີ 3: ຜູ້ຖືກເຄາະຮ້າຍມີຄວາມຮູ້ຫຍັງແດ່ກ່ຽວກັບຂໍ້ຄວາມສຳຄັນ ໃນການສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກລະເບີດ ແລະ ຖ້າຂໍ້ຄວາມສຳຄັນເຫຼົ່ານັ້ນບໍ່ໄດ້ຖືກນຳໃຊ້ຍ້ອນຫຍັງຈຶ່ງບໍ່ນຳໃຊ້?.....48

ຄຳຖາມບົດຄົ້ນຄ້ວາ ທີ4: ຜູ້ຖືກເຄາະຮ້າຍຈາກອຸປະຕິເຫດມີຄວາມຕ້ອງການ ການຊ່ວຍເຫຼືອດ້ານການບາດເຈັບ ແລະ ການຟື້ນຟູໜ້າທີ່ການຂອງເຂົາເຈົ້າ ແນວໃດແດ່ຫຼັງຈາກເກີດອຸປະຕິເຫດ ແລະ ເຂົາເຈົ້າໄດ້ຮັບການຕອບສະໜອງຊ່ວຍເຫຼືອໃນລະດັບໃດ ແລະ ຊ່ວຍແນວໃດ?63

ຄຳຖາມບົດຄົ້ນຄ້ວາ ທີ 5: ຜູ້ເຄາະຮ້າຍສາມາດໄດ້ຮັບການຢັ້ງຢືນຄວາມພິການຈາກລັດຖະບານ ຫຼື ບໍ່? ຜູ້ເຄາະຮ້າຍຮູ້ວ່າເຂົາເຈົ້າມີສິດໄດ້ຮັບການຊ່ວຍເຫຼືອອັນໃດແດ່ກ່ຽວກັບດ້ານຄວາມພິການ?.....85

ຄຳຖາມບົດຄົ້ນຄ້ວາ ທີ6:. ອຸປະຕິເຫດ ມີຜົນກະທົບໃນໄລຍະຍາວ ຕໍ່ຊີວິດການເປັນຢູ່ຂອງຜູ້ລອດຊີວິດ ແລະ ຄອບຄົວເຂົາເຈົ້າ ແນວໃດແດ່ ແລະ ເຂົາເຈົ້າມີສ່ວນຮ່ວມໃນໂຄງການສະໜັບສະໜູນການດຳລົງຊີວິດ ໂຄງການໃດແດ່? .....89

ຄຳຖາມບົດຄົ້ນຄ້ວາ ທີ7:. ຍຸດທະສາດຂອງອຳນາດການປົກຄອງທ້ອງຖິ່ນໃນການສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ມີຫຍັງແດ່?.....109

ຄຳຖາມບົດຄົ້ນຄ້ວາ ທີ 8: ຜູ້ເຄາະຮ້າຍຈາກ ລບຕ ຮູ້ສຶກວ່າເຂົາເຈົ້າຕ້ອງການການຊ່ວຍເຫຼືອອັນໃດແດ່ ເພື່ອປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ?.....115

ສະຫຼຸບ..........................................................................................................121

ເອກະສານອ້າງອີງ ..............................................................................................122

ເອກະສານຊ້ອນທ້າຍ ກ:......................................................................................128

ເອກະສານຊ້ອນທ້າຍ ຂ: ຕາຕະລາງເພີ່ມເຕີມ ..........................................................217

# ບັນດາຮູບພາບ ແລະ ຕາຕະລາງ

ຮູບທີ 1: ຈຳນວນກຸ່ມປະຊາກອນຕົວຢ່າງ ຂອງຜູ້ລອດຊີວິດຜູ້ໃຫຍ່ແລະເດັກນ້ອຍ, ປຽບທຽບກັບຈຳນວນຜູ້ຖືກເຄາະຮ້າຍທີ່ບາດເຈັບທັງ ໝົດ ໃນ ສປປ ລາວ ຕາມປີເກີດອຸປະຕິເຫດ ..... 27
ຮູບທີ 2: ອຸປະຕິເຫດ ລບຕ ສ່ວນຫຼາຍແມ່ນເກີດຂຶ້ນຢູ່ທົ່ງໄຮທົ່ງນາ, ໃນເຮືອນ ແລະ ໃນໝູ່ບ້ານ. ..... 37
ຮູບທີ 3: ກິດຈະກຳທີ່ຜູ້ລອດຊີວິດກຳລັງເຮັດໃນຂະນະທີ່ລະເບີດແຕກ ..... 42
ຮູບທີ 4: ເຫດຜົນໃນການດັງ/ຈູດໄຟທີ່ເປັນການກະຕຸ້ນ ລບຕ ..... 44
ຮູບທີ 5: ແຫຼ່ງຂໍ້ມູນສຳລັບການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ກ່ອນອຸປະຕິເຫດ (ໃນກຸ່ມຜູ້ທີ່ມີຄວາມຮູ້ກ່ຽວກັບ ລບຕ) ..... 53
ຮູບທີ 6: ຂໍ້ມູນການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ທີ່ຜູ້ລອດຊີວິດໄດ້ຍິນກ່ຽວກັບ ລບຕ ກ່ອນເກີດອຸປະຕິເຫດ (ເປີເຊັນຂອງຜູ້ລອດ ຊີວິດທັງໝົດ) ..... 54
ຮູບທີ 7: ປະເພດຂອງການດູແລ ແລະ ການປິ່ນປົວທາງການແພດທີ່ຜູ້ໃຫຍ່ ແລະ ເດັກໄດ້ຮັບ ..... 70
ຮູບທີ 8: ຊີວິດການເປັນຢູ່ຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ນັບຕັ້ງແຕ່ເກີດອຸປະຕິເຫດ ລບຕ ..... 78
ຮູບທີ 9: ບັນດາລາຍການໃຊ້ຈ່າຍຕ່າງໆໃນໄລຍະກ່ອນ ແລະ ຫຼັງເກີດອຸປະຕິເຫດ ລບຕ ..... 92
ຮູບທີ 10: ສິ່ງຂອງທີ່ຄອບຄົວຜູ້ລອດຊີວິດ ເປັນເຈົ້າຂອງໃນໄລຍະກ່ອນ ແລະ ຫຼັງເກີດອຸປະຕິເຫດ ລບຕ ..... 93
ຮູບທີ 11: ລາຍຮັບຕໍ່ເດືອນ ແລະ ໜີ້ສິນຂອງຄົວເຮືອນໃນໄລຍະກ່ອນ ແລະ ຫຼັງເກີດອຸປະຕິເຫດ ລບຕ ..... 97

ຕາຕະລາງທີ 1: ຂະໜາດກຸ່ມປະຊາກອນຕົວຢ່າງຂອງຜູ້ລອດຊີວິດຈາກ ລບຕ ແຍກຕາມແຂວງ ..... 26
ຕາຕະລາງທີ 2: ກຸ່ມປະຊາກອນຕົວຢ່າງຂອງພະນັກງານລັດແຍກຕາມແຂວງ ແລະ ລະດັບຂອງພາລະບົດບາດ ..... 27
ຕາຕະລາງທີ 3: ຊົນເຜົ່າ ແລະ ສາດສາໜາ ຂອງກຸ່ມປະຊາກອນຕົວຢ່າງ ..... 34
ຕາຕະລາງທີ 4: ພາສາຫຼັກທີ່ໃຊ້ ແລະ ຄວາມຄ່ອງແຄ້ວໃນການໃຊ້ພາສາລາວ ..... 34
ຕາຕະລາງທີ 5: ຜູ້ລອດຊີວິດມີການເຄື່ອນໄຫວແນວໃດ ໃນເວລາທີ່ເກີດການລະເບີດຂອງ ລບຕ ..... 43
ຕາຕະລາງທີ 6: ສິ່ງທີ່ກະຕຸ້ນໃຫ້ລະເບີດແຕກໃນຂະນະທີ່ເກີດອຸປະຕິເຫດ ..... 43
ຕາຕະລາງທີ 7: ຄຸນລັກສະນະຫຼັກໃນກຸ່ມຜູ້ລອດຊີວິດທົ່ວໄປທັງໝົດ ແລະ ສະເພາະຜູ້ທີ່ໄດ້ຮັບການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ . 50
ຕາຕະລາງທີ 8: ໄລຍະເວລາທີ່ໄດ້ຮັບການປິ່ນປົວທາງການແພດ ແລະ ລະດັບການປິ່ນປົວທີ່ໄດ້ຮັບຫຼັງຈາກເກີດອຸປະຕິເຫດ ລບຕ ..... 65
ຕາຕະລາງທີ 9: ຄວາມສາມາດໃນການເຮັດກິດຈະກຳ ປະຈຳວັນນັບຕັ້ງແຕ່ເກີດອຸປະຕິເຫດ ລບຕ ..... 72
ຕາຕະລາງທີ 10: ຄວາມສາມາດໃນການດູແລສຸຂະອະນາໄມປະຈຳວັນນັບຕັ້ງແຕ່ເກີດອຸບັດເຫດ ລບຕ ..... 75
ຕາຕະລາງທີ 11: ແຫຼ່ງລາຍຮັບຫຼັກໃນຄົວເຮືອນໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ ສຳລັບຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ..... 94
ຕາຕະລາງທີ 12: ແຫຼ່ງລາຍຮັບຫຼັກໃນຄົວເຮືອນໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ ສຳລັບຜູ້ລອດຊີວິດທີ່ເປັນເດັກ ..... 95
ຕາຕະລາງທີ 13: ຈຳນວນໜີ້ສິນໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ ຂອງຄົວເຮືອນຜູ້ໃຫຍ່ ແລະ ເດັກ ..... 98
ຕາຕະລາງທີ 14: ຜູ້ລອດຊີວິດທີ່ໄດ້ຮັບການສະໜັບສະໜູນ ແລະ ຈຳນວນແຫຼ່ງທີ່ໄດ້ຮັບການສະໜັບສະໜູນ (ຈາກລັດຖະບານ, ອົງການຈັດຕັ້ງທີ່ ບໍ່ສັງກັດລັດຖະບານ ແລະ ຄະນະກຳມະການຂັ້ນບ້ານ ..... 102
ຕາຕະລາງທີ 15: ຈຳນວນ ແລະ ສັດສ່ວນຂອງຜູ້ລອດຊີວິດທີ່ໄດ້ຮັບການສະໜັບສະໜູນ ແລະ ປະເພດຂອງການສະໜັບສະໜູນ ..... 102

# ຕົວຫຍໍ້ & ຄຳຫຍໍ້

| | |
|---|---|
| EORE | ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ |
| IRB | ຄະນະກຳມະການກວດກາຈັນຍາບັນການຄົ້ນຄ້ວາ |
| JSI | ສະຖາບັນວິໄຈ ແລະ ຝຶກອົບຮົມ JSI, Inc. |
| KOICA | ອົງການຮ່ວມມືສາກົນຂອງສາທາລະນະລັດເກົາຫຼີ (KOICA) |
| LAK | ເງິນກີບລາວ (ສະກຸນເງິນຂອງປະເທດ ລາວ) |
| LDPA | ສະມາຄົມຄົນພິການລາວ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| MOFA | ກະຊວງການຕ່າງປະເທດ |
| MoLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| NCPD | ຄະນະກຳມະການແຫ່ງຊາດສຳລັບຄົນພິການ |
| NGO | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ |
| NRA | ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) |
| PTSD | ຄວາມຄຽດຫຼັງເກີດເຫດການສະເທືອນໃຈ |
| QLA | ສະມາຄົມຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດ |
| SDG | ເປົ້າໝາຍການພັດທະນາແບບຍືນຍົງ |
| SPF III | ເສັ້ນທາງກ້າວສູ່ຄວາມປອດໄພ III |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |
| UNICEF | ອົງການ ຢູນິເຊັບ |
| USAID | ອົງການພັດທະນາສາກົນຂອງສະຫະລັດອາເມລິກາ |
| UXO | ລະເບີດບໍ່ທັນແຕກ |

# ບົດສະຫຼຸບຫຍໍ້

ບົດລາຍງານສະບັບນີ້ນຳສະເໜີຜົນການສຶກສາຄົ້ນຄ້ວາໂດຍໃຊ້ວິທີການແບບປະສົມປະສານລະຫວ່າງການສຶກສາຄົ້ນຄວ້າສະຖານະການ, ປັດໄຈທີ່ເຮັດໃຫ້ເກີດອຸປະຕິເຫດ ແລະ ຜົນກະທົບຂອງອຸປະຕິເຫດທີ່ເກີດຈາກລະເບີດບໍ່ທັນແຕກ (ລບຕ) ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ການສຶກສານີ້ ແມ່ນໄດ້ຮັບມອບໝາຍຈາກຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແລະ ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ອົງການຢູນິເຊັບ ປະຈຳ ສປປ ລາວ ມີຈຸດປະສົງເພື່ອເປັນຂໍ້ມູນພື້ນຖານສຳລັບຄວາມພະຍາຍາມໃນລະດັບຊາດ ແລະ ໃນຂະແໜງການຕ່າງໆ ເພື່ອສ້າງຄວາມເຂັ້ມແຂງໃນການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍ ໂດຍອີງໃສ່ຫຼັກຖານ.

ໃນຖານະທີ່ເປັນປະເທດໜຶ່ງໃນໂລກທີ່ຖືກຖິ້ມລະເບີດໃສ່ຢ່າງໜັກໜ່ວງທີ່ສຸດຕໍ່ຫົວຄົນ, ລາວຍັງສືບຕໍ່ປະເຊີນກັບໄພຂົ່ມຂູ່ຈາກລະເບີດບໍ່ທັນແຕກປະມານ 80 ລ້ານໜ່ວຍ, ໂດຍມີຄວາມສ່ຽງຈາກລະເບີດທີ່ຕົກຄ້າງ ແລະ ອຸປະຕິເຫດທີ່ເກີດຂຶ້ນໃນຊຸມຊົນທີ່ທຸກຍາກ, ໃນເຂດຊົນນະບົດ ແລະ ໃນກຸ່ມຊົນເຜົ່າ. ອຸປະຕິເຫດຈາກ ລບຕ ສາມາດເຮັດໃຫ້ເກີດບັນຫາທີ່ຮ້າຍແຮງ ແລະ ຢ່າງຕໍ່ເນື່ອງຕໍ່ຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າ ລວມທັງຄວາມພິການທາງຮ່າງກາຍ, ບາດແຜທາງດ້ານຈິດໃຈ, ການຢຸດການສຶກສາ ແລະ ການສູນເສຍລາຍໄດ້.

ການສຶກສາຄົ້ນຄວ້າແບບປະສົມປະສານນີ້ ແນໃສ່ການຫຼຸດຊ່ອງຫວ່າງຂອງການສຶກສາຄົ້ນຄວ້າທີ່ເຮັດມາກ່ອນໜ້ານີ້ ໂດຍການມີສ່ວນຮ່ວມໂດຍກົງກັບຜູ້ລອດຊີວິດ 50 ຄົນ (ຜູ້ລອດຊີວິດທີ່ທີ່ເປັນຜູ້ໃຫຍ່ 32ຄົນ ແລະ ຜູ້ລອດຊີວິດທີ່ເປັນເດັກ 18ຄົນ) ຈາກ 5ແຂວງທີ່ມີອຸປະຕິເຫດເກີດຂຶ້ນຫຼາຍ ເພື່ອໃຫ້ເຂົ້າໃຈກ່ຽວກັບທັດສະນະຂອງຜູ້ລອດຊີວິດ ກ່ຽວກັບສະພາບອຸປະຕິເຫດ ແລະ ຜົນກະທົບຈາກອຸປະຕິເຫດ ລບຕ.

ບົດລາຍງານສະບັບນີ້ ໄດ້ຖືກຈັດອອກເປັນໝວດໝູ່ຕາມຫົວຂໍ້ຕ່າງໆ ທີ່ສອດຄ່ອງກັບຄຳຖາມສຳລັບການສຶກສາຄົ້ນຄວ້າທັງ 8 ຫົວຂໍ້, ໂດຍມີການຈັດກຸ່ມຜົນໄດ້ຮັບຈາກການສຶກສາຄົ້ນຄວ້າ, ການສົນທະນາ ແລະ ຂໍ້ສະເໜີແນະເຂົ້ານຳກັນຕາມຄຳຖາມສຶກສາຄົ້ນຄວ້າ. ຄຳຖາມສຳລັບການສຶກສາຄົ້ນຄວ້າທັງ 8 ຫົວຂໍ້, ຜົນການສຶກສາຄົ້ນຄວ້າທີ່ສຳຄັນໃນແຕ່ລະຫົວຂໍ້ ແລະ ຂໍ້ສະເໜີແນະທີ່ກ່ຽວຂ້ອງ ໄດ້ຖືກສະຫຼຸບໄວ້ຢູ່ຂ້າງລຸ່ມນີ້.

## ຄຳຖາມ ທີ 1: ມີສະຖານະການສະເພາະໃດແດ່ກ່ຽວຂ້ອງກັບອຸປະຕິເຫດ ແລະ ແມ່ນສະຖານະການໃດ ທີ່ນຳໄປສູ່ການເກີດອຸປະຕິເຫດ?

**ຜົນໄດ້ຮັບທີ່ສຳຄັນ:**

- **ຄວາມສ່ຽງທາງດ້ານສັງຄົມ ແລະ ປະຊາກອນ:** ຜູ້ລອດຊີວິດສ່ວນໃຫຍ່ແມ່ນເພດຊາຍ (ຜູ້ໃຫຍ່56%, ເດັກ78%) ແລະ ເປັນຄົນຊົນເຜົ່າ ໂດຍສະເພາະແມ່ນຊົນເຜົ່າມອນ-ຂະແມ (ຜູ້ໃຫຍ່ 59%) ແລະ ຊົນເຜົ່າມົ້ງ-ມຽນ (ເດັກ 44%). ຜູ້ລອດຊີວິດສ່ວນໃຫຍ່ແມ່ນມີການສຶກສາໃນລະດັບຊັ້ນປະຖົມ ຫຼື ຕໍ່າກ່ວາຊັ້ນປະຖົມເທົ່ານັ້ນ.

- **ອຸປະຕິເຫດທີ່ສາມາດຈັດເປັນກຸ່ມໃນສະຖານທີ່ຈຶ່ງຄາດເດົາໄດ້ ສ່ວນໃຫຍ່ແມ່ນເກີດຂຶ້ນຢູ່ທົ່ງໄຮ່ທົ່ງນາ** ( ຜູ້ໃຫຍ່44%, ສໍາລັບເດັກ 33%) **ແລະ ເກີດຂຶ້ນຢູ່ເຮືອນ** (ຜູ້ໃຫຍ່31% , ສໍາລັບເດັກ 22%) ເຊິ່ງອຸປະຕິເຫດເຫຼົ່ານັ້ນມີການເຊື່ອມໂຍງໂດຍກົງກັບກິດຈະກໍາໃນການດໍາລົງຊີວິດ ແລະ ກິດຈະກໍາພາຍໃນບ້ານເຮືອນຂອງເຂົາເຈົ້າ.

**ຂໍ້ສະເໜີແນະຫຼັກ:**

- **ເຊື່ອມໂຍງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ:** ແກ້ໄຂສາເຫດຕົ້ນຕໍຂອງຄວາມສ່ຽງ ໂດຍການເຊື່ອມເອົາການໂຄສະນາປູກຈິດສໍານຶກເຂົ້າກັບການເກັບກູ້ລະເບີດ ແລະ ການສະໜັບສະໜູນຜູ້ລອດຊີວິດຢ່າງຕໍ່ເນື່ອງ ແລະ ໂດຍການເອົາຄວາມສ່ຽງຈາກລະເບີດບໍ່ທັນແຕກ ເຂົ້າເປັນປັດໄຈໜຶ່ງໃນຄວາມພະຍາຍາມຫຼຸດຜ່ອນຄວາມທຸກຍາກ ທີ່ບໍ່ສະເພາະເຈາະຈົງກັບລະເບີດບໍ່ທັນແຕກ.

- **ເຊື່ອມໂຍງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ເຂົ້າໃນການເກັບກູ້ລະເບີດ ແລະ ການຊ່ວຍເຫຼືອ** ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ເພີ່ມປະສິດທິພາບ.

## ຄໍາຖາມ ທີ 2. ຜູ້ເຄາະຮ້າຍກໍາລັງເຮັດຫຍັງຢູ່ໃນເວລາເກີດອຸປະຕິເຫດ ແລະ ມີໃຜອີກແດ່ທີ່ກ່ຽວຂ້ອງກັບອຸປະຕິເຫດ?

**ຜົນໄດ້ຮັບທີ່ສໍາຄັນ:**

- **ຄວາມສ່ຽງຂອງຜູ້ໃຫຍ່ ແມ່ນມາຈາກການດໍາລົງຊີວິດ:** ອຸປະຕິເຫດສ່ວນໃຫຍ່ທີ່ເກີດຂຶ້ນກັບຜູ້ໃຫຍ່ ແມ່ນເກີດຈາກການດັງໄຟ/ຈູດໄຟ (63%) ຫຼື ຈາກການເຮັດວຽກກະສິກໍາ (22%).

- **ຄວາມສ່ຽງຂອງເດັກ ແມ່ນເກີດຈາກການສໍາຜັດໂດຍກົງກັບລະເບີດ:** ສໍາລັບເດັກແມ່ນ 67% ຂອງອຸປະຕິເຫດແມ່ນເກີດຈາກການສໍາຜັດ, ເຕະ ຫຼື ຢຽບລະເບີດບໍ່ທັນແຕກ. ເດັກມັກຈະຫຼິ້ນ ຫຼື ເຂົ້າໃຈຜິດວ່າລະເບີດບໍ່ທັນແຕກເປັນຂອງຫຼິ້ນ.

- **ອຸປະຕິເຫດມັກຈະກ່ຽວຂ້ອງກັບຫຼາຍຄົນ ແລະ ອາດເຮັດໃຫ້ມີຜູ້ບາດເຈັບ ຫຼື ເສຍຊີວິດຫຼາຍຄົນ:** ຜູ້ລອດຊີວິດສ່ວນໃຫຍ່ແມ່ນຢູ່ກັບຄົນອື່ນໃນເວລາທີ່ເກີດອຸປະຕິເຫດ ເຊິ່ງປົກກະຕິແລ້ວແມ່ນຄົນໃນຄອບຄົວ ຫຼື ໝູ່ເພື່ອນຂອງເຂົາເຈົ້າ.

**ຂໍ້ສະເໜີແນະຫຼັກ:**

- **ປັບປຸງ ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ສໍາລັບກິດຈະກໍາສະເພາະ:** ປັບຂໍ້ຄວາມການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ໃຫ້ເຂົ້າກັບກິດຈະກໍາປະຈໍາວັນທີ່ມີຄວາມສ່ຽງສູງ ເຊັ່ນ: ການດັງໄຟ/ຈູດໄຟ ແລະ ການຂຸດດິນດ້ວຍເຄື່ອງມື ເຊິ່ງເປັນສາເຫດຂອງອຸປະຕິເຫດສ່ວນໃຫຍ່ທີ່ເກີດຂຶ້ນກັບຜູ້ໃຫຍ່.

## ຄຳຖາມ ທີ 3. ຜູ້ເຄາະຮ້າຍມີຄວາມຮູ້ຫຍັງແດ່ກ່ຽວກັບຂໍ້ຄວາມທີ່ສຳຄັນໃນການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດ ແລະ ຖ້າຂໍ້ຄວາມສຳຄັນເຫຼົ່ານັ້ນບໍ່ໄດ້ຖືກນຳມາໃຊ້ ຍ້ອນຫຍັງຈຶ່ງບໍ່ນຳໃຊ້?

**ຜົນໄດ້ຮັບທີ່ສຳຄັນ:**

- **ເດັກສ່ວນໃຫຍ່ ແລະ ໜຶ່ງສ່ວນສາມຂອງຜູ້ໃຫຍ່ ບໍ່ຮູ້ກ່ຽວກັບລະເບີດບໍ່ທັນແຕກ ກ່ອນທີ່ຈະເກີດອຸປະຕິເຫດ.** ສ່ວນໃຫຍ່ຂອງຜູ້ໃຫຍ່ (66%) ລາຍງານວ່າເຂົາເຈົ້າມີຄວາມຮູ້ກ່ຽວກັບລະເບີດບໍ່ທັນແຕກກ່ອນໜ້າເກີດອຸປະຕິເຫດ, ແຕ່ວ່າ ມີພຽງ 28% ຂອງເດັກເທົ່ານັ້ນທີ່ຮູ້ກ່ຽວກັບລະເບີດບໍ່ທັນແຕກ ຫຼື ເຄີຍໄດ້ຍິນກ່ຽວກັບລະເບີດບໍ່ທັນແຕກກ່ອນເກີດອຸປະຕິເຫດ.

- **ພາສາເປັນອຸປະສັກ:** ອັດຕາສ່ວນຂອງຜູ້ທີ່ຮູ້ກ່ຽວກັບລະເບີດບໍ່ທັນແຕກກ່ອນເກີດອຸປະຕິເຫດ ແມ່ນສູງຂຶ້ນຫຼາຍໃນກຸ່ມຜູ້ທີ່ມີຄວາມຄ່ອງແຄ້ວໃນການ**ເວົ້າພາສາລາວ.**

- **ຊ່ອງຫວ່າງລະຫວ່າງແຫຼ່ງຂໍ້ມູນ ແລະ ຂໍ້ຄວາມໂຄສະນາ:** ຜູ້ໃຫຍ່ສ່ວນຫຼາຍໄດ້ຮຽນຮູ້ຈາກຜູ້ນຳໃນບ້ານ (62%) ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (57%), ໃນຂະນະທີ່ເດັກສ່ວນໃຫຍ່ໄດ້ຮຽນຮູ້ຈາກໂຮງຮຽນ/ຄູອາຈານ (60%). ສິ່ງສຳຄັນແມ່ນຜູ້ໃຫຍ່ສ່ວນຫຼາຍຮູ້ວ່າບໍ່ຄວນແຕະຕ້ອງລະເບີດບໍ່ທັນແຕກ, ແຕ່ອຸປະຕິເຫດທີ່ເກີດຂຶ້ນກັບເຂົາເຈົ້າ ຜົດມັກຈະເກີດຂຶ້ນຍ້ອນການດັງໄຟ/ຈູດໄຟ ຫຼື ການຂຸດດິນ ເຊິ່ງເປັນກິດຈະກຳທີ່ເຂົາເຈົ້າບໍ່ໄດ້ເບິ່ງເຫັນ ຫຼື ບໍ່ໄດ້ແຕະຕ້ອງລະເບີດໂດຍກົງ, ສິ່ງນີ້ ຊີ້ໃຫ້ເຫັນເຖິງຊ່ອງຫວ່າງໃນຄວາມສະເພາະຂອງຂໍ້ຄວາມ ແລະ ການນຳໃຊ້ຂໍ້ຄວາມເຫຼົ່ານັ້ນກັບສະຖານະການຕົວຈິງໃນຊີວິດປະຈຳວັນຂອງເຂົາເຈົ້າ. ນອກຈາກນັ້ນ, ເກືອບໜຶ່ງໃນຫ້າຄົນຂອງຜູ້ໃຫຍ່ຍັງກ່າວວ່າ ເຂົາເຈົ້າເຄີຍໄດ້ຍິນກ່ຽວກັບລະເບີດບໍ່ທັນແຕກ ແຕ່ບໍ່ຮູ້ວ່າລະເບີດເຫຼົ່ານັ້ນມີລັກສະນະແນວໃດ.

**ຂໍ້ສະເໜີແນະຫຼັກ:**

- **ແນໃສ່ການໂຄສະນາໃນກຸ່ມເດັກໃຫ້ຫຼາຍຂຶ້ນ:** ເພີ່ມຄວາມຖີ່ ແລະ ຄວາມເລິກເຊິ່ງໃນການໂຄສະນາສຶກສາຄວາມສ່ຽງຈາກລະເບີດ (EORE) ໃນໂຮງຮຽນ ໂດຍສະເພາະແມ່ນໃນຊັ້ນປະຖົມ ແລະ ພະຍາຍາມໂຄສະນາຂໍ້ຄວາມຕ່າງໆ ຜ່ານຫຼາຍຊ່ອງທາງທີ່ເສີມສ້າງເຊິ່ງກັນແລະກັນ (ເຊັ່ນ: ພໍ່ແມ່, ຜູ້ນຳໃນຊຸມຊົນ).

- **ໃຊ້ຮູບພາບປະຈັກຕາ ເຂົ້າໃນການຮຽນຮູ້ ແລະ ໃຊ້ການຮຽນຮູ້ແບບມີສ່ວນຮ່ວມ:** ນຳໃຊ້ຮູບແບບ ແລະ ພາບທີ່ເຫັນໄດ້ຊັດເຈນກ່ຽວກັບ ລບຕ ແລະ ນຳໃຊ້ສະຖານະການ ການຮຽນຮູ້ແບບມີສ່ວນຮ່ວມ (ເຊັ່ນ: ການສະແດງບົດບາດສົມມຸດ, ການຫຼິ້ນເກມ) ສຳລັບເດັກ ຍ້ອນວ່າການສອນດ້ວຍວາຈາແບບງ່າຍໆ ມັກຈະຖືກລືມງ່າຍ.

- **ຮັບປະກັນຄວາມກ່ຽວຂ້ອງທາງດ້ານພາສາ:** ໃຫ້ມີການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ (EORE) ເປັນພາສາທ້ອງຖິ່ນ ແລະ ມີສ່ວນຮ່ວມຢ່າງຫ້າວຫັນກັບສະມາຊິກຊຸມຊົນ/ຜູ້ແປພາສາໃນໂຮງຮຽນ ເພື່ອຫຼຸດຜ່ອນຊ່ອງຫວ່າງທາງດ້ານພາສາ ແລະ ຮັບປະກັນຄວາມເຂົ້າໃຈ.

- **ຮັບປະກັນວ່າ ການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ (EORE) ສາມາດເຂົ້າເຖິງຜູ້ຊາຍໃນໄວເຮັດວຽກ ທີ່ມີຄວາມສ່ຽງ:** ຂໍ້ມູນທີ່ເກັບກຳໄດ້ ສະແດງໃຫ້ເຫັນວ່າ ອັດຕາຄວາມຮູ້ກ່ຽວກັບ ລບຕ ກ່ອນໜ້າເກີດອຸປະຕິເຫດ ໃນກຸ່ມແມ່ຍິງແມ່ນສູງກວ່າກຸ່ມຜູ້ຊາຍ ເຖິງແມ່ນວ່າຜູ້ຊາຍມີແນວໂນ້ມທີ່ຈະໄດ້ຮັບບາດເຈັບ ຫຼື ເສຍຊີວິດຈາກ ລບຕ ຫຼາຍກວ່າ ກໍ່ຕາມ.

## ຄຳຖາມ ທີ 4. ຜູ້ຖືກເຄາະຮ້າຍຈາກອຸປະຕິເຫດມີຄວາມຕ້ອງການ ການຊ່ວຍເຫຼືອດ້ານການບາດເຈັບ ແລະ ການຟື້ນຟູໜ້າທີ່ການຂອງເຂົາເຈົ້າ ແນວໃດແດ່ຫຼັງຈາກເກີດອຸປະຕິເຫດ ແລະ ເຂົາເຈົ້າໄດ້ຮັບການຕອບສະໜອງຊ່ວຍເຫຼືອໃນລະດັບໃດ ແລະ ຊ່ວຍແນວໃດ?

**ຜົນໄດ້ຮັບທີ່ສຳຄັນ:**

- **ຄວາມຊັກຊ້າຫຼັກໆໃນການໄດ້ຮັບການປິ່ນປົວ:** ຄວາມຊັກຊ້າຫຼັກໆແມ່ນເກີດຂຶ້ນເປັນປົກກະຕິ ໂດຍຜູ້ໃຫຍ່ຫຼາຍຄົນ (29%) ແລະ ເດັກ (53%) ຕ້ອງລໍຖ້າການປິ່ນປົວທາງການແພດໃນຂັ້ນຕົ້ນເຖິງ 1 ຫາ 3 ຊົ່ວໂມງ. ມີຜູ້ລອດຊີວິດພຽງຄົນດຽວ ທີ່ລາຍງານວ່າໄດ້ຮັບການປິ່ນປົວດູແລທັນທີ ຢູ່ໃນສະຖານທີ່ເກີດເຫດ.

- **ການເຂົ້າເຖິງການບໍລິການຟື້ນຟູໜ້າທີການແມ່ນຍັງຕ່ຳ:** ມີພຽງ 19% ຂອງຜູ້ໃຫຍ່ ແລະ ບໍ່ມີເດັກຄົນໃດ ລາຍງານວ່າເຂົາເຈົ້າໄດ້ຮັບການບໍລິການຟື້ນຟູໜ້າທີ່ການ.

- **ຄວາມຕ້ອງການໃນໄລຍະຍາວທີ່ບໍ່ໄດ້ຮັບການຕອບສະໜອງ:** ຜູ້ລອດຊີວິດຕ້ອງປະເຊີນກັບຄວາມບົກຜ່ອງທາງດ້ານຮ່າງກາຍທີ່ຍືດເຍື້ອຍາວນານ (ຄວາມບົກຜ່ອງທາງສາຍຕາ, ການໄດ້ຍິນ, ຄວາມຊົງຈຳ, ການເຄື່ອນໄຫວ) ແລະ ຂາດການເຂົ້າເຖິງອຸປະກອນການຊ່ວຍເຫຼືອ. ຜົນກະທົບທາງດ້ານອາລົມແມ່ນຍາວນານສຳລັບບາງຄົນ ເຊິ່ງຜູ້ລອດຊີວິດໄດ້ລາຍງານວ່າ ເຂົາເຈົ້າມີຄວາມຢ້ານກົວ ແລະ ມີຄວາມກັງວົນຢ່າງຫຼວງຫຼາຍ (ໂດຍສະເພາະແມ່ນເດັກມີຄວາມຢ້ານກົວ ແລະ ມີຄວາມກັງວົນກ່ຽວກັບບ່ອນຫຼິ້ນຂອງເຂົາເຈົ້າ, ຜູ້ໃຫຍ່ມີຄວາມຢ້ານກົວ ແລະ ມີຄວາມກັງວົນຢູ່ໃນທົ່ງໄຮ່ທົ່ງນາ).

**ຂໍ້ສະເໜີແນະຫຼັກ:**

- **ຫຼຸດຜ່ອນເວລາໃນການໄດ້ຮັບການປິ່ນປົວ:** ເພີ່ມການໂຄສະນາສື່ສານເພື່ອສ້າງຄວາມຮັບຮູ້ ໂດຍເນັ້ນເຖິງຄວາມສຳຄັນຂອງການໄດ້ຮັບການປິ່ນປົວດູແລທາງການແພດໃນທັນທີ ເມື່ອເກີດອຸປະຕິເຫດ ລບຕ. ສຳຫຼວດທາງເລືອກຕ່າງໆສຳລັບການສະໜອງອຸປະກອນຊ່ວຍເຫຼືອໃຫ້ແກ່ເຈົ້າໜ້າທີ່ ທີ່ໃຫ້ການຊ່ວຍເຫຼືອໃນເບື້ອງຕົ້ນທີ່ຢູ່ໃນທ້ອງຖິ່ນ (ເຊັ່ນ: ຊຸດເຄື່ອງມືງ່າຍໆ, ການຝຶກອົບຮົມຂັ້ນພື້ນຖານ, ການນຳໃຊ້ແພດປະຈຳໜ່ວຍງານ ລບຕ).

- **ກະຈາຍອຳນາດໃນການປິ່ນປົວດູແລ ແລະ ປະສົມປະສານການປິ່ນປົວດູແລ:** ຂະຫຍາຍການບໍລິການຕິດຕາມ ແລະ ການຟື້ນຟູ ໜ້າທີ່ການ ລວມທັງການສະໜັບສະໜູນດ້ານຈິດຕະສັງຄົມ ຈາກສູນຕ່າງໆໃນເຂດຕົວເມືອງໄປຫາເມືອງຕ່າງໆ ໂດຍໃຊ້ຄລີນິກເຄື່ອນທີ່ ຫຼື ການບໍລິການເຄື່ອນທີ່ ເພື່ອແກ້ໄຂບັນດາອຸປະສັກຫຍຸ້ງຍາກທາງດ້ານພູມສັນຖານ.

## ຄຳຖາມ ທີ 5. ຜູ້ເຄາະຮ້າຍສາມາດໄດ້ຮັບການຍັ້ງຢືນຄວາມພິການຈາກລັດຖະບານ ຫຼື ບໍ່? ຜູ້ເຄາະຮ້າຍຮູ້ວ່າ ເຂົາເຈົ້າມີສິດໄດ້ຮັບການຊ່ວຍເຫຼືອອັນໃດແດ່ກ່ຽວກັບຄວາມພິການ?

**ຜົນໄດ້ຮັບທີ່ສຳຄັນ:**

- **ບໍ່ມີການລາຍງານກ່ຽວກັບການສະໜັບສະໜູນຊ່ວຍເຫຼືອສະເພາະດ້ານຄວາມພິການ:** ບໍ່ມີຜູ້ລອດຊີວິດຄົນໃດ ລາຍງານວ່າໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຢ່າງເປັນທາງການທີ່ກ່ຽວຂ້ອງກັບນະໂຍບາຍດ້ານຄວາມພິການ ຫຼື ກ່າວເຖິງຄວາມຄາດຫວັງກ່ຽວກັບສິດຜົນປະໂຫຍດຕ່າງໆທີ່ເຂົາເຈົ້າມີສິດຈະໄດ້ຮັບ ເນື່ອງຈາກສະຖານະພາບຄວາມພິການຂອງເຂົາເຈົ້າ.

- **ຄວາມຮັບຮູ້ຂອງພາກລັດກ່ຽວກັບຂະບວນການຊ່ວຍເຫຼືອຍັງຕໍ່າ:** ພະນັກງານພາກລັດເອງໄດ້ລາຍງານວ່າ ເຂົາເຈົ້າມີຄວາມຮູ້ທີ່ຈຳກັດ ແລະ ບໍ່ແນ່ໃຈ ກ່ຽວກັບຂະບວນການໃນການຢັ້ງຢືນຄວາມພິການ ລວມທັງບົດບາດຂອງສະມາຄົມຄົນພິການລາວ.

**ຂໍ້ສະເໜີແນະຫຼັກ:**

- **ເພີ່ມຄວາມຮັບຮູ້ໃຫ້ແກ່ເຈົ້າໜ້າທີ່ໃນທ້ອງຖິ່ນ:** ສະໜອງການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ ໃນຂັ້ນບ້ານ, ເມືອງ ແລະ ແຂວງ ກ່ຽວກັບນະໂຍບາຍຂອງຄົນພິການ, ຂະບວນການຢັ້ງຢືນຄວາມພິການ ແລະ ສິດຜົນປະໂຫຍດຕ່າງໆທີ່ມີ ໃນຖານະເປັນຜູ້ປະສານງານຫຼັກໃນການສະໜັບສະໜູນຊ່ວຍເຫຼືອຜູ້ລອດຊີວິດ.

- **ຊີ້ແຈງບົດບາດ ແລະ ການປະສານງານ:** ເສີມສ້າງບົດບາດ ແລະ ກົນໄກການປະສານງານລະຫວ່າງຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ), ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກະຊວງ ຮສສ) ແລະ ສະມາຄົມຄົນພິການລາວ ເພື່ອຮັບປະກັນວ່າຜູ້ລອດຊີວິດທີ່ມີຄວາມພິການໃໝ່ໄດ້ຮັບສິດຜົນປະໂຫຍດຕ່າງໆ ຢ່າງຕໍ່ເນື່ອງ.

## ຄຳຖາມ ທີ 6. ຜົນກະທົບໃນໄລຍະຍາວຈາກອຸປະຕິເຫດ ກ່ຽວກັບການດຳລົງຊີວິດສຳລັບຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າ ມີຫຍັງແດ່ ແລະ ເຂົາເຈົ້າໄດ້ມີສ່ວນຮ່ວມໃນໂຄງການທີ່ໃຫ້ການສະໜັບສະໜູນກ່ຽວກັບການດຳລົງຊີວິດບໍ່?

**ຜົນໄດ້ຮັບທີ່ສຳຄັນ:**

- **ການສູນເສຍລາຍໄດ້ ແລະ ການປ່ຽນແປງວຽກເຮັດງານທຳ:** ຜູ້ໃຫຍ່ທີ່ມີຂໍ້ຈຳກັດທາງດ້ານຮ່າງກາຍ ຈຳເປັນຕ້ອງໄດ້ປ່ຽນຈາກການເຮັດວຽກໜັກມາເຮັດວຽກເບົາ ແລະ ມີລາຍໄດ້ໜ້ອຍລົງ ເຊິ່ງນຳໄປສູ່ການຫຼຸດລົງຂອງລາຍໄດ້ຂອງຄົວເຮືອນ. ອັດຕາການວ່າງງານໃນບັນດາຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍຈາກ 6% ເປັນ 31% ຫຼັງຈາກເກີດອຸປະຕິເຫດ.

- **ໜີ້ສິນເພີ່ມຂຶ້ນ:** ຄົວເຮືອນປະສົບກັບພາວະວິກິດທາງດ້ານການເງິນເພີ່ມຂຶ້ນ ໂດຍສັດສ່ວນຂອງຄົວເຮືອນຜູ້ໃຫຍ່ລາຍງານວ່າມີໜີ້ສິນເພີ່ມຂຶ້ນຈາກ 34% ເປັນ 53% ຫຼັງຈາກເກີດອຸປະຕິເຫດ ເຊິ່ງຈະສະສົມໜີ້ສິນຫຼາຍຂຶ້ນ.

- **ການຂາດໂຄງການຊ່ວຍເຫຼືອດ້ານການດຳລົງຊີວິດ:** ມີຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ພຽງຄົນດຽວເທົ່ານັ້ນທີ່ລາຍງານວ່າ ໄດ້ຮັບການສະໜັບສະໜູນດ້ານການດຳລົງຊີວິດ ແລະ ບໍ່ມີຜູ້ລອດຊີວິດຄົນໃດເລີຍທີ່ລາຍງານວ່າ ໄດ້ຮັບການສະໜັບສະໜູນດ້ານທຸລະກິດຂະໜາດນ້ອຍ.

**ຂໍ້ສະເໜີແນະຫຼັກ:**

- **ການບັນທຶກທາງດ້ານການເງິນ ແລະ ໜີ້ສິນ ຢ່າງມີເປົ້າໝາຍ:** ໃຫ້ການຊ່ວຍເຫຼືອທາງດ້ານການເງິນ ຫຼື ການບັນທຶກໜີ້ສິນ ແກ່ຄົວເຮືອນເພື່ອແກ້ໄຂບັນຫາໜີ້ສິນທີ່ເພີ່ມຂຶ້ນຫຼັງຈາກເກີດອຸປະຕິເຫດ ແລະ ປ້ອງກັນຄວາມບໍ່ໝັ້ນຄົງທາງດ້ານການເງິນໃນໄລຍະຍາວ.

- **ການສະໜັບສະໜູນດ້ານການດໍາລົງຊີວິດທີ່ເໝາະສົມ:** ພັດທະນາ "ທາງເລືອກ" ສໍາລັບການດໍາລົງຊີວິດທີ່ເໝາະສົມ, ການຝຶກອົບຮົມວິຊາຊີບ ແລະ ການສະໜັບສະໜູນດ້ານເສດຖະກິດທີ່ເໝາະສົມ ເຊັ່ນ: ການຝຶກງານໃນທ້ອງຖິ່ນ ຫຼື ການຝຶກອົບຮົມແບບເຄື່ອນທີ່ ເພື່ອຕອບສະໜອງຄວາມຕ້ອງການທີ່ຫຼາກຫຼາຍຂອງຜູ້ລອດຊີວິດ ທີ່ມີຄວາມສາມາດທາງດ້ານຮ່າງກາຍທີ່ແຕກຕ່າງກັນ.

## ຄໍາຖາມ ທີ 7. ຍຸດທະສາດຂອງອໍານາດການປົກຄອງທ້ອງຖິ່ນໃນການສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ມີຫຍັງແດ່?

**ຜົນໄດ້ຮັບທີ່ສໍາຄັນ:**

- **ຜູ້ນໍາໃນບ້ານ ເປັນຜູ້ເຊື່ອມຕໍ່ທີ່ສໍາຄັນ:** ຜູ້ລອດຊີວິດສ່ວນໃຫຍ່ໄດ້ກ່າວເຖິງອໍານາດການປົກຄອງບ້ານວ່າເປັນຜູ້ປະສານງານທີ່ສໍາຄັນໃນລະບົບ ທີ່ຊ່ວຍເຫຼືອເຂົາເຈົ້າໃນດ້ານເອກະສານ, ການລະດົມທຶນ ແລະ ການສົ່ງຕໍ່ໄປຫາການຊ່ວຍເຫຼືອ.

- **ການຕັດສິນໃຈແບບລວມສູນ:** ເຈົ້າໜ້າທີ່ພາກລັດໃນຂັ້ນທ້ອງຖິ່ນລາຍງານສະເໜີວ່າ ເຂົາເຈົ້າຈະໃຫ້ພາກລັດໃນຂັ້ນເທິງຂອງຕົນເປັນຜູ້ຕັດສິນໃຈກ່ຽວກັບການສະໜັບສະໜູນ ແລະ ການຊ່ວຍເຫຼືອ ເຊິ່ງສິ່ງນີ້ເຮັດໃຫ້ການສະໜັບສະໜູນບໍ່ສອດຄ່ອງ ແລະ ມີການປ່ຽນແປງ ເຊິ່ງຂຶ້ນກັບປັດໄຈພາຍນອກ ເຊັ່ນ: ການປະກອບສ່ວນຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ຫຼື ງົບປະມານຂອງລັດຖະບານ.

- **ການໃຫ້ກໍາລັງໃຈແມ່ນການສະໜັບສະໜູນທີ່ສໍາຄັນ:** ໃນກໍລະນີທີ່ຂາດແຄນຊັບພະຍາກອນທາງດ້ານການເງິນ, ເຈົ້າໜ້າທີ່ທ້ອງຖິ່ນໄດ້ໃຫ້ການສະໜັບສະໜູນທີ່ສໍາຄັນທີ່ບໍ່ແມ່ນວັດຖຸ ເຊັ່ນ: ການໃຫ້ກໍາລັງໃຈ ແລະ ການຢ້ຽມຢາມ ເຊິ່ງຜູ້ລອດຊີວິດໃຫ້ຄຸນຄ່າສູງຕໍ່ຄວາມເປັນຢູ່ທີ່ດີທາງດ້ານອາລົມ ແລະ ການກັບຄືນສູ່ສັງຄົມຂອງເຂົາເຈົ້າ.

**ຂໍ້ສະເໜີແນະຫຼັກ:**

- **ສ້າງຄວາມເຂັ້ມແຂງໃຫ້ແກ່ການປະສານງານໃນທ້ອງຖິ່ນ:** ຄຽງຄູ່ກັບການຮັບຮູ້ໂຄງສ້າງແບບລວມສູນ ຄວນພິຈາລະນາຄົ້ນຄ້ວາວິທີການໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ປະຕິບັດວຽກງານຢູ່ໃນຊຸມຊົນ ເປັນຕົ້ນແມ່ນ ຄະນະກໍາມະການໃນຂັ້ນບ້ານ ເພື່ອເຮັດໜ້າທີ່ເປັນຈຸດສົ່ງຕໍ່ຜູ້ລອດຊີວິດໄປຫາເຄືອຂ່າຍທີ່ໃຫ້ການສະໜັບສະໜູນຊ່ວຍເຫຼືອຜູ້ເຄາະຮ້າຍ ທີ່ມີປະສິດທິພາບ ແລະ ໂດຍກົງ ຫຼາຍຂຶ້ນ.

- **ສ້າງວິທີການເຮັດວຽກແບບປະສົມປະສານ:** ຈັດຕັ້ງປະຕິບັດນະໂຍບາຍ ໂດຍໄດ້ຮັບການອໍານວຍຄວາມສະດວກຈາກຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ເພື່ອຮັບປະກັນການສະໜັບສະໜູນທາງດ້ານຮ່າງກາຍ, ຈິດໃຈ ແລະ ເສດຖະກິດ-ສັງຄົມ ໃຫ້ມີການປະສົມປະສານກັນຢ່າງຕໍ່ເນື່ອງໃນຄວາມພະຍາຍາມຂອງລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເພື່ອຫຼຸດຜ່ອນການເຮັດວຽກແບບກະແຈກກະຈາຍ.

## ຄຳຖາມ ທີ 8. ການສະໜັບສະໜູນທາງດ້ານໃດ ທີ່ຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກຮູ້ສຶກວ່າ ຈຳເປັນໃນການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ?

**ຜົນໄດ້ຮັບທີ່ສຳຄັນ:**

- **ຄວາມປາຖະໜາຢາກເພິ່ງຕົນເອງໄດ້:** ຜູ້ລອດຊີວິດໄດ້ສະແດງຄວາມປາຖະໜາຢາກໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຢ່າງຕໍ່ເນື່ອງ ເພື່ອຊ່ວຍໃຫ້ເຂົາເຈົ້າສາມາດສ້າງລາຍໄດ້ໃຫ້ຕົນເອງ ແລະ ສາມາດກັບຄືນມາເພິ່ງພາຕົນເອງໄດ້. ການຮ້ອງຂໍການສະໜັບສະໜູນຊ່ວຍເຫຼືອເຫຼົ່ານັ້ນລວມມີ ການສະໜັບສະໜູນດ້ານການດຳລົງຊີວິດ ເຊັ່ນ: ສັດລ້ຽງ, ທຶນເພື່ອເລີ່ມຕົ້ນທຸລະກິດ ແລະ ການຝຶກອົບຮົມວິຊາຊີບ.

- **ການຮ້ອງຂໍດ້ານຄຸນນະພາບຊີວິດ:** ຄວາມຕ້ອງການອື່ນໆທີ່ຈຳເປັນລວມມີ ການດູແລທາງການແພດສະເພາະດ້ານ (ເຊັ່ນ: ການເອົາສະເກັດລະເບີດອອກ), ພາຫະນະທີ່ສາມາດເຂົ້າເຖິງໄດ້ ແລະ ການເກັບກູ້ລະເບີດທີ່ບໍ່ທັນແຕກທີ່ຢູ່ອ້ອມເຮືອນຂອງເຂົາເຈົ້າ.

- **ຄວາມຝັນຂອງເດັກ:** ຜູ້ລອດຊີວິດທີ່ເປັນເດັກໄດ້ສະແດງຄວາມຫວັງວ່າ ຢາກສືບຕໍ່ການສຶກສາຂອງເຂົາເຈົ້າ ແລະ ຢາກມີວຽກເຮັດງານທຳ ເຊິ່ງສະແດງໃຫ້ເຫັນເຖິງຄວາມຕ້ອງການດ້ານການສຶກສາທີ່ສາມາດເຂົ້າເຖິງໄດ້ ແລະ ການສະໜັບສະໜູນໃນໄລຍະຍາວ.

- **ຄວາມຕ້ອງການໃນການສະໜັບສະໜູນທາງດ້ານຈິດຕະສັງຄົມ:** ເຈົ້າໜ້າທີ່ພາກລັດໄດ້ລະບຸຢ່າງຊັດເຈນ ເຖິງຄວາມຕ້ອງການດ້ານສຸຂະພາບຈິດ ແລະ ການສະໜັບສະໜູນດ້ານຈິດຕະສັງຄົມ ເຊິ່ງຍັງເປັນຊ່ອງຫວ່າງທີ່ຜູ້ລອດຊີວິດສະແດງອອກທາງອ້ອມໂດຍຜ່ານລາຍງານກ່ຽວກັບຄວາມຢ້ານກົວ ແລະ ຄວາມວິຕົກກັງວົນຂອງເຂົາເຈົ້າ.

**ຂໍ້ສະເໜີແນະຫຼັກ:**

- **ສະໜັບສະໜູນຜູ້ລອດຊີວິດໃຫ້ເຂົ້າເຖິງການຝຶກອົບຮົມວິຊາຊີບ, ການພັດທະນາຊີວິດການເປັນຢູ່ ແລະ ໂອກາດໃນການຈ້າງງານ:** ຜູ້ລອດຊີວິດສ່ວນໃຫຍ່ ຕ້ອງການວິທີການທີ່ສາມາດຊ່ວຍເຫຼືອຕົນເອງ ແລະ ຄອບຄົວຂອງເຂົາເຈົ້າໄດ້ ດ້ວຍວິທີການທີ່ມີປະສິດທິພາບ ຫຼາຍກວ່າການຊ່ວຍເຫຼືອແບບໃຫ້ເປັນເງິນເທົ່ານັ້ນ. (ກະລຸນາເບິ່ງຂໍ້ສະເໜີແນະທີ່ກ່ຽວຂ້ອງພາຍໃຕ້ຄຳຖາມທີ 6)

- **ວິທີການຄຸ້ມຄອງກໍລະນີ:** ພິຈາລະນາສ້າງຂະບວນການຄຸ້ມຄອງກໍລະນີ ຢ່າງເປັນລະບົບ ສຳລັບການຕິດຕາມຜູ້ລອດຊີວິດຢ່າງເປັນປົກກະຕິ ເພື່ອບັນທຶກຄວາມຕ້ອງການທີ່ມີການປ່ຽນແປງໄປ ແລະ ເຊື່ອມຕໍ່ເຂົາເຈົ້າເຂົ້າກັບໂຄງການສະໜັບສະໜູນໃໝ່ທີ່ກ່ຽວຂ້ອງໃນໄລຍະຍາວ.

- **ຄວາມຕໍ່ເນື່ອງດ້ານການສຶກສາ:** ໃຫ້ການສະໜັບສະໜູນດ້ານການສຶກສາ ເຊັ່ນ: ທຶນການສຶກສາ ຫຼື ຕາຕະລາງເວລາຮຽນທີ່ສາມາດດັດປັບໄດ້ ເພື່ອຮັບປະກັນວ່າເດັກທີ່ໄດ້ຮັບຜົນກະທົບຈາກອຸປະຕິເຫດ ລບຕ ສາມາດຮຽນຕໍ່ໄດ້ ແລະ ບັນລຸຄວາມຝັນໃນອະນາຄົດຂອງເຂົາເຈົ້າໄດ້.

ການສຶກສາຄົ້ນຄ້ວາຄັ້ງນີ້ ໄດ້ບັນທຶກປະສົບການຂອງຜູ້ລອດຊີວິດກ່ອນເກີດອຸປະຕິເຫດ, ໃນເວລາເກີດອຸປະຕິເຫດ ແລະ ຫຼັງຈາກເກີດອຸປະຕິເຫດ ລບຕ. ໂດຍການຖືເອົາຄວາມຄິດເຫັນຂອງຜູ້ລອດຊີວິດເປັນຈຸດໃຈກາງ, ຜົນການສຶກສາຄົ້ນຄ້ວາຄັ້ງນີ້ ໄດ້ສະໜອງທິດທາງທີ່ສຳຄັນ ແລະ ອີງໃສ່ຫຼັກຖານ ສຳລັບພາກສ່ວນກ່ຽວຂ້ອງໃນລະດັບຊາດ ແລະ ໃນຂະແໜງການຕ່າງໆ ເພື່ອສ້າງຄວາມເຂັ້ມແຂງໃນດ້ານການປ້ອງກັນ ແລະ ຮັບປະກັນວ່າການຊ່ວຍເຫຼືອຕ່າງໆ ມີລັກສະນະຮອບດ້ານ, ຍືນຍົງ ແລະ ເນັ້ນໃສ່ຜູ້ລອດຊີວິດເປັນໃຈກາງ. ບັນດາຂໍ້ສະເໜີ

ແນະທີ່ກ່ຽວຂ້ອງຈາກການສຶກສາຄົ້ນຄ້ວາຄັ້ງນີ້ ມີຈຸດປະສົງເພື່ອກະຕຸ້ນໃຫ້ມີການສົນທະນາ ແລະ ສ້າງແຮງບັນດານໃຈ ໃຫ້ມີການປັບປຸງທີ່ດີຂຶ້ນເພື່ອເພີ່ມທະວີຄວາມສະເພາະເຈາະຈົງ, ການປະສານງານ ແລະ ການມີສ່ວນຮ່ວມໃນໄລຍະຍາວ ທັງໃນການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ (EORE) ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລອດຊີວິດ ແລະ ຊຸມຊົນທີ່ມີຄວາມສ່ຽງ.

# ພາກແນະນຳ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດໜຶ່ງໃນໂລກທີ່ຖືກຖິ້ມລະເບີດໃສ່ຢ່າງໜັກໜ່ວງທີ່ສຸດຕໍ່ຫົວຄົນ. ໃນລະຫວ່າງປີ 1964 ຫາ 1973 ເຊິ່ງເປັນໄລຍະສົງຄາມອິນດູຈີນ, ສະຫະລັດອາເມລິກາໄດ້ຖິ້ມລະເບີດລູກຫວ່ານຫຼາຍກວ່າ 2 ລ້ານໂຕນໃສ່ດິນແດນຂອງປະເທດລາວ, ໃນນັ້ນມີລະເບີດລູກຫວ່ານຫຼາຍກວ່າ 270 ລູກ.[1] ຄາດຄະເນວ່າ 30% ຂອງລະເບີດເຫຼົ່ານີ້ແມ່ນຍັງບໍ່ທັນລະເບີດ, ເຮັດໃຫ້ມີລູກລະເບີດເກືອບ 80 ລ້ານລູກທີ່ຍັງບໍ່ທັນແຕກຢູ່ໃນ ສປປ ລາວ, ໂດຍສະເພາະແມ່ນຢູ່ບັນດາແຂວງພາກຕາເວັນອອກທີ່ຕິດກັບປະເທດຫວຽດນາມ.[2] ນັບແຕ່ສົງຄາມສິ້ນສຸດລົງ, ມີຜູ້ເສຍຊີວິດ ຫຼື ໄດ້ຮັບບາດເຈັບຈາກລະເບີດບໍ່ທັນແຕກ (ລບຕ) 50,000 ຄົນ ແລະ ອຸປະຕິເຫດຈາກ ລບຕ ຍັງສືບຕໍ່ເກີດຂຶ້ນຈົນມາຮອດປະຈຸບັນ.[3]

ລັດຖະບານ ສປປ ລາວ ໄດ້ມີການເຄື່ອນໄຫວຢ່າງຕັ້ງໜ້າ ໃນການເກັບກູ້ລະເບີດ ພາຍຫລັງຈາກການຕໍ່ສູ້ສິ້ນສຸດລົງ ດ້ວຍການເລັ່ງຄວາມພະຍາຍາມຢ່າງຫຼວງຫຼາຍໃນກາງຊຸມປີ 1990 ໃນການດຳເນີນການເກັບກູ້ລະເບີດ . ສປປ ລາວ ເປັນພາກລັດທີ່ເຂົ້າຮ່ວມສົນທິສັນຍາວ່າດ້ວຍການຕ້ານການໃຊ້ລະເບີດລູກຫວ່ານ (CCM) ແລະ ໄດ້ເປັນເຈົ້າພາບຈັດກອງປະຊຸມລັດພາຄີຄັ້ງທຳອິດໃນປີ 2010. ນອກຈາກນີ້ ສປປ ລາວ ຍັງໄດ້ຖືເອົາບັນຫາ ລບຕ ມາເປັນບັນຫາສຳລັບການພັດທະນາທີ່ສຳຄັນ ໂດຍໄດ້ກຳນົດໃສ່ໃນເປົ້າໝາຍການພັດທະນາແບບຍືນຍົງທີ 18 (ປພຍ 18) ສຳລັບປະເທດ ໃນຫົວຂໍ້ "ຊີວິດທີ່ປອດໄພຈາກ ລບຕ". ຂໍ້ມູນຈາກ ຄຊກລ ໄດ້ລະບຸໃຫ້ເຫັນວ່າ ມີ ລູກລະເບີດ UXO ຫຼາຍກວ່າ 1 ລ້ານລູກ ທີ່ຖືກພົບແລະທຳລາຍໃນພື້ນທີ່ກວດກູ້ ຕັ້ງແຕ່ປີ 1997 ຫາເຖິງເດືອນຕຸລາ 2025[4].

ເຖິງຢ່າງໃດກໍຕາມ, ເຖິງວ່າຈະມີຄວາມພະຍາຍາມຢ່າງໃຫຍ່ຫຼວງໃນການທຳລາຍ ລບຕ, ແຕ່ຂະໜາດຂອງການຕົກຄ້າງຂອງ ລບຕ ກໍ່ຍັງມີສູງໝາຍຄວາມວ່າ ການລະເບີດຂອງ ລບຕ ໂດຍປະຊາຊົນທົ່ວໄປ ຍັງຄົງເປັນໄພຂົ່ມຂູ່ຢ່າງຕໍ່ເນື່ອງ, ໂດຍສະເພາະແມ່ນໃນກຸ່ມຊົນເຜົ່າທີ່ທຸກຍາກ, ໃນເຂດຊົນນະບົດ ແລະ ກຸ່ມຜູ້ດ້ອຍໂອກາດ.[5] ຜູ້ລອດຊີວິດມັກຈະປະສົບກັບສິ່ງທ້າທາຍທີ່ຮ້າຍແຮງ ແລະ ໃນໄລຍະຍາວນານ ລວມທັງຄວາມພິການທາງດ້ານຮ່າງກາຍ, ບາດແຜທາງດ້ານຈິດໃຈ, ການສູນເສຍລາຍໄດ້ ແລະ ການຢຸດການສຶກສາ.

---

[1] ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, 2023. ບົດລາຍງານປະຈຳປີ 2023 ຂອງຂະແໜງ ລບຕ.
http://www.nra.gov.la/resources/AnnualReports/English/UXO%20Sector%20Annual%20Report%202023_ENG.pdf

[2] ດັ່ງທີ່ກ່າວມາຂ້າງເທິງແລ້ວ.

[3] ດັ່ງທີ່ກ່າວມາຂ້າງເທິງແລ້ວ.

[4] ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, dashboard.30.10.2025

[5] ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, 2022. ບົດລາຍງານປະຈຳປີ 2022 ຂອງຂະແໜງ ລບຕ. *(ສະບັບພາສາອັງກິດ).*
https://nra.gov.la/resources/AnnualReports/English/2022%20UXO%20SECTOR%20ANNUAL%20REPORT%20(ENG).pdf

ໃນສະພາບການດັ່ງກ່າວນີ້, ລັດຖະບານລາວ ໄດ້ຍົກລະດັບບັນຫາ ລບຕ ເປັນບັນຫາທີ່ກ່ຽວຂ້ອງກັບທຸກຂະແໜງການ ຢູ່ໃນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 9 ໄລຍະ 2021-2025 (NSEDP ຄັ້ງທີ 9). ການວາງຜົນໄດ້ຮັບໃນຂະແໜງ ລບຕ (ຜົນໄດ້ຮັບສະເພາະທີ 6: ການເລັ່ງລັດເກັບກູ້ ລບຕ ຢ່າງຕໍ່ເນື່ອງ ແລະ ເຮັດໃຫ້ຊີວິດການເປັນຢູ່ປອດໄພຈາກ ລບຕ ຫຼາຍຂຶ້ນ" ແລະ ພາຍໃຕ້ຫົວຂໍ້ "ຜົນໄດ້ຮັບສະເພາະທີ 3: ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ" ໃນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 9 ຂອງ ສປປ ລາວ ໃນເດືອນມີນາ 2021) ໄດ້ຍົກລະດັບບັນຫາ ລບຕ ເປັນບັນຫາສຳຄັນໃນລະດັບຊາດ ແລະ ການເພີ່ມຄວາມຮັບຮູ້ກ່ຽວກັບ ລບຕ . *ແຜນຍຸດທະສາດແຫ່ງຊາດວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງໃນ ຢູ່ ສປປ ລາວ "ເສັ້ນທາງກ້າວສູ່ຄວາມປອດໄພ III" ໄລຍະ 2021-2030* (SPF III) ແນ່ໃສ່ "ຮັບປະກັນຊີວິດທີ່ປອດໄພ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນຂອງປະຊາຊົນເປົ້າໝາຍ ໂດຍຜ່ານການແກ້ໄຂບັນຫາ ລບຕ ທີ່ເປັນອຸປະສັກຕໍ່ການພັດທະນາປະເທດຊາດ ຢ່າງມີປະສິດທິຜົນ ໃນປີ 2030" ໂດຍມີ 4 ເປົ້າໝາຍຄື: ການໂຄສະນາສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງອັນຕະລາຍຈາກລະເບີດ, ການເກັບກູ້ລະເບີດ, ການສະໜັບສະໜູນຊ່ວຍເຫຼືອຜູ້ລອດຊີວິດ ແລະ ການຄຸ້ມຄອງບໍລິຫານ ແລະ ປະສານງານ.[6]

ການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດແມ່ນຄວາມພະຍາຍາມໃນລະດັບຊາດ ແລະ ມີການລິເລີ່ມຕ່າງໆຢ່າງຫຼວງຫຼາຍ ລວມກັນສາມາດເຂົ້າເຖິງຜູ້ຄົນຫຼາຍກວ່າ 4 ລ້ານຄົນນັບຕັ້ງແຕ່ປີ 2010, ໂດຍເນັ້ນໃສ່ການເຂົ້າຫາກຸ່ມປະຊາກອນທີ່ມີຄວາມສ່ຽງສູງທີ່ສຸດ, ລວມທັງເດັກ ແລະ ຊາວກະສິກອນຢູ່ຊົນນະບົດ.[7] ນະໂຍບາຍ ແລະ ໂຄງການທີ່ໃຫ້ການຊ່ວຍເຫຼືອຜູ້ເຄາະຮ້າຍ ເຊັ່ນ ສະໜັບສະໜູນການປິ່ນປົວທາງການແພດ, ການຟື້ນຟູໜ້າທີ່ການ, ການຊ່ວຍເຫຼືອທາງດ້ານຈິດໃຈ, ການຝຶກອົບຮົມວິຊາຊີບ ແລະ ການຊ່ວຍເຫຼືອດ້ານເສດຖະກິດ ໃນປີ 2023 ສາມາດໃຫ້ການຊ່ວຍເຫຼືອ 3,262 ຄົນ.[8] ເຖິງຢ່າງໃດກໍຕາມ, ອຸປະຕິເຫດ ລບຕ ຍັງສືບຕໍ່ເກີດຂຶ້ນ ແລະ ເມື່ອເກີດຂຶ້ນ, ຄອບຄົວ ແລະ ຊຸມຊົນຕ້ອງແບກຫາບພາລະທີ່ໃຫຍ່ຫຼວງໃນການດູແລ, ການສູນເສຍຜົນຜະລິດ ແລະ ຄວາມສ່ຽງທີ່ຍັງຄົງເກີດຂຶ້ນຢ່າງຕໍ່ເນື່ອງ.

ເພື່ອແກ້ໄຂບັນຫາອັນຮີບດ່ວນນີ້ ແລະ ເພື່ອສະໜັບສະໜູນຄວາມພະຍາຍາມຂອງລັດຖະບານ ໃນການບັນລຸເປົ້າໝາຍພັດທະນາແບບຍືນຍົງທີ 18 ແລະ ເສັ້ນທາງກ້າວສູ່ຄວາມປອດໄພ III, ຄຊກລ ໄດ້ມອບໝາຍໃຫ້ເຮັດການສຶກສານີ້ ໂດຍໄດ້ຮັບທຶນສະໜັບສະໜູນຈາກສະຫະປະຊາຊາດເພື່ອການພັດທະນາ ແລະ ອົງການ ຢູນິເຊັບ ເພື່ອສຶກສາກ່ຽວກັບສາເຫດ ແລະ ຜົນກະທົບຂອງອຸປະຕິເຫດ ລບຕ ແລະ ປະເມີນສະຖານະການຊ່ວຍເຫຼືອຜູ້ລອດຊີວິດໃນປະຈຸບັນ. ການສຶກສາຄົ້ນຄ້ວາຄັ້ງນີ້ ເນັ້ນໃສ່ເຫດການອຸປະຕິເຫດທີ່ເກີດຂຶ້ນເມື່ອບໍ່ດົນມານີ້ ແລະ ການມີສ່ວນຮ່ວມໂດຍກົງຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກ, ການຄົ້ນຄວ້າມີຈຸດປະສົງເພື່ອຊອກຫາຊ່ອງວ່າງລະຫວ່າງການໂຄສະນາ

---

[6] ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ). (2021). ເສັ້ນທາງກ້າວສູ່ຄວາມປອດໄພ III: ແຜນຍຸດທະສາດແຫ່ງຊາດວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງໃນ ຢູ່ ສປປ ລາວ ໄລຍະ 2021-2030. ວຽງຈັນ. https://nra.gov.la/resources/Strategy/SPF%20III%20Eng%20version%20on%2019.1.2023.pdf

[7] ມະຖຸຈັນ (Mathouchanh), P. (2025) ການເດີນທາງ 15 ປີ: ເລື່ອງຂອງ ສປປ ລາວ ພາຍໃຕ້ສົນທິສັນຍາວ່າດ້ວຍລະເບີດລູກຫວ່ານ (2010-2025). ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ). ) ແລະ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ (UNDP) ປະຈຳ ສປປ ລາວ. https://nra.gov.la/resources/WorkingGroup/15-Year%20Journey%20report.pdf

[8] ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, 2023. ບົດລາຍງານປະຈຳປີຂະແໜງ ລບຕກ *2023*.

ສຶກສາຄວາມສ່ຽງໄພຈາກລະເບີດ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ຜົນການຄົ້ນຄວ້ານີ້ມຸ່ງໝາຍເພື່ອໃຫ້ຂໍ້ມູນແນະນຳໃນລະດັບຊາດ ແລະ ພາກສ່ວນຕ່າງໆ ເພື່ອເພີ່ມການມີສ່ວນຮ່ວມ, ເປັນບ່ອນອີງໃນການລິເລີ່ມໃຫ້ແກ່ການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

## ສະພາບກ່ຽວກັບບັນຫາ ລບຕ

ຂໍ້ມູນທີ່ເພີ່ມຂຶ້ນເຮັດໃຫ້ເຫັນຄວາມຊັດເຈນທີ່ຍັງຄ້າງຢູ່ໃນລະບົບສະໜັບສະໜູນສຳລັບຜູ້ຖືກເຄາະຮ້າຍຈາກ ອຸປະຕິເຫດ ລບຕ, ໂດຍສະເພາະແມ່ນໃນການດູແລທາງການແພດ, ການຟື້ນຟູໜ້າທີ່ການ, ການບໍລິການທາງດ້ານສຸຂະພາບຈິດ, ແລະ ການຊ່ວຍເຫຼືອທາງດ້ານການດຳລົງຊີວິດໃນໄລຍະຍາວ. ການເຂົ້າເຖິງການບໍລິການຕ່າງໆຂອງບັນດາຜູ້ລອດຊີວິດ ແມ່ນເຂົ້າເຖິງໄດ້ເປັນບາງຄັ້ງຄາວ ແລະ ມັກຈະໄດ້ຮັບອິດທິພົນຈາກສະພາບທາງດ້ານພູມສັນຖານ ແລະ ຄວາມຮັບຮູ້ທີ່ຈຳກັດ.[9] ເຖິງວ່າຈະມີການຮັບຮູ້ເຖິງສິ່ງທ້າທາຍຕ່າງໆ ທີ່ປະຊາຊົນທີ່ອາໄສຢູ່ໃນເຂດທີ່ມີລະເບີດຕົກຄ້າງກຳລັງປະເຊີນຢູ່ ແລະ ອຸປະສັກໃນການສະໜັບສະໜູນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ, ແຕ່ກໍ່ມີການສຶກສາຄົ້ນຄ້ວາຈຳນວນໜ້ອຍເທົ່ານັ້ນ ທີ່ໄດ້ລວບລວມຄວາມຄິດເຫັນ ແລະ ທັດສະນະຂອງຜູ້ລອດຊີວິດ ຢ່າງເປັນລະບົບ.

ການສຶກສາຄົ້ນຄ້ວາທີ່ເຮັດຢູ່ແຂວງຊຽງຂວາງ, ສະຫວັນນະເຂດ ແລະ ອັດຕະປື ໃນປີ 2018 ໄດ້ເນັ້ນເຖິງການຂາດການສະໜັບສະໜູນດ້ານສຸຂະພາບຈິດ ແລະ ຮຽກຮ້ອງໃຫ້ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ແລະ ໜ່ວຍງານຕ່າງໆ ເປັນຕົ້ນແມ່ນຄະນະກຳມະການແຫ່ງຊາດເພື່ອຄົນພິການ (NCPD)[10] ສົມທົບກັນຢ່າງເຂັ້ມແຂງຂຶ້ນ. ຄຽງຄູ່ກັນນັ້ນ, ການປະເມີນຂອງ ອິນໂດຊາຍນາ ຣີເຊີດ ຢູ່ແຂວງຊຽງຂວາງ ແລະ ຄຳມ່ວນ ໄດ້ເວົ້າເຖິງສິ່ງທີ່ໜ້າເປັນຫ່ວງກ່ຽວກັບການໃຫ້ການບໍລິການທີ່ກະແຈກກະຈາຍໃນການຟື້ນຟູໜ້າທີ່ການ ແລະ ຊີວິດການເປັນຢູ່ຂອງຜູ້ລອດຊີວິດ[11]. ແນວໃດກໍ່ຕາມ, ການສຶກສາຄົ້ນຄ້ວາທັງສອງຄັ້ງທີ່ໄດ້ກ່າວມາ ໄດ້ສຸມໃສ່ສະເພາະຜູ້ໃຫຍ່ເທົ່ານັ້ນ, ເຊິ່ງສ່ວນໃຫຍ່ມີອາຍຸສະເລ່ຍຫຼາຍກວ່າ 60 ປີ ແລະ ບໍ່ໄດ້ລວມເອົາສຽງ/ຄວາມຄິດເຫັນ ຫຼື ຄວາມຕ້ອງການຂອງເດັກ ແລະ ໄວໜຸ່ມທີ່ມີອາຍຸຕ່ຳກວ່າ 18 ປີເຂົ້າໃນການສຶກສາຄົ້ນຄ້ວາ. ສິ່ງນີ້ເຮັດໃຫ້ມີຊ່ອງຫວ່າງອັນສຳຄັນໃນການທຳຄວາມເຂົ້າໃຈກ່ຽວກັບປະສົບການຂອງຜູ້ລອດຊີວິດທັງໝົດ, ໂດຍສະເພາະແມ່ນປະສົບການຂອງເດັກຜູ້ລອດຊີວິດ ເຊິ່ງເປັນຜູ້ທີ່ໄດ້ຮັບບາດເຈັບກວມເອົາເກືອບເຄິ່ງໜຶ່ງຂອງອຸປະຕິເຫດ ລບຕ ຕັ້ງແຕ່ປີ 2008 ຫາ 2025 [12] ແລະ ເຂົາເຈົ້າອາດຈະຕ້ອງການ ການດູແລ, ການຊ່ວຍເຫຼືອທາງດ້ານການສຶກສາ ແລະ ການຊ່ວຍເຫຼືອດ້ານຈິດຕະສັງຄົມ ໃນຮູບແບບຕ່າງໆ.

---

[9] UNDP (2022). ເອກະສານໂຄງການ: ການສະໜັບສະໜູນປະສິດທິຜົນ ແລະ ປະສິດທິພາບໃນຂະແໜງການລະເບີດ ເພື່ອຊ່ວຍສົ່ງເສີມໃຫ້ບັນລຸ SDG 18 ແລະ ແຜນງານ Safe Path Forward III . https://www.undp.org/sites/g/files/zskgke326/files/2022-10/UXO%20Project%20Document%202022-2026_countersigned.pdf

[10] Durham, J. (2018). ການວິເຄາະຄວາມຕ້ອງການທີ່ຍັງບໍ່ໄດ້ຮັບການຕອບສະໜອງຂອງຜູ້ລອດຊີວິດຈາກ UXO ທີ່ອາໄສຢູ່ໃນລາວ. ເອກະສານທີ່ຍັງບໍ່ໄດ້ເຜີຍແຜ່

[11] Indochina Research ທີ່ຖືກວ່າຈ້າງໂດຍ KOICA (2021). ການປະເມີນຄວາມຕ້ອງການສຳລັບກິດຈະກຳການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຂອງຂະແໜງການ ລບຕ ໃນ ສປປ ລາວ

[12] ຄຊກລ ໃນ ສປປ ລາວ, ຖານຂໍ້ມູນ dashboard ,30 ຕຸລາ 2025.

ການຕົກຄ້າງຂອງ ລບຕ ໄດ້ເພີ່ມຄວາມທຸກຍາກ ແລະ ຫຼຸດຜ່ອນໂອກາດທາງດ້ານການສຶກສາຂອງເດັກ ຍ້ອນວ່າຄອບຄົວທີ່ອາໄສການຜະລິດກະສິກຳເພື່ອການດຳລົງຊີວິດ ມີຄວາມຊັກຊ້າລົງ ແລະ ມີປະສິດທິພາບໜ້ອຍລົງ ເຊິ່ງເຮັດໃຫ້ເດັກອອກໂຮງຮຽນເພື່ອຊອກວຽກເຮັດ.[13] ດັ່ງນັ້ນ, ເດັກຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ (ລບຕ) ທີ່ອາໄສຢູ່ໃນເຂດຫ່າງໄກສອກຫຼີກ ຈຶ່ງມີຄວາມດ້ອຍໂອກາດເປັນພິເສດ ເພາະວ່າຄວາມຫ່າງໄກຂອງເຂົາເຈົ້າມັກຈະເປັນສາເຫດຂອງຄວາມທຸກຍາກ ແລະ ການບໍ່ສາມາດເຂົ້າເຖິງສະຖານທີ່ບໍລິການສຸຂະພາບ, ການປິ່ນປົວທາງດ້ານຮ່າງກາຍ ຫຼື ການສະໜັບສະໜູນທາງດ້ານການເງິນໜ້ອຍລົງ ເນື່ອງຈາກວ່າການເຂົ້າເຖິງການສະໜັບສະໜູນດັ່ງກ່າວແມ່ນໄດ້ຮັບອິດທິພົນຈາກສະພາບທາງດ້ານພູມສັນຖານ.[14] ນອກຈາກນັ້ນ, ເດັກພິການຍັງປະເຊີນກັບອັດຕາການຈຳແນກທີ່ສູງ.[15] ໂຄງການຕ່າງໆ ເຊັ່ນ: ໂຄງການຊ່ວຍເຫຼືອການປິ່ນປົວ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ ຂອງສະຫະລັດອາເມລິກາ (ໄດ້ຮັບທຶນຈາກກະຊວງການຕ່າງປະເທດຂອງສະຫະລັດ ອາເມລິກາ) ແລະ ໂຄງການທີ່ມີຊື່ວ່າ ໂອກາດ ທີ່ສະໜັບ ສະໜູນໂດຍອົງການພັດທະນາສາກົນຂອງສະຫະລັດອາເມລິກາ (USAID) ໄດ້ບັນທຶກໄວ້ວ່າ ຄ່າໃຊ້ຈ່າຍໃນການເດີນທາງ, ການຂາດແຄນການຄົມມະນາຄົມຂົນສົ່ງ ແລະ ການຂາດການບໍລິການໃນທ້ອງຖິ່ນ ເປັນສາເຫດເຮັດໃຫ້ໃຫ້ຜູ້ລອດຊີວິດບໍ່ໄດ້ຮັບການດູແລປິ່ນປົວທັນເວລາ.[16] ສຳລັບຜູ້ໃຫຍ່, ການບາດເຈັບຈາກ ລບຕ ອາດສົ່ງຜົນໃຫ້ມີການສູນເສຍລາຍຮັບ ຍ້ອນບໍ່ສາມາດເຮັດການຜະລິດກະສິກຳ ຫຼື ປະກອບອາຊີບໃຊ້ແຮງງານ. ສຳລັບເດັກ, ອຸປະຕິເຫດ ເຮັດໃຫ້ເຂົາຕ້ອງຂາດໂຮງຮຽນ ແລະ ຕ້ອງພັກຟື້ນຕົວເປັນເວລາດົນນານ ເຊິ່ງເຮັດໃຫ້ເຂົາເຈົ້າໄດ້ຮັບຜົນກະທົບເພີ່ມຂຶ້ນຕື່ມອີກ. ເຖິງວ່າຈະມີການບັນທຶກຄວາມຍາກລຳບາກເຫຼົ່ານີ້ໄວ້ໃນເອກະສານຕ່າງໆໄວ້ເປັນຢ່າງດີ ແຕ່ຄວາມຮູ້ທີ່ມີຢູ່ສ່ວນຫຼາຍແມ່ນຍັງເປັນເລື່ອງເລົ່າໃຫ້ກັນຟັງເທົ່ານັ້ນ ແລະ ມີຂໍ້ມູນທີ່ສົມບູນແບບທີ່ຂ້ອນຂ້າງຈຳກັດ ເພື່ອໃຊ້ເປັນບ່ອນອີງໃນການປັບປຸງລະບົບໃນອະນາຄົດ.

ການສຶກສາຄົ້ນຄ້ວາຄັ້ງນີ້ ມີຈຸດປະສົງເພື່ອແກ້ໄຂຊ່ອງຫວ່າງເຫຼົ່ານີ້ ແລະ ເພີ່ມຄວາມເຂົ້າໃຈກ່ຽວກັບພຶດຕິກຳ ແລະ ສະພາບການທີ່ພາໃຫ້ເກີດອຸປະຕິເຫດຈາກລະເບີດບໍ່ທັນແຕກ ແລະ ຄວາມຕ້ອງການຢ່າງຕໍ່ເນື່ອງຂອງຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າ. ຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ທີ່ເກີດຂຶ້ນພາຍໃນ 5 ປີຜ່ານມາ ມີສ່ວນຮ່ວມໂດຍກົງໃນການສຶກສາຄົ້ນຄ້ວາຄັ້ງນີ້, ໂດຍເນັ້ນໃສ່ທັດສະນະຂອງຜູ້ລອດຊີວິດທັງຜູ້ໃຫຍ່ ແລະ ເດັກ. ເພື່ອເປັນການສ້າງຫຼັກຖານໃໝ່, ການສຶກສາຄົ້ນຄວ້າມຸ່ງໃສ່ການເສີມສ້າງຄວາມພະຍາຍາມໃນລະດັບຊາດ ແລະ ທ້ອງຖິ່ນ ເພື່ອພັດທະນາການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍ ໂດຍເນັ້ນໃສ່ວິທີການໃນໄລຍະຍາວ, ມີຄວາມຍືນຍົງ ແລະ ຖືເອົາຜູ້ເຄາະຮ້າຍເປັນໃຈກາງ.

## ບັນຫາ ລບຕ

ເຖິງວ່າຈະມີຄວາມພະຍາຍາມຮ່ວມກັນມາເປັນເວລາຫຼາຍປີ ໃນການເກັບກູ້ລະເບີດ ໃນ ສປປ ລາວ, ແຕ່ອຸປະຕິເຫດ ລບຕ ຍັງສືບຕໍ່ເກີດຂຶ້ນໂດຍສະເພາະແມ່ນຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດທີ່ຂາດແຄນການຊ່ວຍເຫຼືອ ເຊິ່ງເຮັດໃຫ້ຜູ້ລອດຊີວິດປະສົບກັບການແກ້ບັນຫາ ຫຼື

[13] Guo, Shiqi. (2020). ຜົນກະທົບຈາກລະເບີດທີ່ຍັງບໍ່ທັນແຕກຕໍ່ຜົນສຳເລັດທາງການສຶກສາໃນ ສປປ ລາວ. ວາລະສານເສດຖະສາດການພັດທະນາ. 147. 102527. 10.1016/j.jdeveco.2020.102527.

[14] ອົງການສະຫະປະຊາຊາດເພື່ອການພັດທະນາ, 2022.

[15] Scherer, N., Chanthakoummane, K., Homsana, A., Carew, M., Siengsounthone, L., Kuper, H, Soukkhaphone, B., Banks, L. M. (2025). ອັດຕາການແຜ່ລະບາດ, ຕົວຄາດຄະເນ ແລະ ຜົນກະທົບຈາກການຈຳແນກຕໍ່ເດັກພິການທີ່ລາຍງານໃນ ສປປ ລາວ: ການວິເຄາະແບບຫຼາຍຂະແໜງການໃນແຂວງຊຽງຂວາງ. ວາລະສານ ຄວາມພິການ ແລະ ສຸຂະພາບ. 101963. 10.1016/j.dhjo.2025.101963.

[16] ບົດລາຍງານໂຄງການ ທີ່ບໍ່ໄດ້ເຜີຍແຜ່

ຄວາມຕ້ອງການຂອງເຂົາເຈົ້າທີ່ສະລັບຊັບຊ້ອນຂຶ້ນອີກ ແລະ ແກ່ຍາວເວລາຂຶ້ນຕື່ມອີກ. ການສຶກສາຄົ້ນຄ້ວາທີ່ເຮັດໃນໄລຍະຜ່ານມາພົບວ່າມີຊ່ອງຫວ່າງໃນການສະໜັບສະໜູນຜູ້ລອດຊີວິດ ໂດຍສະເພາະແມ່ນໃນການບໍລິການດ້ານສຸຂະພາບຈິດ, ການຟື້ນຟູໜ້າທີ່ການ ແລະ ການຊ່ວຍເຫຼືອດ້ານຊີວິດການເປັນຢູ່. ຢ່າງໃດກໍ່ຕາມ, ການສຶກສາຄົ້ນຄ້ວາເຫຼົ່ານີ້ ມີຂອບເຂດທີ່ຈຳກັດ ແລະ ສ່ວນໃຫຍ່ແມ່ນບໍ່ລວມເອົາເດັກ ແລະ ໄວໜຸ່ມເຂົ້ານຳ. ຜູ້ລອດຊີວິດຫຼາຍຄົນ ບໍ່ສາມາດເຂົ້າເຖິງການປິ່ນປົວບຳບັດທາງດ້ານຮ່າງກາຍ ຫຼື ບໍ່ສາມາດກັບຄືນໄປເຮັດວຽກໄດ້ ແລະ ເດັກອາດຈະປະສົບກັບບັນຫາການຂາດໂຮງຮຽນເປັນເວລາດົນ ແລະ ມີບາດແຜທາງດ້ານຈິດໃຈ. ຍ້ອນບໍ່ມີເຄືອຂ່າຍສະຫວັດດີການທາງສັງຄົມຢ່າງເປັນທາງການ ແລະ ຍ້ອນຊັບພະຍາກອນຂອງລັດຖະບານທີ່ມີຢ່າງຈຳກັດ ສຳລັບການຊ່ວຍເຫຼືອຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ, ຈຶ່ງເຮັດໃຫ້ຍັງຂາດຫຼັກຖານທີ່ຄົບຖ້ວນ, ທັນກັບສະພາບການ ຈາກປະສົບການຂອງຜູ້ລອດຊີວິດຈາກ ລບຕ ເພື່ອນຳໃຊ້ເປັນທິດທາງໃນການຕອບສະໜອງການຊ່ວຍເຫຼືອຢ່າງມີປະສິດທິພາບ. ການສຶກສາຄົ້ນຄ້ວາຄັ້ງນີ້ ພະຍາຍາມຈະອັດຊ່ອງຫວ່າງດັ່ງກ່າວ ໂດຍການບັນທຶກປະສົບການ ແລະ ຄວາມຕ້ອງການຂອງຜູ້ລອດຊີວິດຈາກລະເບີດບໍ່ທັນແຕກໂດຍກົງ, ສະໜອງຂໍ້ມູນທີ່ເລິກເຊິ່ງ ເພື່ອນຳໄປສູ່ການເຮັດໃຫ້ມີລະບົບການຊ່ວຍເຫຼືອທີ່ກວມເອົາທຸກຄົນ, ມີການປະສານງານ ແລະ ມີຄວາມຍືນຍົງ.

## ຈຸດປະສົງຂອງບົດລາຍງານ

ຈຸດປະສົງຂອງບົດລາຍງານສະບັບນີ້ ແມ່ນເພື່ອນຳສະເໜີຜົນການວິໄຈຈາກການສຶກສາປະສົບການ ແລະ ຄວາມຕ້ອງການຂອງຜູ້ລອດຊີວິດຈາກລະເບີດບໍ່ທັນແຕກໃນລາວ, ໂດຍມີເປົ້າໝາຍເພື່ອຊ່ວຍໃຫ້ພາກສ່ວນກ່ຽວຂ້ອງຂອງພາກລັດ ແລະ ຂະແໜງການຕ່າງໆ ອອກແບບການເຂົ້າໄປແຊກແຊງຊ່ວຍເຫຼືອ ທີ່ແນໃສ່ປັດໄຈສຳຄັນຂອງອຸປະຕິເຫດ ລບຕ ໃຫ້ໄດ້ດີຂຶ້ນ ແລະ ຊ່ວຍໃນການອອກແບບການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃຫ້ສອດຄ່ອງກັບບົດຮຽນ ແລະ ປະສົບການຈາກຜູ້ເຄາະຮ້າຍຈາກ ລບຕ ແລະ ມີການປະສານງານ, ໃຫ້ການສະໜັບສະໜູນຊ່ວຍເຫຼືອ ແລະ ສືບຕໍ່ການສະໜັບສະໜູນໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ປະສົບການຂອງຄອບຄົວຜູ້ລອດຊີວິດ. ບົດລາຍງານນີ້ ມີຈຸດປະສົງເພື່ອໃຫ້ຂໍ້ສະເໜີແນະທີ່ອີງໃສ່ຫຼັກຖານ ເພື່ອຊ່ວຍໃຫ້ພາກລັດ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເປັນບ່ອນອີງໃນການອອກນະໂຍບາຍ ແລະ ແຜນການເພື່ອປ້ອງກັນ ແລະ ຕອບໂຕ້ອຸປະຕິເຫດ ລບຕ.

## ຄຳຖາມສຳລັບການສຶກສາຄົ້ນຄວ້າ

ຄຳຖາມສຳລັບການສຶກສາຄົ້ນຄວ້າ ໄດ້ຖືກອອກແບບເພື່ອສຶກສາຊ່ອງຫວ່າງທີ່ສຳຄັນເພື່ອເຂົ້າໃຈກ່ຽວກັບສາເຫດ, ຜົນກະທົບ ແລະ ລະບົບການຊ່ວຍເຫຼືອທີ່ກ່ຽວຂ້ອງກັບອຸປະຕິເຫດ ລບຕ ຢູ່ ສປປ ລາວ. ຈຸດປະສົງຂອງຄຳຖາມແມ່ນ ເພື່ອສ້າງຫຼັກຖານທີ່ສາມາດນຳໄປດັດປັບໃຊ້ໃນການຫຼຸດຜ່ອນຄວາມສ່ຽງ, ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ເປັນແຫຼ່ງຂໍ້ມູນສຳລັບການສຶກສາ ແລະ ຈັດຕັ້ງປະຕິບັດນະໂຍບາຍ.

1. ມີສະຖານະການສະເພາະໃດແດ່ກ່ຽວຂ້ອງກັບອຸປະຕິເຫດ ແລະ ແມ່ນສະຖານະການໃດທີ່ນຳໄປສູ່ການເກີດອຸປະຕິເຫດ?
2. ຜູ້ຖືກເຄາະຮ້າຍກຳລັງເຮັດຫຍັງໃນເວລາເກີດອຸປະຕິເຫດ ແລະ ມີໃຜແດ່ທີ່ກ່ຽວຂ້ອງນຳອຸປະຕິເຫດ?
3. ຜູ້ຖືກເຄາະຮ້າຍມີຄວາມຮູ້ຫຍັງແດ່ກ່ຽວກັບຂໍ້ຄວາມສຳຄັນ ໃນການສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກລະເບີດ ແລະ ຖ້າຂໍ້ຄວາມສຳຄັນເຫຼົ່ານັ້ນບໍ່ໄດ້ຖືກນຳໃຊ້ຍ້ອນຫຍັງຈຶ່ງບໍ່ນຳໃຊ້?

4. ຜູ້ຖືກເຄາະຮ້າຍຈາກອຸປະຕິເຫດມີຄວາມຕ້ອງການ ການຊ່ວຍເຫຼືອດ້ານການບາດເຈັບ ແລະ ການຟື້ນຟູໜ້າທີ່ການຂອງເຂົາເຈົ້າ ແນວໃດແດ່ຫຼັງຈາກເກີດອຸປະຕິເຫດ ແລະ ເຂົາເຈົ້າໄດ້ຮັບການຕອບສະໜອງຊ່ວຍເຫຼືອໃນລະດັບໃດ ແລະ ຊ່ວຍແນວໃດ?
5. ຜູ້ລອດຊີວິດໄດ້ຮັບການບໍລິການ ແລະ ການຊ່ວຍເຫຼືອຫຍັງແດ່?
6. ອຳນາດການປົກຄອງທ້ອງຖິ່ນໄດ້ໃຫ້ການສະໜັບສະໜູນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກແນວໃດແດ່?
7. ອຸປະຕິເຫດ ມີຜົນກະທົບໃນໄລຍະຍາວ ຕໍ່ຊີວິດການເປັນຢູ່ຂອງຜູ້ລອດຊີວິດ ແລະ ຄອບຄົວເຂົາເຈົ້າ ແນວໃດແດ່ ແລະ ເຂົາເຈົ້າມີສ່ວນຮ່ວມໃນໂຄງການສະໜັບສະໜູນການດຳລົງຊີວິດ ໂຄງການໃດແດ່?
8. ຜູ້ເຄາະຮ້າຍຈາກ ລບຕ ຮູ້ສຶກວ່າເຂົາເຈົ້າຕ້ອງການການຊ່ວຍເຫຼືອອັນໃດແດ່ ເພື່ອຍົກລະດັບຊີວິດການເປັນຢູ່ຂອງເຂົາເຈົ້າ? ຕົວຢ່າງ: ການສະໜັບສະໜູນດ້ານເສດຖະກິດ, ການສະໜັບສະໜູນດ້ານການສຶກສາ; ການຊ່ວຍເຫຼືອດ້ານກະສິກຳ ແລະ ອື່ນໆ.

## ຂໍ້ຈຳກັດ

ຂໍ້ຈຳກັດຕົ້ນຕໍໃນ ສປປ ລາວ ແມ່ນທ່າອ່ຽງທາງວັດທະນະທຳ ທີ່ຈະຫຼີກລ້ຽງການໃຫ້ຄຳຄິດເຫັນໃນລັກສະນະທີ່ວິພາກວິຈານ, ໂດຍສະເພາະໃນຫົວຂໍ້ທີ່ມີຄວາມລະອຽດອ່ອນ ເຊັ່ນ: ການສະໜັບສະໜູນຂອງລັດຖະບານ, ຄວາມພິການ ຫຼື ບາດແຜທາງດ້ານຈິດໃຈ ເຊິ່ງສາມາດສົ່ງຜົນກະທົບຕໍ່ການຕອບຄຳຖາມດ້ານຄຸນນະພາບ. ເພື່ອຫຼຸດຜ່ອນບັນຫາດັ່ງກ່າວ, ການສຳພາດສ່ວນບຸກຄົນໄດ້ຖືກດຳເນີນໂດຍນັກສຶກສາຄົ້ນຄວ້າຄົນລາວ ທີ່ໄດ້ຮັບການຝຶກອົບຮົມເປັນຢ່າງດີ ແລະ ມີຄວາມຄຸ້ນເຄີຍກັບຮີດຄອງປະເພນີຂອງທ້ອງຖິ່ນ, ຮູ້ຈັກກັບຜູ້ລອດຊີວິດບາງຄົນ ແລະ ໄດ້ຮັບການສະໜັບສະໜູນໂດຍພະນັກງານສະຖາບັນວິໄຈ ແລະ ຝຶກອົບຮົມ JSI, Inc. ໄດ້ມີການນຳໃຊ້ເຕັກນິກການສຳພາດ ທີ່ຄຳນຶງເຖິງບາດແຜທາງດ້ານຈິດໃຈ, ການໃຊ້ຄຳຖາມແບບເປີດ ແລະ ບໍ່ມີການວິພາກຕັດສິນໃດໆ ພ້ອມທັງຊຸກຍູ້ໃຫ້ມີການເປີດເຜີຍຄວາມຄິດ ແລະ ຄວາມຮູ້ສຶກ.

ໄດ້ມີການແກ້ໄຂບັນຫາຂໍ້ຜິດພາດຈາກການຈື່ຈຳ ໂດຍການເລືອກເອົາຜູ້ລອດຊີວິດທີ່ໄດ້ຮັບບາດເຈັບຈາກອຸປະຕິເຫດ ທີ່ເກີດຂຶ້ນໃນໄລຍະ 5 ປີທີ່ຜ່ານມາ, ຖາມຄຳຖາມສະເພາະເຈາະຈົງ ແລະ ມີການກວດສອບກັບຄອບຄົວຂອງເຂົາເຈົ້າ ຖ້າເຫັນວ່າມີຄວາມຈຳເປັນ. ຄວາມລຳອຽງຂອງນັກແປພາສາທີ່ອາດເກີດຂຶ້ນ ໄດ້ຖືກຫຼຸດຜ່ອນລົງດ້ວຍການຝຶກອົບຮົມຜູ້ສຳພາດ ໃຫ້ປັບປຸງການສົນທະນາໄປຫາຜູ້ເຂົ້າຮ່ວມ ແລະ ກວດສອບຄວາມຖືກຕ້ອງຂອງຄຳແປໃນຫຼາຍພາສາ.

ສິ່ງທ້າທາຍດ້ານການເດີນທາງ-ເຄື່ອນຍ້າຍຕ່າງໆ ລວມທັງນ້ຳຖ້ວມ, ເສັ້ນທາງທີ່ເປ່ເພ ແລະ ຄວາມຮັບຜິດຊອບແຂ່ງຂັນກັບເວລາ ລ້ວນແຕ່ສົ່ງຜົນຕໍ່ການເກັບກຸ່ມປະຊາກອນຕົວຢ່າງ ແລະ ການສຳພາດແບບເລິກເຊິ່ງ. ຕົວຢ່າງ ຢູ່ແຂວງຄຳມ່ວນ, ຍ້ອນໄພນ້ຳຖ້ວມຈຶ່ງມີພຽງແຕ່ 5 ຄົນໃນຈຳນວນ 11 ຄົນທີ່ວາງແຜນໄວ້ສຳລັບການສຳພາດ ໄດ້ຖືກສຳພາດ, ຍ້ອນບໍ່ສາມາດຫາຜູ້ມາທົດແທນໃນການສຳພາດໄດ້ ຈຶ່ງມີການສຳພາດເພີ່ມເຕີມຢູ່ ແຂວງສະຫວັນນະເຂດ. ຕົວຢ່າງນີ້ ບໍ່ໄດ້ຕາມສັດສ່ວນຕາມແຂວງ ແລະ ການວິໄຈຂໍ້ມູນກໍ່ບໍ່ໄດ້ແຍກອອກເປັນແຂວງ ເພື່ອເປັນການຫຼຸດຜ່ອນຜົນກະທົບຂອງຄວາມລຳອຽງເຫຼົ່ານີ້ໃຫ້ໜ້ອຍທີ່ສຸດ. ໄດ້ມີການປັບປຸງອື່ນໆ ເຊັ່ນ ການຈັດຕາຕະລາງທີ່ດັດປັບໄດ້, ການຈັດບູລິມະສິດຫົວຂໍ້ທີ່ສຳຄັນ ແລະ ການດຳເນີນການຕິດຕາມ.

ການເກັບກຳຂໍ້ມູນມີການຊັກຊ້າອອກໄປອີກ 6 ອາທິດ ຍ້ອນຂະບວນການທາງດ້ານບໍລິຫານ. ຍ້ອນຄວາມຊັກຊ້າເຫຼົ່ານີ້ ຈຶ່ງເຮັດໃຫ້ມີຊ່ອງຫວ່າງລະຫວ່າງການຝຶກອົບຮົມ ແລະ ການຈັດຕັ້ງປະຕິບັດ ເພີ່ມຂຶ້ນ ເຊິ່ງອາດຈະສົ່ງຜົນກະທົບຕໍ່ຄວາມສອດຄ່ອງ, ສະນັ້ນ, ຈຶ່ງໄດ້ຈັດການຝຶກອົບຮົມເພີ່ມເຕີມຄືນໃໝ່ໃຫ້ຜູ້ເກັບຂໍ້ມູນ ເພື່ອຮັບປະກັນຄຸນນະພາບ ແລະ ອັດຊ່ອງຫວ່າງລະຫວ່າງການຝຶກອົບຮົມ ແລະ ການຈັດຕັ້ງປະຕິບັດຕົວຈິງ.

# ວິທີການ

## ການອອກແບບສຳລັບການສຶກສາຄົ້ນຄ້ວາ

ການສຶກສາຄົ້ນຄ້ວາຄັ້ງນີ້ ໄດ້ຖືກອອກແບບດ້ວຍວິທີການແບບປະສົມປະສານ, ນຳໃຊ້ປະໂຫຍດຈາກຂໍ້ດີຂອງການວິເຄາະດ້ານຄຸນນະພາບ, ປະລິມານ ແລະ ປະສົມປະສານກັນ ເພື່ອສ້າງພາບລວມຂອງອຸປະຕິເຫດ ລບຕ ແລະ ປະສົບການຂອງຜູ້ລອດຊີວິດ.[17] ຕະຫຼອດໄລຍະການສຶກສາຄົ້ນຄ້ວາ, ຜົນການຄົ້ນພົບດ້ານຄຸນນະພາບ ແລະ ປະລິມານ ຈະຖືກນຳມາວິເຄາະໃນຮູບສາມຫຼ່ຽມ ເພື່ອສິ່ງເສີມຄວາມເຂັ້ມແຂງໃຫ້ແກ່ຄຳອ້າງອີງ. ໃນບາງກໍລະນີ, ຂໍ້ມູນດ້ານຄຸນນະພາບ ຈະຂະຫຍາຍໄປຕາມເລື່ອງລາວທີ່ຜົນການວິເຄາະທາງປະລິມານສະແດງໃຫ້ເຫັນ. ໃນກໍລະນີອື່ນໆ, ການສົມທຽບຜົນການວິເຄາະດ້ານຄຸນນະພາບ ແລະ ປະລິມານ ຈະຊ່ວຍເຮັດໃຫ້ເຫັນແງ່ມູມທີ່ແຕກຕ່າງກັນຂອງຜົນການວິເຄາະຂໍ້ມູນ.

ໃນເວລາອອກແບບລະບົບການສະໜັບສະໜູນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ໃນການສ້າງມາດຕະການປ້ອງກັນອຸປະຕິເຫດ ລບຕ ສິ່ງສຳຄັນແມ່ນຈະຕ້ອງເຂົ້າໃຈກ່ຽວກັບປະສົບການຂອງຜູ້ລອດຊີວິດ. ເພື່ອໃຫ້ບັນລຸຈຸດປະສົງນີ້ ໄດ້ມີການການສຳພາດດ້ານຄຸນນະພາບກັບຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກ . ໂດຍຜ່ານຊຸດຄຳຖາມແບບເປີດ, ພວກເຮົາໄດ້ກະຕຸ້ນໃຫ້ຜູ້ລອດຊີວິດພິຈາລະນາບາງດ້ານຂອງປະສົບການຂອງເຂົາເຈົ້າທີ່ກ່ຽວຂ້ອງກັບອຸປະຕິເຫດ ລບຕ ຂອງເຂົາເຈົ້າ ແລະ ກ່ຽວກັບຄຳຖາມສຳລັບການສຶກສາຄົ້ນຄວ້າ. ໂດຍການຖາມຄຳຖາມແບບເປີດ, ພວກເຮົາສາມາດລວບລວມຂໍ້ມູນທີ່ເລິກເຊິ່ງຈາກຜູ້ລອດຊີວິດກ່ຽວກັບປະສົບການຂອງຕົນເອງ, ເຮັດໃຫ້ມີຄວາມຮູ້ທີ່ບໍ່ຄາດຄິດວ່າຈະໄດ້ຮູ້ ແລະ ເປີດໂອກາດໃຫ້ຜູ້ລອດຊີວິດ ໄດ້ເນັ້ນເຖິງຂັ້ນຕອນທີ່ສຳຄັນທີ່ສຸດໃນຊີວິດຂອງເຂົາເຈົ້າ. ເຊັ່ນດຽວກັນກັບການວິເຄາະດ້ານປະລິມານ, ການວິເຄາະດ້ານຄຸນນະພາບກໍ່ນຳໃຊ້ວິທີການແບບເປັນລະບົບໃນຂະບວນການເກັບກຳຂໍ້ມູນ ແລະ ການວິເຄາະຂໍ້ມູນເຊິ່ງໄດ້ອະທິບາຍໄວ້ໃນສອງພາກຕໍ່ໄປນີ້.

## ກຸ່ມຕົວຢ່າງ ແລະ ການຕັ້ງຄ່າສຳລັບການສຶກສາຄົ້ນຄ້ວາ

ກຸ່ມປະຊາກອນຕົ້ນຕໍສຳລັບການສຶກສາຄົ້ນຄ້ວາ ແມ່ນຜູ້ລອດຊີວິດຈາກ ລບຕ. ການສຶກສາຄົ້ນຄ້ວາຄັ້ງນີ້ ກວມເອົາ 5 ແຂວງ ແລະ 10 ເມືອງໃນ ສປປ ລາວ. ພື້ນທີ່ເຫຼົ່ານີ້ມີອຸປະຕິເຫດທີ່ເກີດຈາກລະເບີດບໍ່ທັນແຕກ ສູງ ແລະ ເປັນຕົວຢ່າງທາງພູມສັນຖານທີ່ຊັດເຈນຂອງປະເທດ ເຊິ່ງມີແຂວງຊຽງຂວາງຢູ່ທາງພາກເໜືອ, ເຊກອງ, ສາລະວັນ ໃນພາກໃຕ້ ແລະ ສະຫວັນນະເຂດ ແລະ ຄຳມ່ວນ ຢູ່ພາກກາງຂອງລາວ.

ຜູ້ລອດຊີວິດຈາກ ລບຕ ທຸກຄົນທີ່ປະສົບອຸປະຕິເຫດໃນ 5 ປີຜ່ານມາ (2020-2024) ມີສິດເຂົ້າຮ່ວມການສຶກສາຄົ້ນຄ້ວານີ້ໄດ້, ໃນນັ້ນລວມມີທັງຜູ້ໃຫຍ່ ແລະ ເດັກ. ສຳລັບເດັກທີ່ລອດຊີວິດຈາກລະເບີດບໍ່ທັນແຕກ, ພວກເຮົາໃຫ້ຄວາມສຳຄັນໃນການໂອ້ລົມກັບຜູ້ທີ່ມີອາຍຸ 11 ປີຂຶ້ນໄປ ຍ້ອນວ່າເດັກທີ່ຍັງນ້ອຍ ມັກຈະມີຄວາມຫຍຸ້ງຍາກໃນການປຶກສາຫາລືກ່ຽວກັບເຫດການທີ່ເຈັບປວດ ແລະ ການສະແດງຄວາມຄິດເຫັນຂອງເຂົາເຈົ້າ. ພວກເຮົາບໍ່ສຳພາດເດັກທີ່ລອດຊີວິດຈາກກຸ່ມປະຊາກອນຕົວຢ່າງ ທີ່ບໍ່ສາມາດ ຫຼື ບໍ່ສົນໃຈທີ່ຈະສົນທະນາກັບຜູ້ສຳ

---

[17] Creswell, J. W., & Plano Clark, V. L. (2018). ອອກແບບ ແລະ ເຮັດບົດຄົ້ນຄ້ວາດ້ວຍວິທີການແບບປະສົມປະສານ Mixed Methods Research (3rd ed.). Thousand Oaks, CA: SAGE

ພາດ ບໍ່ວ່າຈະເປັນຍ້ອນຄວາມເຂົ້າໃຈ, ຄວາມແຕກຕ່າງຂອງພາສາ ຫຼື ຍ້ອນເຂົາເຈົ້າບໍ່ສົນໃຈໃນການເຂົ້າຮ່ວມ. ຜູ້ລອດຊີວິດກຸ່ມນ້ອຍ ທີ່ຖືກສຳພາດສຳລັບການສຳຫຼວດດ້ານປະລິມານ ໄດ້ຖືກຄັດເລືອກສຳລັບການສຳພາດດ້ານຄຸນນະພາບ ນຳອີກ.

ການສຶກສາຄົ້ນຄ້ວາຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 50 ຄົນ ທີ່ລອດຊີວິດຈາກລະເບີດບໍ່ທັນແຕກ. ຂະໜາດກຸ່ມປະຊາກອນຕົວຢ່າງນີ້ ກວມເອົາ 24% ຂອງຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ທັງໝົດ 212 ຄົນ[18] (ທັງໄດ້ຮັບບາດເຈັບ ແລະ ເສຍຊີວິດ) ໃນທົ່ວປະເທດລາວ ແລະ 30% ຂອງຜູ້ລອດຊີວິດທັງໝົດ ໃນໄລຍະເວລາ 5 ປີດຽວກັນ. ດັ່ງນັ້ນ, ຕົວຢ່າງກຸ່ມປະຊາກອນຕົວຢ່າງຂອງການສຶກສາ ຈຶ່ງເປັນຕົວແທນຂອງກຸ່ມປະຊາກອນທີ່ໜ້າສົນໃຈຫຼາຍ, ໂດຍສະເພາະຢ່າງຍິ່ງ ເມື່ອພິຈາລະນາວ່າອຸປະຕິເຫດຈຳນວນຫຼາຍມີຜູ້ຖືກເຄາະຮ້າຍຫຼາຍຄົນ, ຊຶ່ງໝາຍຄວາມວ່າ ອຸປະຕິເຫດທີ່ຜູ້ເຂົ້າຮ່ວມການສຶກສາຄົ້ນຄ້ວາປະສົບມາ ອາດຈະກວມເອົາຫຼາຍກ່ວາ 24% ຂອງອຸປະຕິເຫດ ລບຕ.

*ຕາຕະລາງທີ 1: ຂະໜາດກຸ່ມປະຊາກອນຕົວຢ່າງຂອງຜູ້ລອດຊີວິດຈາກ ລບຕ ແຍກຕາມແຂວງ*

| ຊື່ແຂວງ | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ | | ຜູ້ລອດຊີວິດທີ່ເປັນເດັກ | | ຈຳນວນລວມ |
|---|---|---|---|---|---|
| | ດ້ານປະລິມານ | ດ້ານຄຸນນະພາບ | ດ້ານປະລິມານ | ດ້ານຄຸນນະພາບ | |
| ຊຽງຂວາງ | 10 | 8 | 8 | 6 | 18 |
| ຄຳມ່ວນ | 2 | 2 | 3 | 3 | 5 |
| ສະຫວັນນະເຂດ | 13 | 9 | 5 | 1 | 18 |
| ສາລະວັນ | 6 | 4 | 2 | 1 | 8 |
| ເຊກອງ | 1 | 1 | 0 | 0 | 1 |
| ລວມ | 32 | 24 | 18 | 11 | 50 |

on page 21 ສະແດງໃຫ້ເຫັນສັດສ່ວນຂອງອຸປະຕິເຫດ ລບຕ ທີ່ເກີດຂຶ້ນກັບຜູ້ໃຫຍ່ ແລະ ເດັກນ້ອຍ ໃນກຸ່ມຕົວຢ່າງໃນໄລຍະເວລາ 5ປີມາພິຈາລະນາ. ໃນທັງສອງກຸ່ມ, ສັດສ່ວນຂອງອຸປະຕິເຫດ ລບຕ ມີການຂຶ້ນໆລົງໆໃນແຕ່ລະປີ. ຈຳນວນອຸປະຕິເຫດແມ່ນຫຼຸດລົງໃນປີ 2020 ແລະ 2022 ໃນບັນດາກຸ່ມຕົວຢ່າງ ເຊິ່ງສະທ້ອນໃຫ້ເຫັນເຖິງແນວໂນ້ມຂອງຈຳນວນອຸປະຕິເຫດ ແລະ ຜູ້ບາດເຈັບ ແລະ ເສຍຊີວິດໂດຍລວມໃນສປປ ລາວ ທີ່ມີການຫຼຸດລົງໃນສອງປີນີ້ຄືກັນ ແລະ ຈຳນວນອຸປະຕິເຫດໄດ້ສູງຂຶ້ນອີກໃນປີ 2021, 2023 ແລະ 2024. ເຖິງແມ່ນເບິ່ງຄືວ່າ ທ່າອ່ຽງຂອງອຸປະຕິເຫດ ແລະ ຜູ້ບາດເຈັບໃນປີ 2023 ແລະ 2024 ຈະເພີ່ມສູງຂຶ້ນ, ແຕ່ຂໍ້ມູນສຳລັບປີ 2025 ນະເວລາທີ່ກຳລັງເຮັດບົດ

[18] ຂໍ້ມູນສະຖິຕິຈາກຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ).

ລາຍງານສະບັບນີ້ ໄດ້ຊີ້ໃຫ້ເຫັນເຖິງການປ່ຽນແປງທີ່ຫຼຸດລົງອີກຄັ້ງໜຶ່ງ ໂດຍມີອຸປະຕິເຫດເກີດຂຶ້ນພຽງແຕ່ 8 ຄັ້ງ ແລະ ມີຜູ້ບາດເຈັບ 9 ຄົນ ມາຮອດວັນທີ 30 ຕຸລາ 2025.[19]

*ຮູບທີ 1: ຈຳນວນກຸ່ມປະຊາກອນຕົວຢ່າງ ຂອງຜູ້ລອດຊີວິດຜູ້ໃຫຍ່ແລະເດັກນ້ອຍ, ປຽບທຽບກັບຈຳນວນຜູ້ຖືກເຄາະຮ້າຍທີ່ບາດເຈັບທັງໝົດ ໃນ ສປປ ລາວ ຕາມປີເກີດອຸປະຕິເຫດ*




ນອກຈາກນັ້ນ, ເພື່ອສະເໜີທັດສະນະທີ່ເສີມສ້າງເຊິ່ງກັນ ແລະ ກັນ, ຈຶ່ງມີການສຳພາດພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງຈາກພາກລັດ ໃນຂັ້ນທ້ອງຖິ່ນ. ພະນັກງານລັດທັງໝົດ 9 ຄົນໄດ້ຖືກສຳພາດ. ເຂົາເຈົ້າໄດ້ເປັນຕົວແທນຂອງ 4 ແຂວງຈາກທັງໝົດ 5 ແຂວງສຳລັບການສຶກສາຄົ້ນຄວ້າ ເຊິ່ງລວມມີພະແນກການຕ່າງປະເທດແຂວງ, ຫ້ອງວ່າການປົກຄອງເມືອງ ລວມທັງອຳນາດການປົກຄອງໃນຂັ້ນບ້ານ.

*ຕາຕະລາງທີ 2: ກຸ່ມປະຊາກອນຕົວຢ່າງຂອງພະນັກງານລັດແຍກຕາມແຂວງ ແລະ ລະດັບຂອງພາລະບົດບາດ*

| **ຊື່ແຂວງ** | **ຈຳນວນ** |
|---|---|
| ຄຳມ່ວນ | 3 |
| ສາລະວັນ | 1 |
| ສະຫວັນນະເຂດ | 2 |
| ຊຽງຂວາງ | 3 |

[19] ຂໍ້ມູນແດສບອດຂອງ ຄຊກລ.

| ລະດັບບົດບາດໜ້າທີ່ | |
|---|---|
| ຂັ້ນແຂວງ | 4 |
| ຂັ້ນເມືອງ | 3 |
| ຂັ້ນບ້ານ | 2 |

## ເຄື່ອງມືສຳລັບການເກັບກຳຂໍ້ມູນ

ການສຶກສາຄົ້ນຄ້ວາໄດ້ນຳໃຊ້ 3 ຊຸດເຄື່ອງມືສຳລັບການເກັບກຳຂໍ້ມູນ: 2 ຊຸດເຄື່ອງມືສຳລັບຜູ້ລອດຊີວິດ ແລະ 1 ຊຸດເຄື່ອງມືສຳລັບເຈົ້າໜ້າທີ່ພາກລັດໃນຂັ້ນທ້ອງຖິ່ນ. ເຄື່ອງມືທັງໝົດແມ່ນຖືກລວມໄວ້ຢູ່ໃນເອກະສານຊ້ອນທ້າຍ ກ.

2 ເຄື່ອງມືສຳລັບຜູ້ລອດຊີວິດ ເຊັ່ນ: ເຄື່ອງມືສຳລັບຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ເຄື່ອງມືສຳລັບຜູ້ເບິ່ງແຍງເດັກ ແລະ ເດັກ ເຊິ່ງແຕ່ລະຊຸດເຄື່ອງມື ຈະປະກອບມີອົງປະກອບດ້ານປະລິມານທີ່ໃຊ້ສຳລັບຜູ້ເຂົ້າຮ່ວມທັງໝົດ ແລະ ອົງປະກອບດ້ານຄຸນນະພາບທີ່ໃຊ້ເກັບກຳຂໍ້ມູນໃນກຸ່ມຍ່ອຍ.

ອົງປະກອບດ້ານປະລິມານຂອງເຄື່ອງມືສຳລັບຜູ້ລອດຊີວິດຈາກ ລບຕ ໃຊ້ສຳລັບເກັບກຳຂໍ້ມູນກ່ຽວກັບປະຊາກອນ, ຄຸນລັກສະນະຂອງຄົວເຮືອນ, ຂໍ້ມູນສະເພາະກ່ຽວກັບອຸປະຕິເຫດ, ການດູແລ ແລະ ການຊ່ວຍເຫຼືອຫຼັງຈາກອຸປະຕິເຫດ, ສຸຂະພາບຈິດ ແລະ ການເປັນຢູ່ທີ່ດີ, ຜົນກະທົບຕໍ່ຊີວິດປະຈຳວັນ ແລະ ການໄດ້ຮັບຄວາມຮູ້ຈາກການໂຄສະນາສຶກສາໃຫ້ຄວາມຮູ້ກ່ຽວກັບລບຕ. ອົງປະກອບດ້ານຄຸນນະພາບຂອງຂອງເຄື່ອງມື ຖືກໃຊ້ສຳລັບການສຶກສາປະສົບການຊີວິດຂອງຜູ້ລອດຊີວິດ, ໂດຍເນັ້ນໃສ່ການປ່ຽນແປງໃນກິດຈະວັດປະຈຳວັນ, ບົດບາດ, ການພົວພັນ, ການມີສ່ວນຮ່ວມຂອງຊຸມຊົນ, ລະບົບການສະໜັບສະໜູນ ແລະ ຍຸດທະສາດການຮັບມືກັບບັນຫາ ລບຕ.

ອົງປະກອບດ້ານປະລິມານຂອງເຄື່ອງມືສຳລັບຜູ້ເບິ່ງແຍງເດັກ ແລະ ເດັກ ແມ່ນໃຊ້ສຳລັບເກັບກຳຂໍ້ມູນຜູ້ເບິ່ງແຍງເດັກ ເພື່ອເກັບກຳຂໍ້ມູນທີ່ຖືກຕ້ອງກ່ຽວກັບປະຫວັດຂອງເດັກ, ອຸປະຕິເຫດ, ການດູແລຫຼັງອຸປະຕິເຫດ, ຜົນກະທົບຕໍ່ຄົວເຮືອນ ແລະ ຊີວິດປະຈຳວັນ. ອົງປະກອບດ້ານຄຸນນະພາບນີ້ ຊ່ວຍໃຫ້ເດັກມີສ່ວນຮ່ວມໂດຍກົງ ໂດຍຜ່ານວິທີການເລົ່າເລື່ອງ ທີ່ຄຳນຶງເຖິງບາດແຜທາງດ້ານຈິດໃຈ ແລະ ເປັນມິດກັບເດັກ, ຊຸກຍູ້ໃຫ້ມີການສະທ້ອນເຖິງປະສົບການສ່ວນຕົວ, ການໄປຮຽນໜັງສື, ການເບິ່ງແຍງທາງການແພດ, ການສຶກສາໃຫ້ຄວາມຮູ້ກ່ຽວກັບ ລບຕ , ການສະແດງອອກທາງດ້ານອາລົມ ແລະ ຄວາມຕ້ອງການໃນການຊ່ວຍເຫຼືອ. ເພື່ອຮັບປະກັນຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນ ຜູ້ເບິ່ງແຍງດູແລເດັກໄດ້ມີສ່ວນຮ່ວມໃນການໃຊ້ເຄື່ອງມືນີ້ ເນື່ອງຈາກເດັກອາດມີອາຍຸນ້ອຍໃນເວລາທີ່ເກີດອຸປະຕິເຫດ ແລະ ເພື່ອຫຼຸດຜ່ອນຄວາມເຄັ່ງຕຶງທາງດ້ານສະຕິປັນຍາ ແລະ ຈິດໃຈຂອງເດັກເຫຼົ່ານັ້ນ.

ເຄື່ອງມືສຳລັບພາກສ່ວນກ່ຽວຂ້ອງຈາກພາກລັດໃນຂັ້ນທ້ອງຖິ່ນ ປະກອບດ້ວຍຄຳຖາມເປີດເປັນຕົ້ນຕໍ ເພື່ອເກັບກຳຂໍ້ມູນກ່ຽວກັບທັດສະນະຂອງຜູ້ນຳໃນຊຸມຊົນກ່ຽວກັບການສະໜັບສະໜູນຜູ້ລອດຊີວິດຈາກ ລບຕ, ຄວາມຕ້ອງການທີ່ບໍ່ໄດ້ຮັບການຕອບສະໜອງ ແລະ ຍຸດທະສາດທີ່ເຂົາເຈົ້າໃຊ້ເພື່ອສະໜັບສະໜູນຜູ້ເຄາະຮ້າຍໃນຊຸມຊົນຂອງເຂົາເຈົ້າ.

ເຄື່ອງມືທີ່ກ່າວມານີ້ ໄດ້ຮັບການຮ່າງຂຶ້ນເປັນພາສາອັງກິດ ແລະ ແປເປັນພາສາລາວ, ໄດ້ມີການທົດລອງໃຊ້ເຄື່ອງມື ແລະ ມີການທົບທວນຄືນເພື່ອໃຫ້ແນ່ໃຈວ່າໄດ້ໃຊ້ສັບພາສາທີ່ຖືກຕ້ອງ ແລະ ມີຄວາມໝາຍຖືກຕ້ອງ. ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ໄດ້ທົບທວນຄືນເຄື່ອງມືເພື່ອຄວາມເໝາະສົມ ແລະ ເຄື່ອງມືໄດ້ຮັບອະນຸມັດໂດຍ ກະຊວງການຕ່າງປະເທດ. ມີນັກແປພາສາຊົນເຜົ່າທ້ອງຖິ່ນທີ່ມີຄວາມຄ່ອງແຄ້ວໃນລະຫວ່າງການເກັບກຳຂໍ້ມູນ ເພື່ອຮັບປະກັນຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມ.

## ການເກັບກຳຂໍ້ມູນ

ທີມນັກສຳພາດທີ່ເປັນຄົນລາວ ທີ່ມີປະສົບການ 4 ຄົນຈາກສະຖາບັນວິໄຈ ແລະ ຝຶກອົບຮົມ JSI, Inc. ລ້ວນແຕ່ມີປະສົບການດ້ານການສຳຫຼວດກ່ຽວກັບ ລບຕ ຫຼື ປະສົບການການສຳຫຼວດທີ່ກ່ຽວຂ້ອງ ໄດ້ດຳເນີນການເກັບກຳຂໍ້ມູນ. ຜູ້ເກັບຂໍ້ມູນໄດ້ຮັບການຝຶກອົບຮົມວິທີການເກັບກຳຂໍ້ມູນທາງດ້ານປະລິມານ ແລະ ຄຸນນະພາບ, ຂັ້ນຕອນດ້ານຈັນຍາບັນ, ການສຳພາດທີ່ຄຳນຶງເຖິງບາດແຜທາງດ້ານຈິດໃຈ, ການມີສ່ວນຮ່ວມຂອງເດັກ ແລະ ການນຳໃຊ້ເຄື່ອງມື 2 ຊຸດ. ກ່ອນລົງເກັບກຳຂໍ້ມູນຢູ່ພາກສະໜາມ, ທີມງານໄດ້ທົດລອງນຳໃຊ້ເຄື່ອງມືຢູ່ ບ້ານນາຊູ, ເມືອງກາສີ, ແຂວງວຽງຈັນ ແລະ ປັບປຸງແກ້ໄຂເຄື່ອງມືໃຫ້ມີຄວາມຊັດເຈນ. ການເກັບກຳຂໍ້ມູນໄດ້ຈັດຂຶ້ນໃນ 2 ຄັ້ງຄື: ແຂວງຊຽງຂວາງ (ທ້າຍເດືອນພຶດສະພາ ຫາ ຕົ້ນເດືອນມິຖຸນາ 2025) ແລະ ແຂວງສາລະວັນ, ສະຫວັນນະເຂດ, ຄຳມ່ວນ ແລະ ເຊກອງ (ທ້າຍເດືອນກໍລະກົດ ຫາ ຕົ້ນເດືອນ ສິງຫາ 2025).

ຫຼັງຈາກການວິເຄາະຂໍ້ມູນໃນເບື້ອງຕົ້ນ, ໄດ້ມີການສຳພາດເພີ່ມເຕີມຈຳນວນໜຶ່ງກັບຜູ້ນຳໃນທ້ອງຖິ່ນ ແລະ ຜູ້ລອດຊີວິດທີ່ຖືກຄັດເລືອກເພື່ອຊ່ວຍໃຫ້ຄວາມກະຈ່າງແຈ້ງກ່ຽວກັບການຄົ້ນພົບທີ່ພົ້ນເດັ່ນ ແລະ ກຳນົດຂອບເຂດທີ່ຂໍ້ມູນມີຄວາມຈຳກັດ. ການສຳພາດເຫຼົ່ານີ້ ບໍ່ໄດ້ເປັນສ່ວນໜຶ່ງຂອງແຜນການສຸ່ມເອົາກຸ່ມປະຊາກອນຕົວຢ່າງໃນເບື້ອງຕົ້ນ ແຕ່ໄດ້ຖືກເພີ່ມໃສ່ຕື່ມເພື່ອປັບປຸງການຕີຄວາມໝາຍຂອງຜົນໄດ້ຮັບ ແລະ ແກ້ໄຂຊ່ອງຫວ່າງສະເພາະທີ່ຖືກກຳນົດໃນລະຫວ່າງການສັງລວມຂໍ້ມູນ. ເຖິງວ່າຈະບໍ່ໄດ້ລວມເຂົ້າຢ່າງເປັນທາງການໃນການວິເຄາະດ້ານປະລິມານ, ແຕ່ຂໍ້ມູນເລິກເຊິ່ງຈາກການສຳພາດເພີ່ມເຕີມເຫຼົ່ານີ້ ໄດ້ຊ່ວຍປະກອບຂໍ້ມູນໃຫ້ແກ່ການສົນທະນາຜົນໄດ້ຮັບຈາກການສຶກສາຄົ້ນຄ້ວາຄັ້ງນີ້.

## ການວິເຄາະຂໍ້ມູນ

ສຳລັບການວິເຄາະດ້ານປະລິມານ, ກ່ອນອື່ນແມ່ນຂໍ້ມູນທັງໝົດຈະຖືກກັ່ນຕອງຢ່າງລະອຽດ, ຈາກນັ້ນກໍ່ບັນທຶກຂໍ້ມູນສຳລັບການວິເຄາະ ແລະ ໄດ້ເຮັດການວິເຄາະຂໍ້ມູນໃນລະບົບ Stata. ການສຶກສານີ້ແມ່ນເນັ້ນໃສ່ຂໍ້ມູນສະຖິຕິແບບພັນລະນາເປັນຕົ້ນຕໍ ເພື່ອໃຫ້ເຫັນພາບລວມທີ່ຊັດເຈນກ່ຽວກັບຄວາມເປັນມາຂອງຜູ້ເຂົ້າຮ່ວມ, ສະຖານະການກ່ຽວກັບອຸປະຕິເຫດ ແລະ ປະສົບການຂອງຜູ້ລອດຊີວິດ. ນີ້ແມ່ນອີງໃສ່ລັກສະນະຂອງການອອກແບບການສຶກສາຄົ້ນຄ້ວາ ແລະ ຂະໜາດຂອງກຸ່ມປະຊາກອນຕົວຢ່າງ.

ເຖິງວ່າການສຶກສາຄົ້ນຄ້ວາຄັ້ງນີ້ ມີຈຸດປະສົງເພື່ອສຳຫຼວດເສັ້ນທາງລະຫວ່າງລັກສະນະພື້ນຖານ, ອຸປະຕິເຫດ ລບຕ ແລະ ປະສົບການຂອງຜູ້ລອດຊີວິດກ່ຽວກັບຜົນກະທົບ ແລະ ການສະໜັບສະໜູນທີ່ໄດ້ຮັບ, ແຕ່ການສຶກສາຄົ້ນຄວ້າຄັ້ງນີ້ກໍ່ບໍ່ໄດ້ຖືກອອກແບບມາໃຫ້ເປັນການສຶກສາ

ແບບທົດລອງ ຫຼື ເປັນການສຶກສາໄລຍະຍາວ, ເຊິ່ງເປັນສິ່ງຈຳເປັນເພື່ອໃຫ້ສາມາດແຍກຜົນກະທົບທາງດ້ານສາເຫດຂອງປັດໃຈຕ່າງໆ ແລະ ການຄວບຄຸມບັນດາປັດໃຈລົບກວນທີ່ອາດເກີດຂຶ້ນໄດ້.

ນອກຈາກນີ້, ຂະໜາດຂອງກຸ່ມປະຊາກອນຕົວຢ່າງທີ່ມີຂະໜາດນ້ອຍ ສຳລັບການສຶກສາຄົ້ນຄ້ວາຄັ້ງນີ້ ໂດຍມີຜູ້ເຂົ້າຮ່ວມ 50 ຄົນ (ຜູ້ໃຫຍ່ 32 ຄົນ ແລະ ເດັກ 18 ຄົນ), ເຮັດໃຫ້ຕົວແປທີ່ສຳຫຼວດຈຳນວນຫຼາຍ ແລະ ລັກສະນະທີ່ຫຼາກຫຼາຍຂອງປະສົບການຜູ້ລອດຊີວິດ ບໍ່ສາມາດນຳໃຊ້ວິທີການສະຖິຕິໃນແບບ inferential (ການວິເຄາະທີ່ດຶງຂໍ້ສະຫຼຸບກ່ຽວກັບຂໍ້ມູນປະຊາກອນຈາກກຸ່ມຕົວຢ່າງ) ສຳລັບການວິເຄາະໄດ້.

ດັ່ງນັ້ນ, ໃນເວລາທີ່ພວກເຮົາປຶກສາຫາລືກ່ຽວກັບຄວາມສຳພັນ ແລະ ກົນໄກທີ່ເປັນໄປໄດ້ ໂດຍອີງໃສ່ປະສົບການຂອງຜູ້ເຂົ້າຮ່ວມ ແລະ ຮູບແບບທີ່ສັງເກດເຫັນໃນຂໍ້ມູນ, ບັນຫາ ແລະ ປັດໃຈທີ່ກ່າວມານີ້ ຄວນຈະຖືກຕີຄວາມໝາຍວ່າເປັນຕົວຊີ້ບອກແທນທີ່ຈະເປັນສາເຫດ. ຜົນການສຶກສາຄົ້ນຄ້ວານີ້ ຖືວ່າເປັນການສຳຫຼວດ ແລະ ການອະທິບາຍ ໃຫ້ຂໍ້ມູນເລິກເຊິ່ງກ່ຽວກັບປະສົບການຂອງຜູ້ລອດຊີວິດ ແລະ ສະພາບການທີ່ກວ້າງຂວາງກ່ຽວກັບຄວາມພິການ ແລະ ການສະໜັບສະໜູນຊ່ວຍເຫຼືອຕ່າງໆທີ່ສະໜອງໃຫ້ເຂົາເຈົ້າ. ໃນອະນາຄົດ ຄວນມີການສຶກສາຄົ້ນຄ້ວາທີ່ໃຊ້ກຸ່ມປະຊາກອນຕົວຢ່າງທີ່ເປັນກຸ່ມຂະໜາດໃຫຍ່ ແລະ ເປັນການສຶກສາຄົ້ນຄ້ວາໄລຍະຍາວ ເພື່ອປະເມີນຄວາມສຳພັນທາງສາເຫດຢ່າງເຂັ້ມງວດ.

ການວິເຄາະດ້ານຄຸນນະພາບ ໄດ້ປະຕິບັດຕາມວິທີການວິເຄາະຕາມຫົວຂໍ້, ລວມທັງການເຂົ້າລະຫັດຫຼາຍຮອບໃນທຸກຄຳຕອບທີ່ຜູ້ລອດຊີວິດເປີດເຜີຍທັງໝົດ ເພື່ອຈຸດປະສົງໃນການກຳນົດຫົວຂໍ້ ແລະ ຮູບແບບທີ່ກ່ຽວຂ້ອງໃນການຕອບຄຳຖາມການສຶກສາຄົ້ນຄວ້າ. ຫຼັງຈາກການແປຄຳຕອບແບບເປີດແລ້ວ ນັກວິເຄາະຈະໃສ່ລະຫັດຄຳຕອບແຕ່ລະຄຳຕອບດ້ວຍປະໂຫຍກ ຫຼື ແຖວ ເພື່ອຄົ້ນຫາແນວຄວາມຄິດ, ຂະບວນການ ແລະ ຄຳອະທິບາຍທີ່ພົ້ນເດັ່ນ. ລະຫັດເບື້ອງຕົ້ນທັງໝົດໄດ້ຖືກທົບທວນຄືນ ແລະ ລວມເຂົ້າເປັນຂະບວນການຂຽນລະຫັດແບບເຈາະຈົງ. ຂະບວນການເຂົ້າລະຫັດແບບເຈາະຈົງນີ້ ແມ່ນອີງໃສ່ຮູບແບບ ແລະ ຂະບວນການທີ່ໄດ້ມາຈາກຊຸດຂອງລະຫັດເບື້ອງຕົ້ນ. ສຸດທ້າຍ, ການຂຽນລະຫັດແບບເຈາະຈົງໄດ້ຖືກນຳໃຊ້ເພື່ອກຳນົດປະເພດ/ໝວດໝູ່ ແລະ ຫົວຂໍ້ທີ່ນຳສະເໜີໃນທົ່ວບົດລາຍງານ.

ເພື່ອເຮັດໃຫ້ການສຳພາດຜູ້ລອດຊີວິດມີຄວາມອຸດົມສົມບູນຂຶ້ນ ແຕ່ຍັງຄົງປົກປ້ອງຕົວຕົນຂອງຜູ້ເຂົ້າຮ່ວມສຳພາດໄວ້, ພວກເຮົາຈະອ້າງອີງໃນບົດລາຍງານເຖິງ 5 ຕົວລະຄອນທີ່ມີຊື່ "ບຸກຄົນ" ເຊິ່ງເປັນຕົວລະຄອນທີ່ສົມມຸດຂຶ້ນຂອງຕົວຢ່າງຜູ້ລອດຊີວິດຂອງພວກເຮົາ. ຄຸນລັກສະນະສະເພາະ, ປະສົບການ ແລະ ອາລົມຈິດ ຂອງແຕ່ລະຄົນເປັນຕົວແທນຂອງກຸ່ມຍ່ອຍ, ແນວໂນ້ມ ແລະ ຂໍ້ມູນເລິກເຊິ່ງຈາກຜົນການສຳຫຼວດດ້ານຄຸນນະພາບ. ບຸກຄະລິກພາບ "ສະແດງເຖິງເອກະລັກລວມ, ຂອບເຂດທີ່ເປັນໄປໄດ້, ພາບລັກສະນະທີ່ຊັດເຈນຂອງບຸກຄົນ ທີ່ເປັນຕົວຢ່າງທີ່ມີຄຸນລັກສະນະສະເພາະທີ່ກຳນົດໄວ້" (ທ່ານ ວາເນກ ແລະ ຄະນະ (Vanek et al.,) ກຳລັງຕີພິມ ໜ້າທີ 4). ໂດຍຜ່ານການນຳໃຊ້ບຸກຄະລິກພາບດັ່ງກ່າວ, ພວກເຮົາແນໃສ່ເນັ້ນໜັກເຖິງຄວາມສຳຄັນຂອງການເຂົ້າໃຈປະສົບການຂອງຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ພິຈາລະນາປະສົບການຂອງເຂົາເຈົ້າໃນການສ້າງຄຳແນະນຳເພື່ອອອກແບບການສະໜັບສະໜູນຊ່ວຍເຫຼືອ ເພີ່ມເຕີມຕື່ມອີກ. ພວກເຮົາຮັບຮູ້ວ່າ ວິທີການນີ້ມີຂໍ້ຈຳກັດ; ປະສົບການຂອງຜູ້ລອດຊີວິດແຕ່ລະຄົນແມ່ນມີເອກະລັກທີ່ແຕກຕ່າງກັນ ແລະ ປະສົບການຂອງຜູ້ລອດຊີວິດແຕ່ລະຄົນອາດຈະບໍ່ຖືກນຳສະເໜີໄດ້ໃນທຸກແງ່ມຸມ. ເຖິງວ່າຈະມີຂໍ້ບົກຜ່ອງເຫຼົ່ານີ້, ບຸກຄະລິກພາບສະເພາະ ກໍ່ຊ່ວຍໃຫ້ພວກເຮົາສາມາດເນັ້ນໃຫ້ເຫັນປະສົບການຮ່ວມກັນໃນບັນດາຜູ້ລອດຊີວິດຈາກ ລບຕ ໄດ້.

ມີຕົວລະຄອນ 5 ຄົນໃນບົດລາຍງານນີ້ ຄື: ບຸນມີ, ແກ້ວ, ຄຳດີ, ແສງຈັນ ແລະ ສົມໃຈ. ບຸນມີ ເປັນເດັກຜູ້ລອດຊີວິດ. ລາວມີອາຍຸ 12 ປີ ແລະ ເຂົ້າຮ່ວມໃນການສຳພາດນີ້ຫຼັງຈາກເກີດອຸປະຕິເຫດໄດ້ປະມານ 1 ປີ. ລາວອາໄສຢູ່ແຂວງ ຊຽງຂວາງ ແລະ ເປັນຊົນເຜົ່າມົ້ງ-ມຽນ. ລາວໄປໂຮງຮຽນປະຖົມ ຮຽນເປັນພາສາລາວ ແລະ ເວົ້າພາສາມົ້ງເມື່ອຢູ່ເຮືອນ. ແກ້ວ ກໍ່ເປັນເດັກທີ່ລອດຊີວິດຢູ່ແຂວງ ສະຫວັນນະເຂດ. ລາວມີອາຍຸ 14 ປີ ແລະ ໄດ້ຮັບບາດເຈັບສາຫັດຈາກອຸປະຕິເຫດທີ່ເກີດຂຶ້ນໄດ້ປະມານ ໜຶ່ງ ປີກ່ອນນີ້. ຄຳດີ ອາຍຸ 37 ປີ ໄດ້ຮັບບາດເຈັບສາຫັດຈາກອຸປະຕິເຫດ ປະມານ 4 ປີກ່ອນ. ລາວອາໄສຢູ່ແຂວງ ຊຽງຂວາງ ແລະ ເປັນຄົນເວົ້າພາສາລາວໄດ້ດີ. ຄຳດີຮຽນຈົບຊັ້ນປະຖົມ ແລະ ແຕ່ງງານແລ້ວ ແລະມີລູກທັງເປັນໄວໜຸ່ມ ແລະ ຜູ້ໃຫຍ່. ແສງຈັນ ອາຍຸ 23 ປີ ແລະ ອຸປະຕິເຫດຂອງນາງ ເກີດຂຶ້ນປະມານ 2 ປີ ກ່ອນການສຳພາດ. ນາງ ແສງຈັນ ອາໄສຢູ່ແຂວງ ສະຫວັນນະເຂດ ແລະ ເປັນຊົນເຜົ່າມອນ-ຂະແມ. ລາວຮຽນຈົບຊັ້ນປະຖົມ ແລະ ແຕ່ງງານມີລູກນ້ອຍສອງຄົນ. ທ້າວ ສົມໃຈ ອາຍຸ 27 ປີ ໄດ້ຮັບບາດເຈັບສາຫັດຈາກອຸປະຕິເຫດ ເຊິ່ງເກີດຂຶ້ນປະມານ 2 ປີກ່ອນການສຳພາດ. ລາວອາໄສຢູ່ແຂວງ ສາລະວັນ ກັບຄອບຄົວ ລວມທັງລູກຂອງລາວທີ່ຍັງຮຽນຢູ່ຊັ້ນປະຖົມ. ຄຸນລັກສະນະທາງດ້ານປະຊາກອນຂອງ ຫ້າ ຄົນເຫຼົ່ານີ້ ເປັນຕົວແທນຂອງແນວໂນ້ມທົ່ວໄປໃນບັນດາຜູ້ລອດຊີວິດທີ່ລວມຢູ່ໃນຕົວຢ່າງນີ້. ໃນແຕ່ລະພາກຂອງບົດລາຍງານສະບັບນີ້, ພວກເຮົາຈະອ້າງອີງເຖິງ ບຸນມີ, ແກ້ວ, ຄຳດີ, ແສງຈັນ ແລະ ສົມໃຈ ເພື່ອແບ່ງປັນເລື່ອງລາວຂອງຜູ້ລອດຊີວິດ.

ບົດລາຍງານນີ້ ແມ່ນລວມເອົາຜົນຂອງການສຶກສາຄົ້ນຄ້ວາຈາກເຄື່ອງມືດ້ານຄຸນນະພາບ ແລະ ປະລິມານ.

## ຂໍ້ຄວນພິຈາລະນາທາງດ້ານຈັນຍາບັນສຳລັບການສຶກສາຄົ້ນຄ້ວາ

ຈັນຍາບັນສຳລັບການສຶກສາຄົ້ນຄ້ວາແມ່ນໄດ້ຮັບການອະນຸມັດຈາກຄະນະກຳມະການກວດກາສະຖາບັນ (IRB) ຂອງ ສະຖາບັນວິໄຈ ແລະ ຝຶກອົບຮົມ JSI, Inc (ການອະນຸມັດສະບັບເລກທີ #24-65) ແລະ ໄດ້ຮັບການອະນຸມັດຈາກຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ແລະ ກະຊວງການຕ່າງປະເທດ ໂດຍມີໜັງສືສະໜັບສະໜູນຈາກ 5 ແຂວງທີ່ໄດ້ມີການເກັບກຳຂໍ້ມູນ. ຕົວແທນຈາກພະແນກການຕ່າງປະເທດແຂວງ ແລະ ຫ້ອງວ່າການປົກຄອງເມືອງ ກໍ່ໄດ້ເຂົ້າຮ່ວມທີມເກັບກຳຂໍ້ມູນ. ເນື່ອງຈາກລັກສະນະທີ່ລະອຽດອ່ອນຂອງການບາດເຈັບ, ຄວາມພິການ ແລະ ການສູນເສຍອາຊີບ ທີ່ກ່ຽວຂ້ອງກັບລະເບີດບໍ່ທັນແຕກ, ຈຶ່ງໄດ້ຂໍການຍິນຍອມເຫັນດີເປັນລາຍລັກອັກສອນ ແລະ ປາກເປົ່າ ຈາກຜູ້ເຂົ້າຮ່ວມທັງໝົດ, ແລະ ໄດ້ຮັບການຍິນຍອມເຫັນດີຈາກພໍ່ແມ່ສຳລັບເດັກທີ່ເຂົ້າຮ່ວມ. ການສຳພາດໄດ້ຖືກດຳເນີນເປັນສ່ວນບຸກຄົນ ແລະ ຜູ້ສຳພາດໃນທ້ອງຖິ່ນໄດ້ຮັບການຝຶກອົບຮົມ ເພື່ອໃຫ້ສາມາດແກ້ໄຂໃນກໍລະນີທີ່ມີການເປີດເຜີຍຂໍ້ມູນກ່ຽວກັບບາດແຜທາງດ້ານຈິດໃຈ ແລະ ຄວາມທຸກທາງດ້ານຈິດໃຈ. ການສຶກສາຄົ້ນຄ້ວາຄັ້ງນີ້ ໄດ້ປະຕິບັດຕາມຫຼັກການທີ່ໄດ້ລະບຸໄວ້ໃນຖະແຫຼງການຂອງ ເຮລຊິນກິ (Helsinki) ເພື່ອຮັບປະກັນຄວາມເຄົາລົບ, ການຮັກສາເປັນຄວາມລັບ ແລະ ຄວາມປອດໄພຂອງຜູ້ເຂົ້າຮ່ວມ.

## ຄຳຖາມບົດຄົ້ນຄ້ວາ ທີ 1:

ມີສະຖານະການສະເພາະໃດແດ່ກ່ຽວຂ້ອງກັບອຸປະຕິເຫດ ແລະ ແມ່ນສະຖານະການໃດທີ່ນຳໄປສູ່ການເກີດອຸປະຕິເຫດ?

## 1: ມີສະຖານະການສະເພາະໃດແດ່ກ່ຽວທີ່ຂ້ອງກັບອຸປະຕິເຫດ ແລະ ແມ່ນສະຖານະການໃດທີ່ນຳໄປສູ່ການເກີດອຸປະຕິເຫດ?

ເພື່ອຕອບຄຳຖາມທຳອິດສຳລັບການສຶກສາຄົ້ນຄວ້າ ນີ້, ໃນພາກນີ້ຂອງບົດລາຍງານ ຈະເນັ້ນໃສ່ສະພາບການຂອງອຸປະຕິເຫດ ລບຕ ໂດຍການສຳຫຼວດກ່ຽວກັບສະພາບການທາງສັງຄົມ ແລະ ສະຖານທີ່ຕັ້ງຂອງບ້ານທີ່ເກີດເຫດການອຸປະຕິເຫດດັ່ງກ່າວ. ພາກນີ້ຂອງບົດລາຍງານນຳສະເໜີຜົນການຄົ້ນຄ້ວາທີ່ສຳຄັນກ່ຽວກັບປະຫວັດຂອງຜູ້ລອດຊີວິດ ລວມທັງອາຍຸ, ເພດ, ຊົນເຜົ່າ ແລະ ສະພາບການດຳລົງຊີວິດ ເພື່ອສະແດງໃຫ້ເຫັນວ່າປັດໃຈທີ່ຝັງເລິກ ເຊັ່ນ: ຄວາມທຸກຍາກ ແລະ ຄວາມໂດດດ່ຽວໃນຊົນນະບົດ ເຮັດໃຫ້ມີຄວາມສ່ຽງແນວໃດ. ຫຼັງຈາກນັ້ນ, ບົດລາຍງານຈະໄດ້ລະບຸລາຍລະອຽດກ່ຽວກັບສະຖານທີ່ ແລະ ປະເພດຂອງກິດຈະກຳປະຈຳວັນ ເຊັ່ນ: ການປູກຝັງ ແລະ ການໄປຊອກຫາອາຫານ ໃນເວລາທີ່ເກີດອຸປະຕິເຫດ. ຂໍ້ມູນເລິກເຊິ່ງເຫຼົ່ານີ້ ມີຄວາມສຳຄັນຫຼາຍສຳລັບການພັດທະນາຍຸດທະສາດການໃຫ້ຄວາມຮູ້ ແລະ ປ້ອງກັນຄວາມສ່ຽງຈາກ ລບຕ ຢ່າງມີເປົ້າໝາຍ ແລະ ມີປະສິດທິພາບ. ຄຳຖາມສຳລັບການສຶກສາຄົ້ນຄວ້າ ແລະ ຜົນການສຶກສາຄົ້ນຄວ້າຄັ້ງນີ້ກ່ຽວຂ້ອງຢ່າງໃກ້ຊິດກັບຄຳຖາມທີ 2 ສຳລັບການສຶກສາຄົ້ນຄວ້າ ຍ້ອນວ່າກິດຈະກຳ ແລະ ຜູ້ທີ່ຢູ່ນຳຜູ້ເຄາະຮ້າຍໃນເວລາເກີດອຸປະຕິເຫດອາດຈະຖືກພິຈາລະນາວ່າເປັນສະຖານະການຕ່າງໆໄດ້. ສຳລັບຂໍ້ມູນເພີ່ມເຕີມ ກະລຸນາເບິ່ງພາກທີ2. *ຜູ້ຖືກເຄາະຮ້າຍກຳລັງເຮັດຫຍັງຢູ່ໃນເວລາເກີດອຸປະຕິເຫດ ແລະ ມີໃຜອີກທີ່ມີສ່ວນກ່ຽວຂ້ອງກັບອຸປະຕິເຫດ?* (ໜ້າ42).

### ສະຖານະການທາງສັງຄົມປະຊາກອນ ແລະ ສະພາບການດຳລົງຊີວິດຂອງຜູ້ລອດຊີວິດ

ຄວາມເຂົ້າໃຈກ່ຽວກັບຄຸນລັກສະນະທາງສັງຄົມ ແລະ ຊີວິດການເປັນຢູ່ຂອງຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແມ່ນກຸນແຈສຳຄັນໃນການອອກແບບການສະໜັບສະໜູນຊ່ວຍເຫຼືອທີ່ມີປະສິດທິພາບ ແລະ ສະເໝີພາບ. ອາຍຸ, ເພດ, ຊົນເຜົ່າ, ພາສາ ແລະ ສະຖານທີ່ຕັ້ງ ແມ່ນມີອິດທິພົນຕໍ່ຄວາມສ່ຽງ, ການເຂົ້າເຖິງການດູແລ ແລະ ການຟື້ນຕົວ ເຊິ່ງມີຄວາມເຊື່ອມໂຍງກັບປັດໃຈອື່ນໆຢ່າງກວ້າງຂວາງ ເຊັ່ນ: ຄວາມທຸກຍາກ, ຄວາມໂດດດ່ຽວໃນຊົນນະບົດ ແລະ ການສຶກສາທີ່ຈຳກັດ. ການວິເຄາະປັດໃຈເຫຼົ່ານີ້ ຈະຊ່ວຍໃຫ້ຜູ້ວາງນະໂຍບາຍ ແລະ ຜູ້ໃຫ້ບໍລິການສາມາດລະບຸຊ່ອງຫວ່າງ, ອອກແບບການຊ່ວຍເຫຼືອ ແລະ ຈັດລຳດັບຄວາມສຳຄັນຂອງຜູ້ທີ່ມີຄວາມສ່ຽງທີ່ສຸດ, ປັບປຸງການຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ການສະໜັບສະໜູນການຟື້ນຕົວຫຼັງຈາກອຸປະຕິເຫດ. ໃນພາກນີ້ ການລາຍງານຈະເລີ່ມຕົ້ນດ້ວຍການອະທິບາຍຂໍ້ມູນປະຊາກອນຂອງຜູ້ລອດຊີວິດ ແລະ ຄຸນລັກສະນະຂອງຄົວເຮືອນ ເພື່ອເປັນພື້ນຖານການສົນທະນາໃນພາຍຫຼັງກ່ຽວກັບຄວາມເປັນຈິງຂອງຊີວິດຂອງເຂົາເຈົ້າ. ສຳລັບຕາຕະລາງເພີ່ມເຕີມທີ່ກ່ຽວຂ້ອງ, ກະລຸນາເບິ່ງເອກະສານຊ້ອນທ້າຍ ຂ.

ໃນກຸ່ມຜູ້ລອດຊີວິດ, ຜູ້ໃຫຍ່ມີອາຍຸສະເລ່ຍ 37 ປີ, ສ່ວນເດັກມີອາຍຸສະເລ່ຍ 12 ປີ (ໃນເວລາເກັບກຳຂໍ້ມູນ, ບໍ່ແມ່ນໃນເວລາທີ່ເກີດອຸປະຕິເຫດ). ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກ ສ່ວນຫຼາຍແມ່ນຜູ້ຊາຍ 56% ແລະ 78% ຕາມລຳດັບ.

ອີງປະກອບດ້ານຊົນເຜົ່າມີຄວາມແຕກຕ່າງກັນ, ໂດຍມີຜູ້ໃຫຍ່ເຜົ່າ ມອນ-ຂະແມ ກວມເອົາ 59% ແລະ ເດັກທີ່ເປັນເຜົ່າ ມົ້ງ-ມຽນ 44%, ເຊິ່ງທັງ 2 ກຸ່ມສ່ວນໃຫຍ່ລະບຸວ່າເຂົາເຈົ້າຖືສາດສະໜາຜີ. ການຄົ້ນພົບເຫຼົ່ານີ້ ຊີ້ໃຫ້ເຫັນເຖິງຄວາມຕ້ອງການສຳລັບການເຂົ້າໄປແຊກແຊງຊ່ວຍເຫຼືອທີ່ຕ້ອງໄດ້ຄຳນຶງເຖິງດ້ານວັດທະນະທຳທີ່ລະອຽດອ່ອນ, ສອດຄ່ອງກັບທ້ອງຖິ່ນ ທີ່ແກ້ໄຂທັງການບາດເຈັບທາງດ້ານຮ່າງກາຍ ແລະ

ສະພາບໃນສັງຄົມທີ່ກວ້າງຂວາງຂອງຜູ້ລອດຊີວິດ. ກຸ່ມປະຊາກອນຕົວຢ່າງມີຄວາມຫຼາກຫຼາຍທາງດ້ານພາສາ ໂດຍຜູ້ໃຫຍ່ 32 ຄົນໃນກຸ່ມປະຊາກອນຕົວຢ່າງໄດ້ລະບຸພາສາແມ່ທີ່ເຂົາເຈົ້າໃຊ້ທັງໝົດ 11 ພາສາທີ່ແຕກຕ່າງກັນ ເຊິ່ງສ່ວນຫຼາຍແມ່ນພາສາລາວ (22%), ພາສາມົ້ງ (19%) ແລະ ພາສາມະກອງ (16%). ສ່ວນກຸ່ມປະຊາກອນຕົວຢ່າງທີ່ເປັນເດັກມີຄວາມຫຼາກຫຼາຍທາງດ້ານພາສາໜ້ອຍກວ່າກຸ່ມຜູ້ໃຫຍ່ເລັກນ້ອຍ, ໂດຍໃນເດັກ 18 ຄົນເວົ້າ 5 ພາສາທີ່ແຕກຕ່າງກັນ, ໂດຍມີພາສາມົ້ງ (44%) ແລະ ພາສາລາວ (28%) ເຊິ່ງເປັນພາສາຫຼັກທີ່ເຂົາເຈົ້າເວົ້າ. ຄວາມຄ່ອງແຄ້ວໃນການເວົ້າພາສາລາວແມ່ນສູງໃນກຸ່ມຂອງຜູ້ໃຫຍ່ (56%) ຫຼາຍກວ່າໃນກຸ່ມເດັກ (39%).

*ຕາຕະລາງທີ **3:** ຊົນເຜົ່າ ແລະ ສາດສາໜາ ຂອງກຸ່ມປະຊາກອນຕົວຢ່າງ*

| | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (n=32) | | ຜູ້ລອດຊີວິດທີ່ເປັນເດັກ (n=18) | |
|---|---|---|---|---|
| **ຊົນເຜົ່າ** | | | | |
| ລາວ-ໄຕ | 21.9 | 7 | 27.8 | 5 |
| ມອນ-ຂະແມ | 59.4 | 19 | 27.8 | 5 |
| ມົ້ງ-ມຽນ | 18.8 | 6 | 44.4 | 8 |
| **ສາດສະໜາ** | | | | |
| ຖືສາດສະໜາຜີ | 71.9 | 23 | 72.2 | 13 |
| ສາດສະໜາພຸດ | 21.9 | 7 | 27.8 | 5 |
| ສາດສະໜາຄຣິສຕຽນ | 6.2 | 2 | - | - |

*ຕາຕະລາງທີ **4:** ພາສາຫຼັກທີ່ໃຊ້ ແລະ ຄວາມຄ່ອງແຄ້ວໃນການໃຊ້ພາສາລາວ*

| | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (n=32) | | ຜູ້ລອດຊີວິດທີ່ເປັນເດັກ (n=18) | |
|---|---|---|---|---|
| **ພາສາຫຼັກທີ່ໃຊ້** | | | | |
| ບຣູ | 9.4 | 3 | 11.1 | 2 |
| ກຣຽງ | 3.1 | 1 | - | - |
| ງວນ | 3.1 | 1 | - | - |
| ມົ້ງ | 18.7 | 6 | 44.4 | 8 |

| | | | | |
|---|---|---|---|---|
| ກະມຸ | 6.3 | 2 | - | - |
| ລາວ | 21.9 | 7 | 27.8 | 5 |
| ມາກ່ອງ | 15.6 | 5 | 11.1 | 2 |
| ປ່າໂກ | 12.5 | 4 | - | - |
| ຜູ້ໄທ | 3.1 | 1 | - | - |
| ຕະໂອ້ຍ | 3.1 | 1 | 5.6 | 1 |
| ຕຣີ | 3.1 | 1 | - | - |
| **ຄວາມຄ່ອງແຄ້ວໃນການໃຊ້ພາສາລາວ** | | | | |
| ບໍ່ໄດ້/ໄດ້ໜ້ອຍໜຶ່ງ | 12.5 | 4 | 33.3 | 6 |
| ເວົ້າໄດ້ບາງສ່ວນ | 31.3 | 10 | 27.8 | 5 |
| ເວົ້າໄດ້ຫຼາຍ/ຄ່ອງແຄ້ວ | 56.2 | 18 | 38.9 | 7 |

ຜູ້ລອດຊີວິດສ່ວນໃຫຍ່ - ທັງຜູ້ໃຫຍ່ ແລະ ເດັກ ມີລະດັບການສຶກສາຈົບຊັ້ນປະຖົມ ຫຼື ຕໍ່າກວ່າປະຖົມ ເທົ່ານັ້ນ. ໃນບັນດາຜູ້ລອດຊີວິດທີ່ເປັນຜູ້ໃຫຍ່, 28% ບໍ່ມີການສຶກສາຢ່າງເປັນທາງການ, 38% ມີການສຶກສາຊັ້ນປະຖົມ ຫຼື ຈົບການສຶກສາຊັ້ນປະຖົມ, 16% ໄດ້ຮຽນຢູ່ມັດທະຍົມຕົ້ນ ຫຼື ສູງກ່ວາ ແລະ 3% ມີການສຶກສາຊັ້ນສູງ. ໃນເວລາເກັບກໍາຂໍ້ມູນ, ເດັກສ່ວນຫຼາຍແມ່ນຮຽນຢູ່ໃນຊັ້ນປະຖົມ (67%) ຫຼື ມັດທະຍົມຕອນຕົ້ນ (28%) ແລະ ບໍ່ມີໃຜໄດ້ເຂົ້າຮຽນມັດທະຍົມປາຍ ຫຼື ສູງກວ່ານັ້ນ. ເດັກ1ຄົນ (6%) ບໍ່ໄດ້ຮຽນໜັງສື. (ເບິ່ງເອກະສານຊ້ອນທ້າຍ ຂ, ຕາຕະລາງ ຂ.2. ລັກສະນະການສຶກສາ ແລະ ພາສາຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກ, ໜ້າ 219).

ໃນບັນດາຜູ້ລອດຊີວິດຈາກ ລບຕ ທີ່ເປັນຜູ້ໃຫຍ່, 75% ໄດ້ແຕ່ງງານ. ສ່ວນໃຫຍ່ອາໄສຢູ່ກັບຄູ່ສົມລົດ (72%) ແລະ ຫຼາຍຄົນກໍ່ໄດ້ມີລູກ (59% ເປັນລູກສາວ, 53% ເປັນລູກຊາຍ), ມີພຽງຈໍານວນໜ້ອຍທີ່ຢູ່ຄົນດຽວໂດຍບໍ່ໄດ້ແຕ່ງງານ (3%). ຜູ້ລອດຊີວິດທີ່ເປັນເດັກ ສ່ວນໃຫຍ່ແມ່ນຢູ່ກັບພໍ່ແມ່ (ພໍ່ 78%, ແມ່ 83%) ແລະ ຢູ່ກັບອ້າຍເອື້ອຍນ້ອງ (ອ້າຍ 44%, ເອື້ອຍ 39%). ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ສ່ວນຫຼາຍ (59%) ແລະ ຜູ້ລອດຊີວິດທີ່ເປັນເດັກ (78%) ອາໄສຢູ່ໃນບ້ານເກີດຂອງເຂົາເຈົ້າ, ໂດຍມີຜູ້ໃຫຍ່ຍ້າຍໄປແຕ່ງງານ (46%) ຫຼືຍົກຍ້າຍດ້ວຍເຫດຜົນດ້ານເສດຖະກິດ. ຫຼາຍກວ່າເຄິ່ງໜຶ່ງຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (54%) ແລະ ຜູ້ລອດຊີວິດທີ່ເປັນເດັກ ສ່ວນໃຫຍ່ (78%) ໄດ້ອາໄສຢູ່ໃນບ້ານປັດຈຸບັນຂອງເຂົາເຈົ້າຫຼາຍກວ່າ 10 ປີ.(ເບິ່ງເອກະສານຊ້ອນທ້າຍ ຂ, ຕາຕະລາງຂ.3. ລັກສະນະເຮືອນຊານ ຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກ, ໜ້າ 220.)

ຄົວເຮືອນເກືອບທັງໝົດຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (94%) ແລະຜູ້ລອດຊີວິດທີ່ເປັນເດັກ (89%) ມີໄຟຟ້າໃຊ້, ແຕ່ວ່າມີພຽງ 56% ຂອງຄົວເຮືອນມີອິນເຕີເນັດໃຊ້. ຄົວເຮືອນສ່ວນໃຫຍ່ມີນ້ຳໃຊ້ໃນບ້ານ (ຜູ້ໃຫຍ່ 91%, ເດັກ 78%), ສ່ວນຫຼາຍແມ່ນມາຈາກແຫຼ່ງນ້ຳທີ່ປອດໄພ (ຜູ້ໃຫຍ່ 83%, ເດັກ 79%) ແລະ ສ່ວນຫຼາຍມີຫ້ອງນ້ຳ, ຄົວເຮືອນຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ 19% ແລະ ຄົວເຮືອນຂອງຜູ້ລອດຊີວິດທີ່ເປັນເດັກ 6% ຍັງຖ່າຍຊະຊາຍຢູ່. ການເຂົ້າເຖິງໃນລະດູຝົນແມ່ນຍັງມີຄວາມຈຳກັດ ມີພຽງແຕ່ 19% ຂອງຄອບຄົວທີ່ມີຜູ້ລອດຊີວິດເປັນຜູ້ໃຫຍ່ ແລະ 11% ຂອງຄອບຄົວທີ່ມີຜູ້ລອດຊີວິດເປັນເດັກ.ມີພຽງ 16% ເທົ່ານັ້ນທີ່ລາຍງານວ່າມີອຸປະກອນ ຫຼື ເຄື່ອງມືສຳລັບການທຳລາຍເຫຼັກເສດ ຢູ່ໃນເຮືອນຂອງເຂົາເຈົ້າ.[20] (ກະລຸນາເບິ່ງເອກະສານຊ້ອນທ້າຍ ຂ, ຕາຕະລາງ ຂ.4. ລັກສະນະທີ່ຢູ່ອາໄສຂອງຜູ້ລອດຊີວິດຈາກລະເບີດບໍ່ທັນແຕກທີ່ເປັນຜູ້ໃຫຍ່ ແລະ ເດັກ, ໜ້າ 221 .)

ຄຳອະທິບາຍຂອງຜູ້ລອດຊີວິດຄົນໜຶ່ງ ແລະ ຄູ່ສົມລົດຂອງລາວກ່ຽວກັບສິ່ງທີ່ຫຼີກລ່ຽງບໍ່ໄດ້ຂອງອຸປະຕິເຫດ ລບຕ ໄດ້ເນັ້ນໃຫ້ເຫັນວ່າ ທີ່ຕັ້ງທາງພູມສັນຖານ, ປັດໄຈທາງສັງຄົມ ແລະ ປະຊາກອນ ແລະ ຄວາມທຸກຍາກ ເປັນສາເຫດຫຼັກຂອງຄວາມສ່ຽງ.

> ພວກເຮົາບໍ່ຮູ້ສຶກຢ້ານກົວລະເບີດທີ່ຍັງບໍ່ທັນແຕກອີກຕໍ່ໄປ. ມັນໄດ້ກາຍເປັນເລື່ອງປົກກະຕິທີ່ເກີດຂຶ້ນຢູ່ໃນບ້ານໃນແຂວງທີ່ພວກເຮົາອາໄສຢູ່. ພວກເຮົາໄດ້ຄຸ້ນເຄີຍກັບເຫດການອຸປະຕິເຫດທີ່ເກີດຂຶ້ນເຫຼົ່ານັ້ນແລ້ວ. ສຳລັບຄອບຄົວຂອງພວກເຮົາ, ພວກເຮົາບໍ່ມີທາງເລືອກນອກຈາກຊອກຫາບ່ອນຢູ່ອາໄສ, ບ່ອນຫາລ້ຽງຊີບ, ພວກເຮົາຕ້ອງເຮັດໄຮ່ເຮັດສວນ. ຖ້າພວກເຮົາບໍ່ເຮັດ, ພວກເຮົາຈະບໍ່ມີຫຍັງກິນ. ດັ່ງນັ້ນ, ຄອບຄົວຂອງພວກເຮົາຈຶ່ງມີຄວາມສ່ຽງທີ່ອາດຈະເກີດເຫດການອຸປະຕິເຫດຂຶ້ນຕື່ມອີກໃນອະນາຄົດ.

## ສະຖານທີ່ໃນເວລາເກີດອຸປະຕິເຫດ ແລະ ກ່ອນເກີດອຸປະຕິເຫດ

ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ມັກຈະເລົ່າເຖິງກິດຈະກຳຂອງເຂົາເຈົ້າກ່ອນການລະເບີດ ວ່າເປັນໜ້າວຽກປະຈຳວັນຂອງເຂົາເຈົ້າ ເຊັ່ນ ການຂຸດດິນ, ເຮັດວຽກຢູ່ໃນທົ່ງໄຮ່ ທົ່ງນາ (ເຊັ່ນ: ຕັດຫຍ້າ, ຈູດໄຮ່), ການໄປຊອກອາຫານ ຫຼື ນັ່ງຜີງໄຟເພື່ອຄວາມອົບອຸ່ນ ຫຼື ດັງໄຟສຳລັບການປຸງແຕ່ງອາຫານ. ຕົວຢ່າງ: ທ້າວ ຄຳດີ ໄດ້ເລົ່າສູ່ຟັງວ່າ: ລາວເຮັດວຽກຢູ່ທົ່ງນາ ໃນເວລາທີ່ເກີດເຫດລະເບີດ: *"ໃນມື້ທີ່ເກີດເຫດລະເບີດ, ຂ້ອຍໄດ້ຈູດກອງໄຟຢູ່ໃນໄຮ່ມັນຕົ້ນ ເຊິ່ງບໍ່ໄກຈາກເຮືອນຂ້ອຍ, ຫຼັງຈາກຈູດກອງໄຟກອງທຳອິດ, ຂະນະທີ່ກຳລັງຈະຈູດກອງໄຟໃໝ່ອີກ ລະເບີດກໍ່ແຕກຂຶ້ນ."*

ເຊັ່ນດຽວກັນກັບຜູ້ລອດຊີວິດທີ່ເປັນຜູ້ໃຫຍ່, ຜູ້ລອດຊີວິດທີ່ເປັນເດັກ ຍັງໄດ້ອະທິບາຍກິດຈະກຳຂອງເຂົາເຈົ້າທີ່ນຳໄປສູ່ການລະເບີດ, ລວມທັງການເຮັດໜ້າວຽກປະຈຳວັນ ເຊັ່ນ: ການຊອກອາຫານການກິນ ຫຼື ການລ້ຽງສັດ. ຕົວຢ່າງ: ທ້າວ ບຸນມີ ເວົ້າວ່າ "ໃນຂະນະທີ່ຂ້ອຍຍ່າງຊອກຫາງົວກັບໝູ່ຂອງຂ້ອຍໃນໝູ່ບ້ານ." ໃນເຫດການຄ້າຍກັນ, ເດັກນ້ອຍອີກຄົນໜຶ່ງໄດ້ເລົ່າກ່ຽວກັບກິດຈະກຳກ່ອນເກີດອຸປະຕິເຫດວ່າ 'ມື້ນັ້ນ, ຂ້ອຍໄປໃຫ້ອາຫານຄວາຍຢູ່ນາ.'"

---

[20] ການມີອຸປະກອນມ້າງເຫຼັກເສດຢູ່ໃນເຮືອນ ຊີ້ໃຫ້ເຫັນວ່າມີຜູ້ໃດຜູ້ໜຶ່ງໃນຄົວເຮືອນອາດຈະມີສ່ວນຮ່ວມ ຫຼື ເຄີຍມີສ່ວນຮ່ວມໃນການຊອກຫາເຫຼັກເສດເພື່ອຂາຍ, ແລະ ໃນເຂດພູມສັນຖານເຫຼົ່ານີ້ ເຫຼັກເສດສ່ວນຫຼາຍແມ່ນມາຈາກ ລບຕ. ແບບສອບຖາມທີ່ໄດ້ຮັບການອະນຸມັດ (ເບິ່ງເອກະສານຊ້ອນທ້າຍ ກ) ໃຊ້ປະໂຫຍກທີ່ວ່າ "ທ່ານມີອຸປະກອນ ຫຼື ເຄື່ອງມືສຳລັບການມ້າງເຫຼັກເສດຢູ່ໃນເຮືອນຂອງທ່ານບໍ່?"

**ຄຳຖາມບົດຄົ້ນຄ້ວາ ທີ 1:**

ທົ່ງໄຮ່ ທົ່ງນາແມ່ນສະຖານທີ່ເກີດອຸປະຕິເຫດ ທີ່ພົບເຫັນເລື້ອຍທີ່ສຸດສຳລັບຜູ້ໃຫຍ່ (44%) ແລະ ເດັກ (33%), ເຊິ່ງສະທ້ອນໃຫ້ເຫັນເຖິງຄວາມສຳພັນກັນລະຫວ່າງການເຮັດວຽກກະສິກຳ ຫຼື ກິດຈະກຳຢູ່ນອກເຮືອນ. ເຮືອນເປັນສະຖານທີ່ເກີດອຸປະຕິເຫດ ເປັນອັນດັບ 2 ທີ່ພົບເຫັນເລື້ອຍໆ, ໂດຍສະເພາະແມ່ນອຸປະຕິເຫດທີ່ເກີດຂຶ້ນກັບຜູ້ໃຫຍ່ (31%) ແລະ ເດັກ (22%), ອັນນີ້ ຊີ້ໃຫ້ເຫັນເຖິງຄວາມສ່ຽງທີ່ມີຢູ່ໃນເຂດທີ່ຢູ່ອາໄສ. ສຳລັບພື້ນທີ່ໃນເຂດບ້ານ ມີຮູບແບບທີ່ຄ້າຍຄືກັນໃນແຕ່ລະກຸ່ມປະຊາກອນຕົວຢ່າງ, ເດັກມັກຈະປະສົບອຸປະຕິເຫດຕາມຖະໜົນ (11%) ແລະ ເຂດພື້ນທີ່ທາງທະຫານ (11%), ເຊິ່ງຊີ້ໃຫ້ເຫັນເຖິງການມີຄວາມສ່ຽງຫຼາຍຂຶ້ນ ຍ້ອນການເຄື່ອນໄຫວ ຫຼື ການຫຼິ້ນຂອງເດັກ.

*ຮູບທີ 2: ອຸປະຕິເຫດ ລບຕ ສ່ວນຫຼາຍແມ່ນເກີດຂຶ້ນຢູ່ທົ່ງໄຮທົ່ງນາ, ໃນເຮືອນ ແລະ ໃນໝູ່ບ້ານ.*




(ລາຍລະອຽດເພີ່ມເຕີມກ່ຽວກັບສະຖານະການອຸປະຕິເຫດ ລວມທັງກິດຈະກຳທີ່ຊັດເຈນ ແລະ ສິ່ງທີ່ກະຕຸ້ນການລະເບີດຂອງ ລບຕ, ແມ່ນຈະລວມຢູ່ໃນພາກຄຳຖາມ ທີ 2 ສຳລັບການສຶກສາຄົ້ນຄວ້າ: ຜູ້ເຄາະຮ້າຍກຳລັງເຮັດຫຍັງຢູ່ໃນເວລາເກີດອຸປະຕິເຫດ ແລະ ມີໃຜອີກແດ່ທີ່ກ່ຽວຂ້ອງກັບອຸປະຕິເຫດ? ຄຳຖາມສຳລັບການສຶກສາຄົ້ນຄວ້າທັງ ສອງ ຄຳຖາມນີ້ ມີຄວາມກ່ຽວຂ້ອງກັນຢ່າງໃກ້ຊິດ ແລະ ສາມາດພິຈາລະນາຮ່ວມກັນໄດ້.)

## ການສົນທະນາກ່ຽວກັບຄຳຖາມທີ 1

ຜົນການສຶກສາຄົ້ນຄ້ວາຄັ້ງນີ້ ເນັ້ນໃຫ້ເຫັນເຖິງລັກສະນະຫຼາຍແງ່ມຸມຂອງອຸປະຕິເຫດ ລບຕ ຢູ່ລາວ ເຊິ່ງກຳນົດຕາມອາຍຸ, ອາຊີບ, ພູມສັນຖານ, ຊົນເຜົ່າ, ການສຶກສາ ແລະ ລະດັບຂອງການໄດ້ຮັບຄວາມຮູ້ກ່ຽວກັບອັນຕະລາຍ ຂອງລະເບີດ. ເຫດການອຸປະຕິເຫດ ລບຕ ບໍ່ໄດ້ເກີດຂຶ້ນໂດຍບັງເອີນ ແຕ່ມັນສະທ້ອນໃຫ້ເຫັນເຖິງຮູບແບບທີ່ສາມາດຄາດເດົາໄດ້ ເຊິ່ງມີຮາກຖານມາຈາກກິດຈະກຳປະຈຳວັນ, ການປະຕິບັດ

ວັດທະນະທຳ ແລະ ການຕົກຄ້າງຂອງລະເບີດໃນອະດີດ. ຄວາມເຂົ້າໃຈກ່ຽວກັບການເຄື່ອນໄຫວຂອງດ້ານຕ່າງໆເຫຼົ່ານີ້ ມີຄວາມສຳຄັນທີ່ສຸດສຳລັບການອອກແບບຍຸດທະສາດການປ້ອງກັນ ແລະ ການຮັບມື ທີ່ມີປະສິດທິພາບ ແລະ ລວມເອົາທຸກຄົນໃຫ້ມີສ່ວນຮ່ວມ.

ທາງດ້ານພູມສາດ, ອຸປະຕິເຫດມັກເກີດຂຶ້ນຢ່າງຕໍ່ເນື່ອງໃນພື້ນທີ່ໆມີຄວາມສ່ຽງຢູ່ໃນແຂວງທີ່ມີລະເບີດຕົກຄ້າງ, ເຊິ່ງເປັນບ່ອນທີ່ມີການຕົກຄ້າງຂອງລະເບີດໃນອະດີດກັບການນຳໃຊ້ທີ່ດິນຢ່າງຕໍ່ເນື່ອງໃນປະຈຸບັນ, ບວກກັບຄວາມແຕກຕ່າງທາງດ້ານຊົນເຜົ່າ ແລະ ພາສາ ມັນໄດ້ກໍ່ໃຫ້ເກີດຄວາມສ່ຽງ. ສິ່ງເຫຼົ່ານີ້ ສະແດງໃຫ້ເຫັນເຖິງມິຕິທາງດ້ານວັດທະນະທຳ ແລະ ສັງຄົມຂອງຄວາມສ່ຽງ ຄວບຄູ່ກັບສິ່ງແວດລ້ອມ. ຊົນເຜົ່າຕ່າງໆ ເຊັ່ນ: ມອນ-ຂະແມ ແລະ ມົ້ງ-ມຽນ ມີຈຳນວນຫຼາຍກ່ວາໃນກຸ່ມປະຊາກອນຕົວຢ່າງຂອງຜູ້ລອດຊີວິດ, ສະແດງໃຫ້ເຫັນເຖິງການຕົກຄ້າງຂອງລະເບີດໃນອະດີດຢູ່ໃນບ້ານເກີດເມືອງນອນຂອງເຂົາເຈົ້າ ແລະ ອຸປະສັກຕໍ່ການເຂົ້າເຖິງບໍລິການຕ່າງໆ ທີ່ຍັງຄົງມີຢູ່.

ໃນການປະເມີນຄວາມສ່ຽງ ແລະ ການຟື້ນຕົວຈາກລະເບີດບໍ່ທັນແຕກ, ສິ່ງສຳຄັນແມ່ນຕ້ອງພິຈາລະນາວ່າ ສະພາບຂອງທີ່ຢູ່ອາໄສ ແລະ ຊີວິດການເປັນຢູ່ ສົ່ງຜົນຕໍ່ຄວາມສ່ຽງແນວໃດ. ການເຂົ້າເຖິງພື້ນຖານໂຄງລ່າງ ແລະ ການບໍລິການຂອງຜູ້ລອດຊີວິດ ບໍ່ພຽງແຕ່ມີອິດທິພົນຕໍ່ຄວາມປອດໄພໃນທັນທີເທົ່ານັ້ນ ແຕ່ມັນຍັງມີອິດທິພົນຕໍ່ດ້ານສຸຂະພາບ, ການສຶກສາ ແລະ ຄວາມສາມາດດັດປັບທາງເສດຖະກິດໃນໄລຍະຍາວ ອີກດ້ວຍ.

ເຖິງແມ່ນວ່າການເຂົ້າເຖິງໄຟຟ້າແມ່ນເກືອບທົ່ວເຖິງທຸກບ່ອນ, ແຕ່ຍັງມີຄວາມແຕກໂຕນກັນໃນດ້ານການເຂົ້າເຖິງນ້ຳສະອາດ, ວິດຖ່າຍ, ແລະການເຊື່ອມຕໍ່ດິຈິຕອນ. ການເຂົ້າເຖິງອິນເຕີເນັດມີຄວາມຈຳກັດເປັນພິເສດ, ເຮັດໃຫ້ມີຄວາມແຕກໂຕນກັນດ້ານດິຈິຕອນ ເຊິ່ງຈຳກັດໂອກາດຂອງຜູ້ລອດຊີວິດໃນການສຶກສາ, ການຈ້າງງານ ແລະ ການດູແລສຸຂະພາບ. ສຳລັບເດັກ, ການເຂົ້າເຖິງດິຈິຕອລທີ່ຖືກຈຳກັດເປັນໄພຂົ່ມຂູ່ຕໍ່ການສຶກສາ ຢ່າງຕໍ່ເນື່ອງ ແລະ ເພີ່ມຄວາມສ່ຽງຕໍ່ການອອກໂຮງຮຽນ, ດັ່ງທີ່ເຫັນໄດ້ຈາກການສຶກສາຄົ້ນຄ້ວາຢູ່ໃນພາກພື້ນ ທີ່ເຊື່ອມໂຍງກັບລະຫວ່າງການຖືກກີດກັນດ້ານດິຈິຕອລກັບອັດຕາສ່ວນຂອງການລາອອກຈາກໂຮງຮຽນ.[21][22]

ການເຂົ້າເຖິງນ້ຳສະອາດ ແລະ ສຸຂາພິບານ ຍັງຄົງເປັນສິ່ງທ້າທາຍຕື່ມອີກ. ເຖິງແມ່ນວ່າຄົວເຮືອນຂອງຜູ້ລອດຊີວິດສ່ວນໃຫຍ່ມີແຫຼ່ງນ້ຳຮູບແບບໃດໜຶ່ງ, ແຕ່ມີຜູ້ລອດຊີວິດຈຳນວນຫຼາຍ ໂດຍສະເພາະຜູ້ລອດຊີວິດທີ່ເປັນເດັກ ຕ້ອງອາໄສແຫຼ່ງນ້ຳທີ່ບໍ່ໄດ້ຮັບການປ້ອງກັນ, ເຮັດໃຫ້ເຂົາເຈົ້າຕິດເຊື້ອພະຍາດທາງນ້ຳ ແລະ ເຮັດໃຫ້ເກີດຄວາມສ່ຽງດ້ານສຸຂະພາບເພີ່ມຂຶ້ນ.[23] [24] ການປະຕິບັດດ້ານສຸຂາພິບານ ແມ່ນມີຄວາມຫຼາກຫຼາຍ: ໃນຂະນະທີ່ພົບເຫັນຫ້ອງນ້ຳທີ່ຊຸດເປັນຂຸມຢູ່ທົ່ວໄປ, ບາງຄົວເຮືອນຍັງຄົງປະຕິບັດການຂັບຖ່າຍແບບເປີດຢູ່ (ຖ່າຍຊະຊາຍ),

---

[21] Van Deursen, A.J., & Van Dijk, J.A. (2019). ຊ່ອງຫວ່າງທາງດິຈິຕອນລະດັບທຳອິດປ່ຽນຈາກຄວາມບໍ່ສະເໝີພາບໃນການເຂົ້າເຖິງທາງກາຍໄປສູ່ຄວາມບໍ່ສະເໝີພາບໃນການເຂົ້າເຖິງວັດຖຸ. ສື່ໃໝ່ ແລະ ສັງຄົມ, 21(2), 354-375. https://journals.sagepub.com/doi/full/10.1177/1461444818797082

[22] Hasamoh, A., Srivirat, S., & Wichaidit, W. (2025). ຊ່ອງຫວ່າງທາງດິຈິຕອລໃນການສຶກສາອອນໄລນ໌ ໃນໄລຍະການແຜ່ລະບາດຂອງໂຄວິດ-19 ແລະ ຜົນການສຶກສາ: ຜົນການສຳຫຼວດຊຸມຊົນໃນເຂດພາກໃຕ້ທີ່ທຸກຍາກຂອງປະເທດໄທ. ການທົບທວນອາຊະຍາກຳ ແລະ ສັງຄົມອາຊີ, 12(1), 5-5. https://so02.tci-thaijo.org/index.php/IJCLSI/article/view/274842/184024

[23] Hunter, P. R., MacDonald, A. M., & Carter, R. C. (2010). ການສະໜອງນ້ຳ ແລະ ສຸຂະພາບ. ຢາ PLoS, 7(11), e1000361. https://journals.plos.org/plosmedicine/article?id=10.1371/journal.pmed.1000361

[24] ອົງການອະນາໄມໂລກ. (2018). ຄຳແນະນຳກ່ຽວກັບສຸຂາພິບານ ແລະ ສຸຂະພາບ. ໃນຄຳແນະນຳກ່ຽວກັບສຸຂາພິບານ ແລະ ສຸຂະພາບ (ໜ້າ 220-220). https://www.who.int/publications/i/item/978924151470

ສຸຂາພິບານທີ່ບໍ່ດີມີຄວາມເຊື່ອງໂຍງຢ່າງໃກ້ຊິດກັບການເກີດພະຍາດຖອກທ້ອງທີ່ເພີ່ມຂຶ້ນ[25] ໂດຍສະເພາະແມ່ນການລະບາດໃນເດັກ. ຍິ່ງໄປກວ່ານັ້ນ, ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ບໍ່ພຽງພໍ ສາມາດສົ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກຍິງ,[26] ເຊິ່ງຕັດຮອນຄວາມຮູ້ສຶກຄວາມປອດໄພ ແລະ ກຽດສັກສີຂອງເຂົາເຈົ້າລົງ.

ຄວາມສາມາດທົນທານດ້ານທີ່ຢູ່ອາໄສ ສົ່ງຜົນຕໍ່ການຮັບມືກັບບັນຫາ ແລະ ການຟື້ນຕົວ. ເຖິງແມ່ນວ່າເຮືອນສ່ວນໃຫຍ່ຈະສາມາດທົນກັບຝົນຕົກຕາມລະດູການ, ເຮືອນຈຳນວນນ້ອຍໜຶ່ງຍັງມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແລະ ການຍຸດສະງັກຂອງການເຄື່ອນໄຫວ, ເຮັດໃຫ້ມີຄວາມສ່ຽງຕໍ່ການຍົກຍ້າຍ, ຜົນຜະລິດຫຼຸດລົງ ແລະ ມີອຸປະສັກຕໍ່ການດູແລສຸກເສີນ ໃນສະພາບການຂອງການປ່ຽນແປງດິນຟ້າອາກາດທີ່ຮຸນແຮງຂຶ້ນ.

ປັດໄຈທີ່ກ່ຽວຂ້ອງກັບການດຳລົງຊີວິດ ມີຄວາມກ່ຽວຂ້ອງກັບຄວາມສ່ຽງເຫຼົ່ານີ້. ການໄປຊອກເຫຼັກເສດຂອງຜູ້ລອດຊີວິດບາງຄົນ ຊີ້ໃຫ້ເຫັນເຖິງການມີສ່ວນພົວພັນໃນການສ້າງລາຍຮັບທີ່ບໍ່ເປັນທາງການ, ແຕ່ກິດຈະກຳນີ້ກໍ່ພາໃຫ້ເກີດອັນຕະລາຍເພີ່ມຂຶ້ນໃນສະພາບແວດລ້ອມທີ່ມີລະເບີດຕົກຄ້າງ ເຊິ່ງມີແນວໂນ້ມທີ່ຈະສຳພັດກັບ ລບຕ. (ດັ່ງທີ່ຈະໄດ້ສົນທະນາກັນ ຢູ່ໃນພາກຕໍ່ໄປຂອງບົດລາຍງານນີ້ ເດັກຄົນໜຶ່ງກຳລັງມ້າງລະເບີດບໍ່ທັນແຕກ ໃນເວລາທີ່ກຳລັງສຶກສາຢູ່ ແລະ ຜູ້ລອດຊີວິດສອງຄົນ ເຊິ່ງເປັນຜູ້ໃຫຍ່ຄົນໜຶ່ງ ແລະ ເດັກຄົນໜຶ່ງ ທີ່ຢູ່ໃນກຸ່ມປະຊາກອນຕົວຢ່າງຂອງການສຶກສາຄົ້ນຄ້ວາ ໄດ້ຮັບບາດເຈັບຍ້ອນມີຄົນອື່ນໆທີ່ຢູ່ໃກ້ຄຽງໄດ້ເຮັດໃຫ້ລະເບີດແຕກໃນຂະນະທີ່ມ້າງລະເບີດເພື່ອເອົາເຫຼັກເສດ.)

ຄວາມເປັນຈິງທີ່ວ່າ ອຸປະຕິເຫດສ່ວນໃຫຍ່ເກີດຂຶ້ນໃນຂະນະທີ່ຜູ້ລອດຊີວິດຢູ່ໃນທົ່ງໄຮ່ທົ່ງນາ, ຢູ່ເຮືອນ ຫຼື ຢູ່ໃນບ້ານ ຊີ້ໃຫ້ເຫັນວ່າ ການດຳລົງຊີວິດປະຈຳວັນຢູ່ໃນພື້ນທີ່ໆມີລະເບີດຕົກຄ້າງອາດຈະມີຄວາມສ່ຽງ ແລະ ຍິ່ງຊີ້ໃຫ້ເຫັນເຖິງການເຊື່ອມໂຍງກັນລະຫວ່າງພູມສັນຖານ, ຄວາມທຸກຍາກ, ການດຳລົງຊີວິດ ແລະ ຄວາມສ່ຽງ. ໃນພາກຕໍ່ໄປ ຈະກ່າວເຖິງຜົນການສຶກສາຄົ້ນຄ້ວາເພີ່ມເຕີມທີ່ກ່ຽວຂ້ອງ ແລະ ການສົນທະນາກ່ຽວກັບວຽກງານປະຈຳວັນ ທີ່ເປັນສາເຫດຂອງອຸປະຕິເຫດ ລບຕ.

## ຂໍ້ສະເໜີແນະສຳລັບຄຳຖາມທີ 1

- **ພິຈາລະນາຮູບແບບທາງສັງຄົມປະຊາກອນຂອງຄວາມດ້ອຍໂອກາດ ແລະ ຄວາມທຸກຍາກ ສຳລັບການປ້ອງກັນອຸປະຕິເຫດ ລບຕ, ການຫຼຸດຜ່ອນຄວາມສ່ຽງ ແລະ ການຕອບໂຕ້ແກ້ໄຂອຸປະຕິເຫດ ລບຕ ແລະ ພິຈາລະນາຄວາມສ່ຽງຂອງ ລບຕ ເຂົ້າໃນຄວາມພະຍາຍາມໃນການແກ້ໄຂບັນຫາຄວາມທຸກຍາກ ແລະ ການພັດທະນາທີ່ບໍ່ແມ່ນສະເພາະເຈາະຈົງກັບ ລບຕ.** ຄວາມທຸກຍາກ ແລະ ສະພາບການທາງສັງຄົມປະຊາກອນ ມີອິດທິພົນຕໍ່ຄວາມສ່ຽງຈາກ ລບຕ ແລະ ຄວາມເປັນຈິງນີ້ ຄວນ

---

[25] Bartram, J., & Cairncross, S. (2010). ສຸຂະອະນາໄມ, ສຸຂາພິບານ, ແລະ ນ້ຳ: ພື້ນຖານສຸຂະພາບທີ່ຖືກລືມ. PLoS Medicine, 7(11), e1000367. https://journals.plos.org/plosmedicine/article?id=10.1371/journal.pmed.1000367

[26] Sommer, M., Caruso, B. A., Sahin, M., Calderon, T., Cavill, S., Mahon, T., & Phillips-Howard, P. A. (2016). ເວລາສຳລັບການປະຕິບັດໃນລະດັບໂລກ: ການແກ້ໄຂຄວາມຕ້ອງການການຄຸ້ມຄອງສຸຂະອະນາໄມປະຈຳເດືອນຂອງເດັກຍິງຢູ່ໃນໂຮງຮຽນ. ຢາ PLoS, 13(2), e1001962. https://journals.plos.org/plosmedicine/article?id=10.1371/journal.pmed.1001962

ຖືກພິຈາລະນາເຂົ້າໃນການກຳນົດເປົ້າໝາຍການເຂົ້າໄປແຊກແຊງຊ່ວຍເຫຼືອຂອງຂະແໜງການທີ່ເຮັດວຽກກ່ຽວກັບ ລບຕ (ການເກັບກູ້, ການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ (EORE) ແລະ ອື່ນໆ) ແລະ ການເຂົ້າໄປແຊກແຊງຊ່ວຍເຫຼືອຈາກຂະແໜງການອື່ນໆ, ເຊິ່ງຄວາມສ່ຽງຈາກ ລບຕ ຄວນຖືກພິຈາລະນາເປັນປັດໄຈໜຶ່ງສຳລັບການກຳນົດເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດ. ຕົວຢ່າງ, ການປັບປຸງຊີວິດການເປັນຢູ່ ແລະ ການຫຼຸດຜ່ອນຄວາມບໍ່ໝັ້ນຄົງທາງດ້ານການເງິນອາດຫຼຸດຜ່ອນຄວາມຈຳເປັນຂອງປະຊາຊົນໃນການເຮັດໄຮ່ເຮັດນາ ຫຼື ການໄປຊອກຫາອາຫານ ຢູ່ໃນພື້ນທີ່ງມີຄວາມສ່ຽງສູງ.

- **ປະສົມປະສານການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ເຂົ້າກັບການເກັບກູ້ ແລະ ການຊ່ວຍເຫຼືອ**. ຂະແໜງກ່ຽວກັບ ລບຕ ຄວນພິຈາລະນາວິທີການເຊື່ອມໂຍງການໂຄສະນາປູກຈິດສຳນຶກເຂົ້າກັບກິດຈະກຳການເກັບກູ້ລະເບີດ ທີ່ກຳລັງດຳເນີນຢູ່ ແລະ ເຊື່ອມໂຍງກັບການບໍລິການຊ່ວຍເຫຼືອຜູ້ລອດຊີວິດ ເພື່ອເສີມສ້າງຄວາມໜ້າເຊື່ອຖື, ຫຼຸດຜ່ອນຄວາມສ່ຽງ ແລະ ສ້າງຄວາມໄວ້ວາງໃຈຂອງຊຸມຊົນໃນຄວາມພະຍາຍາມຫຼຸດຜ່ອນຄວາມສ່ຽງຈາກລະເບີດບໍ່ທັນແຕກ. ການເຊື່ອມໂຍງດັ່ງກ່າວ ອາດເພີ່ມການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ອີກດ້ວຍ.

## ຄໍາຖາມບົດຄົ້ນຄວ້າ ທີ 2:

**ຜູ້ຖືກເຄາະຮ້າຍກໍາລັງເຮັດຫຍັງໃນເວລາເກີດອຸປະຕິເຫດ ແລະ ມີໃຜແດ່ທີ່ກ່ຽວຂ້ອງກັບອຸປະຕິເຫດ?**

# 2. ຜູ້ເຄາະຮ້າຍກຳລັງເຮັດຫຍັງຢູ່ໃນເວລາເກີດອຸປະຕິເຫດ ແລະ ມີໃຜອີກແດ່ທີ່ກ່ຽວຂ້ອງກັບອຸປະຕິເຫດ?

ໃນພາກນີ້ຂອງບົດລາຍງານ ຈະສຳຫຼວດກິດຈະກຳຕ່າງໆທີ່ຜູ້ລອດຊີວິດກຳລັງເຮັດໃນເວລາເກີດອຸປະຕິເຫດ, ປັດໄຈທີ່ເຮັດໃຫ້ເກີດການລະເບີດ ແລະ ຜູ້ທີ່ຢູ່ນຳຜູ້ລອດຊີວິດໃນເວລາເກີດອຸປະຕິເຫດດັ່ງກ່າວ. ຜົນການສຶກສາຄົ້ນຄ້ວາສະແດງໃຫ້ເຫັນເຖິງຄວາມແຕກຕ່າງໃນກິດຈະກຳຕ່າງໆໃນເວລາເກີດອຸປະຕິເຫດໃນແຕ່ລະກຸ່ມອາຍຸ ໂດຍສະແດງໃຫ້ເຫັນວ່າ ຜູ້ໃຫຍ່ມີຄວາມສ່ຽງຕົ້ນຕໍໃນກິດຈະກຳການດຳລົງຊີວິດປະຈຳວັນ ເຊັ່ນ: ການດັງ/ຈູດໄຟ ແລະ ການເຮັດວຽກງານກະສິກຳ, ໃນຂະນະທີ່ເດັກມັກຈະໄດ້ຮັບບາດເຈັບຈາກການສຳຜັດໂດຍກົງກັບລະເບີດ ແລະ ມີຄວາມສ່ຽງສູງ ເຊັ່ນ: ການແຕະຕ້ອງ, ການເຕະ ຫຼື ການຫຼິ້ນກັບລະເບີດ. ນອກຈາກນັ້ນ, ໃນພາກນີ້ຂອງບົດລາຍງານ ຍັງໄດ້ເນັ້ນໃຫ້ເຫັນເຖິງມິຕິຕ່າງໆທາງສັງຄົມຂອງການເກີດອຸປະຕິເຫດ ໂດຍສະແດງໃຫ້ເຫັນວ່າ ການລະເບີດມັກຈະເກີດຂຶ້ນໃນເວລາທີ່ຜູ້ເຄາະຮ້າຍຢູ່ກັບຄອບຄົວ ຫຼື ໝູ່ເພື່ອນ ແລະ ມັກຈະເຮັດໃຫ້ມີຜູ້ບາດເຈັບ ຫຼື ເສຍຊີວິດຫຼາຍຄົນ, ສິ່ງນີ້ເນັ້ນໃຫ້ເຫັນເຖິງບາດແຜທາງດ້ານຈິດໃຈທີ່ເກີດຂຶ້ນກັບຫຼາຍໆຄົນນຳກັນ ແລະ ເຫດການອຸປະຕິເຫດເຫຼົ່ານີ້ສ້າງພາລະຕໍ່ຊຸມຊົນແນວໃດ.

## ຜົນໄດ້ຮັບຈາກຄຳຖາມທີ 2

### ກິດຈະກຳ ແລະ ສິ່ງກະຕຸ້ນທີ່ແຕກຕ່າງກັນລະຫວ່າງຜູ້ໃຫຍ່ ແລະ ເດັກ

ຮູບທີ 3, ຂ້າງລຸ່ມນີ້ ຊີ້ໃຫ້ເຫັນຄວາມແຕກຕ່າງທີ່ສຳຄັນຂອງກິດຈະກຳ ໃນເວລາເກີດອຸປະຕິເຫດ ລບຕ. ສຳລັບຜູ້ໃຫຍ່, ຫຼາຍກວ່າເຄິ່ງໜຶ່ງ (56%) ຂອງເຫດການອຸປະຕິເຫດ ແມ່ນເກີດຂຶ້ນໃນຂະນະທີ່ດັງໄຟ/ຈູດໄຟ, ເຮັດໃຫ້ມັນເປັນກິດຈະກຳທີ່ມີຄວາມສ່ຽງສູງທີ່ສຸດ. ໃນກຸ່ມຂອງເດັກ, ກິດຈະກຳທີ່ເຮັດໃຫ້ເກີດອຸປະຕິເຫດສ່ວນໃຫຍ່ແມ່ນການຈັບ ຫຼື ຍ້າຍ ເພື່ອຈະຫຼິ້ນ (33%), ຕາມດ້ວຍການໄປຊອກອາຫານການກິນ (28%), ເຊິ່ງມີກໍລະນີອື່ນໆທີ່ກ່ຽວຂ້ອງກັບອຸປະຕິເຫດ ລບຕ ແມ່ນການມ້າງ ລບຕ, ການລ້ຽງສັດ ຫຼື ການກະທຳທີ່ບໍ່ໄດ້ລະບຸໃນນີ້. ຮູບແບບຂອງອຸປະຕິເຫດເຫຼົ່ານີ້ ຊີ້ໃຫ້ເຫັນວ່າຜູ້ໃຫຍ່ມີຄວາມສ່ຽງຫຼາຍທີ່ສຸດໃນລະຫວ່າງການເຮັດວຽກງານທີ່ກ່ຽວຂ້ອງກັບໄຟ, ໃນຂະນະທີ່ເດັກປະສົບກັບອັນຕະລາຍໃນລະຫວ່າງການເຮັດກິດຈະກຳກາງແຈ້ງທີ່ບໍ່ມີການເບິ່ງແຍງຂອງຜູ້ໃຫຍ່.

*ຮູບທີ 3: ກິດຈະກຳທີ່ຜູ້ລອດຊີວິດກຳລັງເຮັດໃນຂະນະທີ່ລະເບີດແຕກ*



ອຸປະຕິເຫດ ລບຕ ສ່ວນໃຫຍ່ທີ່ເກີດຂຶ້ນໃນຂະນະທີ່ຜູ້ຖືກເຄາະຮ້າຍຍ່າງ ມີ 84% ຂອງຜູ້ໃຫຍ່ ແລະ ເດັກທັງໝົດ, ອັນນີ້ຊີ້ໃຫ້ເຫັນເຖິງຄວາມສ່ຽງໃນລະຫວ່າງການເຄື່ອນໄຫວ ຫຼື ການຫຼິ້ນຕາມປົກກະຕິ. ຜູ້ໃຫຍ່ມີສັດສ່ວນທີ່ນ້ອຍກ່ວາເດັກ (16%) ທີ່ນັ່ງຢູ່ ໃນເວລາເກີດອຸປະຕິເຫດ , ສ່ວນຫຼາຍມັກຈະນັ່ງຢູ່ໃກ້ກັບເຕົາໄຟ/ກອງໄຟ ຫຼື ເຮັດເຄື່ອງມືຕ່າງໆ. ບໍ່ມີກໍລະນີຂອງອຸປະຕິເຫດທີ່ກ່ຽວຂ້ອງກັບຍານພາຫະນະ, ອັນນີ້ຊີ້ໃຫ້ເຫັນວ່າ ມັນມີຄວາມອັນຕະລາຍ ຢູ່ໃນເຂດພື້ນທີ່ ທີ່ປະຊາຊົນຍ່າງໄປມາ ຫຼື ບ່ອນຊຸມນຸມກັນໃນເຂດບ້ານຂອງເຂົາເຈົ້າ.

*ຕາຕະລາງ ທີ5: ຜູ້ລອດຊີວິດມີການເຄື່ອນໄຫວແນວໃດ ໃນເວລາທີ່ເກີດການລະເບີດຂອງ ລບຕ*

| | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (n=32) | | ຜູ້ລອດຊີວິດທີ່ເປັນເດັກ (n=18) | |
|---|---|---|---|---|
| | % | n | % | n |
| **ການເຄື່ອນໄຫວ** | | | | |
| ກຳລັງຂີ່ລົດຈັກ | 0 | 0 | 0 | 0 |
| ຢູ່ໃນລົດເກັງ ຫຼື ກະບະ | 0 | 0 | 0 | 0 |
| ຂີ່ລົດໄຖນາ | 0 | 0 | 0 | 0 |
| ຍ່າງ | 84.4 | 27 | 100 | 18 |
| ນັ່ງ | 15.6 | 5 | 0 | 0 |

ມີຄວາມແຕກຕ່າງທີ່ສຳຄັນໃນການກະຕຸ້ນການລະເບີດຂອງ ລບຕ ລະຫວ່າງຜູ້ໃຫຍ່ ແລະ ເດັກ. ໃນບັນດາຜູ້ໃຫຍ່, ອຸປະຕິເຫດສ່ວນໃຫຍ່ແມ່ນເກີດມາຈາກການຈູດໄຟ (63%) ຫຼື ປະກອບອາຊີບກະສິກຳ (22%), ໃນຂະນະທີ່ມີພຽງແຕ່ 9% ມີການສຳຜັດໂດຍກົງກັບ ລບຕ. ກົງກັນຂ້າມ, 67% ຂອງອຸປະຕິເຫດທີ່ເກີດກັບເດັກ ແມ່ນເກີດຈາກການສຳຜັດ, ເຕະ ຫຼື ຢຽບ ລບຕ, ມີໜ້ອຍກໍລະນີທີ່ພົວພັນກັບການປູກຝັງ (22%) ຫຼື ຈູດໄຟ (11%). ຮູບແບບອຸປະຕິເຫດເຫຼົ່ານີ້ ຊີ້ໃຫ້ເຫັນວ່າຜູ້ໃຫຍ່ມີຄວາມສ່ຽງຫຼາຍໃນເວລາເຮັດກິດຈະກຳທີ່ກ່ຽວຂ້ອງກັບການເຮັດວຽກ, ໃນຂະນະທີ່ເດັກມີອຸປະຕິເຫດຍ້ອນວ່າມີການສຳຜັດໂດຍກົງກັບ ລບຕ ໃນເວລາທີ່ຂະເຈົ້າມີການຫຼິ້ນ ຫຼື ມີການເຄື່ອນໄຫວ. ຕາຕະລາງ ທີ6: ນຳສະເໜີການລາຍງານກ່ຽວກັບການກະຕຸ້ນໃຫ້ລະເບີດແຕກ ແລະ ຕຳແໜ່ງທາງຮ່າງກາຍ ຫຼື ການເຄື່ອນໄຫວຂອງຜູ້ໃຫຍ່ 32 ຄົນ ແລະ ເດັກນ້ອຍ 18 ຄົນ ໃນເວລາເກີດອຸປະຕິເຫດ, ພ້ອມທັງເນັ້ນໃຫ້ເຫັນຄວາມແຕກຕ່າງທີ່ສຳຄັນຂອງເຫດການລະເບີດທີ່ເກີດ.

*ຕາຕະລາງ ທີ6: ສິ່ງທີ່ກະຕຸ້ນໃຫ້ລະເບີດແຕກໃນຂະນະທີ່ເກີດອຸປະຕິເຫດ*

| | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (n=32) | | ຜູ້ລອດຊີວິດທີ່ເປັນເດັກ (n=18) | |
|---|---|---|---|---|
| | % | n | % | n |
| **ການກະຕຸ້ນການລະເບີດ** | | | | |

| | | | | |
|---|---|---|---|---|
| ດັງໄຟ | 62.5 | 20 | 11.1 | 2 |
| ການນຳໃຊ້ຈົກ/ສຽມ, ການປູກ, ການຕັດ | 21.9 | 7 | 22.2 | 4 |
| ແຕະຕ້ອງ, ເຕະ, ຢຽບ | 9.4 | 3 | 66.7 | 12 |
| ບໍ່ຮູ້ | 6.3 | 2 | 0 | 0 |
| ອື່ນໆ | 0 | 0 | 0 | 0 |

ລາຍລະອຽດເພີ່ມເຕີມກ່ຽວກັບກິດຈະກຳເຫຼົ່ານີ້ແມ່ນຢູ່ເອກະສານຊ້ອນທ້າຍ ຂ

ໃນບັນດາຜູ້ໃຫຍ່ 18 ຄົນທີ່ກຳລັງຈູດໄຟ, ເກືອບເຄິ່ງຫນຶ່ງ (47%) ແມ່ນດັງຟີງໄຟ/ຄວາມອົບອຸ່ນ, ຕໍ່ມາແມ່ນການຈູດຂີ້ເຫຍື້ອ (24%), ປຸງແຕ່ງອາຫານ (12%), ຫຼື ວຽກງານອື່ນໆ ເຊັ່ນ: ການເຜົາໂລຫະ. ເດັກພຽງ 1ຄົນ ທີ່ໄດ້ລາຍງານກ່ຽວກັບການດັງຟີງໄຟ/ຄວາມອົບອຸ່ນ. ມີແຕ່ຜູ້ໃຫຍ່ທີ່ລາຍງານການບຸກເບີກທີ່ດິນ, ຜູ້ໃຫຍ່ 2 ຄົນລາຍງານກ່ຽວກັບການດັງ/ຈູດໄຟ (ສຳລັບການປູກ ຫຼື ທຳຄວາມສະອາດເດີ່ນ) ແລະ ອີກ 1 ຄົນລາຍງານກ່ຽວກັບການຕັດຫຍ້າ.

*ຮູບທີ 4: ເຫດຜົນໃນການດັງ/ຈູດໄຟທີ່ເປັນການກະຕຸ້ນ ລບຕ*




ມີຜູ້ລອດຊີວິດຈຳນວນໜ້ອຍໜຶ່ງ, ຜູ້ໃຫຍ່ 4 ຄົນ ແລະ ບໍ່ມີເດັກ ທີ່ກຳລັງເຮັດໄຮ່ ຫຼື ເຮັດສວນ ໃນເວລາເກີດອຸປະຕິເຫດ ລບຕ. ສ່ວນຫຼາຍແມ່ນປູກມັນຕົ້ນ, ກ້ວຍ ຫຼື ເຂົ້າ, ຂຸດດິນລົງເລິກ (0–5 ຊມ) ແລະ ການໃຊ້ເຄື່ອງມືອຸປະກອນງ່າຍໆ ເຊັ່ນ: ແນວໃຊ້ປັກລົງດິນເພື່ອປູກ ຫຼື ອຸປະກອນກຳຈັດຫຍ້າ. (ເບິ່ງຕາຕະລາງ ຂ.7. ລາຍລະອຽດຂອງຜູ້ລອດຊີວິດທີ່ກຳລັງເຮັດໄຮ່ຫຼືເຮັດສວນໃນຂະນະທີ່ເກີດອຸປະຕິເຫດ, ໜ້າ 226.)

ມີຜູ້ໃຫຍ່ 1 ຄົນ ແລະ ເດັກອີກ 5 ຄົນ ໄດ້ລາຍງານກ່ຽວກັບການໄປຊອກອາຫານການກິນ. ເດັກສ່ວນຫຼາຍແມ່ນຫາປາຢູ່ໃກ້ແມ່ນ້ຳ, ຮ່ອງນ້ຳ ຫຼື ປ່າ, ໃນຂະນະທີ່ເດັກຄົນໜຶ່ງເວົ້າວ່າກຳລັງເກັບມັນຕົ້ນໄປຂາຍ. ເດັກຄົນໜຶ່ງເວົ້າວ່າ ເຂົາເຈົ້າກຳລັງມ້າງ ລບຕ ເພື່ອເອົາຊິ້ນສ່ວນໄປຂາຍ ແລະ ມີເດັກ 8 ຄົນໄດ້ແຕະຕ້ອງ ຫຼື ເຄື່ອນຍ້າຍ ລບຕ ໃນເວລາລະເບີດ.

ໃນບັນດາເດັກນ້ອຍທີ່ຖືກສຳພາດ, ເກືອບທັງໝົດຂອງເດັກໄດ້ກ່າວເຖິງວິທີທີ່ເຂົາເຈົ້າ ຫຼື ສະມາຊິກໃນກຸ່ມຂອງເຂົາເຈົ້າເກັບ ລບຕ, ຫຼິ້ນກັບ

ມັນ ຫຼື ໂຍນມັນ. ກ່ຽວກັບເລື່ອງນີ້, ທ້າວ ບຸນມີ ອະທິບາຍເຖິງສິ່ງທີ່ເກີດຂຶ້ນ ເມື່ອໝູ່ຂອງລາວອອກໄປຊອກຫາງົວຂອງຄອບຄົວ:

> ຂ້ອຍກຳລັງຍ່າງກັບຫມູ່ເພື່ອນຂອງຂ້ອຍ ເພື່ອໄປຊອກຫາງົວຂອງຂ້ອຍ ຢູ່ໃນບ້ານ. ອ້າຍຂອງຂ້ອຍກະໄປນຳ ແລະ ພວກເຮົາຍ່າງໄປນຳກັນທັງໝົດ 4 ຄົນ ລວມທັງຫມູ່ເພື່ອນຂອງຂ້ອຍນຳ. ໝູ່ຂອງຂ້ອຍໄດ້ເຫັນຊິ້ນສ່ວນຂອງລູກລະເບີດ 2 ສ່ວນ. ສ່ວນໜຶ່ງມີຕົວຈຸດຊະນວນລະເບີດ. ໝູ່ຂອງຂ້ອຍໄດ້ຈັບລະເບີດແລ້ວໂຍນມັນໃສ່ໄມ້ເພື່ອໃຫ້ມັນລະເບີດດັງໆ. ທັນທີທີ່ໝູ່ຂອງຂ້ອຍໂຍນລະເບີດ, ມັນກໍ່ລະເບີດທັນທີ.

ໃນເວລາທີ່ເດັກນ້ອຍໄດ້ອະທິບາຍເຖິງອຸປະຕິເຫດຂອງເຂົາເຈົ້າ, ໃນຫຼາຍໆກໍລະນີ, ເຂົາເຈົ້າໄດ້ກ່າວວ່າ ເຂົາເຈົ້າບໍ່ຮູ້ເຖິງອັນຕະລາຍຂອງການເຮັດແບບນັ້ນ. ເລື່ອງເລົ່າຂອງເດັກຄົນນຶ່ງ ສະແດງໃຫ້ເຫັນເຖິງຈຸດນີ້ ຊຶ່ງລາວເຄີຍຄິດວ່າ ລບຕ ເປັນຂອງຫຼິ້ນ:

> ມື້ນັ້ນ, ຂ້ອຍໄປລ້ຽງຄວາຍຢູ່ນາ. ຂ້ອຍໄດ້ເຫັນລູກລະເບີດກົມໆໜ່ວຍໜຶ່ງ. ຂ້ອຍຄິດວ່າມັນເປັນພຽງເຄື່ອງຫຼິ້ນ, ສະນັ້ນ ຂ້ອຍຈຶ່ງເອົາມັນໃສ່ໃນກະເປົ໋າແລ້ວເອົາມັນກັບມາເຮືອນເພື່ອຫຼິ້ນ. ຕອນນັ້ນ ຂ້ອຍບໍ່ຮູ້ວ່າມັນເປັນລະເບີດ ແລະ ບໍ່ຮູ້ວ່າມັນເປັນອັນຕະລາຍ. ເມື່ອຂ້ອຍມາຮອດເຮືອນ, ຂ້ອຍເລີ່ມຫຼິ້ນກັບມັນ ແລະ ມັນກໍ່ລະເບີດຂຶ້ນຢູ່ໃນມືຂອງຂ້ອຍ.

ໂດຍລວມແລ້ວ, ຫຼາຍເລື່ອງກ່ຽວກັບປະສົບການຂອງຜູ້ລອດຊີວິດກ່ອນເກີດອຸປະຕິເຫດ ລບຕ ໄດ້ເວົ້າເຖິງການເຄື່ອນໄຫວຊີວິດປະຈຳວັນ ແລະ ໃນຫຼາຍກໍລະນີ ຜູ້ລອດຊີວິດໄດ້ຢູ່ກັບຄົນອື່ນ. ທັງຜູ້ໃຫຍ່ໄດ້ລາຍງານເລື້ອຍໆກ່ຽວກັບການດັງໄຟ/ຈູດກອງໄຟ ແລະ ເດັກສ່ວນໃຫຍ່ແມ່ນໄດ້ເລົ່າເຖິງການເກັບເອົາລະເບີດບໍ່ທັນແຕກ ແລະ ການຫຼິ້ນກັບມັນ.

ມີ 3 ກໍລະນີທີ່ການລະເບີດກ່ຽວຂ້ອງກັບການເກັບເຫຼັກເສດເພື່ອໄປຂາຍ ເຊິ່ງເປັນສາເຫດຂອງອຸປະຕິເຫດ; ເດັກຄົນໜຶ່ງໄດ້ມ້າງລະເບີດໂດຍກົງ ແລະ ອີກ 2 ກໍລະນີ (ຜູ້ໃຫຍ່ຄົນໜຶ່ງ, ເດັກຄົນໜຶ່ງ) ຂອງຜູ້ລອດຊີວິດທີ່ຢູ່ໃນກຸ່ມປະຊາກອນໃນຕົວຢ່າງຂອງການສຶກສາຄົ້ນຄ້ວາແມ່ນຢູ່ໃກ້ໆ ແຕ່ບໍ່ໄດ້ເປັນສາເຫດຂອງການລະເບີດ. ໃນກໍລະນີຂອງເດັກຄົນນັ້ນ, ໝູ່ຄົນໜຶ່ງໃນກຸ່ມຂອງເດັກເປັນຜູ້ເຮັດໃຫ້ລະເບີດແຕກ ແລະ ໃນກໍລະນີຂອງຜູ້ໃຫຍ່ຄົນນັ້ນ ແມ່ນສະມາຊິກໃນຄອບຄົວຂອງລາວເປັນຜູ້ເຮັດໃຫ້ລະເບີດແຕກ. ຜູ້ລອດຊີວິດກ່າວວ່າ:

> ຕອນເກີດການລະເບີດ, ຂ້ອຍກຳລັງຍ່າງໄປນາ ທັນຫຼັງໃຫ້ມັນ ແລະ ບໍ່ຮູ້ວ່າເຂົາເຈົ້າກຳລັງເຮັດຫຍັງຢູ່ໃນເວລາລະເບີດແຕກ. ຂ້ອຍບໍ່ຮູ້ວ່າເຂົາເຈົ້າເຮັດແນວໃດລະເບີດຈຶ່ງແຕກ, ບາງທີອາດເປັນຍ້ອນວ່າເຂົາເຈົ້າບໍ່ຮູ້ວ່າມັນເປັນລະເບີດ. ຂ້ອຍບໍ່ເຫັນວ່າເຂົາເຈົ້າກຳລັງເຮັດຫຍັງ, ຂ້ອຍພຽງແຕ່ຮູ້ວ່າເຂົາເຈົ້າກຳລັງຊອກເກັບເຫຼັກເສດ."

## ຜູ້ລອດຊີວິດສ່ວນໃຫຍ່ແມ່ນຢູ່ກັບຄົນອື່ນໃນເວລາທີ່ເກີດອຸປະຕິເຫດ ແລະ ອຸປະຕິເຫດ ມັກຈະເຮັດໃຫ້ມີຜູ້ບາດເຈັບ ຫຼື ເສຍຊີວິດຫຼາຍຄົນ.

ຫຼາຍຄັ້ງ ຜູ້ລອດຊີວິດໄດ້ຢູ່ກັບຄອບຄົວ ຫຼື ເພື່ອນບ້ານຂອງເຂົາເຈົ້າໃນເວລາເຮັດກິດຈະກຳ ແລະ ໃນເວລາທີ່ເກີດການລະເບີດ ແລະ ຜູ້ລອດຊີວິດບາງຄົນ ໄດ້ອະທິບາຍເຖິງອຸປະຕິເຫດຂອງເຂົາເຈົ້າທີ່ເຮັດໃຫ້ມີຜູ້ບາດເຈັບ ແລະ ເສຍຊີວິດຈຳນວນຫຼາຍຄົນ.

ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ທີ່ຖືກສຳພາດໄດ້ອະທິບາຍກ່ຽວກັບວ່າ ມີໃຜແດ່ທີ່ຢູ່ກັບເຂົາເຈົ້າໃນເວລາທີ່ເກີດອຸປະຕິເຫດ. ໜຶ່ງສ່ວນສາມຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ທີ່ຖືກສຳພາດ (8 ໃນ 24 ຄົນ) ກ່າວວ່າ ເຂົາເຈົ້າຢູ່ຄົນດຽວໃນເວລາເກີດອຸປະຕິເຫດ; ໃນຂະນະທີ່ມີຈຳນວນຫຼາຍ

ຂັ້ນເລັກນ້ອຍ (10 ໃນ 24 ຄົນ) ກ່າວວ່າເຂົາເຈົ້າຢູ່ກັບຄົນອື່ນອີກ1ຄົນ ຫຼື 2-3ຄົນ (2-5 ຄົນ, ລວມທັງຜູ້ລອດຊີວິດ) ແລະ ຈຳນວນໜຶ່ງສ່ວນສີ່ຂອງຜູ້ລອດຊີວິດ (6 ໃນ 24 ຄົນ) ກ່າວວ່າ ເຂົາເຈົ້າຢູ່ກັບກຸ່ມຄົນຈຳນວນຫຼາຍ ໂດຍໃຊ້ຄຳວ່າ "ຫຼາຍຄົນ" ຫຼື ອ້າງອີງຕົວເລກ ເຊັ່ນ: 10, 11 ຫຼື 14 ຄົນ.

ມີກຸ່ມປະຊາກອນຕົວຢ່າງຂອງຜູ້ລອດຊີວິດ 2 ຄົນໄດ້ອະທິບາຍເຖິງກຸ່ມຄົນຈຳນວນຫຼວງຫຼາຍທີ່ເຕົ້າໂຮມກັນອ້ອມກອງໄຟ ແລະ ເຮັດວຽກຮ່ວມກັນເພື່ອຂຸດຮ່ອງລະບາຍນໍ້າ. ຕົວຢ່າງ, ຜູ້ລອດຊີວິດຄົນໜຶ່ງໄດ້ເລົ່າວ່າ: *"ຂ້ອຍ ແລະ ຍາດພີ່ນ້ອງຂອງຂ້ອຍຫຼາຍກວ່າ 10 ຄົນໄດ້ນັ່ງຢູ່ຂ້າງກອງໄຟເພາະວ່າອາກາດໜາວຫຼາຍ. ພວກເຮົານັ່ງຢູ່ຂ້າງກອງໄຟ ແລະ ລົມກັນ, ພວກເຮົາໄດ້ຍິນສຽງດັງສະນັ່ນ"* ໃນຂະນະທີ່ອີກຄົນໜຶ່ງໄດ້ເລົ່າວ່າ *"ໃນມື້ທີ່ເກີດເຫດການ/ອຸປະຕິເຫດ, ມີ 14 ຄົນມາເຕົ້າໂຮມກັນ. ພວກເຮົາທຸກຄົນເປັນຍາດພີ່ນ້ອງກັນ ກຳລັງຂຸດຮ່ອງວາງທໍ່ນໍ້າສຳລັບເຮືອນຂອງພວກເຮົາ."*

ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ທີ່ບໍ່ໄດ້ຢູ່ຄົນດຽວໃນເວລາເກີດອຸປະຕິເຫດ ມັກຈະຢູ່ກັບຍາດພີ່ນ້ອງ (ເຄືອຍາດຂອງເຂົາເຈົ້າ) ຫຼື ຄອບຄົວທີ່ໃກ້ຊິດ. ດັ່ງທີ່ ນາງ ແສງຈັນ ໄດ້ອະທິບາຍໄວ້ໃນຖ້ອຍຄຳນີ້, ລະເບີດໄດ້ລະເບີດຂຶ້ນໃນເວລາທີ່ນາງ ແສງຈັນ ກຳລັງຢູ່ກັບຄອບຄົວໃກ້ກອງໄຟ: *"ຂ້ອຍຢືນຢູ່ຂ້າງກອງໄຟເພື່ອຜິງໄຟໃຫ້ຮ່າງກາຍອົບອຸ່ນ, ຂ້ອຍຢືນຢູ່ກັບລູກຂອງຂ້ອຍ. ສ່ວນ ຜົວ ແລະ ພໍ່ປູ່ແມ່ຍ່າຂອງຂ້ອຍແມ່ນຢູ່ອີກມູມໜຶ່ງຂອງເຮືອນ, ໄກຈາກກັນ."* ບໍ່ຄ່ອຍພົບເຫັນວ່າ ມີຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ຢູ່ກັບຊາວບ້ານ ຫຼື ໝູ່ເພື່ອນຄົນອື່ນໆ.

ຜູ້ລອດຊີວິດບາງຄົນໄດ້ອະທິບາຍໄຈ້ແຍກລະອຽດກ່ຽວກັບການຢູ່ໃກ້ຊິດກັນ, ໂດຍລະບຸວ່າ ເຂົາເຈົ້າຢູ່ກັບຄົນອື່ນ ແຕ່ວ່າຄົນເຫຼົ່ານັ້ນຢູ່ຫ່າງໄກຈາກເຂົາເຈົ້າ. ຄວາມແຕກຕ່າງກັນຂອງໄລຍະໃນການຢູ່ໃກ້ຊິດກັນນີ້ ເກີດຂຶ້ນເລື້ອຍໆໃນເລື່ອງເລົ່າຂອງຜູ້ລອດຊີວິດທີ່ປະສົບອຸປະຕິເຫດໃນຂະນະທີ່ເຂົາເຈົ້າເຮັດວຽກຢູ່ໃນທົ່ງນາ ຫຼື ສວນ ເນື່ອງຈາກຜູ້ຄົນມັກກະຈາຍອອກໄປເຮັດວຽກໃນພື້ນທີ່ຕ່າງໆຕາມທຳມະຊາດ. ຕົວຢ່າງ, ຜູ້ລອດຊີວິດຄົນໜຶ່ງກ່າວວ່າ *"ຂ້ອຍ ແລະ ຄູ່ສົມລົດຂອງຂ້ອຍ ກຳລັງປູກມັນຕົ້ນຢູ່ໃກ້ໆແຄມບ້ານ. ມັນໃກ້ທ່ຽງແລ້ວ ແລະ ມີຄົນ 4 ຫາ 5 ຄົນກຳລັງຂຸດດິນເພື່ອປູກມັນຕົ້ນ. ຂ້ອຍຢູ່ໄກຈາກເມຍ, ລຸງ ແລະ ປ້າຂອງຂ້ອຍ ໜ້ອຍໜຶ່ງ."*

ເດັກຜູ້ລອດຊີວິດທີ່ຖືກສຳພາດເກືອບທຸກຄົນລາຍງານວ່າ ເຂົາເຈົ້າຢູ່ກັບໝູ່ເພື່ອນໃນເວລາທີ່ເກີດອຸປະຕິເຫດ, ໂດຍມີບາງຄົນລາຍງານວ່າ ມີອ້າຍເອື້ອຍນ້ອງສອງສາມຄົນຢູ່ທີ່ນັ້ນນຳກັນ ແລະ ມີໜຶ່ງຄົນລາຍງານວ່າຢູ່ຄົນດຽວ.

## ການສົນທະນາກ່ຽວກັບຄຳຖາມທີ 2

ການເຂົ້າໃຈວ່າອຸປະຕິເຫດ ລບຕ ເກີດຂຶ້ນຢູ່ໃສ, ເກີດຂຶ້ນໃນຂະນະກຳລັງເຮັດກິດຈະກຳໃດ, ແລະ ແມ່ນໃຜມີຄວາມຈຳເປັນຕໍ່ການເຂົ້າໃຈຄວາມສ່ຽງ. ຂໍ້ມູນດັ່ງກ່າວ ເປີດເຜີຍໃຫ້ເຫັນຄວາມແຕກຕ່າງທີ່ຈະແຈ້ງໃນວິທີການທີ່ເດັກ ແລະ ຜູ້ໃຫຍ່ໄດ້ຮັບບາດເຈັບຈາກລະເບີດບໍ່ທັນແຕກ, ເຊິ່ງເກີດຈາກການເຄື່ອນໄຫວກິດຈະກຳປະຈຳວັນຂອງເຂົາເຈົ້າ. ຜູ້ໃຫຍ່ ທີ່ສ່ວນຫຼາຍແມ່ນຢູ່ໃນໄວທີ່ມີລາຍໄດ້ທາງດ້ານເສດຖະກິດຫຼາຍທີ່ສຸດ ໄດ້ຮັບບາດເຈັບໃນເວລາເຮັດວຽກກະສິກຳ ແລະ ການປະກອບອາຊີບຕ່າງໆ ເຊັ່ນ: ການປູກຝັງ, ການລ້ຽງສັດ ຫຼື ການຖາງປ່າເຮັດໄຮ່ ທີ່ຕ້ອງມີການສຳຜັດກັບດິນເປັນປະຈຳ ເຮັດໃຫ້ເຂົາເຈົ້າໄດ້ຮັບອັນຕະລາຍຈາກວັດຖຸລະເບີດທີ່ຝັງຢູ່ໃນດິນ. ຮູບແບບກິດຈະກຳເຫຼົ່ານີ້ ຊີ້ໃຫ້ເຫັນການເຊື່ອມໂຍງກັນລະຫວ່າງຄວາມສ່ຽງດ້ານອາຊີບ, ບົດບາດຍິງ-ຊາຍ ແລະ ກິດຈະກຳທາງເສດຖະກິດ, ໂດຍຜູ້ຊາຍໃນໄວເຮັດວຽກແມ່ນມີຄວາມສ່ຽງພິເສດ.

ໃນທາງກົງກັນຂ້າມ, ເດັກມີຄວາມສ່ຽງໃນລະຫວ່າງການຫຼິ້ນ ຫຼື ການເຮັດວຽກງານທີ່ບໍ່ເປັນທາງການ. ເດັກຊາຍໄດ້ຮັບບາດເຈັບເລື້ອຍໆ ເນື່ອງຈາກການເຄື່ອນໄຫວຫຼາຍຂຶ້ນ ແລະ ການເຮັດກິດຈະກຳກາງແຈ້ງ.[27] ການຂາດຄວາມຮັບຮູ້ຂອງເຂົາເຈົ້າ ຍິ່ງເພີ່ມທະວີຄວາມສ່ຽງຕໍ່ອັນຕະລາຍ, ສະທ້ອນໃຫ້ເຫັນທ່າອ່ຽງທີ່ພົບເຫັນຢູ່ໃນບັນດາປະເທດອື່ນໆ ທີ່ງຈາກມີການປະທະກັນ ເຊັ່ນ ກຳປູເຈຍ ແລະ ຫວຽດນາມ.

ກົງກັນຂ້າມກັບຜູ້ໃຫຍ່, ອຸປະຕິເຫດຂອງເດັກມັກຈະເກີດຈາກການສຳຜັດໂດຍກົງເຊັ່ນ: ການເຕະ, ການສຳຜັດ ຫຼື ຍ່າງຢຽບລະເບີດບໍ່ທັນແຕກ, ເຊິ່ງຊີ້ໃຫ້ເຫັນວ່າ ລະເບີດທີ່ຢູ່ໃນອຸປະຕິເຫດຂອງເຂົາເຈົ້າແມ່ນຢູ່ເທິງ ຫຼື ໃຫ້ກັບໜ້າດິນ ແລະ ການບໍ່ລະວັງ ບວກກັບຄວາມເຂົ້າໃຈຜິດວ່າ ລບຕ ເປັນຂອງຫຼິ້ນ ຫຼື ວັດຖຸທີ່ບໍ່ອັນຕະລາຍ ມີສ່ວນສຳຄັນຕໍ່ຄວາມສ່ຽງຂອງເຂົາເຈົ້າ.

ຫຼັກຖານຫຼ້າສຸດໃນປະເທດ ລາວ ລະບຸວ່າ ກິດຈະກຳຕ່າງໆ ເຊັ່ນ: ການຫາປາ ຫຼື ການຈູດໄຟໂດຍກົງ ຢູ່ພື້ນດິນ ເປັນພຶດຕິກຳທີ່ມີຄວາມສ່ຽງສູງ ຢ່າງຕໍ່ເນື່ອງ ໃນເຂດທີ່ມີລະເບີດຕົກຄ້າງ.[28] ການຄົ້ນພົບວ່າ ເກືອບທຸກເຫດການເກີດຂຶ້ນໃນຂະນະທີ່ຜູ້ຖືກເຄາະຮ້າຍໄດ້ຍ່າງໄປມາ ໄດ້ສະແດງໃຫ້ເຫັນເຖິງການແຜ່ລະບາດຂອງໄພຂົ່ມຂູ່ຈາກລະເບີດບໍ່ທັນແຕກ, ເຊິ່ງຝັງຢູ່ພື້ນດິນທົ່ວໄປ ເຊັ່ນ: ທົ່ງນາ, ທົນທາງ, ເຮືອນ ແລະ ບ່ອນຫຼິ້ນ. ອັນນີ້ສະທ້ອນໃຫ້ເຫັນຮູບແບບທົ່ວໂລກທີ່ກວ້າງກວ່າ ເຊິ່ງຄວາມສ່ຽງຈາກ ລບຕ ແມ່ນຝັງເລິກຢູ່ໃນໂຄງສ້າງຂອງຊີວິດປະຈຳວັນ ແທນທີ່ຈະຢູ່ແຍກຕ່າງຫາກໃນພື້ນທີ່ທີ່ມີການສູ້ຮົບ.[29]

## ຂໍ້ສະເໜີແນະຄຳຖາມທີ 2

**ປັບປຸງຄຳແນະນຳໃນການຫຼຸດຜ່ອນຄວາມສ່ຽງ ທີ່ເປັນສາເຫດຫຼັກ ແລະ ຕົວກະຕຸ້ນຫຼັກຂອງອຸປະຕິເຫດ.** ຂໍ້ຄວາມຂອງການສຶກສາໃຫ້ຄວາມຮູ້ກ່ຽວກັບອັນຕະລາຍ ຈາກລະເບີດ ຈຳເປັນຕ້ອງມີຂໍ້ຄວາມກ່ຽວກັບການເຕືອນທີ່ກ່ຽວຂ້ອງກັບສາເຫດຂອງອຸປະຕິເຫດ ທີ່ພົບເຫັນເລື້ອຍທີ່ສຸດເຊັ່ນ: ຈູດໄຟ ແລະ ການໃຊ້ອຸປະກອນຂຸດດິນ. ເນື່ອງຈາກອຸປະຕິເຫດສ່ວນໃຫຍ່ ເກີດຂຶ້ນໃນເວລາທີ່ຜູ້ລອດຊີວິດກຳລັງເຮັດກິດຈະວັດປະຈຳວັນ ເຊິ່ງກິດຈະວັດປະຈຳວັນທີ່ເຂົາເຈົ້າເຮັດນັ້ນບໍ່ຫນ້າຈະຫຼີກລ່ຽງໄດ້ທັງຫມົດ, ການໂຄສະນາສຶກສາຄວາມສ່ຽງໄພ ຈາກລະເບີດ ແລະ ຄວາມພະຍາຍາມອື່ນໆໃນການປ້ອງກັນອາດຈະຕ້ອງມີການເຈາະຈົງຫຼາຍຂຶ້ນເພື່ອປ້ອງກັນອຸປະຕິເຫດປະເພດຕ່າງໆທີ່ກ່ຽວຂ້ອງກັບກິດຈະວັດປະຈຳວັນທີ່ຜູ້ໃຫຍ່ສ່ວນໃຫຍ່ໃນກຸ່ມຕົວຢ່າງນີ້ໄດ້ພົບເຫັນໄດ້ຢ່າງມີປະສິດຕິພາບ.

(ກະລຸນາເບິ່ງພາກຕໍ່ໄປ ສຳລັບຂໍ້ສະເໜີແນະເພີ່ມເຕີມກ່ຽວກັບການໂຄສະນາສຶກສາຄວາມສ່ຽງໄພ ຈາກລະເບີດ)

---

[27] ຢູນິເຊັບ (2025) "80 ສ່ວນຮ້ອຍຂອງໄວໜຸ່ມສາມາດລະບຸຄວາມສ່ຽງຈາກວັດຖຸລະເບີດ ແຕ່ວ່າໄວໜຸ່ມຈຳນວນຫຼາຍພັດເຮັດໃຫ້ຕົນເອງເປັນອັນຕະລາຍ." https://www.unicef.org/ukraine/en/press-releases/80-cent-adolescents-can-identify-explosive-ordnance-risks-too-many-expose-themselves

[28] ການຕິດຕາມກວດກາລະເບີດຝັງດິນ ແລະ ລະເບີດກະປາງ. ຂໍ້ມູນຈາກ ສປປ ລາວ. https://the-monitor.org/country-profile/lao-pdr/impact?year=2023

[29] Chan, Sambath (2013) "ການສຶກສາຄວາມສ່ຽງດ້ານລະເບີດຢູ່ໃນກຳປູເຈຍ," ວາລະສານຂອງ ERW ແລະ ການປະຕິບັດກ່ຽວກັບລະເບີດຝັງດິນ: Vol. 17: ສ. 1 , ມາດຕາ 10. https://commons.lib.jmu.edu/cisr-journal/vol17/iss1/10/

## ຄຳຖາມບົດຄົ້ນຄວ້າ ທີ 3:

ຜູ້ຖືກເຄາະຮ້າຍມີຄວາມຮູ້ຫຍັງແດ່ກ່ຽວກັບຂໍ້ຄວາມສຳຄັນ ໃນການສຶກສາ ໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກ ລະເບີດ  ແລະ ຖ້າຂໍ້ຄວາມສຳຄັນ ເຫຼົ່ານັ້ນບໍ່ໄດ້ຖືກນຳໃຊ້ຍ້ອນຫຍັງຈຶ່ງບໍ່ນຳໃຊ້?

## 3. ຜູ້ຖືກເຄາະຮ້າຍມີຄວາມຮູ້ຫຍັງແດ່ກ່ຽວກັບຂໍ້ຄວາມສຳຄັນ ໃນການສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກ ລະເບີດ ແລະ ຖ້າຂໍ້ຄວາມສຳຄັນເຫຼົ່ານັ້ນບໍ່ໄດ້ຖືກນຳໃຊ້ຍ້ອນຫຍັງຈຶ່ງບໍ່ນຳໃຊ້?

ພາກນີ້ໄດ້ສຳຫຼວດວ່າ ຜູ້ລອດຊີວິດໄດ້ລາຍງານວ່າພວກເຂົາຮູ້ຫຍັງກ່ຽວກັບ ລບຕ ມາກ່ອນເກີດອຸປະຕິເຫດ, ຂໍ້ຄວາມສຳຄັນໃດທີ່ພວກເຂົາລາຍງານວ່າຮູ້ກ່ອນເກີດເຫດ, ແລະ ແຫຼ່ງທີ່ມາຂອງຂໍ້ມູນນັ້ນ. ຜົນໄດ້ຮັບສະທ້ອນໃຫ້ເຫັນຄວາມແຕກຕ່າງທີ່ສຳຄັນສຳລັບຄວາມຮູ້ກ່ຽວກັບ ລບຕ ກ່ອນເກີດອຸປະຕິເຫດ ໂດຍຜູ້ໃຫຍ່ສ່ວນໃຫຍ່ແມ່ນມີຄວາມຮູ້ສ່ວນໜຶ່ງກ່ຽວກັບ ລບຕ ຊຶ່ງແຕກຕ່າງຈາກເດັກນ້ອຍທີ່ມີພຽງຈຳນວນນ້ອຍເທົ່ານັ້ນທີ່ຮູ້. ການວິເຄາະນີ້ຍັງໄດ້ສຳຫຼວດເພີ່ມເຕີມວ່າ ປັດໃຈທາງດ້ານປະຊາກອນ ເຊັ່ນ ຄວາມສາມາດໃນການໃຊ້ພາສາລາວ, ເພດ, ແລະ ແຫຼ່ງຂໍ້ມູນອາດມີຜົນຕໍ່ການເຂົ້າເຖິງ ແລະ ປະສິດທິຜົນຂອງການໂຄສະນາສຶກສາຄວາມສ່ຽງໄພ.

### ຜົນໄດ້ຮັບຄຳຖາມ ທີ 3:

#### ຜູ້ໃຫຍ່ສ່ວນຫຼາຍມີຄວາມຮູ້ກ່ຽວກັບ ລບຕ, ແຕ່ມີເດັກຈຳນວນໜ້ອຍເທົ່ານັ້ນມີຄວາມຮູ້ກ່ຽວກັບ ລບຕ.

ໃນບັນດາຜູ້ລອດຊີວິດ, 66% (n=21) ຂອງຜູ້ໃຫຍ່ໄດ້ລາຍງານວ່າມີຄວາມຮັບຮູ້ກ່ຽວກັບ ລບຕ ມາກ່ອນ, ແຕ່ມີເດັກພຽງແຕ່ 28% (n=5) ເທົ່ານັ້ນທີ່ມີຄວາມຮັບຮູ້ກ່ຽວກັບ ລບຕ ມາກ່ອນ. (ຜູ້ລອດຊີວິດໄດ້ຖືກຖາມວ່າ "ກ່ອນເກີດອຸປະຕິເຫດ, ທ່ານເຄີຍໄດ້ຍິນກ່ຽວກັບລະເບີດບໍ່ທັນແຕກບໍ່ ຫຼື ທ່ານຮູ້ຫຍັງແດ່ກ່ຽວກັບລະເບີດບໍ່ທັນແຕກ?" ໃນກໍລະນີທີ່ຜູ້ລອດຊີວິດເປັນເດັກ, ຜູ້ດູແລເດັກໄດ້ຖືກຖາມຄຳຖາມ ໂດຍໃຊ້ ຄຳວ່າ "ເດັກ" ແທນຄຳວ່າ "ທ່ານ.") ຂໍ້ມູນນີ້ ຊີ້ໃຫ້ເຫັນວ່າ ເດັກມີໂອກາດທີ່ຈະໄດ້ຮັບຂໍ້ມູນກ່ຽວກັບອັນຕະລາຍຈາກລະເບີດບໍ່ທັນແຕກໜ້ອຍຫຼາຍ, ສິ່ງນີ້ ຊີ້ໃຫ້ເຫັນເຖິງຊ່ອງຫວ່າງອັນສຳຄັນ ແລະ ຄວາມຕ້ອງການໃນການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ທີ່ມີເປົ້າໝາຍ ແນ່ໃສ່ປະຊາກອນໜຸ່ມນ້ອຍຫຼາຍຂຶ້ນ.

ການສຳພາດດ້ານຄຸນນະພາບໄດ້ຢືນຢັນຜົນການວິເຄາະດ້ານປະລິມານ: ຜູ້ລອດຊີວິດທີ່ເປັນເດັກ ໄດ້ຍົກໃຫ້ເຫັນວ່າເຂົາເຈົ້າບໍ່ຮູ້ກ່ຽວກັບ ລບຕ ກ່ອນທີ່ຈະເກີດອຸປະຕິເຫດ. ດັ່ງທີ່ ທ້າວ ແກ້ວ ໄດ້ເລົ່າໃຫ້ຟັງວ່າ "*ກ່ອນເກີດອຸປະຕິເຫດ, ຂ້ອຍບໍ່ເຄີຍໄດ້ຍິນເລື່ອງລະເບີດບໍ່ທັນແຕກຢູ່ບ່ອນອື່ນມາກ່ອນ, ແມ່ນແຕ່ຢູ່ໃນໂຮງຮຽນກໍຕາມ.*"

#### ຮູບແບບທາງດ້ານປະຊາກອນມີຜົນຕໍ່ການເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE)

ຕາຕະລາງ ທີ7 ສະແດງໃຫ້ເຫັນຄຸນລັກສະນະທາງດ້ານປະຊາກອນທີ່ສຳຄັນທີ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ເມື່ອປຽບທຽບກັບກຸ່ມປະຊາກອນຕົວຢ່າງເຕັມຂອງຜູ້ລອດຊີວິດທັງໝົດ ເຮັດໃຫ້ສາມາດວິເຄາະທັງຈຳນວນປະຊາກອນສະເພາະທີ່ເຂົ້າເຖິງການ

ໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ແລະ ສະພາບການທີ່ກວ້າງກ່ຽວກັບຄວາມຮັບຮູ້ ກ່ຽວກັບ ລບຕ ທີ່ມີຢູ່ໃນບາງກຸ່ມຍ່ອຍຫຼາຍກວ່າກຸ່ມອື່ນ ຫຼື ບໍ່.

ໃນກຸ່ມຜູ້ໃຫຍ່, ອາຍຸສະເລ່ຍຂອງຜູ້ລອດຊີວິດທີ່ມີຄວາມຮູ້ກ່ຽວກັບ ລບຕ ມາກ່ອນ ແມ່ນໃກ້ຄຽງກັນກັບອາຍຸສະເລ່ຍຂອງກຸ່ມປະຊາກອນຕົວຢ່າງ ໂດຍລວມ; ຢ່າງໃດກໍຕາມ, ພຽງແຕ່ຫຼາຍກວ່າເຄິ່ງໜຶ່ງຂອງຜູ້ທີ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ມີອາຍຸຕໍ່າກວ່າອາຍຸສະເລ່ຍຂອງກຸ່ມປະຊາກອນຕົວຢ່າງ ທີ່ 36.9 ປີ (57.1% ທຽບກັບ 50% ໃນກຸ່ມຕົວຢ່າງ), ສະແດງໃຫ້ເຫັນວ່າ ຜູ້ໃຫຍ່ທີ່ອາຍຸນ້ອຍກວ່າ ມີແນວໂນ້ມທີ່ຈະໄດ້ຮັບການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫຼາຍກວ່າຜູ້ໃຫຍ່ທີ່ມີອາຍຸສູງ ພຽງເລັກນ້ອຍ.

ໃນແງ່ຂອງການແຍກຕາມພູມສັນຖານຂອງກຸ່ມປະຊາກອນຕົວຢ່າງທີ່ເປັນຜູ້ໃຫຍ່, ອັດຕາສ່ວນຂອງຜູ້ລອດຊີວິດຈາກແຕ່ລະແຂວງທີ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແມ່ນຄ້າຍຄືກັນກັບການແຍກຕາມແຂວງ ສໍາລັບກຸ່ມປະຊາກອນຕົວຢ່າງໂດຍລວມ, ໂດຍແຂວງ ສະຫວັນນະເຂດ ແລະ ຊຽງຂວາງ ເປັນແຂວງທີ່ມີຕົວແທນຫຼາຍທີ່ສຸດໃນທັງ 2 ກຸ່ມ.

ໃນກຸ່ມຜູ້ໃຫຍ່, ກຸ່ມທີ່ເຂົ້າເຖິງການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ມີອັດຕາສ່ວນຂອງເພດຍິງສູງກວ່າກຸ່ມປະຊາກອນຕົວຢ່າງທັງໝົດ (52.4% ທຽບກັບ 43.8%), ໃນນັ້ນ ແມ່ຍິງ 11 ຄົນໃນຈໍານວນ 14 ຄົນ (78.6%) ມີສະຕິລະວັງຕົວຈາກລະເບີດບໍ່ທັນແຕກທຽບໃສ່ຜູ້ຊາຍ 10 ຄົນຈາກ 18 ຄົນ (55.6%). ນອກຈາກນີ້ ຍັງພົບເຫັນຮູບແບບທີ່ບໍ່ສະໝໍ່າສະເໝີທາງດ້ານພາສາ ໂດຍຜູ້ຕອບຄໍາຖາມໃນກຸ່ມທີ່ເຂົ້າເຖິງຄວາມຮູ້ກ່ຽວກັບ ລບຕ ມີຄວາມຄ່ອງແຄ້ວໃນການເວົ້າພາສາລາວດີກ່ວາ ເມື່ອປຽບທຽບກັບກຸ່ມປະຊາກອນຕົວຢ່າງໂດຍລວມ (71.4% ທຽບກັບ 56.2%) ແລະ ທຽບໃສ່ກຸ່ມທີ່ບໍ່ສາມາດເວົ້າພາສາລາວໄດ້ເລີຍ ແລະ ເວົ້າພາສາລາວໄດ້ໜ້ອຍໜຶ່ງ ກໍ່ມີສັດສ່ວນທີ່ນ້ອຍກ່ວາ ເມື່ອທຽບກັບກຸ່ມທີ່ເຂົ້າເຖິງຄວາມຮູ້ກ່ຽວກັບ ລບຕ (4.8% ທຽບກັບ 12.5% ສໍາລັບກຸ່ມທີ່ບໍ່ສາມາດເວົ້າພາສາລາວໄດ້ເລີຍ/ເວົ້າພາສາລາວໄດ້ໜ້ອຍໜຶ່ງ ແລະ 23.8% ທຽບກັບ 31.3% ສໍາລັບຜູ້ທີ່ເວົ້າພາສາລາວໄດ້ໜ້ອຍໜຶ່ງ). ເມື່ອປຽບທຽບກັນແລ້ວເຫັນວ່າ 83.3% (15 ຄົນຈາກ 18 ຄົນ) ຂອງຜູ້ທີ່ມີຄວາມຄ່ອງແຄ້ວໃນການເວົ້າພາສາລາວເຂົ້າເຖິງການໂຄສະນາສຶກສາໃຫ້ຄວາມຮູ້ກ່ຽວກັບ ລບຕ ທຽບກັບ 50% (5 ຄົນຈາກ 10 ຄົນ) ຂອງຜູ້ທີ່ເວົ້າພາສາລາວໜ້ອຍໜຶ່ງ ແລະ 25% (1 ຄົນຈາກ 4 ຄົນ) ຂອງຜູ້ທີ່ບໍ່ເວົ້າພາສາລາວເລີຍ ຫຼື ເວົ້າໄດ້ໜ້ອຍດຽວ. ການກະຈາຍທາງດ້ານຊົນເຜົ່າມີຄວາມໃກ້ຄຽງກັນ, ໂດຍຜູ້ຕອບຄໍາຖາມທີ່ເປັນເຜົ່າມອນ-ຂະແມ ກວມເອົາອັດສ່ວນໃຫຍ່ໃນທັງ 2 ກຸ່ມ.

*ຕາຕະລາງ ທີ7: ຄຸນລັກສະນະຫຼັກ ໃນກຸ່ມຜູ້ລອດຊີວິດທົ່ວໄປທັງໝົດ ແລະ ສະເພາະຜູ້ທີ່ໄດ້ຮັບການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ*

| | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່- % (n) | | ຜູ້ລອດຊີວິດທີ່ເປັນເດັກ- % (n) | |
|---|---|---|---|---|
| | ກ່ອນການໂຄສະນາໃຫ້ຄວາມຮູ້<br>66 (n=21) | ຈໍານວນລວມ<br>100 (n=32) | ກ່ອນການໂຄສະນາໃຫ້ຄວາມຮູ້<br>28 (n=5) | ຈໍານວນລວມ<br>100 (n=18) |
| **ອາຍຸ*** | | | | |
| ຄ່າສະເລ່ຍ (ໄວອາຍຸ) | 36.7 (18-66) | 36.9 (18-66) | 12 (9-15) | 12.1 (9-15) |

| | | | | |
|---|---|---|---|---|
| ຕ່ຳກວ່າຄ່າສະເລ່ຍ | 57.1 (12) | 50.0 (16) | 80.0 (4) | 66.7 (12) |
| ຄ່າສະເລ່ຍ ແລະ ສູງກ່ວາ | 42.9 (9) | 50.0 (16) | 20.0 (1) | 33.3 (6) |
| **ແຂວງ** | | | | |
| ຄຳມ່ວນ | 9.5 (2) | 6.3 (2) | 0 | 16.7 (3) |
| ສາລະວັນ | 14.3 (3) | 18.7 (6) | 20.0 (1) | 11.1 (2) |
| ສະຫວັນນະເຂດ | 42.86 (9) | 40.6 (13) | 40.0 (2) | 27.8 (5) |
| ເຊກອງ | 4.8 (1) | 3.1 (1) | N/A** | N/A** |
| ຊຽງຂວາງ | 28.6 (6) | 31.2 (10) | 40.0 (2) | 44.4 (8) |
| **ເພດ** | | | | |
| ຍິງ | 52.4 (11) | 43.8 (14) | 20.0 (1) | 22.2 (4) |
| ຊາຍ | 47.6 (10) | 56.2 (18) | 80.0 (4) | 77.8 (14) |
| **ເວົ້າພາສາລາວ** | | | | |
| ບໍ່ໄດ້/ໄດ້ໜ້ອຍໜຶ່ງ | 4.8 (1) | 12.5 (4) | 20.0 (1) | 33.3 (6) |
| ເວົ້າໄດ້ບາງສ່ວນ | 23.8 (5) | 31.3 (10) | 40.0 (2) | 27.8 (5) |
| ເວົ້າໄດ້ຫຼາຍ/ຄ່ອງແຄ້ວ | 71.4 (15) | 56.2 (18) | 40.0 (2) | 38.9 (7) |
| **ຊົນເຜົ່າ** | | | | |
| ລາວ-ໄຕ | 23.8 (5) | 21.9 (7) | 40.0 (2) | 27.8 (5) |
| ມອນ-ຂະແມ | 57.1 (12) | 59.4 (19) | 20.0 (1) | 27.8 (5) |
| ມົ້ງ-ມຽນ | 19.1 (4) | 18.8 (6) | 40.0 (2) | 44.4 (8) |
| *ຄ່າສະເລ່ຍຂ້າງລຸ່ມນີ້ແມ່ນລວມເຖິງອາຍຸສະເລ່ຍ **ບໍ່ມີການສຳພາດເດັກໃນແຂວງ ເຊກອງ | | | | |

ຜູ້ລອດຊີວິດທີ່ເປັນເດັກທີ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ມາກ່ອນ (n=5) ມີອາຍຸໃກ້ຄຽງກັບກຸ່ມປະຊາກອນຕົວຢ່າງທັງໝົດ (n=18), ໂດຍ 80% ມີອາຍຸຕ່ຳກ່ວາອາຍຸສະເລ່ຍຢູ່ທີ່ 12.1 ປີ, ເມື່ອທຽບກັບ 66.7% ໃນກຸ່ມປະຊາກອນຕົວຢ່າງທັງໝົດ ເຊິ່ງສ່ວນຫຼາຍແມ່ນເດັກຊາຍ (80%), ສອດຄ່ອງກັບກຸ່ມປະຊາກອນຕົວຢ່າງທັງໝົດ (77.8%). ເດັກທີ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ມາກ່ອນ ສ່ວນຫຼາຍແມ່ນມາຈາກແຂວງ ສະຫວັນນະເຂດ ແລະ ຊຽງຂວາງ (ທັງສອງແມ່ນ 40%), ເຊິ່ງເປັນແຂວງທີ່ເປັນຕົວແທນຫຼາຍທີ່ສຸດ. ລະດັບຄວາມຄ່ອງແຄ້ວໃນການເວົ້າພາສາລາວແມ່ນຂ້ອນຂ້າງມີຄວາມໃກ້ຄຽງກັນ, ເຖິງແມ່ນວ່າຈະມີ

ການລາຍງານວ່າມີຄວາມຄ່ອງແຄ້ວໜ້ອຍ ຫຼື ບໍ່ມີເລີຍໃນກຸ່ມທີ່ເຂົ້າເຖິງຄວາມຮູ້ກ່ຽວກັບ ລບຕ ໜ້ອຍກວ່າ (20% ທຽບກັບ 33.3%). ໃນດ້ານຊົນເຜົ່າ, ກຸ່ມທີ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ລວມມີເດັກຊົນເຜົ່າລາວ-ໄຕ ແລະ ມົ້ງ-ມຽນ ໃນອັດຕາສ່ວນເທົ່າກັນ (40% ແຕ່ລະເຜົ່າ), ສະທ້ອນໃຫ້ເຫັນເຖິງກຸ່ມປະຊາກອນຕົວຢ່າງທີ່ກວ້າງຂຶ້ນ ເຊິ່ງເດັກເຜົ່າມົ້ງ-ມຽນ ເປັນກຸ່ມໃຫຍ່ທີ່ສຸດ (44.4%). ເນື່ອງຈາກຂະໜາດຂອງກຸ່ມປະຊາກອນຕົວຢ່າງທີ່ເປັນເດັກມີຂະໜາດນ້ອຍ ແລະ ມີສັດສ່ວນທີ່ນ້ອຍກວ່າ - ພຽງແຕ່ 5 ຄົນເທົ່ານັ້ນທີ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ມາກ່ອນ, ສະນັ້ນ ບຸກຄົນດຽວ ສາມາດມີຜົນກະທົບອັນໃຫຍ່ຫຼວງຕໍ່ອັດຕາສ່ວນຂອງກຸ່ມຍ່ອຍທີ່ເປັນຕົວແທນ, ດັ່ງນັ້ນ ມັນຈຶ່ງເປັນສິ່ງທ້າທາຍທີ່ຈະກຳນົດແນວໂນ້ມທີ່ຊັດເຈນໂດຍກຸ່ມຍ່ອຍໃນບັນດາກຸ່ມປະຊາກອນຕົວຢ່າງຂອງເດັກ.

### ແຫຼ່ງຄວາມຮູ້ກ່ຽວກັບລະເບີດບໍ່ທັນແຕກ: ຜູ້ໃຫຍ່ໄດ້ຮຽນຮູ້ຈາກແຫຼ່ງທີ່ຫຼາກຫຼາຍກວ່າ ໂດຍສະເພາະແມ່ນຜູ້ນຳໃນຂັ້ນບ້ານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ໃນຂະນະທີ່ເດັກສ່ວນຫຼາຍມັກກ່າວວ່າໂຮງຮຽນເປັນແຫຼ່ງຂອງຄວາມຮູ້ກ່ຽວກັບ ລບຕ.

ຂໍ້ມູນທີ່ການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ທີ່ໄດ້ເຜີຍແຜ່ ມີບົດບາດສຳຄັນໃນການສ້າງຄວາມເຂົ້າໃຈຂອງຊຸມຊົນ ແລະ ການຕອບໂຕ້ຕໍ່ໄພຂົ່ມຂູ່ຈາກ ລບຕ ໂດຍຜ່ານຊ່ອງທາງຕ່າງໆໃນການເຜີຍແຜ່ຂໍ້ມູນ ເຊັ່ນ: ໂຮງຮຽນ, ຜູ້ນຳຊຸມຊົນ, ສື່ມວນຊົນ ຫຼື ຄອບຄົວ ມີປະສິດທິຜົນສູງສຸດໃນການສົ່ງຂໍ້ຄວາມທີ່ຊັດເຈນ, ເຊື່ອຖືໄດ້ ແລະ ເໝາະສົມກັບວັດທະນະທຳ ໃຫ້ແກ່ກຸ່ມເປົ້າໝາຍຕ່າງໆ.

ຜູ້ລອດຊີວິດທີ່ຕອບວ່າ 'ແມ່ນ' ຕໍ່ຄຳຖາມທີ່ວ່າ "ກ່ອນເກີດອຸປະຕິເຫດ ທ່ານ / ຫຼື ເດັກຂອງທ່ານ ເຄີຍຟັງກ່ຽວກັບ ລບຕ ຫຼື ຮູ້ຫຍັງກ່ຽວກັບ ລບຕ ບໍ່?' ຖືກຖາມເພີ່ມເຕີມວ່າ ພວກເຂົາເຄີຍຟັງກ່ຽວກັບ ລບຕ ມາຈາກແຫຼ່ງໃດ ?."

ແຫຼ່ງຂໍ້ມູນກ່ຽວກັບຄວາມຮູ້ ລບຕ ສະແດງໃຫ້ເຫັນຄວາມແຕກຕ່າງທີ່ຊັດເຈນ ລະຫວ່າງຜູ້ໃຫຍ່ ແລະ ເດັກ (ຮູບທີ 2). ຜູ້ໃຫຍ່ມັກຈະກ່າວເຖິງຜູ້ນຳໃນບ້ານ (62%) ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (57%), ໃນຂະນະທີ່ເດັກໄດ້ຮຽນຮູ້ຈາກໂຮງຮຽນ ຫຼື ຄູສອນ (60%). ກຸ່ມຜູ້ໃຫຍ່ທີ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ (n=21) ຍັງໄດ້ອ້າງເຖິງແຫຼ່ງຂ່າວເພີ່ມເຕີມຈາກບຸກຄົນຕໍ່ບຸກຄົນ ໂດຍສະເລ່ຍແລ້ວ 2.6 ໄດ້ກ່າວວ່າໄດ້ຮັບຂໍ້ມູນກ່ຽວກັບ ລບຕ ຈາກຜູ້ລອດຊີວິດ ມາກ່ອນ. ກົງກັນຂ້າມ, ເດັກທີ່ໄດ້ຍິນກ່ຽວກັບເລື່ອງ ລບຕ ກ່ອນທີ່ຈະເກີດອຸປະຕິເຫດ (n=5) ບໍ່ໄດ້ຍິນຂໍ້ຄວາມການໂຄສະນາກ່ຽວກັບ ລບຕ ຈາກຫຼາຍແຫຼ່ງ (ເດັກ 3 ຄົນກ່າວເຖິງໂຮງຮຽນ; ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ໝູ່ເພື່ອນ/ເພື່ອນບ້ານ ແລະ ຄອບຄົວ ຖືກກ່າວເຖິງພຽງຄັ້ງດຽວ; ແລະ ເດັກ 1 ຄົນ ບໍ່ຕອບຄຳຖາມນີ້). ເວົ້າອີກຢ່າງໜຶ່ງແມ່ນ ຜູ້ໃຫຍ່ບໍ່ພຽງແຕ່ເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ຫຼາຍກວ່າເດັກນ້ອຍ, ແຕ່ຜູ້ໃຫຍ່ຍັງໄດ້ຍິນກ່ຽວກັບ ລບຕ ຈາກຫຼາຍແຫຼ່ງກວ່າເດັກຕື່ມອີກ. ເດັກບໍ່ໄດ້ລາຍງານກ່ຽວກັບການໄດ້ຮັບຂໍ້ມູນຂ່າວສານຈາກຜູ້ນຳໃນບ້ານ, ສື່ມວນຊົນ, ການຝຶກອົບຮົມ ຫຼື ເຈົ້າໜ້າທີ່ພາກລັດ ເຊິ່ງມັນຊີ້ໃຫ້ເຫັນເຖິງບົດບາດສຳຄັນຂອງສະຖາບັນການສຶກສາ ແລະ ບຸກຄົນທີ່ໃກ້ຊິດກັນ ໃນການສ້າງຄວາມຮັບຮູ້ກ່ຽວກັບ ລບຕ ໃຫ້ແກ່ເດັກ.

*ຮູບທີ 5: ແຫຼ່ງຂໍ້ມູນສຳລັບການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ກ່ອນອຸປະຕິເຫດ (ໃນກຸ່ມຜູ້ທີ່ມີຄວາມຮູ້ກ່ຽວກັບ ລບຕ)*




## ຄວາມເຂົ້າໃຈຂອງຜູ້ລອດຊີວິດກ່ຽວກັບຂໍ້ຄວາມ ຄວາມປອດໄພທີ່ສຳຄັນ ທີ່ຈຳເປັນສຳລັບການປ້ອງກັນອຸປະຕິເຫດ

ຜູ້ລອດຊີວິດທີ່ໄດ້ລາຍງານວ່າມີຄວາມຮັບຮູ້ ຫຼື ຄວາມຮູ້ກ່ຽວກັບ ລບຕ ມາກ່ອນ ໄດ້ຖືກຂໍໃຫ້ເລົ່າສິ່ງທີ່ເຂົາເຈົ້າຮູ້ກ່ຽວກັບ ລບຕ ກ່ອນເກີດອຸປະຕິເຫດ (ຮູບທີ 6).

ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ສ່ວນຫຼາຍ (63%) ຮູ້ວ່າ ບໍ່ຄວນແຕະຕ້ອງ ລບຕ (ທຽບກັບ 66% ທີ່ມີການຮັບຮູ້ມາກ່ອນ) ຂໍ້ຄວາມສຳຄັນອື່ນໆ ທີ່ຜູ້ໃຫຍ່ເຂົ້າໃຈແມ່ນວ່າ ຄວນມີການລາຍງານ ເມື່ອພົບເຫັນ ລບຕ (47%) ແລະ ລບຕ ເປັນອັນຕະລາຍ (44%). ມີໜ້ອຍຄົນທີ່ຈື່ຈຳຂໍ້ມູນລາຍລະອຽດເພີ່ມເຕີມ ເຊັ່ນ: ການກະຕຸ້ນການລະເບີດ (19%) ແລະ ສ່ວນນ້ອຍ (19%) ຍັງລາຍງານວ່າເຂົາເຈົ້າໄດ້ຍິນກ່ຽວກັບ ລບຕ ແຕ່ບໍ່ຮູ້ວ່າພວກມັນມີລັກສະນະແນວໃດ. ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ 1 ຄົນ (6%) ລາຍງານວ່າໄດ້ຍິນວ່າບໍ່ມີ ລບຕ ຢູ່ໃນພື້ນທີ່ຂອງເຂົາເຈົ້າແລ້ວ.

ໃນຈຳນວນເດັກ 5 ຄົນທີ່ເຄີຍໄດ້ຍິນກ່ຽວກັບເລື່ອງ ລບຕ ກ່ອນເກີດອຸບັດຕິເຫດ (28% ຂອງກຸ່ມຕົວຢ່າງ), ມີເດັກ 3 ຄົນ (17%) ຮູ້ວ່າບໍ່ຄວນແຕະຕ້ອງ ລບຕ; ເດັກ 2 ຄົນ (11%) ລາຍງານວ່າ ຮູ້ວ່າ ລບຕ ເປັນອັນຕະລາຍ ແລະ ເດັກ 1 ຄົນ (6%) ຮູ້ວ່າຕ້ອງການລາຍງານຖ້າພົບເຫັນ ລບຕ ແລະ ຂໍ້ມູນອື່ນໆອີກ.

ຄ້າຍຄືກັບຮູບແບບທີ່ຜູ້ໃຫຍ່ໄດ້ຍິນຂໍ້ຄວາມຈາກການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໂດຍຜ່ານແຫຼ່ງຕ່າງໆ ແມ່ນມີຄວາມຫຼາກຫຼາຍກວ່າເດັກ, ຜູ້ໃຫຍ່ຍັງໄດ້ກ່າວເຖິງຂໍ້ຄວາມກ່ຽວກັບ ລບຕ ທີ່ເຂົາເຈົ້າຮູ້ ຫຼາຍກວ່າເດັກ. ຜູ້ໃຫຍ່ 21 ຄົນທີ່ເຂົ້າຮ່ວມການໂຄສະນາປູກຈິດສຳນຶກກ່ຽວກັບ ລບຕ ລາຍງານໂດຍສະເລ່ຍແມ່ນ 3.1 ຂໍ້ຄວາມຕໍ່ຄົນ, ໃນຂະນະທີ່ເດັກ 5 ຄົນທີ່ມີຄວາມຮູ້ກ່ຽວກັບລະເບີດບໍ່ທັນແຕກລາຍງານວ່າຮູ້ພຽງແຕ່ 1.4 ຂໍ້ຄວາມ ເທົ່ານັ້ນ.

*ຮູບທີ 6: ຂໍ້ມູນການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ທີ່ຜູ້ລອດຊີວິດໄດ້ຍິນກ່ຽວກັບ ລບຕ ກ່ອນເກີດອຸປະຕິເຫດ (ເປີເຊັນຂອງຜູ້ລອດຊີວິດທັງໝົດ)*




## ຄວາມກ່ຽວຂ້ອງ, ຄວາມສາມາດໃນການນຳໄປໃຊ້ ແລະ ການນຳໃຊ້ຂໍ້ຄວາມການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE)

ຄຳຖາມສຳລັບການສຶກສາຄົ້ນຄວ້າ ໄດ້ຖາມວ່າ "ຜູ້ເຄາະຮ້າຍມີຄວາມຮູ້ຫຍັງແດ່ກ່ຽວກັບຂໍ້ຄວາມທີ່ສຳຄັນຈາກການສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກລະເບີດ ແລະ *ຖ້າຂໍ້ຄວາມສຳຄັນເຫຼົ່ານັ້ນບໍ່ໄດ້ຖືກນຳມາໃຊ້ ຍ້ອນຫຍັງຈຶ່ງບໍ່ນຳໃຊ້?*" ແຕ່ຜົນການສຶກສາຄົ້ນຄວ້າຂອງພວກເຮົາ ຊີ້ໃຫ້ເຫັນວ່າ ການເຊື່ອມໂຍງລະຫວ່າງຄວາມຮູ້ກ່ຽວກັບຂໍ້ຄວາມທີ່ສຳຄັນຈາກການໃຫ້ຄວາມຮູ້ກ່ຽວກັບ ລບຕ ແລະ ການນຳໃຊ້ຂໍ້ຄວາມເຫຼົ່ານັ້ນເຂົ້າໃນການປະຕິບັດຕົວຈິງ ອາດຈຳເປັນຕ້ອງມີລາຍລະອຽດເພີ່ມເຕີມ.

ໃນການສຳພາດ, ບາງຄັ້ງ ຜູ້ລອດຊີວິດໄດ້ຂໍ້ສະເໜີແນະທີ່ກ່ຽວຂ້ອງກັບການປະຕິບັດທີ່ປອດໄພ; ຂໍ້ມູນເຫຼົ່ານີ້ ຊີ້ໃຫ້ເຫັນເຖິງການສື່ຂໍ້ຄວາມການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ແລະ ຍຸດທະສາດການປ້ອງກັນທີ່ຜູ້ລອດຊີວິດຮູ້ສຶກວ່າ ເຂົາເຈົ້າບໍ່ມີກ່ອນເກີດອຸປະຕິເຫດ. ຂໍ້ສະເໜີແນະຂອງຜູ້ລອດຊີວິດ ມັກຈະມີຄວາມສະເພາະເຈາະຈົງຫຼາຍກວ່າຂໍ້ຄວາມຫຼັກທີ່ເຂົາເຈົ້າຈື່ໄດ້ກ່ອນເກີດອຸປະຕິເຫດ[30],

[30] ຄຳຖາມສຳລັບການສຶກສາຄົ້ນຄວ້າ ທີ່ຖາມຜູ້ລອດຊີວິດ ວ່າ ເຂົາເຈົ້າຮູ້ຈັກຂໍ້ຄວາມສຳຄັນ ເຊັ່ນ "ຢ່າແຕະຕ້ອງ" ແລະ ຂໍ້ຄວາມທີ່ສະແດງຢູ່ໃນຮູບທີ 6 ຫຼື ບໍ່. ເຖິງວ່າແບບສຳຫຼວດຈະມີຕົວເລືອກໃຫ້ຜູ້ລອດຊີວິດເລືອກຄຳຕອບ "ອື່ນໆ" ແລະ ໃຫ້ລາຍລະອຽດເພີ່ມເຕີມ, ແຕ່ມັນເປັນໄປໄດ້ວ່າ ການສຳຫຼວດບໍ່ໄດ້ລວມເອົາຂໍ້ຄວາມທີ່ສຳຄັນທັງໝົດຈາກການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) (ເຊັ່ນ: ຂໍ້ມູນສະເພາະກ່ຽວກັບຄວາມປອດໄພຈາກການດັງ/ຈູດໄຟ ຫຼື ຄວາມປອດໄພໃນການຂຸດດິນ). ຢ່າງໃດກໍຕາມ, ເນື່ອງຈາກຜູ້ຕອບແບບສອບຖາມຈຳນວນໜ້ອຍທີ່ຕອບວ່າເຂົາເຈົ້າໄດ້ຍິນ "ຂໍ້ມູນອື່ນໆ", ມັນຈຶ່ງສົມເຫດສົມຜົນທີ່ຈະສະຫຼຸບໄດ້ວ່າ ບັນດາຂໍ້ຄວາມການໂຄສະນາສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກລະເບີດ(EORE) ທີ່ກວ້າງຂວາງກວ່າໃນແບບຟອມການສຳຫຼວດນີ້ ບໍ່ໜ້າຈະເຮັດໃຫ້ຜູ້ຕອບແບບສອບຖາມສ່ວນໃຫຍ່ສະແດງຄວາມຮັບຮູ້ຫຼາຍຂຶ້ນ.

ແລະ ຜູ້ລອດຊີວິດຍັງໄດ້ໃຫ້ຄຳແນະນຳກ່ຽວກັບກິດຈະກຳປະຈຳວັນປະເພດຕ່າງໆ ທີ່ເຮັດໃຫ້ຜູ້ລອດຊີວິດສ່ວນໃຫຍ່ໄດ້ຮັບບາດເຈັບ.

ຕົວຢ່າງ, ມີຜູ້ລອດຊີວິດຄົນໜຶ່ງໄດ້ມີຄຳແນະນຳກ່ຽວກັບຄວາມປອດໄພຈາກການດັງ/ຈູດໄຟ: *"ກ່ອນອື່ນໝົດ, ຂ້ອຍຢາກບອກເຂົາເຈົ້າໃຫ້ລະມັດລະວັງເປັນພິເສດ: ຫຼີກລ່ຽງການດັງໄຟໂດຍບໍ່ລະມັດລະວັງ. ກ່ອນຈະດັງ/ຈູດໄຟ, ໃຫ້ເພີ່ມຊັ້ນດິນ/ເພີ່ມດິນໃສ່ພື້ນດິນບ່ອນທີ່ຈະດັງໄຟ ເພື່ອປ້ອງກັນອັນຕະລາຍຈາກລະເບີດທີ່ຖືກຝັງຢູ່ໃນດິນ."* ໃນທຳນອງດຽວກັນ, ຜູ້ລອດຊີວິດອີກຄົນໜຶ່ງໄດ້ເລົ່າເຖິງຄວາມພະຍາຍາມຂອງຜູ້ນຳໃນບ້ານ ໃນການໂຄສະນາເຜີຍແຜ່ຍຸດທະສາດປ້ອງກັນການດັງໄຟ/ຈູດໄຟ ທີ່ປອດໄພ ຫຼັງຈາກການເກີດອຸປະຕິເຫດຂອງເຂົາເຈົ້າ: *"ຫຼັງຈາກເກີດອຸປະຕິເຫດ, [ນາຍບ້ານ] ໄດ້ເຜີຍແຜ່ຂໍ້ມູນກ່ຽວກັບການຕັ້ງເຕົາໄຟທີ່ປອດໄພ ເພື່ອຫຼີກລ່ຽງອຸປະຕິເຫດຈາກລະເບີດບໍ່ທັນແຕກ ໃຫ້ແກ່ຊາວບ້ານ ເພື່ອໃຫ້ເຂົາເຈົ້າມີສະຕິ ແລະ ລະມັດລະວັງຫຼາຍຂຶ້ນ ໃນເວລາເຂົາເຈົ້າຕັ້ງເຕົາໄຟ. ໃນການຕັ້ງເຕົາໄຟ, ຈຳເປັນຕ້ອງໄດ້ເພີ່ມຊັ້ນດິນໃຫ້ໜາຂຶ້ນ ກ່ອນທີ່ຈະດັງໄຟ."*

ເຊັ່ນດຽວກັນ, ຜູ້ລອດຊີວິດອີກຄົນໜຶ່ງໄດ້ເວົ້າເຖິງຄຳແນະນຳທີ່ກ່ຽວຂ້ອງກັບການເຮັດສວນ ແລະ ການດັງໄຟ/ຈູດໄຟ:

> ຂ້ອຍຢາກແນະນຳໃຫ້ຜູ້ທີ່ໄດ້ຮັບຜົນກະທົບຄືກັນກັບຂ້ອຍວ່າ ໃຫ້ລະມັດລະວັງຫຼາຍຂຶ້ນ. ຕົວຢ່າງ, ໃນເວລາທີ່ເຮັດສວນ, ທ່ານຄວນໃຊ້ຊ້ວນແທນຈົກ ເພາະວ່າຈົກມີນໍ້າໜັກຫຼາຍ ແລະ ທ່ານອາດຈະມີຄວາມສ່ຽງຕໍ່ການລະເບີດຈາກລະເບີດບໍ່ທັນແຕກ. ສ່ວນຊ້ວນມີນໍ້າໜັກເບົາກວ່າ ເຊິ່ງຈະຊ່ວຍຫຼຸດຜ່ອນຄວາມສ່ຽງ. ຖ້າທ່ານກຳລັງຈະຈູດຂີ້ເຫຍື້ອ ຂໍແນະນຳໃຫ້ທ່ານອອກຈາກພື້ນທີ່ດັ່ງກ່າວທັນທີ. ຢ່າຢືນຢູ່ໃກ້ໆ ຫຼື ຖິ້ມຂີ້ເຫຍື້ອລົງໃນພື້ນທີ່ດັ່ງກ່າວ.

ສິ່ງທີ່ໜ້າສັງເກດຄື ບໍ່ມີຄຳເວົ້າໃດຈາກຜູ້ລອດຊີວິດທີ່ຊີ້ບອກວ່າເຂົາເຈົ້າໄດ້ຮັບຂໍ້ມູນທີ່ຈຳເປັນໃນການຫຼີກລ່ຽງອຸປະຕິເຫດຈາກ ລບຕ, ແຕ່ເຂົາເຈົ້າເລືອກທີ່ຈະບໍ່ສົນໃຈຂໍ້ມູນເຫຼົ່ານັ້ນ. ການບໍ່ມີຂໍ້ມູນດັ່ງກ່າວນີ້ ມີຄວາມສຳຄັນຫຼາຍ ເນື່ອງຈາກຂໍ້ມູນນີ້ ບວກກັບຂໍ້ມູນກ່ຽວກັບປະເພດກິດຈະກຳປະຈຳວັນທີ່ຜູ້ລອດຊີວິດເຮັດຢູ່ ຊີ້ໃຫ້ເຫັນຢ່າງຊັດເຈນວ່າ ຜູ້ລອດຊີວິດບໍ່ໄດ້ກະທຳຢ່າງບໍ່ລະມັດລະວັງ ຫຼື ບໍ່ສົນໃຈຂໍ້ຄວາມຈາກການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ໃນເວລາທີ່ເກີດອຸປະຕິເຫດ. ໃນກໍລະນີຂອງຜູ້ລອດຊີວິດ 2 ຄົນ ເຊິ່ງເປັນຜູ້ໃຫຍ່ຄົນໜຶ່ງ ແລະ ເດັກຄົນໜຶ່ງ ທີ່ມີຄົນອື່ນຢູ່ໃກ້ໆນັ້ນ ອຸປະຕິເຫດເກີດຂຶ້ນໂດຍການມ້າງລະເບີດບໍ່ທັນແຕກໂດຍເຈດຕະນາ ເພື່ອເອົາເຫຼັກເສດໄປຂາຍ, ແຕ່ເຂົາເຈົ້າບໍ່ແມ່ນຜູ້ທີ່ທຳການມ້າງລະເບີດ.

ຄວາມເປັນຈິງທີ່ວ່າ ເກືອບໜຶ່ງໃນຫ້າຄົນຂອງຜູ້ໃຫຍ່ກ່າວວ່າ ເຂົາເຈົ້າເຄີຍໄດ້ຍິນກ່ຽວກັບລະເບີດບໍ່ທັນແຕກ (ລບຕ) ແຕ່ບໍ່ຮູ້ວ່າລະເບີດບໍ່ທັນແຕກມີລັກສະນະແນວໃດ ອາດເປັນປັດໄຈສຳຄັນທີ່ເຮັດໃຫ້ຜູ້ລອດຊີວິດອາດຈະມີຄວາມຮູ້ບາງຢ່າງແຕ່ບໍ່ສາມາດນຳໃຊ້ຄວາມຮູ້ນັ້ນເພື່ອປ້ອງກັນອຸປະຕິເຫດໄດ້.

ເດັກຜູ້ລອດຊີວິດ ບອກວ່າ ເຂົາເຈົ້າບໍ່ຮູ້ເຖິງອັນຕະລາຍຂອງ ລບຕ ຫຼືວ່າ ລບຕ ມີລັກສະນະແນວໃດ. ຄວາມບໍ່ຮູ້ເຖິງອັນຕະລາຍ ຫຼື ລັກສະນະຮູບຮ່າງຂອງ ລບຕ ນີ້ ສອດຄ່ອງກັບສາເຫດຂອງອຸປະຕິເຫດ, ເນື່ອງຈາກເດັກຫຼາຍຄົນໄດ້ເກັບ, ໂຍນ ຫຼື ຫຼິ້ນກັບ ລບຕ ກ່ອນຈະເກີດອຸປະຕິເຫດ. ສຳລັບເດັກທີ່ລອດຊີວິດມາ ມີພຽງໜ້ອຍຄົນເທົ່ານັ້ນທີ່ໄດ້ຍິນກ່ຽວກັບ ລບຕ ຢູ່ໃນໂຮງຮຽນ, ເຂົາເຈົ້າບໍ່ສາມາດຈື່ຈຳໄດ້ຫຼາຍກ່ຽວກັບ ລບຕ ຈາກການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກ ລບຕ. ຕົວຢ່າງ ທ້າວ ບຸນມີ ໄດ້ເວົ້າວ່າ, *"ຕອນຮຽນປ.1 ຂ້ອຍເຄີຍໄດ້ຍິນຄູສອນ ບອກບໍ່ໃຫ້ແຕະຕ້ອງລະເບີດ, ບໍ່ໄປໃກ້ ແລະ ບໍ່ໃຫ້ໂຍນມັນຖິ້ມ ເພາະມັນຈະລະເບີດ. ແນວໃດກໍຕາມ, ເມື່ອເຫັນມັນດ້ວຍຕົວເອງ, ຂ້ອຍລືມວ່າອາຈານສອນຫຍັງຂ້ອຍ."* ໂດຍລວມແລ້ວ, ຄວາມຮັບຮູ້ກ່ຽວກັບລະເບີດບໍ່ທັນແຕກ ລວມທັງອັນຕະລາຍທີ່ອາດຈະເກີດຂຶ້ນ

ແລະ ລັກສະນະຮູບຮ່າງຂອງມັນ, ໂດຍທົ່ວໄປແລ້ວ ເດັກທີ່ຖືກສໍາພາດສໍາລັບການສຶກສາຄົ້ນຄ້ວາຄັ້ງນີ້ ແລະ ເດັກທີ່ເຄີຍປະສົບກັບອຸປະຕິເຫດ ລບຕ ແມ່ນບໍ່ມີຄວາມຮູ້ກ່ຽວກັບ ລບຕ ມາກ່ອນ.

## ການສົນທະນາກ່ຽວກັບຄໍາຖາມ ທີ 3

ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ມີຄວາມສໍາຄັນຫຼາຍໃນການປ້ອງກັນອຸປະຕິເຫດທີ່ກ່ຽວຂ້ອງກັບລະເບີດບໍ່ທັນແຕກ ເຊິ່ງເປັນໄພຂົ່ມຂູ່ທີ່ແຜ່ລາມຢູ່ໃນປະເທດລາວ. ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ທີ່ມີປະສິດຕິພາບຊ່ວຍໃຫ້ຊຸມຊົນຮັບຮູ້, ຫຼີກລ້ຽງ ແລະ ຕອບໂຕ້ຢ່າງປອດໄພຕໍ່ກັບ ລບຕ, ຫຼຸດຜ່ອນການບາດເຈັບ ແລະ ການເສຍຊີວິດ ໂດຍສະເພາະໃນບັນດາກຸ່ມທີ່ມີຄວາມສ່ຽງສູງ ເຊັ່ນ: ເດັກ ແລະ ຜູ້ເຮັດວຽກດ້ານກະສິກໍາ. ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຍັງສົ່ງເສີມພຶດຕິກໍາທີ່ປອດໄພໃນການລາຍງານ ແລະ ການກໍາຈັດຢ່າງປອດໄພ, ເສີມສ້າງຄວາມເຂັ້ມແຂງຢູ່ໃນຊຸມຊົນ. ຄວາມເຂົ້າໃຈກ່ຽວກັບອຸປະສັກດ້ານສະຖານະການ, ສະຕິປັນຍາ ຫຼື ໂຄງສ້າງ ທີ່ອາດຈະເຮັດໃຫ້ປະສົບການຂອງບຸກຄົນທີ່ໄດ້ຮັບຄວາມຮູ້ກ່ຽວກັບອັນຕະລາຍຈາກ ລບຕ ເປັນສິ່ງຈໍາເປັນສໍາລັບການວາງຍຸດທະສາດການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃຫ້ມີປະສິດທິພາບຫຼາຍຂຶ້ນ ແລະ ການເຂົ້າໄປຊ່ວຍເຫຼືອທີ່ກົງກັບເປົ້າໝາຍ.

ຜົນການສຶກສາຄົ້ນຄ້ວາ ໄດ້ສະແດງໃຫ້ເຫັນເຖິງລະດັບທີ່ແຕກຕ່າງກັນຂອງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໂດຍມີຄວາມແຕກຕ່າງກັນກ່ຽວກັບປະເພດ ແລະ ແຫຼ່ງຂໍ້ມູນທີ່ໄດ້ຮັບ. ຮູບແບບເຫຼົ່ານີ້ ຊີ້ໃຫ້ເຫັນເຖິງຄວາມເຂັ້ມແຂງ ແລະ ຊ່ອງຫວ່າງໃນຄວາມພະຍາຍາມໃນປະຈຸບັນ, ຄວາມຕ້ອງການໃນການປັບປຸງການເຜີຍແຜ່ ແລະ ການສົ່ງຂໍ້ຄວາມທີ່ເໝາະສົມ ເພື່ອປົກປ້ອງປະຊາກອນທີ່ມີຄວາມສ່ຽງ.

ຄວາມແຕກຕ່າງກັນຂອງການໄດ້ຮັບຂໍ້ມູນຈາກການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຂອງຜູ້ລອດຊີວິດ ແລະ ຄວາມເຂົ້າໃຈກ່ຽວກັບ ລບຕ ຊີ້ໃຫ້ເຫັນເຖິງຄວາມສໍາເລັດ ແລະ ຊ່ອງຫວ່າງທີ່ສໍາຄັນ. ຊ່ອງຫວ່າງທີ່ເຫັນໄດ້ຢ່າງຊັດເຈນທີ່ສຸດແມ່ນຄວາມແຕກຕ່າງໃນການປູກຈິດສໍານຶກລະຫວ່າງຜູ້ໃຫຍ່ ແລະ ເດັກ. ຜູ້ໃຫຍ່ມີແນວໂນ້ມທີ່ຈະມີຄວາມຮູ້ກ່ຽວກັບ ລບຕ ມາກ່ອນ, ມີແຫຼ່ງຂໍ້ມູນຂ່າວສານທີ່ຫຼາກຫຼາຍ ແລະ ຮູ້ຈັກເນື້ອໃນສໍາຄັນກ່ຽວກັບຄວາມຮູ້ ລບຕ ຫຼາຍກວ່າ.

ໃນກຸ່ມຜູ້ໃຫຍ່, ອັດຕາຄວາມຮູ້ກ່ຽວກັບລະເບີດບໍ່ທັນແຕກກ່ອນໜ້ານີ້ ສູງຂຶ້ນໃນບັນດາຜູ້ລອດຊີວິດທີ່ອາຍຸຍັງນ້ອຍ, ເຊິ່ງຊີ້ໃຫ້ເຫັນວ່າມີໂຄງການລິເລີ່ມໃນໄລຍະມໍ່ໆມານີ້ ອາດຊ່ວຍປັບປຸງການຮັບຮູ້ໃນກຸ່ມອາຍຸທີ່ສໍາຄັນຄື: ຜູ້ໃຫຍ່ໃນເກນອາຍຸທີ່ເຮັດວຽກຫຼັກ. ການລວມເອົາການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດເຂົ້າໃນຫຼັກສູດສໍາລັບໂຮງຮຽນປະຖົມ ແລະ ມັດທະຍົມ ແມ່ນຂ້ອນຂ້າງໃໝ່ ແລະ ອາດຈະເປັນເຫດຜົນໜຶ່ງທີ່ເຮັດໃຫ້ຜູ້ລອດຊີວິດທີ່ໄດ້ຮັບຂໍ້ມູນການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດ ມີອາຍຸນ້ອຍກວ່າ.

ຄວາມຮັບຮູ້ທີ່ຈໍາກັດຂອງເດັກກ່ຽວກັບ ລບຕ ສົ່ງຜົນໃຫ້ຄວາມສ່ຽງຂອງເຂົາເຈົ້າເພີ່ມຂຶ້ນຢ່າງຫຼວງຫຼາຍ, ເຮັດໃຫ້ເຂົາເຈົ້າໄດ້ຮັບຜົນກະທົບຢ່າງບໍ່ສົມສ່ວນຈາກ ລບຕ. ເຖິງວ່າການເຊື່ອມເອົາການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕເຂົ້າໃນຫຼັກສູດໂຮງຮຽນປະຖົມ ແລະ ມັດທະຍົມ ຈະເປັນບາດກ້າວທີ່ດີກໍ່ຕາມ, ແຕ່ຂໍ້ເທັດຈິງທີ່ວ່າ ເນື້ອໃນການໂຄສະນານີ້ ຖືກນໍາສະເໜີໃນໄລຍະເວລາທີ່ຈໍາກັດ ແລະ ສະເໜີພຽງແຕ່ໜຶ່ງຄັ້ງຕໍ່ປີ ເຮັດໃຫ້ນັກຮຽນໂດຍສະເພາະແມ່ນນັກຮຽນທີ່ຍັງເປັນເດັກນ້ອຍລືມເນື້ອໃນນັ້ນງ່າຍ ແລະ ຜູ້ທີ່ຂາດຮຽນອາດຈະພາດໂອກາດໃນການຮຽນຮູ້ຂໍ້ມູນຂ່າວສານທີ່ອາດຈະຊ່ວຍຊີວິດໄດ້. ຖ້າໂຮງຮຽນເປັນແຫຼ່ງຫຼັກຂອງການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ສໍາລັບເດັກ, ອຸປະສັກທາງພາສາອາດຈະຮ້າຍແຮງຂຶ້ນ ເພາະວ່າເດັກທີ່ຮຽນພາສາລາວຄັ້ງທໍາອິດໃນໂຮງຮຽນອາດຈະມີຄວາມຫຍຸ້ງຍາກໃນ

## ຄຳຖາມບົດຄົ້ນຄວ້າ ທີ 3:

ການເຂົ້າໃຈເນື້ອໃນຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດ. ສຸດທ້າຍ, ມັນເປັນໄປໄດ້ວ່າ ການປິດໂຮງຮຽນ ແລະ ການຂາດໂຮງຮຽນທີ່ກ່ຽວຂ້ອງກັບການລະບາດຂອງພະຍາດ ໂຄວິດ-19 ອາດຈະຈຳກັດ ການໂຄສະນາຄວາມສ່ຽງໄພຈາກ ລບຕ ໃນໂຮງຮຽນໃນ 2-3ປີ ຜ່ານມາ.

ອັດຕາຄວາມຮູ້ກ່ອນອຸປະຕິເຫດຂອງຜູ້ຍິງແມ່ນສູງກວ່າຜູ້ຊາຍ, ເຊິ່ງຊີ້ໃຫ້ເຫັນວ່າ ອາດຈະຕ້ອງໃຊ້ຄວາມພະຍາຍາມຫຼາຍຂຶ້ນ ເພື່ອລະບຸວ່າຍ້ອນຫຍັງຄວາມແຕກຕ່າງນີ້ຈຶ່ງເກີດຂຶ້ນ. ເຫດຜົນໜຶ່ງອາດຈະເປັນຍ້ອນແມ່ຍິງ, ໂດຍສະເພາະໃນບ້ານ, ມີບົດບາດສຳຄັນໃນການດູແລດ້ານສຸຂະພາບຂອງຄອບຄົວ, ການດູແລເດັກ ແລະ ຄວາມເປັນຢູ່ທີ່ດີຂອງຊຸມຊົນ; ດັ່ງນັ້ນ, ເຂົາເຈົ້າອາດຈະມີສ່ວນຮ່ວມໃນໂຄງການໂຄສະນາປູກຈິດສຳນຶກ, ລວມທັງການລິເລີ່ມການສຶກສາໃຫ້ຄວາມຮູ້ກ່ຽວກັບ ລບຕ. ປັດໄຈອັນທີສອງອາດແມ່ນ ຜູ້ຊາຍມີແນວໂນ້ມທີ່ຈະໃຊ້ເວລາອອກໄປນອກບ້ານ, ໄປເຮັດວຽກຢູ່ໄຮ່, ປ່າໄມ້ ຫຼື ເຄື່ອນຍ້າຍແຮງງານຕາມລະດູການ. ເມື່ອສົມທຽບກັບຜູ້ຊາຍ, ແມ່ຍິງມັກຈະມີອັດຕາສ່ວນຂອງເວລາຢູ່ໃນບ້ານຫຼາຍກວ່າ ແລະ ດັ່ງນັ້ນຈຶ່ງມີໂອກາດເຂົ້າເຖິງການສຶກສາດ້ານການປູກຈິດສຳນຶກຫຼາຍຂຶ້ນ.

ຄວາມແຕກຕ່າງຢ່າງຈະແຈ້ງຂອງອັດຕາການສຳຜັດກັບລະເບີດບໍ່ທັນແຕກກ່ອນໜ້າອຸປະຕິເຫດ ແມ່ນມີຄວາມແຕກຕ່າງກັນຢ່າງຊັດເຈນເມື່ອວິເຄາະຕົວຢ່າງຕາມລະດັບຄວາມຄ່ອງແຄ້ວໃນການເວົ້າພາສາລາວຂອງຜູ້ລອດຊີວິດ, ໂດຍມີແນວໂນ້ມວ່າ ການສຳຜັດກັບລະເບີດບໍ່ທັນແຕກກ່ອນໜ້າອຸປະຕິເຫດ ຈະເພີ່ມຂຶ້ນເມື່ອລະດັບຄວາມຄ່ອງແຄ້ວຂອງການເວົ້າພາສາລາວເພີ່ມຂຶ້ນ. ນີ້ແມ່ນສອດຄ່ອງກັບການສຶກສາຄົ້ນຄ້ວາອື່ນໆ ທີ່ສະແດງໃຫ້ເຫັນວ່າຄວາມບໍ່ສອດຄ່ອງກັນຂອງພາສາ ແລະ ວັດທະນະທຳ ສາມາດຂັດຂວາງການເຂົ້າເຖິງການດູແລສຸຂະພາບ, ເຮັດໃຫ້ມີການສື່ສານຈຳກັດ ແລະ ຄວາມເຂົ້າໃຈຜິດທີ່ອາດຈະເປັນອັນຕະລາຍ.[31] [32] ຄວາມຄ່ອງແຄ້ວໃນການເວົ້າພາສາລາວທີ່ຈຳກັດ ອາດເປັນອຸປະສັກຕໍ່ການເຂົ້າເຖິງຄວາມຮູ້ກ່ຽວກັບ ລບຕ ແລະ ການສື່ສານຂໍ້ຄວາມທາງສຸຂະພາບ, ເຊິ່ງສ່ວນໃຫຍ່ຈະສື່ສານເປັນພາສາປະຈຳຊາດ. ຜູ້ລອດຊີວິດທີ່ບໍ່ມີທັກສະໃນການເວົ້າພາສາລາວ ມີຄວາມເສຍປຽບເປັນສອງເທົ່າ ຄື: ມີຄວາມສ່ຽງຫຼາຍທີ່ຈະໄດ້ຮັບບາດເຈັບ ແລະ ມີໂອກາດໜ້ອຍໃນການເຂົ້າເຖິງການບໍລິການ ຫຼື ການຊ່ວຍເຫຼືອ. ແນວໂນ້ມຕາມພາສາ ຍັງຊີ້ໃຫ້ເຫັນວ່າ ຄຳຖາມທີ່ຜົນການຄົ້ນພົບຂອງພວກເຮົາບໍ່ສາມາດຕອບໄດ້ ເຊັ່ນ ສຳລັບຜູ້ລອດຊີວິດທີ່ລາຍງານວ່າບໍ່ມີຄວາມຮູ້ລ່ວງໜ້າກ່ຽວກັບ ລບຕ, ການຂາດຄວາມຮູ້ນີ້ ອາດເປັນຍ້ອນວ່າການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ບໍ່ໄດ້ເຂົ້າເຖິງເຂົາເຈົ້າ ຫຼື ຜູ້ເຄາະຮ້າຍເຂົ້າເຖິງການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແຕ່ເຂົາເຈົ້າບໍ່ເຂົ້າໃຈເນື້ອໃນ?

ໃນຂະນະທີ່ຄວາມແຜ່ຫຼາຍຂອງພາສາປາກເວົ້າຂອງຊົນເຜົ່າ ເຮັດໃຫ້ການເຜີຍແຜ່ເອກະສານເປັນລາຍລັກອັກສອນມີຄວາມສັບສົນ ແລະ ຊີ້ໃຫ້ເຫັນຄວາມຕ້ອງການສຳລັບການສຶກສາທາງພາສາປາກເວົ້າ, ການສຶກສາໃຫ້ຄວາມຮູ້ໃນຊຸມຊົນໂດຍຜ່ານຜູ້ນຳທ້ອງຖິ່ນທີ່ເຊື່ອຖືໄດ້, ຄວາມແຕກຕ່າງຢ່າງຫຼວງຫຼາຍໃນແຕ່ລະພາສານັ້ນ ຊີ້ໃຫ້ເຫັນເຖິງໂອກາດທີ່ກົງໄປກົງມາ ເຊັ່ນ: ປະສິດທິຜົນຂອງການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ອາດເພີ່ມຂຶ້ນໄດ້ ພຽງແຕ່ຮັບປະກັນວ່າພາສາທີ່ໃຊ້ໃນການສື່ສານນັ້ນສອດຄ່ອງກັບພາສາທີ່ກຸ່ມເປົ້າໝາຍເຂົ້າໃຈ.

---

[31] Zhao, Q., Xu, S., Aziz, N., He, J., & Wang, Y. (2022). ວັດທະນະທຳພາສາທ້ອງຖິ່ນ ແລະ ການນຳໃຊ້ບໍລິການສາທາລະນະສຸກ ຂອງຊາວອົບພະຍົບໃນຊົນນະບົດ: ຄວາມເຂົ້າໃຈຈາກປະເທດຈີນ. Frontiers in Public Health, 10, 985343. https://www.frontiersin.org/journals/public-health/articles/10.3389/fpubh.2022.985343/full

[32] Babalola, A. E., Johnson, V., Oromakinde, A., Azeez, O., Aderinto, N., Onasanya, O., & Akinloye, S. (2025). ບົດບາດຂອງພາສາທ້ອງຖິ່ນໃນການໃຫ້ບໍລິການສຸຂະພາບທີ່ມີປະສິດທິພາບ. Discover Public Health, 22(1), 59. https://link.springer.com/article/10.1186/s12982-025-00429-5

ຄວາມເປັນຊົນເຜົ່າ ຍັງສະແດງໃຫ້ເຫັນເຖິງການເຂົ້າເຖິງຂໍ້ມູນ ເຊັ່ນກັນ: ໃນກຸ່ມຜູ້ໃຫຍ່ ແລະ ເດັກ, ກຸ່ມຍ່ອຍເຜົ່າມອນ-ຂະແມ ໃນກຸ່ມປະຊາກອນຕົວຢ່າງ ມີສັດສ່ວນຂອງຜູ້ລອດຊີວິດທີ່ລາຍງານການຮັບຂໍ້ມູນຈາກການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໜ້ອຍທີ່ສຸດ, ເຖິງແມ່ນວ່າຄວາມແຕກຕ່າງລະຫວ່າງກຸ່ມຈະບໍ່ຊັດເຈນກ່ຽວກັບຄວາມເປັນຊົນເຜົ່າ ເມື່ອທຽບກັບລະດັບຄວາມຄ່ອງແຄ້ວໃນການໃຊ້ພາສາ.

ຄວາມແຕກຕ່າງຂອງແຫຼ່ງຂໍ້ມູນຂ່າວສານ ມີຄວາມສໍາຄັນເຊັ່ນກັນ ຄື: ຜູ້ໃຫຍ່ມີແນວໂນ້ມທີ່ຈະອີງໃສ່ຜູ້ນໍາໃນຊຸມຊົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ໂດຍລວມແລ້ວ ເຂົາເຈົ້າໄດ້ຍິນກ່ຽວກັບ ລບຕ ຈາກແຫຼ່ງຂໍ້ມູນຈໍານວນຫຼາຍແຫຼ່ງ. ສ່ວນໃຫຍ່ ເດັກໄດ້ຮັບຄວາມຮູ້ຕົ້ນຕໍມາຈາກໂຮງຮຽນ ແລະ ບໍ່ໄດ້ຮຽນຮູ້ຈາກແຫຼ່ງຂໍ້ມູນທີ່ຫຼາກຫຼາຍຄືຜູ້ໃຫຍ່, ຜົນການຄົ້ນຄວ້ານີ້ ອາດຈະຊີ້ໃຫ້ເຫັນເຖິງເຫດຜົນສໍາລັບອັດຕາການຮູ້ຂໍ້ມູນຈາກການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດ ທີ່ຕໍ່າຂອງເດັກໂດຍລວມ. ການວາງໂຄງການໃນອະນາຄົດ ໃຫ້ສອດຄ່ອງກັບຊ່ອງທາງທີ່ເຊື່ອຖືໄດ້ເຫຼົ່ານີ້ ຈະເປັນສິ່ງຈໍາເປັນສໍາລັບການປັບປຸງການເຂົ້າເຖິງ ແລະ ປະສິດທິຜົນ, ເຖິງແມ່ນວ່າອາດຈະມີໂອກາດທີ່ຈະເພີ່ມຈໍານວນຊ່ອງທາງທີ່ເດັກຮຽນຮູ້ກ່ຽວກັບອັນຕະລາຍຈາກລະເບີດເພື່ອໃຫ້ຂໍ້ຄວາມໄດ້ຮັບການເສີມສ້າງຢ່າງຕໍ່ເນື່ອງ ໂດຍຜູ້ທີ່ມີບົດບາດທີ່ສໍາຄັນໃນຊີວິດຂອງເດັກ ເຊັ່ນ ພໍ່ແມ່ ແລະ ຄູອາຈານ ແລະ ຜູ້ນໍາບ້ານ.

ສຸດທ້າຍ, ການປຽບທຽບສິ່ງທີ່ຜູ້ລອດຊີວິດຮູ້ກ່ຽວກັບ ລບຕ ກັບການກະທໍາທີ່ເຮັດໃຫ້ເກີດອຸປະຕິເຫດ ຍັງຊີ້ໃຫ້ເຫັນເຖິງໂອກາດໃນການປັບປຸງຂໍ້ເນື້ອໃນຈາກການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ. ເນື້ອໃນຈາກການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕທີ່ຖືກອ້າງເຖິງຫຼາຍທີ່ສຸດໃນບັນດາຜູ້ໃຫຍ່ທີ່ມີຄວາມຮັບຮູ້ກ່ອນການເກີດອຸປະຕິເຫດນັ້ນ ແມ່ນເຂົາເຈົ້າບໍ່ຄວນແຕະຕ້ອງ ລບຕ (95% ໃນບັນດາຜູ້ທີ່ມີຄວາມຮັບຮູ້ກ່ອນການເກີດອຸປະຕິເຫດ). ແນວໃດກໍ່ຕາມ, ອຸປະຕິເຫດສ່ວນໃຫຍ່ (85%) ແມ່ນເກີດຂຶ້ນໃນຂະນະທີ່ຜູ້ໃຫຍ່ກໍາລັງຈູດໄຟ ຫຼື ໃຊ້ຈົກ/ສຽມ ບໍ່ແມ່ນການແຕະຕ້ອງ ລບຕ ໂດຍກົງ. ເນື່ອງຈາກຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ໄດ້ລາຍງານອຸປະຕິເຫດ ລບຕ ແມ່ນເກີດຂຶ້ນໃນເວລາເຂົາເຈົ້າເຮັດກິດຈະກໍາປະຈໍາວັນຂອງເຂົາເຈົ້າ, ເຂົາເຈົ້າອາດຈະຕ້ອງການຂໍ້ມູນກ່ຽວກັບການປ້ອງກັນ ແລະ ຂໍ້ຄວາມກ່ຽວກັບຄວາມປອດໄພຫຼາຍຂຶ້ນ. ຄວາມຈິງທີ່ວ່າອຸປະຕິເຫດ ລບຕ ເກີດຂຶ້ນໃນກຸ່ມຜູ້ໃຫຍ່ທີ່ເຄີຍເຂົ້າຮ່ວມ ການໂຄສະນາຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດມາກ່ອນ ອາດຈະບໍ່ແມ່ນຍ້ອນຄວາມລົ້ມເຫຼວຂອງຜູ້ຖືກເຄາະຮ້າຍໃນການນໍາໃຊ້ຂໍ້ຄວາມທີ່ເຂົາເຈົ້າໄດ້ຮຽນຮູ້, ແຕ່ແມ່ນຍ້ອນການຂາດຂໍ້ຄວາມທີ່ໃຊ້ໄດ້ກັບສະຖານະການສະເພາະທີ່ເຂົາເຈົ້າໄດ້ຮັບບາດເຈັບ. ຄວາມເຂົ້າໃຈທີ່ເລິກເຊິ່ງນີ້ ຍັງໄດ້ຮັບການຢືນຢັນຈາກຄວາມສົນໃຈຂອງຜູ້ລອດຊີວິດໃນການແລກປ່ຽນຄວາມຮູ້ທີ່ສໍາຄັນ ເຊັ່ນ ວິທີເພີ່ມຄວາມປອດໄພເມື່ອດັງໄຟ/ຈູດໄຟ, ການຈູດຂີ້ເຫຍື້ອ ແລະ ການຂຸດດິນໃນສວນ. ການສຶກສາຄົ້ນຄ້ວາຫຼ້າສຸດຂອງທ່ານ Keeley (2024) ກ່ຽວກັບຄວາມຮູ້, ທັດສະນະຄະຕິ ແລະ ການປະຕິບັດການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ໄດ້ສຶກສາຢ່າງລະອຽດກ່ຽວກັບການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ຫຼາຍກວ່າທີ່ການສຶກສາຄົ້ນຄ້ວາຄັ້ງນີ້ສາມາດເຮັດໄດ້ ແລະ ລະບຸບັນຫາທີ່ຄ້າຍຄືກັນ ໂດຍລະບຸວ່າ ໃນບັນດາອຸປະຕິເຫດ ລບຕ ທີ່ເກີດຈາກການດັງໄຟ/ຈູດໄຟ ຫຼື ການຂຸດດິນ "ມັກຈະກ່ຽວຂ້ອງກັບຜູ້ທີ່ບໍ່ຮູ້ເຖິງພຶດຕິກໍາທີ່ປອດໄພທີ່ເໝາະສົມ ຫຼື ບໍ່ມີຄວາມສາມາດໃນການປ່ຽນແປງພຶດຕິກໍາ. […] ສິ່ງນີ້ ຊີ້ໃຫ້ເຫັນເຖິງການໃຊ້ວິທີການທີ່ເນັ້ນໃສ່ການໂຄສະນາສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງໄພຈາກ ລບຕ (EORE) ໃຫ້ຫຼາຍຂຶ້ນ ເພື່ອແກ້ໄຂບັນຫາຄົນທີ່ມີພຶດຕິກໍາສ່ຽງດັ່ງກ່າວ" (ໜ້າ 61).[33]

ນອກຈາກນີ້, ຜູ້ລອດຊີວິດບາງຄົນໄດ້ລາຍງານຄວາມຮັບຮູ້ກ່ຽວກັບ ລບຕ ແຕ່ບໍ່ຮູ້ວ່າພວກເຂົາມີລັກສະນະແນວໃດ, ຊີ້ໃຫ້ເຫັນເຖິງຄວາມຈໍາເປັນທີ່ຕ້ອງເອົາພາບມາປະກອບໃນກິດຈະກໍາການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດ. ການສຶກສາຄວາມສ່ຽງທີ່ມີປະສິດຕິ

[33] Keeley, R. (2024). ການສຶກສາຄວາມຮູ້, ທັດສະນະຄະຕິ ແລະ ການປະຕິບັດຕົວຈິງ. UNDP.

ຜົນຄວນປະກອບມີຂໍ້ມູນທີ່ຊັດເຈນກ່ຽວກັບການກຳນົດປະເພດ ລບຕ ທີ່ແຕກຕ່າງກັນ ແລະ ຄວາມເຂົ້າໃຈຂັ້ນຕອນການລາຍງານ.[34] ຖ້າບໍ່ມີຄວາມຮູ້ສະເພາະເຈາະຈົງນີ້, ຜູ້ໃຫຍ່ອາດຈະບໍ່ສາມາດຮັບຮູ້ເຖິງຄວາມຮ້າຍແຮງຂອງອັນຕະລາຍຈາກລະເບີດບໍ່ທັນແຕກ ຫຼື ເຂົ້າໃຈເຖິງຄວາມສຳຄັນຂອງການລາຍງານໃຫ້ທັນເວລາ, ອາດຈະເຮັດໃຫ້ເກີດຄວາມສ່ຽງຕໍ່ອຸປະຕິເຫດ ແລະ ການເສຍຊີວິດເພີ່ມຂຶ້ນ.

ເດັກນ້ອຍສ່ວນໃຫຍ່ໃນກຸ່ມປະຊາກອນຕົວຢ່າງຂອງພວກເຮົາ ໄດ້ຮັບບາດເຈັບໃນຂະນະທີ່ຫຼິ້ນ ແລະ ແຕະຕ້ອງ ຫຼື ເຕະລະເບີດບໍ່ທັນແຕກໂດຍກົງ. ເຊັ່ນດຽວກັນກັບການສົ່ງຂໍ້ຄວາມໃນການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດສຳລັບຜູ້ໃຫຍ່ທີ່ສາມາດກຳນົດເປົ້າໝາຍກິດຈະກຳທີ່ມີຄວາມສ່ຽງສູງສະເພາະ, ການສົ່ງຂໍ້ຄວາມໃຫ້ຄວາມຮູ້ກ່ຽວກັບ ລບຕ ສຳລັບເດັກຄວນຄຳນຶງເຖິງຄວາມເປັນໄປໄດ້ຂອງການປະເຊີນໜ້າກັນຂອງເຂົາເຈົ້າ ທີ່ອາດເກີດຂຶ້ນໃນລະຫວ່າງການຫຼິ້ນ.

ຜົນການສຶກສາຄົ້ນຄ້ວາຂອງພວກເຮົາກ່ຽວກັບການເຂົ້າເຖິງການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ແລະ ຄວາມເຂົ້າໃຈກ່ອນອຸປະຕິເຫດຂອງຜູ້ລອດຊີວິດກ່ຽວກັບ ລບຕ ສາມາດຊ່ວຍປັບປຸງ ແລະ ກຳນົດເປົ້າໝາຍສຳລັບການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດທີ່ດີຂຶ້ນ. ຢ່າງໃດກໍຕາມ, ເນື່ອງຈາກວ່າພວກເຮົາສຸມໃສ່ຜູ້ລອດຊີວິດ, ກຸ່ມປະຊາກອນຕົວຢ່າງຂອງພວກເຮົາ ຈຶ່ງລວມເອົາແຕ່ຜູ້ທີ່ເຂົ້າຮ່ວມການ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ບໍ່ໄດ້ປ້ອງກັນອຸປະຕິເຫດ. ພວກເຮົາບໍ່ສາມາດປະເມີນປະສິດທິພາບທົ່ວໄປຂອງການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕໄດ້, ເພາະວ່າພວກເຮົາບໍ່ໄດ້ເບິ່ງກໍລະນີທີ່ບໍ່ເປັນຄວາມຈິງ, ນັ້ນແມ່ນ, ກໍລະນີທີ່ການສົ່ງຂໍ້ຄວາມໃຫ້ຄວາມຮູ້ກ່ຽວກັບອັນຕະລາຍ ຈາກລະເບີດ ໄດ້ປ້ອງກັນອຸປະຕິເຫດໄດ້ຢ່າງສຳເລັດຜົນ. ເຊັ່ນດຽວກັນ, ເຖິງວ່າຜົນການສຶກສາຄົ້ນຄ້ວາຂອງພວກເຮົາ ອາດສະເໜີບາງສົມມຸດຕິຖານບາງປະການວ່າ ເປັນຫຍັງຄວາມຮູ້ຂອງຜູ້ລອດຊີວິດກ່ຽວກັບອັນຕະລາຍຈາກລະເບີດອາດຈະບໍ່ພຽງພໍໃນກໍລະນີດັ່ງກ່າວ, ແຕ່ການສຶກສາໃນອະນາຄົດທີ່ເນັ້ນໃສ່ສະເພາະຜົນກະທົບຂອງການປ່ຽນແປງພຶດຕິກຳອາດຈະເປັນປະໂຫຍດສຳລັບການປັບປຸງຂໍ້ຄວາມທີ່ສຳຄັນ, ວິທີການສື່ສານ ແລະ ຄວາມຖີ່ ຫຼື ປະລິມານທີ່ຈຳເປັນໃຫ້ດີຂຶ້ນ. ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໄດ້ໃຫ້ຂໍ້ສັງເກດກ່ຽວກັບຄວາມຈຳເປັນທີ່ຄ້າຍຄືກັນໃນ ເສັ້ນທາງສູ່ຄວາມປອດໄພ III, ໂດຍຮຽກຮ້ອງໃຫ້ມີ "ເຄື່ອງມືສຳລັບປະເມີນການປ່ຽນແປງພຶດຕິກຳໃນກຸ່ມຄົນທີ່ໄດ້ຮັບຂໍ້ມູນຈາກການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ."[35] ແລະ ການສຶກສາຂອງ Keeley (2024) ທີ່ຫາກໍຈັດພິມໄດ້ມີສ່ວນສຳຄັນຢ່າງຫຼາຍໃນຂະບວນການນີ້.

## ຂໍ້ສະເໜີແນະຄຳຖາມທີ 3

### ການກຳນົດເປົ້າໝາຍ ແລະ ການປັບປຸງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (ຂໍ້ແນະນຳໃຊ້ໄດ້ທັງເດັກ ແລະ ຜູ້ໃຫຍ່)

**ໃຊ້ແບບຢ່າງຈຳລອງ ລບຕ ທີ່ຈັບຕ້ອງໄດ້ ແລະ ເບິ່ງເຫັນໄດ້ ແລະ ໃຊ້ສະຖານະການການຮຽນຮູ້ທີ່ມີການເຄື່ອນໄຫວທີ່ກ່ຽວຂ້ອງກັບກິດຈະກຳທີ່ມີຄວາມສ່ຽງສູງ.** ເຖິງແມ່ນວ່າ ມີຜູ້ໃຫຍ່ 21 ຄົນກ່າວວ່າ ເຂົາເຈົ້າມີຄວາມຮັບຮູ້ກ່ຽວກັບ ລບຕ ກ່ອນໜ້າເກີດອຸປະຕິເຫດ, ແຕ່ມີ 6 ຄົນໄດ້ເວົ້າວ່າ ເຂົາເຈົ້າເຄີຍໄດ້ຍິນເລື່ອງ ລບຕ ແຕ່ບໍ່ຮູ້ວ່າເປັນແນວໃດ. ເດັກໄດ້ເວົ້າວ່າເຂົາເຈົ້າບໍ່ຈື່ຂໍ້ຄວາມ

---

[34] UNICEF (2005). ການປະເມີນຜົນໂຄງການສຶກສາຄວາມສ່ຽງ ລບຕ ທີ່ຮອງຮັບໂດຍ Unicef ໃນ ສປປ ລາວ. ເຈນີວາ: UNICEF. https://evaluationreports.unicef.org/GetDocument?documentID=5625&fileID=30760

[35] ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) (2021) ເສັ້ນທາງສູ່ຄວາມປອດໄພ III

ທີ່ເຂົາເຈົ້າໄດ້ຍິນ ແລະ ບໍ່ຮູ້ວ່າ ລບຕ ມີລັກສະນະແນວໃດ. ໂດຍຄຳນຶງວ່າ ເດັກຈະຖືກດຶງດູດ ແລະ ຕື່ນເຕັ້ນໃນການຫຼິ້ນເປັນກຸ່ມ ຫຼື ການສຳຫຼວດຊອກຫາສິ່ງໃໝ່ ແລະ ສິ່ງທີ່ໜ້າຕື່ນເຕັ້ນ ກັບໝູ່ເພື່ອນ, ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ສຳລັບເດັກ ຄວນໃຫ້ຄວາມຮູ້ກ່ຽວກັບຮູບຮ່າງ ລັກສະນະຂອງ ລບຕ ແລະ ອັນຕະລາຍຂອງພວກມັນ ທີ່ເຫັນໄດ້ຊັດເຈນ ແລະ ຈື່ຈຳໄດ້ ແລະ ຄວນຫຼີກລ່ຽງການອະທິບາຍທົ່ວໄປທີ່ສື່ສານຜ່ານທາງການຂຽນ ຫຼື ທາງປາກເວົ້າ ແລະ ກ່ຽວຂ້ອງປະສົບການອື່ນຂອງເດັກນ້ອຍ. ຕົວຢ່າງ, ຄູອາຈານ ແລະ ຜູ້ນຳໃນບ້ານ ສາມາດສະແດງໂປສເຕີທີ່ມີຮູບພາບກ່ຽວກັບລະເບີດບໍ່ທັນແຕກ ແລະ ຊ່ວຍເດັກ ສາມາດ ລວບລວມຄວາມຮູ້ໂດຍການໃຫ້ເຂົາເຈົ້າແຕ້ມຮູບລະເບີດບໍ່ທັນແຕກ; ຫຼື ໃຫ້ເດັກທີ່ມີອາຍຸໃຫຍ່ຂຶ້ນ ສາມາດສ້າງໂປສເຕີ ແລະ ສື່ ໂຄສະນາປູກຈິດສຳນຶກສຳລັບເຂົາເຈົ້າເອງ ເພື່ອແບ່ງປັນກັບຄົນອື່ນ. ຕົວຢ່າງອື່ນໆແມ່ນ ອາດຈະສະແດງຕົວຢ່າງຕົວຈິງຂອງ ລບຕ ທີ່ມີຄວາມປອດໄພ ແລະ ມີການອອກແບບປະສົມປະສົບການໃນການຮຽນຮູ້ແບບມີສ່ວນຮ່ວມ ທີ່ກ່ຽວຂ້ອງກັບ ລບຕ; ໃຫ້ເດັກ ສະແດງບົດບາດໃນການພົບເຫັນ ລບຕ, ອະທິບາຍໃຫ້ເພື່ອນຮູ້ວ່າມັນບໍ່ແມ່ນຂອງຫຼິ້ນ ແລະ ຕ້ອງລາຍງານ ລບຕ ໃຫ້ຜູ້ໃຫຍ່ຮູ້; ຫຼື ຫຼິ້ນເກມທີ່ເດັກ ຊອກຫາວັດຖຸ ສອງ ປະເພດ, ວັດຖຸທີ່ປອດໄພທີ່ເຮັດໃຫ້ເຂົາເຈົ້າໄດ້ຮັບຄະແນນ ແລະ ການສະແດງພາບ/ການ ສຳຜັດ ລບຕ, ເຊິ່ງຖ້າສຳຜັດ, ເຂົາເຈົ້າຈະສູນເສຍຄະແນນ. ຕົວຢ່າງທັງໝົດເຫຼົ່ານີ້ ມີສ່ວນຮ່ວມກັບຫຼາຍປະສາດສຳຜັດ ແລະ ຊ່ວຍ ໃຫ້ເດັກບໍ່ພຽງແຕ່ໄດ້ຮັບຂໍ້ມູນຈາກປຶ້ມແບບຮຽນ ຫຼື ຄູສອນຢ່າງບໍ່ຕັ້ງໃຈເທົ່ານັ້ນ, ແຕ່ຍັງໃຊ້ຂໍ້ມູນທີ່ເຂົາເຈົ້າຫາກໍ່ຮຽນຮູ້ມາຢ່າງ ກະຕືລືລົ້ນ ເຊິ່ງເປັນບາດກ້າວທີ່ສຳຄັນເພື່ອຮັບປະກັນວ່າເດັກຈະຈື່ຈຳສິ່ງທີ່ເຂົາເຈົ້າຮຽນຮູ້ໄດ້. ການສຶກສາຄົ້ນຄ້ວາຫຼ້າສຸດຂອງທ່ານ Keeley (2024) ຍັງໄດ້ສັງເກດເຫັນສິ່ງທ້າທາຍຈຳນວນໜຶ່ງທີ່ກ່ຽວຂ້ອງກັບຮູບພາບໃນການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ (EORE) ແລະ ໃຫ້ຄຳແນະນຳສະເພາະ ເຊັ່ນ: ການນຳໃຊ້ຮູບກາຕູນແບບງ່າຍໆສຳລັບຄົນ, ການກຳນົດຂະໜາດຂອງ ອາວຸດທີ່ແຕກຕ່າງກັນ, ແລະ ການນຳໃຊ້ຮູບແບບພິມ 3 ມິຕິ.[36]

- **ຕ້ອງມີຄວາມເຂົ້າໃຈເປົ້າໝາຍຂອງການໂຄສະນາ ບໍ່ວ່າຈະນຳໃຊ້ພາສາໃດກໍ່ຕາມເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ**. ໃນກຸ່ມຂອງຜູ້ ໃຫຍ່, ອັດຕາການຮັບຮູ້ການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ເພີ່ມຂຶ້ນ ຍ້ອນຄວາມຄ່ອງແຄ້ວໃນການເຂົ້າໃຈ ແລະ ເວົ້າ ພາສາລາວ ດີຂຶ້ນ. ຂໍ້ລິເລີ່ມການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕຄວນແນໃສ່ຮັບປະກັນຄວາມເຂົ້າໃຈ ແລະ ໃຊ້ ພາສາທ້ອງຖິ່ນທຸກຄັ້ງຕາມຄວາມເໝາະສົມ ເພື່ອບັນລຸເປົ້າໝາຍການໂຄສະນາໃຫ້ຄວາມຮູ້. ເດັກຫຼາຍຄົນໃນເຂດພູມສັນຖານທີ່ມີ ລະເບີດຕົກຄ້າງຫຼາຍ ບໍ່ໄດ້ເວົ້າພາສາລາວເວລາເຂົາເຈົ້າຢູ່ເຮືອນ. ຫຼັກສູດຂອງໂຮງຮຽນແມ່ນສອນເປັນພາສາລາວ, ເຊິ່ງເປັນຊ່ອງ ຫວ່າງໜຶ່ງທີ່ອາດເຮັດໃຫ້ເດັກບໍ່ສາມາດຮັບຂໍ້ຄວາມຈາກການການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕແມ້ແຕ່ການຮັບຮູ້ຂໍ້ ມູນຈາກສະຖານທີ່ທີ່ອ້າງວ່າມີການເຮັດການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ. ບໍ່ແມ່ນຄູທຸກຄົນຈະສາມາດເວົ້າພາສາ ທ້ອງຖິ່ນທີ່ເຂົາເຈົ້າສອນຢູ່ໃນຊຸມຊົນນັ້ນ, ໂຮງຮຽນຈຶ່ງຄວນພິຈາລະນາການມີສ່ວນຮ່ວມຂອງສະມາຊິກໃນຊຸມຊົນເພື່ອຮັບປະກັນ ໃຫ້ເດັກເຂົ້າໃຈເນື້ອໃນໃນພາສາຂອງເຂົາເຈົ້າຢ່າງເຕັມສ່ວນ. ບັນຫານີ້ ຍັງຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການເສີມສ້າງການ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕຜ່ານຫຼາຍຊ່ອງທາງຕື່ມອີກ.

- **ມີສ່ວນຮ່ວມຢ່າງຈິງຈັງກັບຜູ້ລອດຊີວິດຕາມຄວາມເໝາະສົມ**. ຜູ້ລອດຊີວິດຫຼາຍຄົນສະແດງຄວາມປາຖະໜາທີ່ຢາກປະກອບ ສ່ວນ ໂດຍການແບ່ງປັນເລື່ອງເລົ່າຂອງເຂົາເຈົ້າກັບຄົນອື່ນ.

[36] Keeley, 2024.

- **ມີສ່ວນຮ່ວມກັບຊຸມຊົນໃນການອອກແບບໂຄງການ.** ມີສ່ວນຮ່ວມຢ່າງຈິງຈັງກັບຜູ້ລອດຊີວິດ, ຄູສອນ, ພໍ່ແມ່ ແລະ ຜູ້ນຳທ້ອງຖິ່ນ ໃນການສ້າງຂໍ້ຄວາມໂຄສະນາ ແລະ ການເຮັດການໂຄສະນາໃຫ້ຄວາມຮູ້ ເພື່ອຮັບປະກັນວ່າໂຄງການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ຄຳນຶງເຖິງມາດຕະຖານດ້ານວັດທະນະທຳ ແລະ ສະພາບຕົວຈິງຂອງທ້ອງຖິ່ນ.

## ກຳນົດເປົ້າໝາຍ ແລະ ປັບປຸງໂຄງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ສຳລັບເດັກ

**ພິຈາລະນາເພີ່ມຄວາມຖີ່ໃນການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ສຳລັບເດັກຢູ່ໂຮງຮຽນ, ໂດຍສະເພາະໃນຊັ້ນປະຖົມ.** ໂຮງຮຽນແມ່ນແຫຼ່ງຂໍ້ມູນທີ່ກຸ່ມເດັກອ້າງເຖິງຫຼາຍທີ່ສຸດກ່ຽວກັບການສຶກສາໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດ. ຢ່າງໃດກໍ່ຕາມ, ໂດຍທົ່ວໄປແລ້ວ ຄວາມຮັບຮູ້ກ່ຽວກັບການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນກຸ່ມເດັກແມ່ນຍັງຢູ່ໃນລະດັບຕໍ່າ. ດັ່ງທີ່ໄດ້ກ່າວໄວ້ໃນການສົນທະນາ, ການສອນບົດຮຽນເທື່ອດຽວຕໍ່ປີ ອາດຈະບໍ່ພຽງພໍສຳລັບເດັກທີ່ຈະສາມາດດູດຊຶມ ແລະ ປະຕິບັດຕາມຂໍ້ຄວາມການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ໄດ້. ພາກສ່ວນກ່ຽວຂ້ອງຄວນພິຈາລະນາທາງເລືອກໃນການຂະຫຍາຍຫຼັກສູດການຮຽນ-ການສອນທີ່ມີຢູ່ແລ້ວ ຂອງໂຮງຮຽນ ໂດຍສະເພາະແມ່ນໃນເຂດທີ່ມີຄວາມສ່ຽງສູງ ເພື່ອຮັບປະກັນຄວາມຖີ່ ແລະ ຄວາມເລິກເຊິ່ງຂອງການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ຢູ່ໃນໂຮງຮຽນໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນວ່າເດັກໄດ້ຮັບຄວາມຮູ້ ເຖິງແມ່ນວ່າເຂົາເຈົ້າຈະຂາດຮຽນມື້ໜຶ່ງ ແລະ ເພື່ອໃຫ້ເດັກໄດ້ຮຽນຮູ້ຫຼາຍໆຄັ້ງ ເຊິ່ງຈະເຮັດໃຫ້ເຂົາເຈົ້າສາມາດເສີມສ້າງຄວາມຮູ້ຂອງເຂົາເຈົ້າໄດ້.

- **ຊອກຫາວິທີ ໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ໂດຍຜ່ານຫຼາຍຊ່ອງທາງຕ່າງໆເພີ່ມເຕີມ.** ຢູ່ນອກໂຮງຮຽນ, ບໍ່ມີເດັກກາຍໜຶ່ງ ຄົນທີ່ກ່າວເຖິງແຫຼ່ງຂໍ້ມູນການສຶກສາໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດແຫຼ່ງອື່ນໆເລີຍ. (ເດັກແຕ່ລະຄົນອ້າງເຖິງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ບ້ານໃກ້ເຮືອນຄຽງ/ຊາວບ້ານ ແລະ ຄອບຄົວ). ອັນນີ້ຊີ້ໃຫ້ເຫັນເຖິງຊ່ອງຫວ່າງ ແລະ ໂອກາດທີ່ສຳຄັນ ເພື່ອຮັບປະກັນໃຫ້ເດັກໄດ້ຮັບຂໍ້ຄວາມກ່ຽວກັບອັນຕະລາຍຈາກລະເບີດ ຜ່ານຫຼາຍຊ່ອງທາງ. ການເພີ່ມແຫຼ່ງຂໍ້ມູນທີ່ເຕືອນເດັກກ່ຽວກັບ ລບຕ ໃຫ້ກ້ວາງຂວາງຂຶ້ນ ອາດຊ່ວຍໃນການຫຼຸດຜ່ອນຄວາມເປັນໄປໄດ້ຂອງການພາດໂອກາດໃນການຮຽນຮູ້ ຫຼື ລືມຂໍ້ຄວາມຕ່າງໆຈາກໂຮງຮຽນ ຖ້າບໍ່ໄດ້ເຮັດການເຜີຍແຜ່ເລື້ອຍໆ.

## ການກຳໜົດເປົ້າໝາຍ ແລະ ການປັບປຸງການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກ ລບຕ ສຳລັບຜູ້ໃຫຍ່ ແລະ ຊຸມຊົນ

- **ຮັບປະກັນວ່າ ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ສາມາດເຂົ້າເຖິງຜູ້ຊາຍໃນໄວເຮັດວຽກທີ່ມີຄວາມສ່ຽງ:** ຂໍ້ມູນຊີ້ບອກວ່າ ອັດຕາຄວາມຮູ້ກ່ຽວກັບລະເບີດບໍ່ທັນແຕກ (ລບຕ) ກ່ອນໜ້າເກີດອຸປະຕິເຫດ ໃນກຸ່ມແມ່ຍິງແມ່ນສູງກວ່າຜູ້ຊາຍ. ເຖິງວ່າການສຶກສາຄົ້ນຄ້ວາຄັ້ງນີ້ ຈະບໍ່ສາມາດຊີ້ໃຫ້ເຫັນຢ່າງຈະແຈ້ງເຖິງເຫດຜົນຂອງຄວາມແຕກຕ່າງນີ້, ແຕ່ເຫດຜົນທີ່ໜ້າຈະເປັນໄປໄດ້ ລວມມີບົດບາດທາງເພດໃນຊຸມຊົນທີ່ສະໜັບສະໜູນການມີສ່ວນຮ່ວມຂອງແມ່ຍິງ ແລະ ຮູບແບບການເຄື່ອນໄຫວຂອງຜູ້ຊາຍ (ຫຼື ການບໍ່ຢູ່ເຮືອນໃນຕອນກາງເວັນຂອງຜູ້ຊາຍ) ເພື່ອໄປເຮັດວຽກ ເຊິ່ງເຮັດໃຫ້ເຂົາເຈົ້າບໍ່ມີເວລາຮ່ວມກິດຈະກຳ. ໂດຍຄຳນຶງວ່າຜູ້ຊາຍບາດເຈັບ ແລະ ເສຍຊີວິດຍ້ອນອຸປະຕິເຫດ ລບຕ ຫຼາຍກວ່າແມ່ຍິງ, ຄວາມພະຍາຍາມໃນອະນາຄົດຈຳເປັນຕ້ອງຄົ້ນຫາອຸປະສັກຕໍ່ການມີສ່ວນຮ່ວມຂອງຜູ້ຊາຍ ແລະ ພັດທະນາຄວາມພະຍາຍາມທີ່ກົງກັບເປົ້າໝາຍ ເພື່ອຮັບປະກັນວ່າ ການໂຄສະນາສຶກສາ ຄວາມສ່ຽງໄພຈາກ ລບຕ (EORE) ສາມາດເຂົ້າເຖິງຜູ້ຊາຍໄດ້.

**ຄຳຖາມບົດຄົ້ນຄວ້າ ທີ 3:**

- **ຊຸກຍູ້ໃຫ້ຜູ້ໃຫຍ່ເວົ້າກັບເດັກນ້ອຍກ່ຽວກັບຈຸດຕ່າງໆທີ່ສຳຄັນ.** ໂດຍສອດຄ່ອງກັບຄຳແນະນຳຂ້າງເທິງທີ່ວ່າ ການສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກລະເບີດທີ່ວາງເປົ້າຫມາຍໃສ່ເດັກ ສາມາດເຮັດໄດ້ໂດຍຜ່ານແຫຼ່ງຂໍ້ມູນທີ່ຫຼາກຫຼາຍຂອງເຂົາເຈົ້າ, ການສຶກສາໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດສຳລັບຜູ້ໃຫຍ່ ບໍ່ພຽງແຕ່ຄວນສຸມໃສ່ວິທີທີ່ຜູ້ໃຫຍ່ສາມາດຮັກສາຕົນເອງໃຫ້ປອດໄພໄດ້, ແຕ່ຍັງຄວນສຸມໃສ່ບົດບາດທີ່ສຳຄັນຂອງເຂົາເຈົ້າໃນການແລກປ່ຽນ ແລະ ການໃຊ້ຂໍ້ຄວາມຈາກການສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກລະເບີດ ສຳລັບເດັກ.

- **ນຳໃຊ້ສື່ສັງຄົມ ແລະ ສື່ມວນຊົນ ເພື່ອໃຫ້ສາມາດເຂົ້າເຖິງກຸ່ມເປົ້າໝາຍ.** ປະເທດລາວ ໄດ້ເຫັນການເພີ່ມຂຶ້ນຢ່າງຫຼວງຫຼາຍໃນການເປັນເຈົ້າຂອງໂທລະສັບມືຖື ແລະ ການເຊື່ອມຕໍ່ດິຈິຕອນ. ມີການເຊື່ອມຕໍ່ໂທລະສັບມືຖືທີ່ມີການເຄື່ອນໄຫວຢູ່ໃນປະເທດ 6.78 ລ້ານຄັ້ງ ເທົ່າກັບ 86.7% ຂອງປະຊາກອນທັງຫມົດ.[37] ການໃຊ້ແພລະຕະຟອມດິຈິຕອລສຳລັບການສຶກສາໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກລະເບີດ ຈະເປັນປັດໃຈສຳຄັນສຳລັບຄວາມຕ້ອງການຂອງຊຸມຊົນທີ່ມີຄວາມເຂົ້າໃຈຫຼາຍຂຶ້ນ. ໃນຂະນະທີ່ ຂໍ້ມູນອາດຈະມີຢູ່ຜ່ານສື່ສັງຄົມ, ມີຜູ້ຖືກເຄາະຮ້າຍຈຳນວນຫນ້ອຍ (ຜູ້ໃຫຍ່ ຫຼື ເດັກນ້ອຍ) ທີ່ອ້າງເຖິງການຮູ້ຂໍ້ມູນຜ່ານສື່ສັງຄົມ. ພ້ອມກັນນັ້ນ, ເຄື່ອງມືດິຈິຕອນອາດຈະສ້າງໂອກາດໃໝ່ໃຫ້ແກ່ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ຜູ້ໃຫ້ບໍລິການ.

---

[37] Kemp, S. (2025). ດິຈິຕອລ 2025 ລາວ. ບົດລາຍງານຂໍ້ມູນ. https://datareportal.com/reports/digital-2025-laos

## ຄຳຖາມບົດຄົ້ນຄ້ວາ ທີ4:

ຜູ້ຖືກເຄາະຮ້າຍຈາກອຸປະຕິເຫດມີຄວາມຕ້ອງການ ການຊ່ວຍເຫຼືອດ້ານການບາດເຈັບ ແລະ ການຟື້ນຟູໜ້າທີ່ການຂອງເຂົາເຈົ້າ ແນວໃດແດ່ຫຼັງຈາກເກີດອຸປະຕິເຫດ ແລະ ເຂົາເຈົ້າໄດ້ຮັບການຕອບສະໜອງຊ່ວຍເຫຼືອໃນລະດັບໃດ ແລະ ຊ່ວຍແນວໃດ?

## 4. ຜູ້ຖືກເຄາະຮ້າຍຈາກອຸປະຕິເຫດມີຄວາມຕ້ອງການ ການຊ່ວຍເຫຼືອດ້ານການບາດເຈັບ ແລະ ການຟື້ນຟູໜ້າທີ່ການຂອງເຂົາເຈົ້າ ແນວໃດແດ່ຫຼັງຈາກເກີດອຸປະຕິເຫດ ແລະ ເຂົາເຈົ້າໄດ້ຮັບການຕອບສະໜອງຊ່ວຍເຫຼືອໃນລະດັບໃດ ແລະ ຊ່ວຍແນວໃດ?

ໃນພາກນີ້ຂອງບົດລາຍງານ ຈະວິເຄາະເບິ່ງຄວາມຕ້ອງການ, ສິ່ງທ້າທາຍ ແລະ ປະສົບການຂອງຜູ້ລອດຊີວິດທີ່ກ່ຽວຂ້ອງກັບຜົນກະທົບ ແລະ ການດູແລສຸຂະພາບທາງຮ່າງກາຍ ແລະ ສຸຂະພາບດ້ານຈິດ ຂອງຜູ້ລອດຊີວິດ. ຜົນການສຶກສາຄົ້ນຄ້ວາ ໄດ້ສະແດງໃຫ້ເຫັນເຖິງລະບົບການສະໜັບສະໜູນ ທີ່ຜູ້ລອດຊີວິດໄດ້ຮັບຕັ້ງແຕ່ເວລາທີ່ເກີດອຸປະຕິເຫດຈົນເຖິງຂະບວນການຟື້ນຟູໃນໄລຍະຍາວ. ໂດຍສະເພາະ, ການວິເຄາະໄດ້ແບ່ງອອກເປັນຫຼາຍພາກສ່ວນເພື່ອກວມເອົາຂົງເຂດສຳຄັນດັ່ງໄປນີ້:

- ການຕອບສະໜອງຊ່ວຍເຫຼືອທາງການແພດໃນທັນທີແມ່ນຖືກນຳສະເໜີຜ່ານຂໍ້ມູນກ່ຽວກັບໄລຍະເວລາຕັ້ງແຕ່ຕອນເກີດອຸປະຕິເຫດ ຈົນເຖິງເວລາທີ່ໄດ້ຮັບການດູແລ ແລະ ລະດັບການດູແລທາງການແພດທີ່ໄດ້ຮັບ. ຜົນການສຶກສາຄົ້ນຄ້ວາ ລວມມີການວິເຄາະຄວາມຊັກຊ້າຢ່າງຫຼວງຫຼາຍ ແລະ ການນຳໃຊ້ການບໍລິການຢູ່ສະຖານທີ່ປິ່ນປົວຫຼາຍແຫ່ງ. ການລາຍງານດ້ານຄຸນນະພາບຈາກຜູ້ລອດຊີວິດ ໄດ້ເສີມໃສ່ຂໍ້ມູນດ້ານປະລິມານ ແລະ ການອະທິບາຍຂະບວນການເຂົ້າເຖິງການດູແລຈາກມຸມມອງຂອງຜູ້ລອດຊີວິດ.
- ຂໍ້ມູນກ່ຽວກັບປະເພດການປິ່ນປົວດູແລທີ່ຜູ້ລອດຊີວິດໄດ້ຮັບ ສະແດງໃຫ້ເຫັນເຖິງພາບລວມຂອງການເຂົ້າໄປແຊກແຊງຊ່ວຍເຫຼືອທາງການແພດທີ່ຈຳເປັນ ຫຼັງຈາກເກີດອຸປະຕິເຫດ ລບຕ.
- ການລາຍງານດ້ານຄຸນນະພາບກ່ຽວກັບປະສົບການຂອງຜູ້ລອດຊີວິດຈາກອາການທັນທີທັນໃດ ທັງທາງດ້ານຮ່າງກາຍ (ເຊັ່ນ: ອາການເຈັບ, ການສູນເສຍການເບິ່ງເຫັນ, ຫູອື້) ແລະ ທາງດ້ານຈິດໃຈ (ເຊັ່ນ: ຄວາມຕົກໃຈ, ຄວາມຢ້ານກົວ, ຄວາມໂສກເສົ້າ) ໄດ້ຖືກບັນທຶກໄວ້ຜ່ານການລາຍງານທາງດ້ານຄຸນນະພາບ.
- ໃນພາກນີ້ຂອງບົດລາຍງານ ຈະເປີດເຜີຍໃຫ້ເຫັນຊ່ອງຫວ່າງທີ່ຮ້າຍແຮງໃນລະບົບການຟື້ນຟູໜ້າທີ່ການ ໂດຍຈະລາຍງານກ່ຽວກັບຈຳນວນຜູ້ລອດຊີວິດທີ່ໜ້ອຍທີ່ສຸດທີ່ໄດ້ຮັບການບໍລິການຟື້ນຟູໜ້າທີ່ການ.
- ຫຼັກຖານກ່ຽວກັບຜົນກະທົບໄລຍະຍາວທີ່ມີຕໍ່ສຸຂະພາບທາງຮ່າງກາຍ ແລະ ທ່າແຮງໃນການຟື້ນຟູຢ່າງຕໍ່ເນື່ອງ ແມ່ນມາຈາກຂໍ້ມູນກ່ຽວກັບລະດັບຄວາມຫຍຸ້ງຍາກຂອງຜູ້ລອດຊີວິດກ່ຽວກັບກັບກິດຈະກຳການດຳລົງຊີວິດປະຈຳວັນ ລວມທັງການລາຍງານຂອງຜູ້ລອດຊີວິດກ່ຽວກັບຄວາມຕ້ອງການດ້ານສຸຂະພາບທາງຮ່າງກາຍໃນໄລຍະຍາວ ທີ່ບໍ່ໄດ້ຮັບການຕອບສະໜອງ.
- ສຸດທ້າຍ, ໃນພາກນີ້ຂອງບົດລາຍງານ ຈະສຳຫຼວດກ່ຽວກັບຜົນກະທົບຫຼາຍດ້ານ ທີ່ຜູ້ລອດຊີວິດສະແດງອອກ ທີ່ກ່ຽວຂ້ອງກັບບາດແຜທາງດ້ານຈິດໃຈ, ສຸຂະພາບຈິດ ແລະ ການກັບຄືນສູ່ສັງຄົມ ຫຼັງຈາກເກີດເຫດສຸກເສີນທາງການແພດໃນເບື້ອງຕົ້ນ.

### ຜົນໄດ້ຮັບຈາກຄຳຖາມທີ 4

ຜົນການສຶກສາຄົ້ນຄ້ວາທີ່ນຳສະເໜີຢູ່ໃນບົດລາຍງານນີ້ ເນັ້ນໃສ່ຜົນກະທົບທັນທີຫຼັງຈາກເກີດອຸປະຕິເຫດ ລບຕ ໂດຍລະບຸລາຍລະອຽດກ່ຽວກັບສິ່ງທ້າທາຍຕ່າງໆ ທີ່ຜູ້ລອດຊີວິດປະເຊີນໃນການເຂົ້າເຖິງການດູແລທາງການແພດຢ່າງທັນເວລາ ແລະ ເໝາະສົມ. ການວິເຄາະນີ້ ເນັ້ນໃຫ້ເຫັນເຖິງຄວາມຊັກຊ້າທີ່ສຳຄັນໃນການໄດ້ຮັບການປິ່ນປົວ, ສຳຫຼວດລະດັບຕ່າງໆຂອງສະຖານທີ່ປິ່ນປົວຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ທີ່ເປັນເດັກນຳໃຊ້ ແລະ ບັນທຶກການບາດເຈັບທາງຮ່າງກາຍ ແລະ ຈິດໃຈທີ່ເກີດຂຶ້ນໃນທັນທີ ລວມທັງອາການຊ໊ອກ, ຄວາມເຈັບປວດ ແລະ ຄວາມຢ້ານກົວທີ່ຍັງມີຢູ່ ທີ່ຜູ້ເຄາະຮ້າຍປະສົບ. ສິ່ງສຳຄັນແມ່ນ ຂໍ້ມູນດັ່ງກ່າວເນັ້ນໃຫ້ເຫັນເຖິງຊ່ອງຫວ່າງທີ່ຮ້າຍແຮງ ແລະ ເປັນລະບົບໃນຂະບວນການຟື້ນຟູ ໂດຍເປີດເຜີຍໃຫ້ເຫັນວ່າ ມີຜູ້ລອດຊີວິດຈຳນວນໜ້ອຍຫຼາຍ ແລະ ບໍ່ມີເດັກ ທີ່ລາຍງານວ່າໄດ້ຮັບການບໍລິການຟື້ນຟູສຸຂະພາບທີ່ຈຳເປັນໃນໄລຍະຍາວ.

## ໄລຍະເວລາຂອງການບາດເຈັບ ແລະ ການດູແລທາງການແພດ ແລະ ລະດັບຂອງການດູແລທັນທີຫຼັງຈາກເກີດອຸປະຕິເຫດ ລບຕ

ຄວາມເຂົ້າໃຈກ່ຽວກັບການຊ່ວຍເຫຼືອທາງການແພດທັນທີ ແລະ ການສະໜັບສະໜູນຊ່ວຍເຫຼືອຫຼັງຈາກເກີດອຸປະຕິເຫດ ມີຄວາມສຳຄັນຫຼາຍສຳລັບການປະເມີນຜົນກະທົບຈາກອຸປະຕິເຫດ ລບຕ ແລະ ລະບຸຊ່ອງຫວ່າງໃນການເຂົ້າເຖິງການດູແລສຸຂະພາບ. ໃນຈຳນວນຜູ້ໃຫຍ່ 32 ຄົນ ແລະ ເດັກ 18 ຄົນ, ມີພຽງແຕ່ຄົນດຽວຈາກແຕ່ລະກຸ່ມທີ່ບໍ່ໄດ້ຮັບການປິ່ນປົວຈາກແພດ, ໂດຍກ່າວວ່າອາການບາດເຈັບບໍ່ຮຸນແຮງຫຼາຍ.

ຂໍ້ມູນທີ່ເກັບກຳໄດ້ ສະແດງໃຫ້ເຫັນເຖິງຄວາມລ່າຊ້າທີ່ເກີດຂຶ້ນໃນການດູແລ (ຕາຕະລາງທີ 5). ໃນບັນດາຜູ້ບາດເຈັບທີ່ເປັນຜູ້ໃຫຍ່ 31 ຄົນ , ມີພຽງແຕ່ 6% ໄດ້ຮັບການດູແລທັນທີທັນໃດ, ແລະ 19% ໄດ້ຮັບການດູແລພາຍໃນ 15 ນາທີທຳອິດ. ຜູ້ໃຫຍ່ສ່ວນຫຼາຍ (29%) ໄດ້ຮັບການດູແລໃນລະຫວ່າງ 1 ຫາ 3 ຊົ່ວໂມງ, ສິ່ງທີ່ໜ້າສັງເກດແມ່ນ ມີພຽງຜູ້ລອດຊີວິດພຽງຄົນດຽວເທົ່ານັ້ນ ທີ່ລາຍງານວ່າໄດ້ຮັບການດູແລທັນທີຢູ່ສະຖານທີ່ເກີດເຫດ, ເຊິ່ງເນັ້ນໃຫ້ເຫັນເຖິງຊ່ອງຫວ່າງທີ່ສຳຄັນໃນການຊ່ວຍເຫຼືອເບື້ອງຕົ້ນ ຫຼື ການຕອບສະໜອງຕໍ່ເຫດສຸກເສີນ. ຢ່າງໃດກໍຕາມ, ໃນກຸ່ມຜູ້ໃຫຍ່ ບຸກຄົນດັ່ງກ່າວໄດ້ຮັບການດູແລຂັ້ນພື້ນຖານຢູ່ສະຖານທີ່ເກີດເຫດ ໂດຍກ່າວວ່າ "ຫຼັງຈາກອຸປະຕິເຫດລະເບີດແຕກ, ແພດໝໍຈາກອົງການເກັບກູ້ລະເບີດ ໄດ້ມາປິ່ນປົວບາດແຜໂດຍການທຳຄວາມສະອາດບາດແຜ ແລະ ສັກຢາໃຫ ຢູ່ສະຖານທີ່ເກີດເຫດ." ຜູ້ລອດຊີວິດຄົນນີ້ແມ່ນຜູ້ໃຫຍ່ຄົນໜຶ່ງທີ່ລາຍງານວ່າບໍ່ໄດ້ໄປຫາການດູແລທາງການແພດ ແລະ ໃຫ້ເຫດຜົນວ່າ ບໍ່ມີຄວາມຈຳເປັນໃນການດູແລທາງການແພດຕື່ມອີກ ເນື່ອງຈາກການບາດເຈັບບໍ່ຮ້າຍແຮງ.

ຜູ້ລອດຊີວິດສ່ວນໃຫຍ່ ຈຳເປັນຕ້ອງໄດ້ຮັບການປິ່ນປົວໃນຫຼາຍລະດັບຂອງລະບົບສາທາລະນະສຸກ. ຫຼາຍກວ່າເຄິ່ງໜຶ່ງຂອງຜູ້ໃຫຍ່ (52%) ໄດ້ໄປປິ່ນປົວຢູ່ໂຮງໝໍເມືອງ, 48% ແມ່ນໄດ້ໄປປິ່ນປົວຢູ່ໂຮງໝໍແຂວງ ແລະ 45% ເລີ່ມຕົ້ນການປິ່ນປົວຢູ່ສຸກສາລາ. ກົງກັນຂ້າມ, ເດັກສ່ວນໃຫຍ່ (71%) ໄດ້ຮັບການເບິ່ງແຍງດູແລຢູ່ໂຮງໝໍແຂວງ. ບໍ່ມີຜູ້ລອດຊີວິດລາຍງານວ່າໄດ້ຮັບການປິ່ນປົວຢູ່ສະຖານທີ່ເອກະຊົນ, ເຊິ່ງຍັງບໍ່ມີການປິ່ນປົວດັ່ງກ່າວຢູ່ໃນເຂດຊົນນະບົດ.

*ຕາຕະລາງທີ 8: ໄລຍະເວລາທີ່ໄດ້ຮັບການປິ່ນປົວທາງການແພດ ແລະ ລະດັບການປິ່ນປົວທີ່ໄດ້ຮັບຫຼັງຈາກເກີດອຸປະຕິເຫດ ລບຕ*

| | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (n=31) | | ຜູ້ລອດຊີວິດທີ່ເປັນເດັກ (n=17) | |
|---|---|---|---|---|
| | % | n | % | n |
| **ໄລຍະເວລາທີ່ໄດ້ຮັບການດູແລປິ່ນປົວ** | | | | |
| ທັນທີ | 6.4 | 2 | - | - |
| ພາຍໃນ 15 ນາທີ | 19.3 | 6 | 5.9 | 1 |
| ໃນລະຫວ່າງ 15 ຫາ 30 ນາທີ | 9.7 | 3 | 29.4 | 5 |
| ໃນລະຫວ່າງ 30 ຫາ 60 ນາທີ | 16.1 | 5 | 5.9 | 1 |
| ໃນລະຫວ່າງ 1 ຫາ 3 ຊົ່ວໂມງ | 29.0 | 9 | 52.9 | 9 |

| | | | | |
|---|---|---|---|---|
| ຫຼາຍກວ່າ 3 ຊົ່ວໂມງ | - | - | - | - |
| ໃນລະຫວ່າງ 3 ຫາ 24 ຊົ່ວໂມງ | 6.4 | 2 | 5.9 | 1 |
| ໃນລະຫວ່າງ 2 ຫາ 3 ມື້ | 9.7 | 3 | - | - |
| ຫຼາຍກວ່າ 3 ມື້ | - | - | - | - |
| ບໍ່ຮູ້ | 3.2 | 1 | - | - |
| **ລະດັບຂອງການດູແລທາງການແພດ*** | | | | |
| ການປະຖົມພະຍາບານເບື້ອງຕົ້ນຢູ່ບ່ອນເກີດເຫດ | - | - | - | - |
| ສຸກສາລາ (ຂອງລັດ) | 45.2 | 14 | 5.9 | 51 |
| ໂຮງໝໍເມືອງ (ຂອງລັດ) | 51.6 | 16 | 23.5 | 4 |
| ໂຮງໝໍແຂວງ (ຂອງລັດ) | 48.4 | 15 | 70.6 | 12 |
| ໂຮງໝໍຂັ້ນສູນກາງ (ຂອງລັດ) | 3.2 | 1 | - | - |
| *ໄດ້ໃຫ້ຜູ້ໃຫຍ່ບອກເລົ່າກ່ຽວກັບທຸກລະດັບຂອງການດູແລ, ສ່ວນເດັກແມ່ນໃຫ້ເຂົາເຈົ້າລະບຸການດູແລຂັ້ນຕົ້ນເທົ່ານັ້ນ; ບໍ່ມີໃຜລາຍງານວ່າໄດ້ຮັບການເບິ່ງແຍງຈາກສະຖານພະຍາບານຂອງເອກະຊົນ | | | | |

ໃນເລື່ອງເລົ່າຂອງຜູ້ລອດຊີວິດ, ເຂົາເຈົ້າໄດ້ລະບຸຂັ້ນຕອນທີ່ສຳຄັນໃນການດູແລທາງການແພດທັນທີຂອງເຂົາເຈົ້າ ເຊິ່ງລວມມີ (1) ການໄດ້ຮັບການຊ່ວຍເຫຼືອເບື້ອງຕົ້ນຈາກສະມາຊິກຊຸມຊົນ, (2) ການໄດ້ຮັບການຂົນສົ່ງໄປຫາການດູແລທາງການແພດເບື້ອງຕົ້ນ, (3) ການໄດ້ຮັບການເບິ່ງແຍງທາງການແພດ ແລະ ຖ້າຈຳເປັນ ໄດ້ຮັບການຍົກຍ້າຍການປິ່ນປົວເພີ່ມເຕີມ.

ໃນຫຼາຍໆກໍລະນີ, ຜູ້ລອດຊີວິດໄດ້ຮ້ອງຂໍຄວາມຊ່ວຍເຫຼືອຈາກຄອບຄົວ ຫຼື ເພື່ອນບ້ານ ຫຼື ໃນກໍລະນີທີ່ຜູ້ລອດຊີວິດໝົດສະຕິ ຄົນອື່ນໄດ້ຍິນສຽງລະເບີດກໍ່ເຂົ້າມາຊ່ວຍ. ນາງ ສົມໃຈ ອະທິບາຍວ່າ ລາວໄດ້ຮ້ອງຂໍຄວາມຊ່ວຍເຫຼືອແນວໃດ ແລະ ສະມາຊິກຊຸມຊົນ ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອລາວແນວໃດແດ່ ເພື່ອໃຫ້ໄດ້ຮັບການປິ່ນປົວ: *"ເມື່ອຂ້ອຍເບິ່ງຕົວເອງ, ຂ້ອຍເຫັນມີເລືອດໄຫຼອອກ ແລະ ຂ້ອຍກໍ່ລົ້ມລົງ. ກ່ອນທີ່ຂ້ອຍຈະລົ້ມ, ຂ້ອຍໄດ້ຮ້ອງຂໍຄວາມຊ່ວຍເຫຼືອຈາກພວກເຂົາ, ມີຄົນມາຊ່ວຍໂຈມເອົາຂ້ອຍ ແລະ ເອົາຂ້ອຍວາງລົງຊ້າໆ, ຂ້ອຍໄດ້ຍິນຄົນເຫຼົ່ານັ້ນບອກຂ້ອຍວ່າ ເຂົາເຈົ້າຈະພາຂ້ອຍໄປໂຮງໝໍ ແລະ ບອກຂ້ອຍວ່າ ຢ່າຫຼັບຕາ." ຂ້ອຍເບິ່ງຕົວເອງ ແລະ ຂ້ອຍຕົກໃຈ, ແຕ່ຂ້ອຍບໍ່ໄດ້ຫຼັບຕາ."*

ໃນບາງກໍລະນີ, ການດຶງດູດຄວາມສົນໃຈຈາກຄົນອື່ນອາດຈະໃຊ້ເວລາດົນ. ຕົວຢ່າງ, ຜູ້ລອດຊີວິດຄົນໜຶ່ງກ່າວວ່າ, "ການລະເບີດເກີດຂຶ້ນທັນທີ, ໃນຂະນະທີ່ຂ້ອຍບໍ່ຮູ້ສຶກຫຍັງໃນເວລານັ້ນ ຈົນກະທັ້ງປະມານ 5 ນາທີຕໍ່ມາ ຂ້ອຍຈຶ່ງຮູ້ສຶກຕົວ ແລະ ຫຼັງຈາກນັ້ນກໍ່ພະຍາຍາມເອົາຕົວເອງອອກຈາກບໍລິເວນທີ່ເກີດເຫດລະເບີດ. ຂ້ອຍໄດ້ໂທຫາອ້າຍຂອງຂ້ອຍໃຫ້ມາຊ່ວຍ ແລະ ພາຂ້ອຍໄປໂຮງໝໍ."

**ຄຳຖາມບົດຄົ້ນຄວ້າ ທີ 4:**

ໃນການອະທິບາຍວິທີການຂົນສົ່ງເຂົາເຈົ້າ ຈາກຈຸດເກີດເຫດລະເບີດໄປຫາສະຖານທີ່ປິ່ນປົວແຫ່ງທຳອິດຂອງເຂົາເຈົ້ານັ້ນ, ເດັກຫຼາຍໆຄົນໄດ້ອະທິບາຍວ່າ ແມ່ນຄອບຄົວ ຫຼື ເພື່ອນບ້ານ ເປັນຜູ້ເອົາເຂົາເຈົ້າໄປໂຮງໝໍດ້ວຍຍານພາຫະນະສ່ວນຕົວຂອງເຂົາເຈົ້າ. ສຳລັບຜູ້ລອດຊີວິດຜູ້ໃຫຍ່ ແລະ ເດັກ ໄລຍະເວລາທີ່ໃຊ້ໃນການດຳເນີນຂັ້ນຕອນນີ້ແຕກຕ່າງກັນຢ່າງຫຼວງຫຼາຍ. ຜູ້ລອດຊີວິດບາງຄົນຈື່ວ່າ ແມ່ນສະມາຊິກໃນຄອບຄົວເອງເປັນຜູ້ຂັບລົດໄຖນາພາເຂົາເຈົ້າໄປໂຮງໝໍທັນທີ, ແຕ່ເດັກບາງຄົນໄດ້ອະທິບາຍເຖິງສິ່ງທ້າທາຍຫຼາຍຢ່າງທີ່ເຂົາເຈົ້າປະເຊີນ ໃນການພາເຂົາເຈົ້າໄປຮັບການປິ່ນປົວທາງການແພດ. ໃນເຫດການຕໍ່ໄປນີ້, ນາງ ແສງຈັນ ເລົ່າເຖິງປະສົບການທີ່ຍາກລຳບາກໃນການໄປໂຮງໝໍວ່າ: *"ພໍ່ຂອງຂ້ອຍບອກວ່າ ເລືອດຂ້ອຍອອກຫຼາຍ, ເຂົາເຈົ້າໄດ້ເອົາຂ້ອຍໃສ່ໃນເປ ແລະ ຫາມຂ້ອຍກັບບ້ານ ແລະ ໃຊ້ເວລາ 2 ຊົ່ວໂມງຈຶ່ງໄປຮອດເຮືອນ ເພາະມັນຢູ່ເທິງພູ ຂີ່ລົດຈັກໄປບໍ່ໄດ້, ອຸປະຕິເຫດດັ່ງກ່າວເກີດຂຶ້ນເວລາ 9 ໂມງເຊົ້າ ແລະ ໃຊ້ເວລາຮອດ 1 ໂມງສວາຍ ຈຶ່ງມາຮອດໂຮງໝໍ."*

ສ່ວນ ທ້າວ ຄຳດີ ສາມາດໄປຮອດສຸກສາລາໄດ້ໄວຂຶ້ນຫຼາຍ ເມື່ອ *"ມີຊາວບ້ານຄົນໜຶ່ງຊ່ວຍເອົາຜ້າພັນບາດທີ່ຂາທີ່ລູກລະເບີດແຕກໃສ່ ເພາະມີເລືອດອອກຫຼາຍທີ່ຂາ, ຈາກນັ້ນກໍ່ເອົາລົດໄຖນາສົ່ງຂ້ອຍໄປສຸກສາລາທັນທີ, ເຊິ່ງໃຊ້ເວລາປະມານ 20 ນາທີ."* ສຸກສາລາ ໜ້າຈະຕັ້ງຢູ່ໃກ້ກັບບ້ານຂອງຜູ້ລອດຊີວິດ ໃນຂະນະທີ່ໂຮງໝໍອາດຈະຢູ່ໄກກວ່າ. ໂດຍບໍ່ຄຳນຶງເຖິງປະເພດຂອງການດູແລ, ສິ່ງສຳຄັນແມ່ນຕ້ອງຮູ້ວ່າໄລຍະເວລາທີ່ຈະໃຊ້ໃນການເຂົ້າເຖິງການດູແລ ແລະ ປະເພດຂອງການຂົນສົ່ງນັ້ນ ມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍສຳລັບຜູ້ລອດຊີວິດແຕ່ລະຄົນ.

ການສຳພາດດ້ານຄຸນນະພາບກັບຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ເຮັດໃຫ້ມີຄວາມເຂົ້າໃຈບາງຢ່າງກ່ຽວກັບເຫດຜົນຂອງຄວາມຊ້າໃນການປິ່ນປົວດູແລ, ແຕ່ຄວາມຈິງທີ່ວ່າ ຜູ້ລອດຊີວິດຫຼາຍຄົນໝົດສະຕິ ບວກກັບເຫດຜົນທີ່ແຕກຕ່າງກັນຫຼາຍຢ່າງສຳລັບຄວາມຊ້າ ເຮັດໃຫ້ການລວບລວມຄຳອະທິບາຍຈາກສ່ວນບຸກຄົນໃຫ້ກາຍເປັນຂໍ້ສະຫຼຸບໄດ້ ເປັນເລື່ອງທີ່ມີຄວາມທ້າທາຍຫຼາຍ. ສຳລັບຜູ້ໃຫຍ່, ເຫດຜົນຂອງຄວາມຊັກຊ້າໃນການໄດ້ຮັບການປິ່ນປົວດູແລ ອາດຈະປະກອບມີດັ່ງຕໍ່ໄປນີ້: ອຸປະຕິເຫດເກີດຂຶ້ນໃນສະຖານທີ່ຫ່າງໄກສອກຫຼີກ, ດັ່ງທີ່ ນາງ ແສງຈັນ ໄດ້ເລົ່າມາຢູ່ຂ້າງເທິງ; ຜູ້ລອດຊີວິດຖືກນຳກັບບ້ານກ່ອນທີ່ຈະຖືກນຳໄປຫາສະຖານປິ່ນປົວ; ຄວາມຈຳເປັນໃນການກະກຽມເຄື່ອງຂອງທີ່ຈຳເປັນ, ເງິນ ຫຼື ການຂົນສົ່ງກ່ອນທີ່ຈະໄປສະຖານທີ່ປິ່ນປົວ; ແລະ ຄວາມເຂົ້າໃຈໃນເບື້ອງຕົ້ນກ່ຽວກັບຄວາມຮຸນແຮງຂອງການບາດເຈັບ. ຕົວຢ່າງຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ທີ່ອະທິບາຍບາງປັດໃຈເຫຼົ່ານີ້ຈາກບັນດາຜູ້ລອດຊີວິດ ລວມມີດັ່ງຕໍ່ໄປນີ້ :

> ຫຼັງຈາກເກີດເຫດການດັ່ງກ່າວ, ເພື່ອນບ້ານຜູ້ຊາຍຄົນໜຶ່ງໄດ້ເອົາຂ້ອຍຂຶ້ນລົດຈັກ ແລະ ກັບບ້ານເພື່ອກຽມຕົວໄປໂຮງໝໍ. ໃນຕອນນັ້ນ, ຂ້ອຍບໍ່ມີເງິນເລີຍ. ຂ້ອຍໄດ້ຢືມເງິນ 5,000,000 ກີບ ຈາກຊາວບ້ານຄົນໜຶ່ງດ້ວຍອັດຕາດອກເບ້ຍ 4% ຕໍ່ເດືອນ. ເມຍຂອງຂ້ອຍໄດ້ໄປຫາຜູ້ໃຫ້ກູ້ຢືມ ແລະ ຢືມເງິນ ແລະ ເກັບເອົາເຄື່ອງຂອງທີ່ຈຳເປັນທີ່ຈະໃຊ້ຢູ່ໂຮງໝໍ. ການກະກຽມທັງໝົດນີ້ໃຊ້ເວລາເກືອບ 3 ຊົ່ວໂມງ ຈຶ່ງໄປຮອດໂຮງໝໍເມືອງ.

> ຕອນເກີດການລະເບີດ, ຂ້ອຍເປັນລົມ ແຕ່ຮ່າງກາຍຂອງຂ້ອຍບໍ່ມີເລືອດອອກ, ສະນັ້ນຂ້ອຍຈຶ່ງບໍ່ໄດ້ໄປໂຮງໝໍ. ຫຼັງຈາກຕື່ນນອນຂ້ອຍຮູ້ສຶກເຈັບປວດທົ່ວຮ່າງກາຍ. ຈາກນັ້ນຂ້ອຍໄດ້ເອົາໝໍເຢົາມາປິ່ນປົວຂ້ອຍເປັນເວລາ 3 ມື້. ຂ້ອຍໃຊ້ເງິນປະມານ 5,000,000 ກີບ, ແຕ່ຂ້ອຍບໍ່ຫາຍດີ. ສະນັ້ນ, ຂ້ອຍໄດ້ຖືກນຳສົ່ງໄປໂຮງໝໍເພື່ອຮັບການປິ່ນປົວ.

> ສິ່ງທີ່ຂ້ອຍຈື່ໄດ້ແມ່ນ ອ້າຍຂອງຂ້ອຍໄດ້ຊ່ວຍຂ້ອຍໂດຍການເຈັ່ຍຂ້ອຍກັບບ້ານ. ຈາກນັ້ນ, ອຳນາດການປົກຄອງບ້ານໄດ້ມາຢ້ຽມຢາມເບິ່ງຂ້ອຍ ແລະ ບອກວ່າໃຫ້ສົ່ງຂ້ອຍໄປໂຮງໝໍທັນທີ.

ຜູ້ລອດຊີວິດ 2 ຄົນໄດ້ອະທິບາຍວ່າ ເຂົາເຈົ້າຢູ່ໃນກຸ່ມຫຼາຍໆຄົນ ເຊິ່ງມີຜູ້ບາດເຈັບຫຼາຍຄົນ ແລະ ສະມາຊິກຊຸມຊົນທີ່ບໍ່ໄດ້ຮັບບາດເຈັບ ຫຼື ຜູ້ທີ່ມາເບິ່ງສະຖານທີ່ເກີດເຫດໄດ້ຕັດສິນໃຈວ່າຈະພາຄົນເຈັບໄປຮັບການປິ່ນປົວຢູ່ໃສ  ໂດຍອີງໃສ່ການປະເມີນຄວາມຮຸນແຮງຂອງການບາດເຈັບ. ຕົວຢ່າງ, ຜູ້ລອດຊີວິດຄົນໜຶ່ງກ່າວວ່າ, *"ຫຼັງຈາກນັ້ນ, ພວກເຮົາໄດ້ຖືກນຳສົ່ງໄປສຸກສາລາ, ໃນຂະນະດຽວກັນ ບາງຄົນທີ່ໄດ້ຮັບບາດເຈັບສາຫັດໄດ້ຖືກນຳສົ່ງໄປໂຮງໝໍແຂວງ,"* ອີກຄົນໜຶ່ງໄດ້ລະບຸຊື່ໂຮງໝໍເມືອງ 2 ແຫ່ງທີ່ແຕກຕ່າງກັນ ທີ່ຜູ້ໄດ້ຮັບບາດເຈັບໄດ້ຖືກນຳສົ່ງໄປປິ່ນປົວໂດຍອີງຕາມຄວາມຮຸນແຮງຂອງການບາດເຈັບ. (ມັນບໍ່ຊັດເຈນວ່າ ເປັນຫຍັງໂຮງໝໍເມືອງໜຶ່ງຈຶ່ງຖືກຕັດສິນວ່າເໝາະສົມກວ່າໂຮງໝໍເມືອງອີກແຫ່ງໜຶ່ງ ສຳລັບຜູ້ທີ່ໄດ້ຮັບບາດເຈັບສາຫັດຫຼາຍກວ່າ.). ຕົວຢ່າງເຫຼົ່ານີ້ ບວກກັບເລື່ອງເລົ່າມາຂ້າງເທິງທີ່ຜູ້ລອດຊີວິດໄດ້ໄປຫາ ຫຼື ຖືກນຳກັບບ້ານໃນເບື້ອງຕົ້ນ, ຊີ້ໃຫ້ເຫັນວ່າການຕັດສິນໃນເບື້ອງຕົ້ນກ່ຽວກັບຄວາມຮຸນແຮງຂອງການບາດເຈັບ ແລະ ຄວາມຈຳເປັນໃນການປິ່ນປົວ  ອາດເປັນປັດໄຈໜຶ່ງທີ່ມີອິດທິພົນຕໍ່ຂະບວນການເຊື່ອມຕໍ່ຜູ້ທີ່ປະສົບອຸປະຕິເຫດກັບການປິ່ນປົວດູແລ.  ໃນການຕີຄວາມໝາຍກ່ຽວກັບປະສົບການເຫຼົ່ານີ້,  ສິ່ງສຳຄັນແມ່ນຕ້ອງສັງເກດອີກວ່າ  ປະສົບການເຫຼົ່ານີ້ເປັນພຽງຕົວແທນຂອງປະຊາກອນກຸ່ມຕົວຢ່າງສ່ວນບຸກຄົນເທົ່ານັ້ນ ແລະ ບໍ່ມີແນວໂນ້ມທີ່ສອດຄ່ອງກັນໃນຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ຫຼາຍໆຄົນ.

ໃນກຸ່ມຂອງເດັກ, ມີຄວາມສອດຄ່ອງກັນເລັກນ້ອຍໃນຄຳອະທິບາຍຄວາມເປັນໄປໄດ້ຂອງຄວາມຊ້າ. ໃນເວລາອະທິບາຍເຫດການທັນທີຫຼັງຈາກເກີດອຸປະຕິເຫດກັບເຂົາເຈົ້າ,  ຜູ້ລອດຊີວິດທີ່ເປັນເດັກລາຍງານວ່າ  ພໍ່ແມ່ຂອງເຂົາເຈົ້າໄດ້ຮັບການຕິດຕໍ່  ບໍ່ວ່າຈະໂດຍຄວາມພະຍາຍາມຂອງຕົນເອງ ຫຼື ຜ່ານສະມາຊິກຊຸມຊົນ ແລະ ຫຼັງຈາກນັ້ນ ພໍ່ແມ່ໄດ້ພາເຂົາເຈົ້າໄປຮັບການປິ່ນປົວ. ບຸນມີ ໄດ້ເລົ່າເຖິງປະສົບການຂອງຜູ້ອື່ນ ທີ່ຮູ້ກ່ຽວກັບອຸປະຕິເຫດຂອງລາວ ແລະ ໄດ້ຮັບການນຳສົ່ງໄປປິ່ນປົວເບື້ອງຕົ້ນ: *"ຕອນນັ້ນ, ຂ້ອຍບໍ່ຮູ້ສຶກເຈັບຫຍັງເລີຍ ຈົນມີເລືອດອອກ ຈາກນັ້ນຂ້ອຍກໍ່ຮູ້ສຶກເຈັບປວດ ແລະ ອ່ອນເພຍ, ຄົນໃນບ້ານຮູ້ຈຶ່ງໄປບອກພໍ່ຂ້ອຍ, ລາວຟ້າວໄປບ່ອນເກີດເຫດ ແລ້ວນຳສົ່ງຂ້ອຍໄປໂຮງໝໍ".* ໃນອີກແງ່ມູມອື່ນ, ຄວາມຕ້ອງການສຳລັບສະມາຊິກຊຸມຊົນຄົນອື່ນໆທີ່ຕ້ອງຕິດຕໍ່ກັບພໍ່ແມ່ຜູ້ປົກຄອງຂອງເດັກກ່ອນຈະສົ່ງເດັກໄປຮັບການດູແລທາງການແພດ ອາດເປັນຂັ້ນຕອນເພີ່ມເຕີມສຳລັບເດັກ ເມື່ອທຽບກັບຜູ້ໃຫຍ່.

ນອກຈາກນີ້, ການຊ່ວຍເຫຼືອເດັກຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ອາດຈະເຮັດໃຫ້ໃຊ້ເວລາດົນຂຶ້ນສຳລັບເຂົາເຈົ້າທີ່ຈະໄດ້ຮັບການດູແລທາງການແພດ.  ທ້າວ ແກ້ວ ໄດ້ອະທິບາຍເລື່ອງເຫຼົ່ານີ້ໄວ້ຂ້າງລຸ່ມນີ້, ກຸ່ມເດັກທີ່ໄດ້ຮັບຜົນກະທົບຈາກອຸປະຕິເຫດບໍ່ຮູ້ວ່າ ການຂໍຄວາມຊ່ວຍເຫຼືອຈາກຜູ້ໃຫຍ່ເປັນສິ່ງທຳອິດທີ່ຕ້ອງເຮັດ ແລະ ການໄດ້ຮັບການປິ່ນປົວທາງການແພດຈະເປັນຂັ້ນຕອນຕໍ່ໄປ:

> ໃນລະຫວ່າງທາງ, ພວກເຮົາເຫັນລູກລະເບີດຢູ່ຂ້າງທາງ. ເມື່ອພວກເຮົາເຫັນມັນ, ພວກເຮົາຮູ້ວ່າມັນເປັນລະເບີດ ແຕ່ພວກເຮົາຄິດວ່າມັນຈະບໍ່ລະເບີດ. ດັ່ງນັ້ນ, ພວກເຮົາໄດ້ເກັບມັນ ແລະ ໂຍນມັນຫຼິ້ນກັບໝູ່ເພື່ອນຂອງພວກເຮົາ. ກ່ອນທີ່ມັນຈະລະເບີດ, ຂ້ອຍໂຍນມັນໃຫ້ໝູ່ຂອງຂ້ອຍຮັບມັນ. ແຕ່ໝູ່ຂອງພວກເຮົາພາດໃນການຮັບມັນ ຫຼື ຊ້າເກີນໄປທີ່ຈະຮັບມັນ. ໃນຕອນນັ້ນ, ພວກເຮົາທັງ 2 ມີເລືອດອອກຕາມແຂນ ແລະ ຂາຂອງພວກເຮົາ. ແຕ່ພວກເຮົາບໍ່ຮູ້ສຶກເຈັບປວດໃດໆ, ພວກເຮົາເລີຍມີແຕ່ໄປລ້າງເລືອດອອກເທົ່ານັ້ນ. ບໍ່ວ່າພວກເຮົາຈະລ້າງມັນຫຼາຍປານໃດ ເລືອດກະຍັງບໍ່ຢຸດໄຫຼ. ໂຊກດີທີ່ມີຄົນຜ່ານມາເຫັນພວກເຮົາ ແລະ ພາພວກເຮົາໄປໂຮງໝໍ

ໃນກຸ່ມເດັກ, ມີບາງປັດໃຈທີ່ອາດຈະສ້າງຄວາມຊ້າໃນການໄດ້ຮັບການປິ່ນປົວດູແລ ເຊັ່ນ: ການທີ່ເດັກບໍ່ຮູ້ວ່າຈະເຮັດແນວໃດຫຼັງຈາກເກີດອຸປະຕິເຫດ ແລະ ຄວນຈະໄດ້ຮັບການປິ່ນປົວແນວໃດ; ຄວາມຈຳເປັນໃນການຕິດຕໍ່ຫາພໍ່ແມ່ກ່ອນທີ່ຈະຍ້າຍເດັກໄປຮັບການປິ່ນປົວທາງການແພດ ແລະ ຄວາມເປັນຈິງທີ່ວ່າ ເດັກສ່ວນໃຫຍ່ໄດ້ຖືກນຳສົ່ງໂດຍກົງໄປໂຮງໝໍແຂວງ ເຊິ່ງເປັນບ່ອນທຳອິດສຳລັບການປິ່ນປົວ (ເຊິ່ງອາດຈະຢູ່ໄກຈາກສຸກສາລາ ແລະ ໂຮງໝໍເມືອງ).

ເມື່ອມາຮອດສະຖານທີ່ທຳອິດໃນການປິ່ນປົວ, ຫຼາຍຄົນໄດ້ຮັບການອະນາໄມບາດແຜ ແລະ ລາຍງານວ່າ ໃນເວລານີ້ເຂົາເຈົ້າໄດ້ຖືກນຳສົ່ງໄປໂຮງໝໍແຂວງ ຫຼື ເມືອງ ເພື່ອປິ່ນປົວຕໍ່ໄປ, ໂດຍສະເພາະແມ່ນໃນກໍລະນີທີ່ບາດແຜຈາກສະເກັດລະເບີດ ແລະ ອາດຕ້ອງໄດ້ຮັບການຜ່າຕັດເຊັ່ນ: ການຕັດແຂນຂາ. ທ້າວ ສົມໃຈ ໄດ້ອະທິບາຍ ກ່ຽວກັບການເຄື່ອນຍ້າຍລາວ ເພື່ອອຳນວຍຄວາມສະດວກ ໃນການເອົາສະເກັດລະເບີດອອກ:

> ເຂົາເຈົ້າໄດ້ພາຂ້ອຍກັບບ້ານ ແລະ ພາຂ້ອຍໄປສຸກສາລາເພື່ອລ້າງບາດແຜ. ຍ້ອນບໍ່ມີອຸປະກອນທີ່ທັນສະໄໝ, ຂ້ອຍໄດ້ຮັບຄຳແນະນຳໃຫ້ໄປກວດຢູ່ໂຮງໝໍແຂວງ. ໃນເວລານັ້ນ, ຂ້ອຍຮູ້ສຶກເຈັບປວດຫຼາຍ ແລະ ຢ້ານຫຼາຍ, ໂດຍສະເພາະແມ່ນຂ້ອຍຢ້ານວ່າສະເກັດລະເບີດທີ່ຢູ່ໃນຮ່າງກາຍຂອງຂ້ອຍຈະບໍ່ສາມາດເອົາອອກໄດ້. ຢູ່ທີ່ໂຮງໝໍແຂວງ ເຂົາເຈົ້າສາມາດເອົາສະເກັດລະເບີດອອກໄດ້ບາງອັນ ແຕ່ກໍຍັງມີບາງອັນທີ່ບໍ່ສາມາດເອົາອອກໄດ້ ຂະເຈົ້າບອກວ່າຕ້ອງລໍຖ້າໃຫ້ຮ່າງກາຍຂອງຂ້ອຍຟື້ນຕົວ ແລະ ແຂງແຮງກ່ອນຈຶ່ງສາມາດເອົາອອກໄດ້.

ຂະບວນການເອົາສະເກັດລະເບີດອອກນີ້ ມີຫຼາຍຂັ້ນຕອນສຳລັບຜູ້ລອດຊີວິດຫຼາຍຄົນ ລວມທັງການຮັບການປິ່ນປົວບາດແຜເບື້ອງຕົ້ນຈາກສຸກສາລາ ແລະ ການຂົນສົ່ງຈາກສຸກສາລາໄປໂຮງໝໍແຂວງ ຫຼື ເມືອງ.

## ປະເພດຂອງການປິ່ນປົວດູແລທີ່ໄດ້ຮັບທັນທີຫຼັງຈາກອຸປະຕິເຫດ ລບຕ

ບຸກຄົນທີ່ໄດ້ຮັບບາດເຈັບ ຈຳເປັນຕ້ອງໄດ້ຮັບການປິ່ນປົວທາງການແພດຫຼາຍຮູບແບບຫຼັງຈາກເກີດອຸປະຕິເຫດ ລບຕ, ອັນນີ້ສະທ້ອນໃຫ້ເຫັນເຖິງຄວາມຮຸນແຮງ ແລະ ຄວາມຊັບຊ້ອນຂອງການບາດເຈັບຂອງເຂົາເຈົ້າ. ໃນບັນດາຜູ້ໃຫຍ່, ເກືອບທັງຫມົດ (97%) ໄດ້ຮັບການອະນາໄມບາດແຜ, 81% ໄດ້ຮັບຢາປິ່ນປົວ, ແລະ 65% ໄດ້ຮັບການຄວບຄຸມເລືອດໄຫຼ. ຫຼາຍກວ່າເຄິ່ງໜຶ່ງຂອງຜູ້ບາດເຈັບ (55%) ຕ້ອງການການດູແລການຜ່າຕັດທີ່ກ່ຽວຂ້ອງກັບການບາດເຈັບ, ໃນຂະນະທີ່ 36% ໄດ້ຮັບການໃສ່ນ້ຳເກືອຜ່ານທາງເສັ້ນເລືອດ ແລະ 29% ໄດ້ຮັບການຜ່າຕັດ. ຜູ້ປ່ວຍໃນສັດສ່ວນທີ່ນ້ອຍ ໄດ້ຮັບອົກຊີເຈນ (10%), ການປິ່ນປົວໃຫ້ຢູ່ໃນພາວະຄົງທີ່ (7%) ຫຼື ໄດ້ຮັບການດູແລອື່ນໆ (3%), ໂດຍບໍ່ມີການລາຍງານກ່ຽວກັບການເຮັດ CPR ຊ່ວຍຊີວິດ.

ຄ້າຍຄືກັນນັ້ນ, ເດັກທີ່ໄດ້ຮັບບາດເຈັບທັງໝົດໄດ້ຮັບການອະນາໄມບາດແຜ ແລະ 82% ໄດ້ຮັບຢາ. ຫຼາຍກວ່າເຄິ່ງໜຶ່ງແມ່ນໄດ້ຮັບການຫ້າມເລືອດ (59%) ຫຼື ໃສ່ນ້ຳເກືອ (IV) (53%), 41% ໄດ້ຮັບການດູແລການບາດເຈັບ ແລະ 29% ໄດ້ຮັບການຜ່າຕັດ. ມີການລາຍງານ 18% ຂອງກໍລະນີເດັກໄດ້ຮັບການປິ່ນປົວໃຫ້ຢູ່ໃນພາວະຄົງທີ່ ແລະ ເດັກ 1 ຄົນ (6%) ໄດ້ຮັບອົກຊີເຈນ. ເຊັ່ນດຽວກັນກັບຜູ້ໃຫຍ່, ບໍ່ມີເດັກໄດ້ຮັບການເຮັດ CPR ຊ່ວຍຊີວິດ ຫຼື ການປິ່ນປົວອື່ນໆທີ່ບໍ່ໄດ້ລະບຸໄວ້.

## ຄຳຖາມບົດຄົ້ນຄວ້າ ທີ 4:

*ຮູບທີ 7: ປະເພດຂອງການດູແລ ແລະ ການປິ່ນປົວທາງການແພດທີ່ຜູ້ໃຫຍ່ ແລະ ເດັກໄດ້ຮັບ*




ຜົນການວິເຄາະເຫຼົ່ານີ້ ຊີ້ໃຫ້ເຫັນວ່າ ການດູແລບາດແຜ, ຢາປິ່ນປົວ ແລະ ການຄວບຄຸມເລືອດອອກ ແມ່ນການປິ່ນປົວທີ່ໃຊ້ຫຼາຍທີ່ສຸດໃນທົ່ວທັງສອງກຸ່ມປະຊາກອນຕົວຢ່າງ, ຄວາມຕ້ອງການດ້ານການຜ່າຕັດ ແລະ ການບາດເຈັບທີ່ມັກເກີດຂຶ້ນເລື້ອຍໆ ຊີ້ໃຫ້ເຫັນເຖິງລັກສະນະການບາດເຈັບຮ້າຍແຮງ ແລະ ເປັນໄພຂົ່ມຂູ່ຕໍ່ຊີວິດຂອງຜູ້ໄດ້ຮັບບາດເຈັບທີ່ກ່ຽວຂ້ອງກັບ ລບຕ.

### ຜູ້ລອດຊີວິດໄດ້ເລົ່າກ່ຽວກັບອາການທັນທີຫຼັງຈາກເກີດອຸປະຕິເຫດ

ໃນເວລາເລົ່າເລື່ອງກ່ຽວກັບອຸປະຕິເຫດຂອງເຂົາເຈົ້າ, ຜູ້ລອດຊີວິດໄດ້ແບ່ງປັນຄວາມຮູ້ສຶກທາງດ້ານຮ່າງກາຍ ແລະ ຈິດໃຈທີ່ເກີດຂຶ້ນທັນທີຫຼັງຈາກການລະເບີດ ແລະ ປ່ຽນແປງໄປຍ້ອນວ່າເຂົາເຈົ້າໄດ້ຮັບການເບິ່ງແຍງດູແລທາງການແພດ. ຜູ້ລອດຊີວິດຫຼາຍຄົນບໍ່ຮູ້ສະຕິ ແລະ ເລີ່ມເລົ່າເລື່ອງການປິ່ນປົວທາງການແພດຂອງເຂົາເຈົ້າ ໂດຍກ່າວວ່າເຂົາເຈົ້າບໍ່ຮູ້ສຶກຫຍັງ. ດັ່ງທີ່ ນາງ ແສງຈັນ ໄດ້ອະທິບາຍວ່າ *"ການລະເບີດໄດ້ເກີດຂຶ້ນທັນທີ, ຕອນນັ້ນຂ້ອຍບໍ່ຮູ້ສຶກຫຍັງເລີຍ ຈົນກະທັ້ງປະມານ 5 ນາທີຕໍ່ມາ ຂ້ອຍຈຶ່ງໄດ້ສະຕິ ແລ້ວ ພະຍາຍາມເອົາຕົວອອກຈາກບ່ອນທີ່ເກີດລະເບີດ."* ນອກຈາກອາການຕົກໃຈ, ໝົດສະຕິ ແລະ ບໍ່ມີຄວາມຮູ້ສຶກແລ້ວ, ຫຼາຍຄົນໄດ້ກ່າວເຖິງບັນຫາການເບິ່ງເຫັນທັນທີທັນໃດ ແລະ ບໍ່ໄດ້ຍິນສຽງຫຍັງເລີຍ ຍ້ອນເຫດລະເບີດທີ່ເກີດຂຶ້ນ, ໂດຍເຂົາເຈົ້າກ່າວເຖິງອາການຫູໜວກ ແລະ ຕາມືດ, ທ້າວ ຄຳດີ ໄດ້ປະສົບກັບອາການເຫຼົ່ານີ້, ລາວກ່າວວ່າ *"ຫລັງຈາກລະເບີດແຕກ, ຂ້ອຍຮູ້ສຶກມີສຽງດັງໃນຫູ ແລະ ຂ້ອຍຢູ່ໃນຂີ້ຝຸ່ນ, ບໍ່ເຫັນຫຍັງເລີຍ."*

ຈາກປະຕິກິລິຍາເບື້ອງຕົ້ນຕໍ່ການລະເບີດດັ່ງກ່າວ, ຄຳອະທິບາຍຂອງຜູ້ລອດຊີວິດກ່ຽວກັບອາການຂອງເຂົາເຈົ້າ ແມ່ນມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ, ຂຶ້ນກັບຄວາມຮຸນແຮງຂອງການບາດເຈັບ. ບາງຄົນກ່າວວ່າ ເມື່ອມາຮອດໂຮງໝໍແລ້ວຮູ້ສຶກເຈັບປວດຢ່າງຮຸນແຮງ.

ນອກຈາກການອະທິບາຍອາການທາງດ້ານຮ່າງກາຍທີ່ເກີດຂຶ້ນຫຼັງຈາກອຸປະຕິເຫດແລ້ວ, ຜູ້ລອດຊີວິດຍັງເລົ່າກ່ຽວກັບຄວາມຮູ້ສຶກຂອງເຂົາເຈົ້າວ່າເປັນແນວໃດ ຫຼັງຈາກເຫດການຮ້າຍແຮງທີ່ເກີດຂຶ້ນເຫຼົ່ານີ້. ຜູ້ລອດຊີວິດຫຼາຍຄົນກ່າວເຖິງຄວາມຮູ້ສຶກຕົກໃຈ ແລະ ຢູ່ໃນຄວາມມືດ

ມົນກ່ຽວກັບສິ່ງທີ່ເຂົາເຈົ້າຫາກໍປະສົບ. ນາງ ແສງຈັນ ເລົ່າໃຫ້ຟັງວ່າ "ລາວກຳລັງຍ່າງຢູ່ ແລ້ວຂ້ອຍກໍ່ສະຫຼົບໄປ ແລະ ຫຼັງຈາກນັ້ນ ຂ້ອຍກໍ່ເຫັນຜົວຂອງຂ້ອຍຮ້ອງຂໍຄວາມຊ່ວຍເຫຼືອ 2 ເທື່ອ, ຂ້ອຍກໍ່ສະຫຼົບອີກ, ໃນຕອນນັ້ນ ຂ້ອຍຮູ້ສຶກຢູ່ໃນຄວາມມືດທີ່ສຸດ." ຜູ້ລອດຊີວິດຄົນອື່ນໄດ້ເລົ່າກ່ຽວກັບຄວາມໂສກເສົ້າ ແລະ ຄວາມຢ້ານກົວກ່ຽວກັບອະນາຄົດຂອງເຂົາເຈົ້າ. ທ້າວ ສົມໃຈ ໄດ້ເລົ່າໃຫ້ຟັງດັ່ງຕໍ່ໄປນີ້ ກ່ຽວກັບຄວາມຮູ້ສຶກຂອງລາວໃນໄລຍະການປິ່ນປົວທາງການແພດເບື້ອງຕົ້ນ:

> ຫຼັງຈາກການກວດຮ່າງກາຍແລ້ວ ທ່ານໝໍພົບວ່າມີຊິ້ນສ່ວນຂອງລະເບີດຢູ່ໃນຂາຂອງຂ້ອຍ ເຊິ່ງທ່ານໝໍບໍ່ສາມາດເອົາມັນອອກມາໄດ້. ຂ້ອຍໄດ້ຖືກສົ່ງໄປປິ່ນປົວຢູ່ໂຮງໝໍແຂວງ ແລະ ໃຊ້ເວລາ 9 ມື້ຢູ່ໃນໂຮງໝໍ. ເຫດການດັ່ງກ່າວເຮັດໃຫ້ຂ້ອຍເປັນຫ່ວງວ່າຂ້ອຍຈະເສຍຂາ, ຂ້ອຍຈະພິການ ແລະ ບໍ່ສາມາດຍ່າງໄດ້ອີກ.

ຜູ້ລອດຊີວິດໄດ້ອະທິບາຍເຖິງຄວາມຮູ້ສຶກທີ່ເຈັບປວດ ແລະ ຄວາມຮູ້ສຶກທາງຮ່າງກາຍ ໃນຂະນະທີ່ເຂົາເຈົ້າເລົ່າເລື່ອງຂອງເຂົາເຈົ້າ. ການຮັບຮູ້ປະສົບການນີ້ ແມ່ນມີຄວາມສຳຄັນບໍ່ພຽງແຕ່ເພື່ອໃຫ້ເຂົ້າໃຈປະສົບການຂອງຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ໄດ້ດີຂຶ້ນເທົ່ານັ້ນ, ແຕ່ຍັງເຂົ້າໃຈເຖິງຜົນກະທົບທາງດ້ານຈິດໃຈ ແລະ ທາງດ້ານຮ່າງກາຍທີ່ເກີດຈາກອຸປະຕິເຫດ ອີກດ້ວຍ.

## ມີຜູ້ລອດຊີວິດຈຳນວນໜ້ອຍເທົ່ານັ້ນທີ່ໄດ້ຮັບການບໍລິການຟື້ນຟູໜ້າທີ່ການ

ມີຜູ້ໃຫຍ່ 6 ຄົນເທົ່ານັ້ນ (19%) ທີ່ລາຍງານວ່າໄດ້ຮັບການຟື້ນຟູໜ້າທີການຫຼັງຈາກການບາດເຈັບຈາກອຸປະຕິເຫດ ລບຕ; ບໍ່ມີເດັກລາຍງານວ່າໄດ້ຮັບການບໍລິການຟື້ນຟູໜ້າທີການໃດໆ (ຜົນໄດ້ຮັບບໍ່ໄດ້ສະແດງໃຫ້ເຫັນ). ໃນບັນດາຜູ້ໃຫຍ່ 6 ຄົນ, ເຄິ່ງໜຶ່ງໄດ້ເລີ່ມຕົ້ນການຟື້ນຟູພາຍໃນ 2ອາທິດ, ອີກເຄິ່ງຫນຶ່ງເລີ່ມຕົ້ນລະຫວ່າງ 2 ອາທິດຫາ 6 ເດືອນຫຼັງຈາກເກີດອຸປະຕິເຫດ. ທຸກຄົນລາຍງານວ່າ ໄດ້ເຂົ້າປິ່ນປົວພຽງຄັ້ງດຽວ ຫຼື ສອງຄັ້ງເທົ່ານັ້ນ.ອີກ 3 ຄົນກ່າວວ່າ ການຟື້ນຟູໜ້າທີການຂອງເຂົາເຈົ້າແມ່ນສຳເລັດຢ່າງສົມບູນ, ໂດຍກ່າວວ່າສາມາດເຄື່ອນໄຫວຮ່າງກາຍໄດ້ຕາມປົກກະຕິ, ບໍ່ມີຄວາມເຈັບປວດ ແລະ ສາມາດເຮັດກິດຈະກຳປະຈຳວັນໄດ້ເປັນປົກກະຕິ - ເຖິງແມ່ນວ່າຈະມີຜູ້ໜຶ່ງລາຍງານວ່າ ລາວໄດ້ຢຸດເຊົາການຟື້ນຟູຍ້ອນຄວາມຈຳກັດທາງດ້ານການເງິນ.

ໃນຈຳນວນຜູ້ໃຫຍ່ 3 ຄົນທີ່ຍັງປິ່ນປົວຢູ່ໃນໄລຍະຟື້ນຟູໜ້າທີການ, ມີ 1 ຄົນໄດ້ເຂົ້າໄປຟື້ນຟູໜ້າທີການຢູ່ສູນຟື້ນຟູໜ້າທີ່ການ, 2 ຄົນໄດ້ຮັບການປິ່ນປົວຢູ່ໂຮງໝໍແຂວງ. ການບໍລິການລວມມີການປິ່ນປົວອາການເຈັບ (1 ຄົນ), ໄດ້ຮັບຢາ (2 ຄົນ) ແລະ ໄດ້ຮັບການປິ່ນປົວຕາ (2 ຄົນ).

## ລະດັບຄວາມຫຍຸ້ງຍາກໃນການເຄື່ອນໄຫວດຳລົງຊີວິດປະຈຳວັນ ຫຼັງຈາກເກີດອຸປະຕິເຫດ ລບຕ

ການປະເມີນຄວາມສາມາດຂອງຜູ້ລອດຊີວິດໃນການປະຕິບັດວຽກງານປະຈຳວັນສະແດງໃຫ້ເຫັນຜົນກະທົບໃນໄລຍະຍາວຈາກການບາດເຈັບຈາກອຸປະຕິເຫດ ລບຕ ນອກຈາກຄວາມເສຍຫາຍທາງດ້ານຮ່າງກາຍ, ເຊິ່ງຊີ້ໃຫ້ເຫັນເຖິງສິ່ງທ້າທາຍຕໍ່ຄວາມເປັນອິດສະຫຼະ, ກຽດສັກສີ ແລະ ການມີສ່ວນຮ່ວມທາງດ້ານເສດຖະກິດ. ຄວາມຫຍຸ້ງຍາກໃນຂົງເຂດຕ່າງໆ ເຊັ່ນ: ບັນຫາການເບິ່ງເຫັນ, ການໄດ້ຍິນ, ການເຄື່ອນໄຫວ, ຄວາມຊົງຈຳ ແລະ ການສື່ສານ ອາດເຮັດໃຫ້ຜູ້ລອດຊີວິດຕ້ອງເພິ່ງພາອາໄສຜູ້ອື່ນຫຼາຍຂຶ້ນ, ຈຳກັດການເຂົ້າເຖິງການສຶກສາ ຫຼື ການເຮັດວຽກຂອງເຂົາເຈົ້າ ແລະ ເພີ່ມຄວາມສ່ຽງຕໍ່ຄວາມທຸກຍາກ ແລະ ຄວາມໂດດດ່ຽວ.

**ຄຳຖາມບົດຄົ້ນຄວ້າ ທີ 4:**

ໃນກຸ່ມປະຊາກອນຕົວຢ່າງທີ່ເປັນຜູ້ໃຫຍ່, ສ່ວນໃຫຍ່ລາຍງານວ່າບໍ່ມີບັນຫາກ່ຽວກັບການເບິ່ງເຫັນ (62%) ຫຼື ການໄດ້ຍິນ (72%), ເຖິງແມ່ນວ່າ 1ໃນ 5 ຄົນເຫຼົ່ານັ້ນ ຈະປະສົບກັບຄວາມຫຍຸ້ງຍາກບາງຢ່າງ ກໍ່ຕາມ. ກຸ່ມປະຊາກອນຕົວຢ່າງທີ່ເປັນເດັກໄດ້ຮັບຜົນກະທົບ ໜ້ອຍກວ່າ, ໂດຍເກືອບທັງໝົດກຸ່ມປະຊາກອນຕົວຢ່າງທີ່ເປັນເດັກບໍ່ມີລາຍງານບັນຫາເຫຼົ່ານີ້. ເຖິງວ່າຈະມີສິ່ງທ້າທາຍເຫຼົ່ານີ້, ແຕ່ມີພຽງຈຳນວນໜ້ອຍຄົນເທົ່ານັ້ນ ທີ່ໄດ້ໃຊ້ອຸປະກອນການຊ່ວຍເຫຼືອ. ຜູ້ເຄາະຮ້າຍທີ່ເປັນຜູ້ໃຫຍ່ ແລະ ເດັກ ທີ່ມີບັນຫາກ່ຽວກັບການເບິ່ງເຫັນ ຫຼື ການໄດ້ຍິນ ຍັງບໍ່ໄດ້ຮັບເຄື່ອງຊ່ວຍເຫຼືອ ເຊິ່ງຊີ້ໃຫ້ເຫັນຊ່ອງຫວ່າງໃນການເຂົ້າເຖິງ ຫຼື ການມີຢູ່ຂອງອຸປະກອນຊ່ວຍເຫຼືອເຫຼົ່ານັ້ນ.

ການເຄື່ອນຍ້າຍໄດ້ຮັບຜົນກະທົບໜ້ອຍ ໂດຍ 84% ຂອງຜູ້ໃຫຍ່ ແລະ 94% ຂອງເດັກໄດ້ລາຍງານວ່າ ບໍ່ມີຄວາມຫຍຸ້ງຍາກໃນການຍ່າງ. ໃນບັນດາຜູ້ທີ່ມີບັນຫາການເຄື່ອນຍ້າຍ, ການນຳໃຊ້ອຸປະກອນຊ່ວຍເຫຼືອແມ່ນມີຈຳກັດຫຼາຍ. ຄວາມບົກຜ່ອງດ້ານການສື່ສານໄດ້ຖືກລາຍງານໂດຍຜູ້ໃຫຍ່ເທົ່ານັ້ນ (19%), ໃນຂະນະທີ່ເດັກທັງໝົດບໍ່ມີບັນຫາກ່ຽວກັບການສື່ສານເລີຍ. ບັນຫາກ່ຽວກັບ ຄວາມຊົງຈຳ ແມ່ນພົບເຫັນຫຼາຍໃນກຸ່ມຜູ້ໃຫຍ່, ໂດຍມີຫຼາຍກວ່າໜຶ່ງສ່ວນສາມຂອງກຸ່ມຜູ້ໃຫຍ່ ລາຍງານກ່ຽວກັບຄວາມຫຍຸ້ງຍາກນີ້ ເມື່ອທຽບກັບເດັກທີ່ລາຍງານກ່ຽວກັບຄວາມຫຍຸ້ງຍາກນີ້ ພຽງແຕ່ 11%.

ໂດຍລວມແລ້ວ, ເຖິງວ່າຜູ້ລອດຊີວິດສ່ວນໃຫຍ່ຈະດຳເນີນຊີວິດດ້ວຍຕົນເອງໄດ້, ແຕ່ຜູ້ລອດຊີວິດຈຳນວນໜຶ່ງ ໂດຍສະເພາະແມ່ນຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ກໍ່ໄດ້ປະເຊີນກັບຄວາມບົກຜ່ອງຖາວອນ ແລະ ການເຂົ້າເຖິງການຊ່ວຍເຫຼືອດ້ານເຄື່ອງຊ່ວຍກໍ່ມີຈຳກັດ, ອັນນີ້ຊີ້ໃຫ້ເຫັນເຖິງຄວາມຕ້ອງການສຳລັບການຟື້ນຟູໜ້າທີການ ແລະ ການບໍລິການໃຫ້ຖືກກັບເປົ້າໝາຍ.

ຈາກການສຳຫຼວດກ່ຽວກັບການດຳລົງຊີວິດປະຈຳວັນ 5 ປະການ ຄື: ການເຫັນ, ການໄດ້ຍິນ, ການຍ່າງ, ການຕິດຕໍ່ສື່ສານ, ການຈື່ຈຳ ຂອງຜູ້ໃຫຍ່, 87,5% ລາຍງານວ່າມີຄວາມຫຍຸ້ງຍາກຢ່າງໜ້ອຍ 1 ປະເພດ, ທຽບໃສ່ 12,5% ທີ່ລາຍງານວ່າມີຄວາມຫຍຸ້ງຍາກພຽງເລັກນ້ອຍ ຫຼື ບໍ່ມີບັນຫາຫຍຸ້ງຍາກຫຍັງເລີຍ. ໃນການສຳຫຼວດກ່ຽວກັບການດຳລົງຊີວິດປະຈຳວັນຂອງເດັກ, ບໍ່ມີເດັກຄົນໃດລາຍງານວ່າມີຄວາມຫຍຸ້ງຍາກຫຼາຍ ແລະ ມີພຽງ 22% ລາຍງານວ່າຄວາມຫຍຸ້ງຍາກຢ່າງໜ້ອຍ 1 ປະເພດ ຫຼື ຫຼາຍກວ່ານັ້ນ, ທຽບໃສ່ 78% ທີ່ລາຍງານວ່າບໍ່ມີຄວາມຫຍຸ້ງຍາກຫຍັງເລີຍ.

*ຕາຕະລາງທີ 9: ຄວາມສາມາດໃນການເຮັດກິດຈະກຳ ປະຈຳວັນນັບຕັ້ງແຕ່ເກີດອຸປະຕິເຫດ ລບຕ*

| | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (n=32) | | ຜູ້ລອດຊີວິດທີ່ເປັນເດັກ (n=18) | |
|---|---|---|---|---|
| | % | n | % | n |
| **ຄວາມຫຍຸ້ງຍາກໃນການເບິ່ງເຫັນ** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 20 | 62.5 | 16 | 88.9 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 6 | 18.7 | 2 | 11.1 |
| ມີຄວາມຫຍຸ້ງຍາກຫຼາຍ | 6 | 18.7 | - | - |
| **ເຄື່ອງຊ່ວຍໃນການເບິ່ງເຫັນ** | (n=12) | | (n=2) | |

| | | | | |
|---|---|---|---|---|
| ບໍ່ມີ | 7 | 58.3 | 2 | 100 |
| ແວ່ນຕາ | 3 | 25.0 | - | - |
| ຕາທຽມ | 1 | 8.3 | - | - |
| ການຜ່າຕັດ | - | - | - | - |
| ອື່ນໆ | 1 | 8.3 | - | - |
| **ຄວາມຫຍຸ້ງຍາກໃນການໄດ້ຍິນ** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 23 | 71.9 | 16 | 88.9 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 6 | 18.7 | 2 | 11.1 |
| ມີຄວາມຫຍຸ້ງຍາກຫຼາຍ | 3 | 9.4 | - | - |
| **ເຄື່ອງຊ່ວຍໃນການໄດ້ຍິນ** | (n=9) | | (n=2) | |
| ບໍ່ມີ* | 9 | 1oo | 2 | 100 |
| **ຄວາມຫຍຸ້ງຍາກໃນການຍ່າງ/ຂຶ້ນ-ລົງ ຂັ້ນໄດ** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 27 | 84.4 | 17 | 94.4 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 5 | 15.6 | 1 | 5.6 |
| ມີຄວາມຫຍຸ້ງຍາກຫຼາຍ | - | - | - | - |
| **ເຄື່ອງຊ່ວຍໃນການຍ່າງ** | (n=5) | | (n=1) | |
| ບໍ່ມີ** | 2 | 40.0 | 1 | 100 |
| ອື່ນໆ | 3 | 60.0 | - | - |
| **ຄວາມຫຍຸ້ງຍາກໃນການສື່ສານ** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 26 | 81.2 | 18 | 100 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 3 | 9.4 | - | - |
| ມີຄວາມຫຍຸ້ງຍາກຫຼາຍ | 3 | 9.4 | - | - |
| **ຄວາມຫຍຸ້ງຍາກໃນການຈື່ຈຳ** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 20 | 62.5 | 16 | 88.9 |

| | | | | |
|---|---|---|---|---|
| ມີຄວາມຫຍຸ້ງຍາກເລັກນ້ອຍ | 9 | 28.1 | 2 | 11.1 |
| ມີຄວາມຫຍຸ້ງຍາກຫຼາຍ | 3 | 9.4 | - | - |
| *ອຸປະກອນຕ່າງໆທີ່ຊ່ວຍຟັງ ທີ່ຖາມເຖິງ ລວມມີເຄື່ອງຊ່ວຍຟັງ (ແບບໃສ່ໄວ້ທາງຫລັງຫູ), ປະສາດຫູທຽມ, ເຄື່ອງຂະຫຍາຍການຟັງ, ແອັບຊ່ວຍເຫຼືອການຟັງ, ການຟັງຜ່ານການສັງເກດປາກ ຫຼື ພາສາມື ຫຼື ອື່ນໆ; ບໍ່ມີຜູ້ຕອບຄຳຖາມຄົນໃດເລືອກຄຳຕອບເຫຼົ່ານີ້ເລີຍ.<br>**ອຸປະກອນຕ່າງໆທີ່ຊ່ວຍໃນການຍ່າງ ທີ່ຖາມເຖິງ ລວມມີ: ໄມ້ຄ້ອນເທົ້າ, ໄມ້ຄ້ອນເທົ້າທີ່ຊ່ວຍຍ່າງ, ເຄື່ອງຊ່ວຍຍ່າງ (ເປັນໂຄງ), ເຄື່ອງຊ່ວຍຍ່າງທີ່ເປັນລໍ້, ຂາທຽມ ຫຼື ຕີນທຽມ, ຫຼາບຂາ/ອຸປະກອນຊ່ວຍຄ້ຳແຂນຂາ, ລໍ້ຍູ້ດ້ວຍມື, ລໍ້ຍູ້ໄຟຟ້າ, ຫຼື ບຸກຄົນອື່ນຊ່ວຍເຫຼືອ; ບໍ່ມີຜູ້ຕອບຄຳຖາມຄົນໃດເລືອກຄຳຕອບເຫຼົ່ານີ້ເລີຍ. | | | | |

## ລະດັບຄວາມຫຍຸ້ງຍາກໃນການດູແລສຸຂະອະນາໄມຫຼັງຈາກອຸປະຕິເຫດ ລບຕ

ການປະເມີນຄວາມສາມາດຂອງຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ໃນການປະຕິບັດວຽກງານສຸຂະອະນາໄມຂັ້ນພື້ນຖານ ແລະ ການດູແລຕົນເອງ ຊ່ວຍໃຫ້ມີຄວາມເຂົ້າໃຈທີ່ສຳຄັນກ່ຽວກັບຜົນກະທົບຂອງການບາດເຈັບຕໍ່ຄວາມເປັນອິດສະລະ (ຊ່ວຍຕົນເອງໄດ້), ກຽດສັກສີ ແລະ ຄວາມເປັນຢູ່ທີ່ດີໃນຊີວິດປະຈຳວັນ. ຂໍ້ຈຳກັດໃນກິດຈະກຳຕ່າງໆ ເຊັ່ນ: ການອາບນ້ຳ, ການນຸ່ງເຄື່ອງ, ການກິນອາຫານ ຫຼື ການໃຊ້ຫ້ອງນ້ຳ ອາດເພີ່ມພາລະໃນການເພິ່ງພາຜູ້ອື່ນໃຫ້ເບິ່ງແຍງ, ເພີ່ມຄວາມສ່ຽງດ້ານສຸຂະພາບ ແລະ ຫຼຸດຜ່ອນການມີສ່ວນຮ່ວມໃນສັງຄົມ.

ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ສ່ວນໃຫຍ່ລາຍງານວ່າບໍ່ມີຄວາມຫຍຸ້ງຍາກກັບວຽກງານການດູແລຕົນເອງຫຼັກໂດຍ 88% ສາມາດເຂົ້າ ແລະ ໃຊ້ຫ້ອງນ້ຳໂດຍບໍ່ມີການຊ່ວຍເຫຼືອ, 84% ສາມາດອາບນ້ຳດ້ວຍຕົນເອງໄດ້ ແລະ 88% ສາມາດນຸ່ງເຄື່ອງໂດຍບໍ່ມີການຊ່ວຍເຫຼືອ. ມີພຽງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ຈຳນວນໜ້ອຍໜຶ່ງ ປະສົບກັບຄວາມຫຍຸ້ງຍາກບາງຢ່າງ ຫຼື ມີບັນຫາຫຼາຍຢ່າງກ່ຽວກັບຄວາມຫຍຸ້ງຍາກທີ່ກ່າວມາເຫຼົ່ານີ້. ໃນບັນດາຜູ້ລອດຊີວິດທີ່ເປັນເດັກ, ເກືອບທັງຫມົດລາຍງານວ່າບໍ່ມີບັນຫາກັບຄວາມຫຍຸ້ງຍາກທີ່ກ່າວມາເຫຼົ່ານີ້ເລີຍ ແລະ ບໍ່ມີໃຜລາຍງານວ່າມີຄວາມຫຍຸ້ງຍາກຮ້າຍແຮງ.

ກ່ຽວກັບການກິນອາຫານດ້ວຍຕົນເອງໄດ້ນັ້ນ ສ່ວນໃຫຍ່ບໍ່ມີໃຜລາຍງານວ່າມີຜົນກະທົບດ້ານີ້ ໂດຍ 88% ຂອງຜູ້ໃຫຍ່ ແລະ 94% ຂອງເດັກ ລາຍງານວ່າບໍ່ມີຄວາມຫຍຸ້ງຍາກດ້ານນີ້. ຜູ້ໃຫຍ່ລາຍງານວ່າມີຂໍ້ກັດໃນການປຸງແຕ່ງອາຫານເລັກນ້ອຍ, 75% ລາຍງານວ່າບໍ່ມີຄວາມຫຍຸ້ງຍາກ ແລະ 9% ມີຄວາມຫຍຸ້ງຍາກຫຼາຍໃນການແຕ່ງອາຫານ. ສິ່ງທ້າທາຍໃນການເຄື່ອນຍ້າຍແມ່ນມີລະດັບຕ່ຳ, ເຊິ່ງ 81% ຂອງຜູ້ໃຫຍ່ ແລະ 94% ຂອງເດັກສາມາດນັ່ງຊ້ອນທ້າຍລົດຈັກໂດຍບໍ່ມີບັນຫາ; ຜູ້ໃຫຍ່ສອງສາມຄົນໄດ້ລາຍງານກ່ຽວກັບຄວາມບໍ່ສາມາດຢ່າງຮ້າຍແຮງ ຫຼື ບໍ່ສາມາດເຄື່ອນຍ້າຍໄດ້ເລີຍ.

ກ່ຽວກັບການເຂົ້າໂຮງຮຽນ, 89% ຂອງຜູ້ເບິ່ງແຍງເດັກກ່າວວ່າເດັກສາມາດເຂົ້າໂຮງຮຽນໄດ້, ມີຜູ້ຫນຶ່ງລາຍງານວ່າເຂົາເຈົ້າບໍ່ສາມາດເຂົ້າໂຮງຮຽນໄດ້ ແລະ ອີກຄົນຫນຶ່ງລາຍງານວ່າບໍ່ແນ່ໃຈ. ໂດຍລວມແລ້ວ, ຜູ້ລອດຊີວິດສ່ວນໃຫຍ່ຍັງຄົງຮັກສາຄວາມສາມາດໃນການດູແລຕົນເອງຂັ້ນພື້ນຖານໄດ້, ກຸ່ມນ້ອຍໆແຕ່ມີຄວາມສຳຄັນ, ໂດຍສະເພາະໃນບັນດາຜູ້ໃຫຍ່ ປະເຊີນກັບສິ່ງທ້າທາຍທີ່ອາດຈະຕ້ອງການການສະໜັບສະໜູນທີ່ກົງກັບເປົ້າຫມາຍ.

*ຕາຕະລາງທີ 10: ຄວາມສາມາດໃນການດູແລສຸຂະອະນາໄມປະຈຳວັນນັບຕັ້ງແຕ່ເກີດອຸບັດເຫດ ລບຕ*

| | ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ (n=21) | | ຜູ້ລອດຊີວິດທີ່ເປັນເດັກ (n=5) | |
|---|---|---|---|---|
| | % | n | % | n |
| **ເຂົ້າຫ້ອງນ້ຳດ້ວຍຕົນເອງໄດ້*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 28 | 87.5 | 16 | 88.9 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 1 | 3.1 | 2 | 11.1 |
| ມີຄວາມຫຍຸ້ງຍາກຫຼາຍ | 3 | 9.4 | - | - |
| **ໃຊ້ຫ້ອງນ້ຳໂດຍບໍ່ມີການຊ່ວຍເຫຼືອ*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 29 | 90.6 | 16 | 88.9 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 1 | 3.1 | 2 | 11.1 |
| ມີຄວາມຫຍຸ້ງຍາກຫຼາຍ | 2 | 6.2 | - | - |
| **ອາບນ້ຳ*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 27 | 84.4 | 17 | 94.4 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 4 | 12.5 | 1 | 5.6 |
| ມີຄວາມຫຍຸ້ງຍາກຫຼາຍ | 1 | 3.1 | - | - |
| **ນຸ່ງເຄື່ອງດ້ວຍຕົນເອງ*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 28 | 87.5 | 17 | 94.4 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 3 | 9.4 | 1 | 5.6 |
| ມີຄວາມຫຍຸ້ງຍາກຫຼາຍ | 1 | 3.1 | - | - |
| **ກິນອາຫານດ້ວຍຕົນເອງ*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 28 | 87.5 | 17 | 94.4 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 2 | 6.2 | 1 | 5.6 |
| ມີຄວາມຫຍຸ້ງຍາກຫຼາຍ | 2 | 6.2 | - | - |
| **ໃຊ້ແຮງງານດ້ວຍມື*** | | | | |

| | | | | |
|---|---|---|---|---|
| ບໍ່ມີຄວາມຫຍຸ້ງຍາກ | 21 | 65.6 | 16 | 88.9 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 4 | 12.5 | - | - |
| ມີຄວາມຫຍຸ້ງຍາກຫຼາຍ | 6 | 18.7 | 1 | 5.6 |
| ບໍ່ສາມາດເຮັດໄດ້ເລີຍ | 1 | 3.1 | 1 | 5.6 |
| **ນັ່ງຊ້ອນທ້າຍລົດຈັກ*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 26 | 81.2 | 17 | 94.4 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 2 | 6.2 | 1 | 5.6 |
| ມີຄວາມຫຍຸ້ງຍາກຫຼາຍ | 3 | 9.4 | - | - |
| ບໍ່ສາມາດເຮັດໄດ້ເລີຍ | 1 | 3.1 | - | - |
| **ຢູ່ຄົນດຽວດ້ວຍຕົນເອງ*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 26 | 81.2 | N/A | N/A |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 2 | 6.2 | N/A | N/A |
| ມີຄວາມຫຍຸ້ງຍາກຫຼາຍ | 4 | 12.5 | N/A | N/A |
| **ແຕ່ງກິນດ້ວຍຕົນເອງ*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | 24 | 75.0 | N/A | N/A |
| ມີຄວາມຫຍຸ້ງຍາກເລັກນ້ອຍ | 5 | 15.6 | N/A | N/A |
| ມີຄວາມຫຍຸ້ງຍາກຫຼາຍ | 3 | 9.4 | N/A | N/A |
| **ເຂົ້າໂຮງຮຽນ*** | | | | |
| ບໍ່ມີຄວາມຫຍຸ້ງຍາກ | N/A | N/A | 16 | 88.9 |
| ມີຄວາມຫຍຸ້ງຍາກເລັກນ້ອຍ | N/A | N/A | 1 | 5.6 |
| ມີຄວາມຫຍຸ້ງຍາກຫຼາຍ | N/A | N/A | 1 | 5.6 |

*ການຕອບຄຳຖາມເຫຼົ່ານີ້ ມີຕັ້ງແຕ່ ບໍ່ມີຄວາມຫຍຸ້ງຍາກ, ມີຄວາມຫຍຸ້ງຍາກເລັກນ້ອຍ, ມີຄວາມຫຍຸ້ງຍາກຫຼາຍ, ບໍ່ສາມາດເຮັດໄດ້ທັງໝົດ, ບໍ່ຢາກຕອບ ແລະ ບໍ່ຮູ້. ຖ້າບໍ່ມີຜູ້ຕອບຄົນໃດຕອບຄຳຕອບເຫຼົ່ານີ້, ຄຳຕອບເຫຼົ່ານີ້ຈະຖືກລຶບອອກຈາກຕາຕະລາງ ສຳລັບການນຳສະເໜີຜົນການສຳຫຼວດ.

## ຄວາມຕ້ອງການດ້ານສຸຂະພາບທາງຮ່າງກາຍໃນໄລຍະຍາວ

ບາງຄັ້ງຜູ້ລອດຊີວິດໄດ້ອະທິບາຍເຖິງສິ່ງທ້າທາຍໃນເບື້ອງຕົ້ນໃນການເຂົ້າເຖິງການປິ່ນປົວດູແລ ຫຼື ຄ່າໃຊ້ຈ່າຍໃນການປິ່ນປົວ (ໂດຍປົກກະຕິແລ້ວ ແມ່ນຍ້ອນການຂາດຄວາມຮັບຮູ້ໃນເບື້ອງຕົ້ນກ່ຽວກັບການຊົດເຊີຍຄ່າປິ່ນປົວ) ຫຼື ຄວາມຕ້ອງການທີ່ຈະໄປຮັບການປິ່ນປົວໃນລະດັບທີ່ສູງກວ່າ ເພື່ອໃຫ້ໄດ້ຮັບການປິ່ນປົວສະເພາະດ້ານ, ຜູ້ລອດຊີວິດບໍ່ໄດ້ສະແດງຄວາມບໍ່ພໍໃຈ ຫຼື ບໍ່ໄດ້ເວົ້າເຖິງສິ່ງທີ່ບໍ່ໄດ້ຕອບສະໜອງຕາມຄວາມຕ້ອງການທີ່ກ່ຽວຂ້ອງກັບການປິ່ນປົວທາງການແພດໃນທັນທີ ຂອງເຂົາເຈົ້າ.

ເຖິງຢ່າງໃດກໍ່ຕາມ, ມັນມີປະເດັນໜຶ່ງທີ່ເກີດຂຶ້ນ ໂດຍຜູ້ລອດຊີວິດທີ່ມີອາການທາງຮ່າງກາຍທີ່ຍືດເຍື້ອຍາວນານ ໄດ້ອະທິບາຍວ່າ ລາວໄດ້ຮັບການສະໜັບສະໜູນທາງການແພດໃນໄລຍະຫຼັງເກີດອຸປະຕິເຫດທັນທີ, ແຕ່ຫຼັງຈາກນັ້ນການສະໜັບສະໜູນນັ້ນກໍ່ຫາຍໄປ. ຕົວຢ່າງ, ຜູ້ລອດຊີວິດຄົນໜຶ່ງໄດ້ເລົ່າວ່າ *"ຄ່າໃຊ້ຈ່າຍໃນການປິ່ນປົວ ໃນເວລາທີ່ເກີດອຸປະຕິເຫດແມ່ນຂ້ອຍບໍ່ໄດ້ຈ່າຍ, [ກອງທຶນຊ່ວຍເຫຼືອຄ່າປິ່ນປົວຂອງສະຫະລັດ ອາເມລິກາ] ໄດ້ສະໜັບສະໜູນການປິ່ນປົວດັ່ງກ່າວ. ແຕ່ຫຼັງຈາກນັ້ນ, ຂ້ອຍຕ້ອງຈ່າຍຄ່າກວດສຸຂະພາບ ແລະ ການບຳບັດທາງດ້ານຮ່າງກາຍທັງໝົດດ້ວຍຕົວເອງ."* ຜູ້ລອດຊີວິດອີກຄົນໜຶ່ງໄດ້ໃຫ້ຂໍ້ສັງເກດ ກ່ຽວກັບຄວາມຕ້ອງການຢ່າງຕໍ່ເນື່ອງໃນການບັນເທົາອາການເຈັບປວດ, ໂດຍກ່າວວ່າ *"ໃນດ້ານສຸຂະພາບ, ພໍ່ແມ່ຂອງຂ້ອຍພາຂ້ອຍໄປນວດເພື່ອບັນເທົາອາການເຈັບປວດ. ຂ້ອຍໄດ້ຮັບການນວດເດືອນລະຄັ້ງ ຫຼື ທຸກໆສອງເດືອນ ຂຶ້ນກັບອາການເຈັບປວດ."*

ເມື່ອຖາມວ່າ ເຂົາເຈົ້າຕ້ອງການການຊ່ວຍເຫຼືອປະເພດໃດແດ່, ຜູ້ລອດຊີວິດບາງຄົນໄດ້ກ່າວເຖິງຄວາມຕ້ອງການຊ່ວຍເຫຼືອທາງການແພດເພີ່ມເຕີມ. ຕົວຢ່າງ, ຜູ້ລອດຊີວິດຄົນໜຶ່ງໄດ້ເລົ່າວ່າ, *"ຖ້າມີໂອກາດໃນການໄດ້ຮັບການຊ່ວຍເຫຼືອ, ຂ້ອຍຢາກໄດ້ຮັບຄວາມຊ່ວຍເຫຼືອໃນການຜ່າຕັດເພື່ອເອົາສະເກັດລະເບີດອອກຈາກຫູ້ຂອງຂ້ອຍ,"* ແລະ ອີກຄົນໜຶ່ງກ່າວວ່າ, *"ຂ້ອຍຢາກໄດ້ຮັບຄວາມຊ່ວຍເຫຼືອກ່ຽວກັບບັນຫາສາຍຕາຂອງຂ້ອຍ ເພາະວ່າເມື່ອເບິ່ງຂໍ້ຄວາມ ຫຼື ເບິ່ງໄກໆ ຂ້ອຍເບິ່ງບໍ່ເຫັນດີ ແລະ ບາງຄັ້ງຂ້ອຍຮູ້ສຶກວ່າມີສຽງດັງເປັນເວລາດົນໆໃນຫູຂອງຂ້ອຍ ແຕ່ບໍ່ແມ່ນຕະຫຼອດເວລາ."*

## ບາດແຜທາງດ້ານຈິດໃຈ ແລະ ດ້ານສັງຄົມ, ສຸຂະພາບຈິດ ແລະ ການກັບຄືນສູ່ສັງຄົມຂອງຜູ້ເຄາະຮ້າຍ

### *ຄວາມຢູ່ດີກິນດີ ແລະ ສຸຂະພາບຈິດ ໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ*

ຮູບທີ 8 ສະແດງເຖິງການຕອບຄຳຖາມຂອງຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ທີ່ເປັນຜູ້ໃຫຍ່ ກ່ຽວກັບຄວາມຢູ່ດີກິນດີ ໃນ4 ຫົວຂໍ້ຄຳຖາມທີ່ວ່າ "ຊີວິດຂອງຂ້ອຍກົງກັບອຸດົມການຂອງຂ້ອຍ," ຫຼາຍກວ່າເຄິ່ງໜຶ່ງ (53%) ຕອບວ່າ ບໍ່ເຫັນດີ, ໃນຂະນະທີ່ 44% ຕອບວ່າ ເຫັນດີ, ຊີ້ໃຫ້ເຫັນວ່າ ຫຼາຍຄົນຮູ້ສຶກວ່າຊີວິດຂອງເຂົາເຈົ້າຍັງບໍ່ທັນໄດ້ຕາມຄວາມປາຖະໜາຂອງເຂົາເຈົ້າ. ເມື່ອຖາມວ່າ "ຊີວິດການເປັນຢູ່ຂອງຂ້ອຍດີຫຼາຍ," ຄຳຕອບຖືກແບ່ງອອກຄື: 50% ຕອບວ່າ ເຫັນດີ, 44% ຕອບວ່າ ບໍ່ເຫັນດີ ແລະ ບໍ່ມີໃຜເລືອກຄຳຕອບທີ່ວ່າ ເຫັນດີທີ່ສຸດ ຫຼື ບໍ່ເຫັນດີທີ່ສຸດ. ສຳລັບຄຳຖາມທີ່ວ່າ "ຂ້ອຍພໍໃຈກັບຊີວິດຂອງຂ້ອຍ," ເຄິ່ງໜຶ່ງໄດ້ຕອບວ່າ ພໍໃຈ, ແຕ່ 47% ຕອບວ່າ ບໍ່ພໍໃຈ, ລວມທັງ 12% ທີ່ຕອບວ່າບໍ່ເຫັນດີທີ່ສຸດ. ຄຳຕອບສຳລັບຄຳຖາມທີ່ວ່າ "ຂ້ອຍໄດ້ຮັບສິ່ງທີ່ຂ້ອຍຕ້ອງການໃນຊີວິດແລ້ວ" ມີລັກສະນະທີ່ຄ້າຍຄືກັນ: 47% ເຫັນດີ, ໃນຂະນະທີ່ 53% ຕອບວ່າບໍ່ເຫັນດີ ຫຼື ບໍ່ເຫັນດີທີ່ສຸດ ໂດຍລວມແລ້ວ, ຂໍ້ມູນເຫຼົ່ານີ້ ສະທ້ອນໃຫ້ເຫັນເຖິງມຸມມອງທີ່ຫຼາກຫຼາຍ ແຕ່ມັກຈະເປັນທາງລົບກ່ຽວກັບຄວາມຢູ່ດີກິນດີ ແລະ ຄວາມພໍໃຈໃນຊີວິດ. ຜູ້ລອດຊີວິດທີ່ເປັນເດັກ ບໍ່ໄດ້ຖືກຖາມຄຳຖາມເຫຼົ່ານີ້.

## ຄຳຖາມບົດຄົ້ນຄວ້າ ທີ 4:

*ຮູບທີ 8: ຊີວິດການເປັນຢູ່ຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ນັບຕັ້ງແຕ່ເກີດອຸປະຕິເຫດ ລບຕ*




### *ຄວາມຢ້ານກົວ ແລະ ຄວາມວິຕົກກັງວົນຫຼັງຈາກອຸປະຕິເຫດ ເປັນອຸປະສັກຕໍ່ການກັບຄືນສູ່ສັງຄົມ*

ທັງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກ ໄດ້ເວົ້າເຖິງຄວາມຢ້ານກົວ ແລະ ຄວາມຮູ້ສຶກວິຕົກກັງວົນຫລັງຈາກເກີດອຸປະຕິເຫດ. ໃນຫຼາຍໆກໍລະນີ, ຜູ້ລອດຊີວິດຍັງໄດ້ເວົ້າກ່ຽວກັບຜົນກະທົບຂອງຄວາມຢ້ານກົວດັ່ງກ່າວທີ່ສົ່ງຜົນຕໍ່ຄວາມສາມາດໃນການມີສ່ວນຮ່ວມຢ່າງເຕັມທີ່ໃນກິດຈະກຳປະຈຳວັນຂອງເຂົາເຈົ້າ, ລວມທັງການເຮັດວຽກງານ, ກິດຈະກຳຊຸມຊົນ ແລະ ໂຮງຮຽນ. ດັ່ງທີ່ ນາງ ແສງຈັນ ໄດ້ອະທິບາຍວ່າ, *"ຖ້າຂ້ອຍໄປເຮັດວຽກຢູ່ສວນ, ຂ້ອຍຢ້ານວ່າລູກລະເບີດຈະແຕກໃສ່ອີກ, ຂ້ອຍລະມັດລະວັງຫຼາຍຈົນບໍ່ຢາກເຮັດວຽກໃນສວນເລີຍ, ຕັ້ງແຕ່ນັ້ນມາ ຂ້ອຍບໍ່ໄປເຮັດວຽກໃນສວນເລີຍ."* ຜູ້ລອດຊີວິດຄົນອື່ນໄດ້ສະທ້ອນຄວາມຮູ້ສຶກແບບນີ້ເຊັ່ນກັນ, ໂດຍອະທິບາຍວ່າເຂົາເຈົ້າບໍ່ໄດ້ກັບໄປທົ່ງນາ ຫຼື ປ່າ ທີ່ເຂົາເຈົ້າເຄີຍເຮັດວຽກ ຫຼື ໄປຊອກອາຫານການກິນ. ສຳລັບຜູ້ລອດຊີວິດບາງຄົນ, ຄວາມຢ້ານກົວຫຼັງຈາກອຸປະຕິເຫດຍັງໄດ້ຂັດຂວາງບໍ່ໃຫ້ເຂົາເຈົ້າເຂົ້າຮ່ວມກິດຈະກຳໃນຊຸມຊົນ. ດັ່ງທີ່ ທ້າວ ສົມໃຈ ໄດ້ເລົ່າໃຫ້ຟັງວ່າ: *"ຫຼັງເກີດການລະເບີດ, ທຸກຢ່າງໄດ້ປ່ຽນໄປ, ຂ້ອຍບໍ່ສາມາດເດີນທາງໄກໄດ້ອີກຕໍ່ໄປ ເພາະຮູ້ສຶກກັງວົນ ແລະ ຕົກໃຈງ່າຍ, ຂ້ອຍບໍ່ສາມາດຢູ່ໃນບ່ອນທີ່ມີສຽງດັງ ແລະ ຂ້ອຍບໍ່ມັກຢູ່ບ່ອນແອອັດທີ່ມີຄົນຫຼາຍຄົນ."*

ເດັກທີ່ລອດຊີວິດໄດ້ເລົ່າເຖິງຄວາມຢ້ານກົວ ແລະ ຄວາມຮູ້ສຶກວິຕົກກັງວົນຫລັງຈາກເກີດອຸປະຕິເຫດ ທີ່ຄ້າຍຄືກັນ. ດັ່ງທີ່ ທ້າວ ບຸນມີ ໄດ້ອະທິບາຍວ່າ: *"ກ່ອນເກີດອຸປະຕິເຫດ, ຂ້ອຍບໍ່ເຄີຍຢ້ານຫຍັງເລີຍ, ບໍ່ຢ້ານທີ່ຈະໄປທຸກບ່ອນ, ແຕ່ດຽວນີ້, ຂ້ອຍຢ້ານຕະຫຼອດເວລາ, ໂດຍສະເພາະບ່ອນທີ່ລະເບີດແຕກ."* ໂດຍສະເພາະຢ່າງຍິ່ງ ເດັກໄດ້ເວົ້າກ່ຽວກັບການຫຼີກລ່ຽງການໄປຫຼິ້ນຢູ່ຂ້າງນອກ ຍ້ອນຄວາມຢ້ານກົວດັ່ງກ່າວນີ້. ທ້າວ ແກ້ວ ໄດ້ອະທິບາຍວ່າ *"ຫຼັງຈາກເກີດອຸປະຕິເຫດຂຶ້ນ, ຂ້ອຍຮູ້ສຶກຢ້ານວ່າຈະຕາຍ" ແລະ ບໍ່ກ້າອອກໄປຫຼິ້ນຢູ່ບ່ອນທີ່ຂ້ອຍຄິດວ່າອັນຕະລາຍ."* ເຖິງແມ່ນວ່າການຫຼີກລ້ຽງສະຖານທີ່ທີ່ອັນຕະລາຍຈະເປັນສິ່ງສຳຄັນສຳລັບການປ້ອງກັນອຸປະຕິເຫດ, ແຕ່ລະດັບຂອງຄວາມຢ້ານກົວ ແລະ ຄວາມວິຕົກກັງວົນທີ່ເດັກຮູ້ສຶກຢູ່ໃນບາງສະຖານທີ່ ອາດຈະມີຜົນກະທົບຢ່າງຫຼວງຫຼາຍຕໍ່ສຸຂະພາບຈິດ ແລະ ທາງດ້ານຈິດໃຈຂອງເຂົາເຈົ້າ. ໂດຍລວມແລ້ວ, ການອະທິບາຍລາຍລະອຽດກ່ຽວກັບຄວາມຮູ້ສຶກຢ້ານ ແລະ ຄວາມວິຕົກກັງວົນ ມີຕັ້ງແຕ່ຄວາມກັງວົນເບື້ອງຕົ້ນທັນທີຫຼັງຈາກອຸປະຕິເຫດເກີດຂຶ້ນ ໄປຈົນເຖິງຄຳອະທິບາຍຂອງຜູ້ລອດຊີວິດກ່ຽວກັບປະສົບການໃນປະຈຸບັນຂອງເຂົາເຈົ້າ.

## ຄໍາຖາມບົດຄົ້ນຄວ້າ ທີ 4:

*ການໃຫ້ກໍາລັງໃຈ ແລະ ການປະກອບສ່ວນໃຫ້ແກ່ຊຸມຊົນ ແມ່ນກຸນແຈສໍາລັບຄວາມເປັນຢູ່ທີ່ດີຂອງຜູ້ລອດຊີວິດ*

ຜູ້ລອດຊີວິດມັກຈະສົນທະນາກ່ຽວກັບຄຸນຄ່າຂອງການໄດ້ຮັບກໍາລັງໃຈຈາກຄອບຄົວ ແລະ ສະມາຊິກໃນຊຸມຊົນ ແລະ ສະແດງຄວາມປາດຖະໜາທີ່ຈະປະກອບສ່ວນໃນການສະໜັບສະໜູນຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ ເຖິງວ່າຈະມີຂໍ້ຈໍາກັດໃດໜຶ່ງທີ່ເກີດຈາກອຸປະຕິເຫດ ກໍ່ຕາມ.

ຜູ້ລອດຊີວິດຫລາຍຄົນໃຫ້ຄວາມສໍາຄັນຕໍ່ການໃຫ້ກໍາລັງໃຈທີ່ເຂົາເຈົ້າໄດ້ຮັບຈາກຄອບຄົວ, ພີ່ນ້ອງ, ໝູ່ເພື່ອນ ແລະ ສະມາຊິກໃນຊຸມຊົນ. ເຂົາເຈົ້າເນັ້ນເຖິງຄວາມສໍາຄັນຂອງການໃຫ້ກໍາລັງໃຈເຫຼົ່ານີ້, ຜູ້ລອດຊີວິດຍັງໄດ້ເວົ້າເຖິງປະສົບການຂອງເຂົາເຈົ້າໃນເວລາທີ່ກໍາລັງໃຈເຫຼົ່ານີ້ຂາດຫາຍໄປ. ດັ່ງທີ່ ທ້າວ ສົມໃຈ ໄດ້ກ່າວວ່າ *"ປະຊາຊົນໃນຊຸມຊົນຍັງໄດ້ສະແດງຄວາມຫ່ວງໃຍໂດຍການໄປຢ້ຽມຢາມຂ້ອຍໃນເວລາທີ່ຂ້ອຍບໍ່ສະບາຍ ແລະ ເຂົາເຈົ້າຖາມກ່ຽວກັບສຸຂະພາບຂອງຂ້ອຍ, ນີ້ແມ່ນການໃຫ້ກໍາລັງໃຈທີ່ສໍາຄັນສໍາລັບຂ້ອຍ."* ໃນຖ້ອຍຄໍານີ້, ທ້າວ ສົມໃຈ ບໍ່ພຽງແຕ່ອະທິບາຍກ່ຽວກັບວິທີການທີ່ຊຸມຊົນຂອງລາວໄດ້ໃຫ້ການສະໜັບສະໜູນເທົ່ານັ້ນ, ແຕ່ຍັງໄດ້ອະທິບາຍວ່າມັນເປັນສິ່ງສໍາຄັນສໍາລັບການກັບຄືນສູ່ສັງຄົມ ອີກດ້ວຍ.

ເມື່ອຖາມຜູ້ລອດຊີວິດວ່າ ເຂົາເຈົ້າຈະເວົ້າແນວໃດ ຖ້າເຂົາເຈົ້າໄດ້ພົບກັບຜູ້ລອດຊີວິດຄົນອື່ນ, ເຂົາເຈົ້າຈະກ່າວເຖິງການໃຫ້ກໍາລັງໃຈທາງອາລົມ. ດັ່ງທີ່ ທ້າວ ສົມໃຈ ໄດ້ອະທິບາຍໄວ້ໃນຖ້ອຍຄໍາລຸ່ມນີ້ວ່າ ການໃຫ້ກໍາລັງໃຈທາງອາລົມເປັນສິ່ງທີ່ເຂົາເຈົ້າສາມາດມອບໃຫ້ແກ່ຜູ້ລອດຊີວິດຄົນອື່ນໄດ້:

> ສົມມຸດວ່າຂ້ອຍໄດ້ພົບກັບຜູ້ລອດຊີວິດຈາກລະເບີດ, ຂ້ອຍຈະລົມກັບເຂົາເຈົ້າ, ສະແດງຄວາມເຫັນອົກເຫັນໃຈຂອງຂ້ອຍ ແລະໃຫ້ກໍາລັງໃຈແກ່ເຂົາເຈົ້າໃນການຕໍ່ສູ້ ຄືກັນກັບທີ່ຂ້ອຍເຄີຍຕໍ່ສູ້ມາໃນນາມທີ່ເປັນຜູ້ເຄາະຮ້າຍ. ນັ້ນແມ່ນສິ່ງທີ່ຂ້ອຍສາມາດເວົ້າໄດ້. ຂ້ອຍບໍ່ມີເງິນ ຫຼື ສິ່ງຂອງໃດໆໃຫ້ເຂົາເຈົ້າ. ແຕ່ຂ້ອຍສາມາດໃຫ້ກໍາລັງໃຈແກ່ຜູ້ປະສົບເຄາະຮ້າຍ.

ນອກຈາກການໃຫ້ກໍາລັງໃຈດັ່ງທີ່ກ່າວມາຂ້າງເທິງ, ຜູ້ລອດຊີວິດມັກຈະກ່າວເຖິງວິທີທີ່ເຂົາເຈົ້າຕ້ອງການ ແລະ/ຫຼື ສາມາດປະກອບສ່ວນໃຫ້ແກ່ຊຸມຊົນຂອງເຂົາເຈົ້າ ເຖິງວ່າຈະມີຂໍ້ຈໍາກັດທາງດ້ານຮ່າງກາຍທີ່ເກີດຈາກອຸປະຕິເຫດ ກໍ່ຕາມ. ທ້າວ ຄໍາດີ ສະແດງຄວາມປາຖະໜາ ແລະ ການກະທໍາດັ່ງກ່າວ ເພື່ອປະກອບສ່ວນໃຫ້ແກ່ຊຸມຊົນ ເຖິງວ່າຈະມີຂໍ້ຈໍາກັດ ກໍ່ຕາມ:

> ເຖິງວ່າຈະມີຄວາມຫຍຸ້ງຍາກ, ແຕ່ຂ້ອຍກໍ່ມັກເຂົ້າຮ່ວມກິດຈະກໍາຂອງຊຸມຊົນ. ຂ້ອຍໄປປະຊຸມບ້ານເມື່ອໄດ້ຮັບແຈ້ງ ແລະ ຂ້ອຍຍັງຊ່ວຍວຽກໃນຂອງຊຸມຊົນ. ນອກຈາກນີ້, ຫລັງຈາກຖາງຫຍ້າໃນໄຮ່ຂອງຕົນເອງແລ້ວ, ຂ້ອຍຍັງໄປຊ່ວຍໝູ່ເພື່ອນທີ່ຕ້ອງການຄວາມຊ່ວຍເຫຼືອ ອີກດ້ວຍ. ເມື່ອມີບຸນ ຫຼື ງານຕ່າງໆໃນບ້ານ ທຸກຄົນໃນຊຸມຊົນລ້ວນແຕ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

ອີກຕົວຢ່າງໜຶ່ງ, ການປະກອບສ່ວນນີ້ ຍັງໄດ້ອ້າງອີງໂດຍກົງເຖິງການແບ່ງປັນເລື່ອງລາວກ່ຽວກັບອຸປະຕິເຫດ ລບຕ. ດັ່ງທີ່ ຄໍາເວົ້າ ຂອງ ບຸນມີ ເຊິ່ງອະທິບາຍກ່ຽວກັບວິທີທີ່ລາວແບ່ງປັນເລື່ອງລາວຢູ່ໂຮງຮຽນ ວ່າ:

> ຄູສອນຢູ່ໂຮງຮຽນໄດ້ໃຫ້ໂອກາດຂ້ອຍແລກປ່ຽນປະສົບການກ່ຽວກັບຜົນກະທົບຈາກອຸປະຕິເຫດ ລບຕ ໂດຍໃຫ້ຂ້ອຍເລົ່າເລື່ອງ ແລະ ຄວາມຮູ້ສຶກຂອງຂ້ອຍ. ມີຜູ້ເຂົ້າຮ່ວມປະມານ 70 ຫາ 80 ຄົນຢູ່ໃນໂຮງຮຽນ ມາຟັງເລື່ອງຂອງຂ້ອຍ. ເລື່ອງທີ່ຂ້ອຍເລົ່າສູ່ຟັງຕອນນັ້ນແມ່ນຕອນທີ່ຂ້ອຍເກີດອຸປະຕິເຫດ, ຂ້ອຍບໍ່ຮູ້ສຶກເຈັບປວດເລີຍ, ຈົນຂ້ອຍໄດ້ຍິນນ້ອງຊາຍຂອງຂ້ອຍເອີ້ນຊື່ຂ້ອຍ ແລະ

> ເວົ້າວ່າ 'ລູກລະເບີດແຕກ." ທັນໃດນັ້ນ ຂ້ອຍຮູ້ສຶກຢ້ານ. ຂ້ອຍຢ້ານວ່າຂ້ອຍອາດບໍ່ລອດ ແລະ ຈະບໍ່ເຫັນພໍ່ແມ່ອີກ. ຫລັງຈາກເລົ່າສູ່ຟັງແລ້ວ ຂ້ອຍກໍ່ໄດ້ແນະນຳໃຫ້ທຸກຄົນທີ່ມາຮ່ວມຟັງວ່າ: ຖ້າຈະຂຸດດິນຕອນໃດ ກໍ່ຕ້ອງກວດເບິ່ງບ່ອນນັ້ນ ຫຼື ດິນກ່ອນວ່າມີລະເບີດບໍ່, ຂ້ອຍບໍ່ຢາກໃຫ້ອຸປະຕິເຫດແບບນີ້ເກີດຂຶ້ນກັບຜູ້ອື່ນອີກ.

ເຖິງແມ່ນວ່າເຫດການປະເພດນີ້ ຈະບໍ່ແມ່ນການປະກອບສ່ວນທີ່ຈະສົນທະນາກັນເລື້ອຍໆ, ແຕ່ຄຳເວົ້າເຫຼົ່ານີ້ ຊີ້ໃຫ້ເຫັນເຖິງໂອກາດພິເສດສຳລັບຜູ້ລອດຊີວິດຈາກ ລບຕ ໃນການປະກອບສ່ວນອັນສຳຄັນໃຫ້ແກ່ຊຸມຊົນຂອງເຂົາເຈົ້າ ແລະ ພິຈາລະນາຄວາມພະຍາຍາມຂອງ ການໂຄສະນາໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຈາກລະເບີດ ໃນອະນາຄົດ.

## ການສົນທະນາກ່ຽວກັບຄຳຖາມທີ 4

### ຄວາມຕ້ອງການທາງດ້ານການແພດ ແລະ ການຕອບສະໜອງຊ່ວຍເຫຼືອໃນທັນທີ

ຈາກການສົນທະນາຂອງພວກເຮົາກັບຜູ້ລອດຊີວິດ, ທີມງານຂອງພວກເຮົາໄດ້ຮຽນຮູ້ກ່ຽວກັບປະສົບການຂອງເຂົາເຈົ້າກ່ຽວກັບການບໍລິການໃນການດູແລສຸຂະພາບ, ລວມທັງການປິ່ນປົວເບື້ອງຕົ້ນ ແລະ ການປິ່ນປົວຢ່າງຕໍ່ເນື່ອງ, ການຟື້ນຟູ ແລະ ການບໍລິການສຸຂະພາບຈິດ. ໜຶ່ງໃນສິ່ງທ້າທາຍທີ່ກົດດັນທີ່ສຸດແມ່ນ ການຊັກຊ້າໃນການເຂົ້າເຖິງການປິ່ນປົວທາງການແພດ. ຜູ້ລອດຊີວິດມັກຈະໄດ້ລໍຖ້າເກີນຈົນກາຍ "ເວລາທີ່ສົມຄວນໄດ້ຮັບການປິ່ນປົວ"[38] ໂດຍສະເພາະໃນເຂດຊົນນະບົດທີ່ພື້ນຖານໂຄງລ່າງດ້ານສາທາລະນະສຸກມີຂະໜາດນ້ອຍ ແລະ ການຂົນສົ່ງມີຄວາມຫຍຸ້ງຍາກ; ຄວາມລ່າຊ້າດັ່ງກ່າວ ເຮັດໃຫ້ຄວາມຮຸນແຮງຂອງການບາດເຈັບຮ້າຍແຮງຂຶ້ນ ແລະ ເພີ່ມຄວາມສ່ຽງຕໍ່ຄວາມພິການໃນໄລຍະຍາວ, ເຊິ່ງເປັນທ່າອ່ຽງທີ່ສະທ້ອນໃຫ້ເຫັນຢູ່ໃນສະພາບການອື່ນໆຫຼັງຈາກມີຂໍ້ຂັດແຍ້ງ ແລະ ໃນສະພາບທີ່ມີຊັບພະຍາກອນຕໍ່າ. ສິ່ງຄວາມທ້າທາຍທີ່ຄ້າຍຄືກັນແມ່ນໄດ້ຖືກບັນທຶກໄວ້ໃນສະພາບການອື່ນໆທີ່ມີຊັບພະຍາກອນຕໍ່າ ຫຼື ຈາກມີຂໍ້ຂັດແຍ້ງ, ເຊິ່ງການຊັກຊ້າໃນການເຂົ້າເຖິງການດູແລ ມີຄວາມກ່ຽວຂ້ອງກັບອາການແຊກຊ້ອນທີ່ສູງຂຶ້ນ ແລະ ຄວາມພິການຊຳເຮື້ອ.[39] [40]

ກຸ່ມຜູ້ໃຫຍ່ຫຼາຍຄົນມັກຈະເພິ່ງພາລະບົບສາທາລະນະໃນຫຼາຍລະດັບ ກ່ອນທີ່ຈະໄດ້ຮັບການເບິ່ງແຍງດູແລທີ່ເໝາະສົມ, ໃນຂະນະທີ່ເດັກມັກຈະບໍ່ໃຊ້ການບໍລິການໃນສະຖານທີ່ປິ່ນປົວຢູ່ໃນທ້ອງຖິ່ນເລີຍ, ອັນນີ້ຊີ້ໃຫ້ເຫັນວ່າ ຍ້ອນການຂາດຄວາມສາມາດໃນການດູແລຜູ້ບາດເຈັບທີ່

---

[38] ໃນການດູແລການບາດເຈັບ, "ເວລາທີ່ສົມຄວນໄດ້ຮັບການປິ່ນປົວ" ໝາຍເຖິງ 60 ນາທີທຳອິດຫຼັງຈາກການບາດເຈັບຮ້າຍແຮງ ຫຼື ເຫດການສຸກເສີນທາງການແພດ. https://www.who.int/about/accountability/results/who-results-report-2022-mtr/rapid-reaction-aiming-for-the-golden-hour-of-health-emergency-response

[39] Werner K, Kak M, Herbst CH, Lin TK. ບົດບາດຂອງການດູແລໂດຍພະນັກງານສາທາລະນະສຸກໃນຊຸມຊົນ ໃນສະພາບການຫຼັງການເກີດຂໍ້ຂັດແຍ້ງ: ການທົບທວນຢ່າງເປັນລະບົບ. ແຜນນະໂຍບາຍສຸຂະພາບ. 2023 Feb 13;38(2):261-274. doi: 10.1093/heapol/czac072. PMID: 36124928; PMCID: PMC9923383. https://pmc.ncbi.nlm.nih.gov/articles/PMC9923383/

[40] Omam, LA., Jarman, E., O'Laughlin, K.N. et al. ຮູບແບບການໃຫ້ບໍລິການໃນການດູແລສຸຂະພາບຂັ້ນຕົ້ນໃນສະພາບການທີ່ໄດ້ຮັບຜົນກະທົບຈາກຂໍ້ຂັດແຍ່ງໃນອາຟຣິກາ: ການທົບທວນລະບົບ. Confl Health 17, 34 (2023). https://doi.org/10.1186/s13031-023-00533-https://conflictandhealth.biomedcentral.com/articles/10.1186/s13031-023-00533-w

ເປັນເດັກ ຫຼື ຍ້ອນພໍ່ແມ່ຜູ້ປົກຄອງຄິດວ່າໂຮງຫມໍລະດັບໃນຂັ້ນສູງຂຶ້ນມີອຸປະກອນທີ່ດີກວ່າ. ການຂາດການຊ່ວຍເຫຼືອເບື້ອງຕົ້ນໃນຊຸມຊົນໃນທັນທີທັນໃດນີ້ເປັນຊ່ອງຫວ່າງທີ່ສຳຄັນ, ຍ້ອນວ່າອຸປະຕິເຫດສ່ວນໃຫຍ່ເກີດຂຶ້ນໃນເວລາທີ່ຜູ້ເຄາະຮ້າຍກຳລັງຢ່າງ.

ຄວາມເປັນໄປໄດ້ຢ່າງໜຶ່ງສຳລັບການຂະຫຍາຍການສະໜັບສະໜູນ ອາດຂຶ້ນຢູ່ກັບການນຳໃຊ້ປະໂຫຍດຈາກເຄືອຂ່າຍຂອງແພດໝໍສຸກເສີນ ທີ່ໄດ້ຮັບການຝຶກອົບຮົມ ທີ່ເຮັດວຽກຮ່ວມກັບຜູ້ປະຕິບັດວຽກງານກ່ຽວກັບ ລບຕ ທີ່ມີສ່ວນຮ່ວມໃນການເກັບກູ້ ແລະ ການເຄື່ອນຍ້າຍ ລບຕ. ກໍລະນີຂອງຜູ້ລອດຊີວິດຄົນໜຶ່ງທີ່ໄດ້ຮັບການດູແລທັນທີຈາກແພດສຸກເສີນຂອງໜ່ວຍງານທີ່ປະຕິບັດວຽກງານ ລບຕ ຊີ້ໃຫ້ເຫັນວ່າ ການດູແລທັນທີເຫຼົ່ານີ້ ມີທ່າແຮງທີ່ຈະອັດຊ່ອງຫວ່າງໄດ້; ເຖິງຢ່າງໃດກໍ່ຕາມ, ການຂະຫຍາຍ ຫຼື ການຈັດລະບົບການຕອບສະໜອງປະເພດນີ້ອາດມີຄວາມທ້າທາຍ ຍ້ອນຄວາມຮັບຮູ້ຂອງຊຸມຊົນ ແລະ ຍ້ອນຄວາມເປັນຈິງທີ່ວ່າ ທີມງານເກັບກູ້ລະເບີດ (ແລະ ແພດໝໍຂອງເຂົາເຈົ້າ) ບໍ່ໄດ້ຢູ່ໃນພື້ນທີ່ສະເພາະໃດໜຶ່ງຕະຫຼອດເວລາ. ຈຳເປັນຕ້ອງມີການສຶກສາຄົ້ນຄວ້າເພີ່ມເຕີມ, ມີການປຶກສາຫາລື ແລະ ການສ້າງແຜນວາດບ່ອນທີ່ມີແພດໝໍທີ່ປະຕິບັດວຽກງານ ລບຕ ຕື່ມອີກ ເພື່ອສຳຫຼວດເບິ່ງທ່າແຮງຂອງວິທີການຊ່ວຍເຫຼືອເຫຼົ່ານີ້ໃນສະພາບການຂອງ ສປປ ລາວ. ອີກທາງເລືອກໜຶ່ງແມ່ນ ອາດຈະສຶກສາຄົ້ນຄ້ວາການຝຶກອົບຮົມກ່ຽວກັບການຊ່ວຍເຫຼືອເບື້ອງຕົ້ນ ແລະ ຊຸດອຸປະກອນສຸກເສີນແບບພົກພາໄດ້ໃນຂັ້ນບ້ານ ທີ່ຢູ່ໃນເຂດທີ່ມີຄວາມສ່ຽງສູງ; ເຖິງວ່າການຝຶກອົບຮົມຂະໜາດໃຫຍ່ ແລະ ການຝຶກແບບເລິກເຊິ່ງ ອາດຈະມີຄ່າໃຊ້ຈ່າຍສູງ ເມື່ອທຽບກັບອັດຕາສ່ວນຂອງອຸປະຕິເຫດ ລບຕ, ແຕ່ວ່າ ການຝຶກອົບຮົມຂັ້ນພື້ນຖານທີ່ສຳຄັນແບບງ່າຍໆ ອາດສາມາດຊ່ວຍຫຼຸດຜ່ອນອັດຕາການເຈັບເປັນ ທີ່ສາມາດປ້ອງກັນໄດ້.

## ຄວາມຕ້ອງການ ແລະ ການສະໜັບສະໜູນ ທາງດ້ານຟື້ນຟູໜ້າທີ່ການ

ການບໍລິການຟື້ນຟູໜ້າທີ່ການ, ຕັ້ງແຕ່ກາຍຍະພາບບຳບັດ ແລະ ຂາທຽມ ໄປຈົນເຖິງການສະໜັບສະໜູນທາງດ້ານຈິດໃຈ, ຍັງຄົງຈຳກັດການໄປຫາ ແລະ ການເຂົ້າເຖິງການບໍລິການ. ມີຜູ້ລອດຊີວິດຈຳນວນນ້ອຍເທົ່ານັ້ນທີ່ລາຍງານວ່າໄດ້ຮັບການດູແລດັ່ງກ່າວ, ເຖິງວ່າຈະມີຫຼັກຖານທີ່ຊັດເຈນກ່ຽວກັບຄວາມສຳຄັນຂອງການດູແລສຳລັບການຟື້ນຕົວສະມັດຕະພາບ ແລະ ການຊ່ວຍຕົນເອງໄດ້, ເຊິ່ງສອດຄ່ອງກັບບົດລາຍງານອື່ນໆ.[41] [42] ອຸປະສັກທາງການເງິນ ແລະ ດ້ານພູມສັນຖານ, ບວກໃສ່ກັບການມີຢູ່ຂອງການບໍລິການຢູ່ໃນຕົວເມືອງ ເຊັ່ນ: ຄລີນິກ COPE ເຮັດໃຫ້ຜູ້ລອດຊີວິດສ່ວນໃຫຍ່ບໍ່ໄດ້ຮັບການສະໜັບສະໜູນຢ່າງພຽງພໍ. ການຄົ້ນພົບເຫຼົ່ານີ້ ສອດຄ້ອງກັບການສຶກສາຄົ້ນຄ້ວາທີ່ມີຢູ່ໃນປະຈຸບັນ:[43] ຜູ້ລອດຊີວິດຈາກ ລບຕ ມັກຈະປະສົບກັບຄວາມທຸກໂສກ ແລະ ຄວາມເຈັບປວດທາງດ້ານຈິດໃຈທີ່ແກ່ຍາວມາເປັນເວລາດົນນານ, ແຕ່ພັດໄດ້ຮັບການຟື້ນຟູແບບຄົບວົງຈອນພຽງເລັກນ້ອຍເທົ່ານັ້ນ ນອກຈາກຈາກໃສ່ຂາທຽມ ແລະ ກາຍຍະບຳບັດເທົ່ານັ້ນ.

---

[41] ການຕິດຕາມກວດກາລະເບີດຝັງດິນ ແລະ ລະເບີດກະປາງ (2014). Cluster Munition Monitor 2014: ການບາດເຈັບ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. https://archives2.the-monitor.org/en-gb/reports/2014/cluster-munition-monitor-2014/casualties-victim-assistance

[42] ການຕິດຕາມກວດກາລະເບີດຝັງດິນ ແລະ ລະເບີດກະປາງ (2022). ການຕິດຕາມລະເບີດກະປາງ 2022: ຜົນກະທົບ. https://archives2.the-monitor.org/en-gb/reports/2022/cluster-munition-monitor-2022/the-impact.aspx

[43] Wyper, R. B. (2012). ການສຶກສາຄົ້ນຄວ້າຜົນກະທົບດ້ານສຸຂະພາບຂອງຜູ້ເຄາະຮ້າຍຈາກລະເບີດຝັງດິນ/ລະເບີດບໍ່ທັນແຕກ ຕໍ່ກັບກຸ່ມຄົນພິການອື່ນ. ຜົນໄດ້ຮັບດ້ານສຸຂະພາບ ແລະ ຄຸນນະພາບຂອງຊີວິດ, 10(1), 121. https://link.springer.com/article/10.1186/1477-7525-10-121

ຄວາມສາມາດຂອງຜູ້ລອດຊີວິດໃນການມີເຮັດກິດຈະກຳປະຈຳວັນ ໄດ້ຊີ້ໃຫ້ເຫັນເຖິງຜົນກະທົບທີ່ກ້ວາງຂວາງຂອງ ລບຕ ນອກຈາກການຫາລາຍໄດ້. ຜູ້ລອດຊີວິດສ່ວນໃຫຍ່ ຍັງສາມາດດູແລຕົນເອງໄດ້, ແຕ່ຍັງມີຈຳນວນນ້ອຍໜຶ່ງ ເຊິ່ງສ່ວນຫຼາຍແມ່ນຜູ້ໃຫຍ່ ຍັງມີຂໍ້ຈຳກັດໃນການເຄື່ອນໄຫວ, ການຮັບຮູ້, ຄວາມຊົງຈຳ ຫຼື ຂໍ້ຈຳກັດໃນການສື່ສານ, ເຊິ່ງເຮັດໃຫ້ການເພິ່ງພາສະມາຊິກໃນຄອບຄົວສູງຂຶ້ນ ແລະ ຈຳກັດຄວາມສາມາດໃນການເຮັດວຽກ, ການສຶກສາ ແລະ ການດຳລົງຊີວິດຢູ່ໃນຊຸມຊົນ. ການເຂົ້າເຖິງອຸປະກອນຊ່ວຍເຫຼືອທີ່ຈຳກັດ ເຮັດໃຫ້ສິ່ງທ້າທາຍເຫຼົ່ານີ້ຮ້າຍແຮງຂຶ້ນ. ໂດຍທົ່ວໄປແລ້ວເດັກຈະປະສົບກັບຄວາມບົກຜ່ອງໜ້ອຍລົງ, ແຕ່ວ່າຄວາມຫຍຸ້ງຍາກເລັກນ້ອຍກໍສາມາດສົ່ງຜົນກະທົບຕໍ່ການຮຽນ ແລະ ການພັດທະນາ ໄດ້. ຄວາມຫຍຸ້ງຍາກເຫຼົ່ານີ້ ເຮັດໃຫ້ເພີ່ມການເພິ່ງພາສະມາຊິກໃນຄອບຄົວ, ເພີ່ມທະວີຄວາມສ່ຽງຕໍ່ຄວາມສ່ຽງດ້ານສຸຂະພາບ ແລະ ຫຼຸດຜ່ອນການເຂົ້າຮ່ວມການສຶກສາ, ການເຮັດວຽກ ແລະ ການດຳລົງຊີວິດຢູ່ໃນຊຸມຊົນ. ການນຳໃຊ້ອຸປະກອນຊ່ວຍເຫຼືອທີ່ມີຢ່າງຈຳກັດ ຊີ້ໃຫ້ເຫັນຊ່ອງຫວ່າງໃນລະບົບໃນການຟື້ນຟູ ແລະ ການບໍລິການສະໜັບສະໜູນ, ເຮັດໃຫ້ຜູ້ລອດຊີວິດຈຳນວນຫຼາຍຕ້ອງຮັບມືກັບບັນຫາ ໂດຍບໍ່ມີເຄື່ອງມືທີ່ພຽງພໍໃນການຟື້ນຟູຄວາມສາມາດໃນການຊ່ວຍຕົນເອງໄດ້.

ການຂາດການຟື້ນຟູໜ້າທີ່ການແບບລວມສູນ, ລວມທັງການບໍລິການດ້ານສຸຂະພາບຈິດ ເຮັດໃຫ້ເກີດພາລະໜັກໜ່ວງ, ຍ້ອນວ່າຜູ້ລອດຊີວິດມັກຈະທົນທຸກກັບຄວາມເຈັບປວດຊໍາເຮື້ອ, ມີມົນທິນ ແລະ ມີຄວາມຫຍຸ້ງຍາກທາງດ້ານຈິດໃຈ ໂດຍໄດ້ຮັບການຊ່ວຍເຫຼືອຢ່າງເປັນທາງການພຽງເລັກນ້ອຍເທົ່ານັ້ນ. ຫຼັກຖານຈາກສະພາບການຫຼັງການເກີດຂໍ້ຂັດແຍ້ງ ຊີ້ໃຫ້ເຫັນວ່າແມ່ຍິງມັກຈະປະເຊີນກັບພາລະທາງຈິດໃຈຫຼາຍຂຶ້ນ, ໂດຍມີອັດຕາຄວາມເຄັ່ງຕຶງ ແລະ ຊຶມເສົ້າທີ່ສູງກວ່າ, ຮຽກຮ້ອງໃຫ້ມີຍຸດທະສາດໃນການສະໜັບສະໜູນທີ່ຄຳນຶງເຖິງທາງເພດ.[44] [45] ການຂະຫຍາຍການບໍລິການຟື້ນຟູໜ້າທີ່ການແບບແບ່ງຂັ້ນຄຸ້ມຄອງ ແລະ ເຊື່ອມໂຍງເຂົ້າກັບຍຸດທະສາດສາທາລະນະສຸກແຫ່ງຊາດ ຍັງຄົງເປັນບຸລິມະສິດອັນຮີບດ່ວນ.[46]

ບັນດາມາດຕະຖານທາງວັດທະນະທຳ ຍັງມີອິດທິພົນຕໍ່ການຟື້ນຕົວ. ຄວາມເຊື່ອແບບສາດສະໜາຜີທີ່ມີຫຼາຍໃນຊຸມຊົນ ແລະ ຄວາມສາມັກຄີຂອງຊຸມຊົນທີ່ເຂັ້ມແຂງໃນເຂດຊົນນະບົດ ມີອິດທິພົນຕໍ່ວິທີທີ່ຜູ້ລອດຊີວິດຕີຄວາມໝາຍການບາດເຈັບ ແລະ ຊອກຫາການສະໜັບສະໜູນ. ເຄືອຂ່າຍຊ່ວຍເຫຼືອທາງສັງຄົມສາມາດຫຼຸດຜ່ອນການບາດເຈັບທາງຈິດໃຈໄດ້, ແຕ່ກຸ່ມຊົນເຜົ່າສ່ວນນ້ອຍອາດຈະປະເຊີນກັບຄວາມອັບອາຍ ຫຼື ຄວາມບໍ່ໄວ້ວາງໃຈ ໃນເວລາທີ່ມີສ່ວນຮ່ວມກັບການບໍລິການທີ່ເປັນທາງການ. ປັດໃຈກຳນົດທາງດ້ານສັງຄົມ ເຊັ່ນ:

---

[44] Fel S, Jurek K, Lenart-Kłoś K. ຄວາມສຳພັນລະຫວ່າງປັດໃຈສັງຄົມ ແລະ ປະຊາກອນ ກັບພາວະຄວາມຄຽດຫລັງເຫດການສະເທືອນຂ້ວນ: ການສຶກສາໃນທີ່ວະແໜງການກ່ຽວກັບຂໍ້ຂັດແຍ້ງທາງພົນລະເຮືອນໃນ Ukraine. Int J Environ Res ສາທາລະນະສຸກ. 2022 Feb 26;19(5):2720. doi: 10.3390/ijerph19052720. PMID: 35270413; PMCID: PMC8910590. https://pubmed.ncbi.nlm.nih.gov/35270413/

[45] Ainamani, H.E., Elbert, T., Olema, D.K. et al. ຄວາມແຕກຕ່າງທາງດ້ານເພດ ໃນການຕອບສະໜອງຕໍ່ການບາດເຈັບທີ່ເກີດຈາກສົງຄາມ ແລະ ໂຣກຄວາມຄຽດ - ການສຶກສາໃນກຸ່ມຊາວອົບພະຍົບ ຄອງໂກ ໃນອູການດາ. BMC Psychiatry 20, 17 (2020). https://doi.org/10.1186/s12888-019-2420-0 https://bmcpsychiatry.biomedcentral.com/articles/10.1186/s12888-019-2420-0

[46] ການປະຕິບັດການກ່ຽວກັບລະເບີດຝັງດິນໃນເອເຊຍ (2025). ປ່ຽນຄວາມເຈັບປວດໃຫ້ເປັນພະລັງ: ເສັ້ນທາງສູ່ອະນາຄົດສຳລັບຜູ້ລອດຊີວິດຈາກລະເບີດບໍ່ທັນແຕກໃນ ສປປ ລາວ https://aseanmineaction.org/turning-pain-into-power-a-path-forward-for-unexploded-ordnance-survivors-in-lao-pdr/

ຊົນເຜົ່າ ແລະ ກຸ່ມຄົນດ້ອຍໂອກາດທາງດ້ານສັງຄົມ ແມ່ນຍັງມີຄວາມສ່ຽງຕໍ່ຄວາມຫຍຸ້ງຍາກທາງດ້ານຈິດໃຈທີ່ຊໍ້າເຮື້ອ.[47] ໂຄງການທີ່ເຄົາລົບການປະຕິບັດທາງວັດທະນະທຳ ແລະ ເສີມຂະຫຍາຍຄວາມສາມັກຄີຂອງຊຸມຊົນ ມີຄວາມສຳຄັນຫລາຍໃນການປັບປຸງຜົນໄດ້ຮັບທາງຈິດໃຈ.

## ຂໍ້ສະເໜີແນະຄຳຖາມທີ 4

- **ເພີ່ມຄວາມຮັບຮູ້ກ່ຽວກັບຄວາມສຳຄັນຂອງການເຮັດໃຫ້ຜູ້ເຄາະຮ້າຍໄດ້ຮັບການປິ່ນປົວດູແລຢ່າງວ່ອງໄວ. ລະດົມເຄືອຂ່າຍການຂົນສົ່ງໃນທ້ອງຖິ່ນເພື່ອການນຳສົ່ງສຸກເສີນ:** ໃນບາງກໍລະນີ, ຄວາມຫ່າງໄກໃນເວລາເກີດອຸປະຕິເຫດອາດເຮັດໃຫ້ການຊັກຊ້າໃນການປິ່ນປົວດູແລ ເປັນສິ່ງທີ່ຫຼີກລ່ຽງບໍ່ໄດ້ (ເຊັ່ນ ໃນກໍລະນີຂອງຜູ້ລອດຊີວິດທີ່ຖືກຫາມໄປບ່ອນປິ່ນປົວເປັນເວລາ 2 ຊົ່ວໂມງ); ຢ່າງໃດກໍຕາມ, ຍັງມີກໍລະນີທີ່ການຊັກຊ້າອາດເກີດຈາກການນຳຜູ້ເຄາະຮ້າຍກັບເມືອບ້ານກ່ອນ, ການຈັດການເລື່ອງການຂົນສົ່ງ ແລະ ການຊອກເງິນເພື່ອການປິ່ນປົວ. ທາງເລືອກໜຶ່ງແມ່ນຄວນມີການເພີ່ມຂໍ້ຄວາມສຳຄັນໃສ່ໃນການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ສຳລັບການຕອບສະໜອງຊ່ວຍເຫຼືອທີ່ເໝາະສົມ, ຕົວຢ່າງ, ຜູ້ໃດກໍຕາມທີ່ກ່ຽວຂ້ອງກັບອຸປະຕິເຫດ ລບຕ ຄວນໄດ້ຮັບການເອົາໃຈໃສ່ປິ່ນປົວທາງການແພດ ແລະ ຄວນມີການປະເມີນທັນທີ ເຖິງແມ່ນວ່າການບາດເຈັບຈະເບິ່ງຄືວ່າເປັນການບາດເຈັບເລັກນ້ອຍກໍ່ຕາມ.

- **ສຳຫຼວດທາງເລືອກຕ່າງໆ ເພື່ອຫຼຸດຜ່ອນຄວາມຊັກຊ້າໃນການເຊື່ອມຕໍ່ຜູ້ລອດຊີວິດກັບການຕອບສະໜອງຊ່ວຍເຫຼືອທາງການແພດ:** ຜົນໄດ້ຮັບຈາກການສຶກສາຄົ້ນຄ້ວາ ສະແດງໃຫ້ເຫັນເຖິງຄວາມຊັກຊ້າທີ່ສຳຄັນ ທີ່ຜູ້ເຄາະຮ້າຍຈະໄດ້ຮັບການປິ່ນປົວການບາດເຈັບຢ່າງທັນການ. ປັດໄຈຫຼາຍຢ່າງທີ່ປະກອບສ່ວນເຮັດໃຫ້ເກີດຄວາມຊັກຊ້າ ແລະ ຂໍ້ມູນທີ່ບໍ່ຊັດເຈນກ່ຽວກັບສາເຫດທົ່ວໄປຊີ້ໃຫ້ເຫັນວ່າບັນຫານີ້ຕ້ອງໄດ້ຮັບການກວດສອບຕື່ມອີກ ແລະ ອາດຈະຕ້ອງມີວິທີການເຮັດວຽກແບບຮ່ວມກັນຫຼາຍໆດ້ານ. ຕົວຢ່າງ, ອາດຈະນຳໃຊ້ໜ່ວຍແພດສຸກເສີນຂອງໜ່ວຍງານທີ່ປະຕິບັດວຽກງານ ລບຕ ຫຼື ການສະໜອງຊຸດອຸປະກອນຊ່ວຍເຫຼືອສຸກເສີນພື້ນຖານ ໃຫ້ແກ່ຜູ້ນຳໃນບ້ານທີ່ຢູ່ໃນເຂດທີ່ມີຄວາມສ່ຽງສູງ.

- **ການແບ່ງສ່ວນການບໍລິການຟື້ນຟູໜ້າທີ່ການ:** ຂະຫຍາຍການບໍລິການຟື້ນຟູໜ້າທີ່ການ, ລວມທັງການປິ່ນປົວທາງດ້ານຮ່າງກາຍ, ຂາທຽມ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ, ໂດຍສະເພາະແມ່ນເສີມຂະຫຍາຍການຕິດຕາມຜົນທີ່ຈຳເປັນ, ຈາກຕົວເມືອງໄປສູ່ເຂດຕ່າງໆ ເພື່ອແກ້ໄຂບັນດາອຸປະສັກທາງດ້ານການເງິນ ແລະ ດ້ານພູມສັນຖານ. ການບໍລິການເຄື່ອນທີ່ ຫຼື ຄລີນິກເຄື່ອນທີ່ ອາດຈະຊ່ວຍໃຫ້ເຂົ້າເຖິງຜູ້ລອດຊີວິດທີ່ກະແຈກກະຈາຍຢູ່ຕາມພູມສັນຖານຕ່າງໆ ເພື່ອໃຫ້ສາມາດຳເນີນການເບິ່ງແຍງຕິດຕາມໄດ້ດີຂຶ້ນ.

- **ລວມເອົາການຊ່ວຍເຫຼືອດ້ານສຸຂະພາບຈິດ ແລະ ຈິດຕະສັງຄົມ ເຂົ້າກັບການບໍລິການຟື້ນຟູໜ້າທີ່ການ:** ຮັບປະກັນໃຫ້ການຟື້ນຟູໄດ້ລວມເອົາການດູແລແບບລວມສູນ, ໂດຍສະເພາະແມ່ນການລວມເອົາການບໍລິການດ້ານສຸຂະພາບຈິດ ເພື່ອແກ້ໄຂຄວາມເຈັບປວດຊໍ້າເຮື້ອ, ຄວາມທຸກທາງດ້ານຈິດໃຈ ແລະ ຄວາມເປັນປົມດ້ອຍ. **ປະຕິບັດຍຸດທະສາດການສະໜັບສະໜູນທີ່ເອົາໃຈໃສ່ຕໍ່ບົດບາດຍິງ-ຊາຍ** ເພື່ອແກ້ໄຂບັນຫາຄວາມທຸກທາງດ້ານຈິດໃຈ ທີ່ແມ່ຍິງປະເຊີນໜ້າຢູ່ເລື້ອຍໆ.

---

[47] Ford JD, Grasso DJ, Elhai JD, Courtois CA. ບັນຫາທາງດ້ານສັງຄົມ, ວັດທະນະທຳ ແລະ ຄວາມຫຼາກຫຼາຍອື່ນໆໃນຂົງເຂດຄວາມຄຽດຈາກເຫດການສະເທືອນຂັວນ. 2015: 503–46. doi: 10.1016/B978-0-12-801288-8.00011-X. Epub 2015 Aug 7. PMCID: PMC7149881. https://pmc.ncbi.nlm.nih.gov/articles/PMC7149881/

**ຄຳຖາມບົດຄົ້ນຄວ້າ ທີ 4:**

- **ເອົາໃຈໃສ່ຕໍ່ຄວາມຕ້ອງການທາງດ້ານສັງຄົມ ແລະ ຄວາມເປັນສ່ວນໜຶ່ງຂອງຜູ້ລອດຊີວິດ:**
    - **ອອກແບບໂຄງການທີ່ເຄົາລົບການປະຕິບັດທາງວັດທະນະທຳຂອງທ້ອງຖິ່ນ** (ເຊັ່ນ: ການເຊື່ອສາດສະໜາຜີ) ແລະ ນຳໃຊ້ຄວາມສາມັກຄີທີ່ເຂັ້ມແຂງຂອງຄອບຄົວ ແລະ ຂອງຊຸມຊົນ ໃນການປັບປຸງຜົນໄດ້ຮັບທາງຈິດຕະສັງຄົມ.
    - **ເສີມສ້າງການສະໜັບສະໜູນທີ່ຖືເອົາຄອບຄົວເປັນໃຈກາງ:** ອີງໃສ່ຜົນກະທົບດ້ານການປົກປ້ອງຂອງໜ່ວຍຄອບຄົວຫຼາຍລຸ້ນຄົນ ແລະ ຄົງຕົວໂດຍການສະໜັບສະໜູນຢ່າງເປັນທາງການ ແລະ ລວມທັງສະມາຊິກໃນຄອບຄົວ—ເຊິ່ງມັກຈະມີບົດບາດໃນການເບິ່ງແຍງດູແລ ແລະ ລາຍຮັບ-ໃນແຜນການຟື້ນຟູ ແລະ ການສະໜັບສະໜູນ. ໃຫ້ແນ່ໃຈວ່າການແຊກແຊງແມ່ນສະເພາະເຈາະຈົງ ແລະຍືນຍົງ.
    - **ເອົາການຊ່ວຍເຫຼືອຜູ້ລອດຊີວິດ ໄວ້ພາຍໃນຊຸມຊົນ.** ເອົາການຊ່ວຍເຫຼືອຜູ້ລອດຊີວິດ ໄວ້ພາຍໃນຊຸມຊົນໂດຍຜ່ານໂຮງຮຽນ, ການຊ່ວຍເຫຼືອຈາກໝູ່ເພື່ອນ, ນຳໃຊ້ປະໂຫຍດຈາກຄວາມໝັ້ນຄົງຢູ່ດ້ານອາໄສ ເພື່ອໃຫ້ມີການດູແລຢ່າງຕໍ່ເນື່ອງ ແລະ ຢູ່ໃນທ້ອງຖິ່ນ.

## ຄຳຖາມບົດຄົ້ນຄ້ວາ ທີ 5:

ຜູ້ເຄາະຮ້າຍສາມາດໄດ້ຮັບການຢັ້ງຢືນຄວາມພິການຈາກລັດຖະບານ ຫຼື ບໍ່?
ຜູ້ເຄາະຮ້າຍຮູ້ວ່າເຂົາເຈົ້າມີສິດໄດ້ຮັບການຊ່ວຍເຫຼືອອັນໃດແດ່ກ່ຽວກັບດ້ານຄວາມພິການ?

## 5. ຜູ້ເຄາະຮ້າຍສາມາດໄດ້ຮັບການຢັ້ງຢືນຄວາມພິການຈາກລັດຖະບານ ຫຼື ບໍ່? ຜູ້ເຄາະຮ້າຍຮູ້ວ່າ ເຂົາເຈົ້າມີສິດໄດ້ຮັບການຊ່ວຍເຫຼືອອັນໃດແດ່ກ່ຽວກັບດ້ານຄວາມພິການ?

ຜົນໄດ້ຮັບຈາກການສຶກສາຄົ້ນຄ້ວາໃນພາກນີ້ ສະແດງໃຫ້ເຫັນເຖິງຊ່ອງຫວ່າງທີ່ສຳຄັນໃນດ້ານຄວາມຮັບຮູ້ ແລະ ການເຂົ້າເຖິງຂໍ້ມູນ, ເນື່ອງຈາກບໍ່ມີຜູ້ລອດຊີວິດຄົນໃດເລີຍທີ່ລາຍງານວ່າເຂົາເຈົ້າຮູ້ກ່ຽວກັບສິດທິປະໂຫຍດຂອງຄົນພິການ ຫຼື ໄດ້ຮັບການຢັ້ງຢືນຄວາມພິການ ຫຼື ການສະໜັບສະໜູນທີ່ກ່ຽວຂ້ອງກັບຄວາມພິການ. ຊ່ອງຫວ່າງນີ້ ສະແດງໃຫ້ເຫັນຢູ່ໃນຄຳຕອບຈາກເຈົ້າໜ້າທີ່ພາກລັດໃນຂັ້ນທ້ອງຖິ່ນ, ເຊິ່ງໄດ້ສະທ້ອນໃຫ້ເຫັນເຖິງຄວາມຮູ້ທີ່ຈຳກັດ ຫຼື ບໍ່ຊັດເຈນກ່ຽວກັບຂະບວນການໃນການໄດ້ຮັບການຢັ້ງຢືນຢ່າງເປັນທາງການກ່ຽວກັບຄວາມພິການ ຫຼື ສິດທິປະໂຫຍດຕ່າງໆທີ່ກ່ຽວຂ້ອງກັບຄວາມພິການ.

### ຜົນໄດ້ຮັບຈາກຄຳຖາມທີ 5

ໃນການຕອບຄຳຖາມກ່ຽວກັບແຫຼ່ງທີ່ໃຫ້ການສະໜັບສະໜູນ, ບໍ່ມີຜູ້ລອດຊີວິດຄົນໃດກ່າວເຖິງການໄດ້ຮັບການສະໜັບສະໜູນທີ່ກ່ຽວຂ້ອງກັບນະໂຍບາຍຄວາມພິການ ແລະ ບໍ່ມີໃຜກ່າວເຖິງຄວາມຄາດຫວັງກ່ຽວກັບສິດທິປະໂຫຍດທີ່ເຂົາເຈົ້າມີສິດໄດ້ຮັບ ອັນເນື່ອງມາຈາກສະຖານະພາບຄວາມພິການ. ຊ່ອງຫວ່າງນີ້ຊີ້ໃຫ້ເຫັນວ່າ ຜູ້ລອດຊີວິດອາດຈະບໍ່ໄດ້ຮັບສິດທິປະໂຫຍດຈາກການຢັ້ງຢືນຄວາມພິການ ແລະ ການສະໜັບສະໜູນທີ່ກ່ຽວຂ້ອງກັບຄວາມພິການ ເຊິ່ງອາດເປັນຍ້ອນວ່າເຂົາເຈົ້າຂາດຄວາມຮັບຮູ້, ມີການເຂົ້າເຖິງທີ່ຈຳກັດ, ການຈັດຕັ້ງປະຕິບັດທີ່ບໍ່ສອດຄ່ອງ ຫຼື ອາດເປັນຍ້ອນປັດໃຈທັງໝົດເຫຼົ່ານັ້ນ. (ກະລຸນາ ສັງເກດວ່າ ຜູ້ລອດຊີວິດທຸກຄົນໃນກຸ່ມປະຊາກອນຕົວຢ່າງບໍ່ແມ່ນຜູ້ພິການທັງໝົດ; ບາງຄົນໄດ້ຟື້ນຕົວຈາກອຸປະຕິເຫດ ລບຕ ຂອງເຂົາເຈົ້າໂດຍບໍ່ມີຄວາມບົກຜ່ອງ ຫຼື ຂໍ້ຈຳກັດທີ່ຖາວອນໃດໆ.)

ໃນທຳນອງດຽວກັນ, ການສຳພາດເຈົ້າໜ້າທີ່ພາກລັດ ໄດ້ສະແດງໃຫ້ເຫັນວ່າເຂົາເຈົ້າບໍ່ມີຂໍ້ມູນ ຫຼື ມີຂໍ້ມູນທີ່ຈຳກັດ ແລະ ບໍ່ຊັດເຈນກ່ຽວກັບຂະບວນການຢັ້ງຢືນຄວາມພິການ ແລະ ມີໜ້ອຍຄົນທີ່ສາມາດອະທິບາຍເຖິງຂະບວນການທີ່ຜູ້ພິການສາມາດສະໝັກເປັນສະມາຊິກສະມາຄົມຄົນພິການລາວ ຫຼື ຂໍຮັບສິດຜົນປະໂຫຍດທີ່ກ່ຽວຂ້ອງກັບຄວາມພິການໄດ້.

ຄວາມເຂົ້າໃຈຂອງເຈົ້າໜ້າທີ່ກ່ຽວກັບສິດແລະ ຜົນປະໂຫຍດຕ່າງໆຂອງຄົນພິການ ແມ່ນມີຄວາມແຕກຕ່າງກັນ. ເຈົ້າໜ້າທີ່ ໄດ້ຖືກຖາມກ່ຽວກັບຄວາມຮູ້ຂອງເຂົາເຈົ້າກ່ຽວກັບຂະບວນການໃນການໄດ້ຮັບການຢັ້ງຢືນຄວາມພິການ, ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກມີການຢັ້ງຢືນຄວາມພິການ ຫຼື ບໍ່ ແລະ ປະເພດການບໍລິການ ແລະ ການສະໜັບສະໜູນທີ່ມີໃຫ້ແກ່ຄົນພິການທີ່ມີເອກະສານຢັ້ງຢືນ ມີອັນໃດແດ່. ເຈົ້າໜ້າທີ່ສ່ວນໃຫຍ່ເຊື່ອວ່າ ບໍ່ມີຂະບວນການໃນການໄດ້ຮັບການຢັ້ງຢືນຄວາມພິການ, ເຂົາເຈົ້າກ່າວວ່າ ເຂົາເຈົ້າບໍ່ຮູ້ເຖິງຂະບວນການໃດໆ ຫຼື ບອກພຽງແຕ່ວ່າເຂົາເຈົ້າບໍ່ຮູ້. ຕົວຢ່າງ, ເຈົ້າໜ້າທີ່ຜູ້ໜຶ່ງກ່າວວ່າ *"ຕາມທີ່ຂ້ອຍຮູ້, ລັດຖະບານຍັງບໍ່ມີການຢັ້ງຢືນຄວາມພິການເທື່ອ. ວຽກງານການຢັ້ງຢືນຄວາມພິການນີ້ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກະຊວງ ຮສສ), ສະນັ້ນຂ້ອຍບໍ່ຮູ້ຫຼາຍກ່ຽວກັບການຢັ້ງຢືນຄວາມພິການ."*

ເຈົ້າໜ້າທີ່ 2 ຄົນໄດ້ກ່າວເຖິງສະມາຄົມຄົນພິການລາວ, ບັດສະມາຊິກທີ່ສະມາຄົມມອບໃຫ້ ແລະ ສິດຜົນປະໂຫຍດຕ່າງໆທີ່ກ່ຽວຂ້ອງກັບຄວາມພິການ; ເຖິງຢ່າງໃດກໍ່ຕາມ, ທັງສອງຄົນໄດ້ລະບຸເຖິງຂໍ້ຄວນລະວັງໄວ້ໃນການຕອບຄຳຖາມຂອງເຂົາເຈົ້າວ່າ ການມອບບັດ ແລະ ສິດຜົນປະໂຫຍດຕ່າງໆທີ່ກ່ຽວຂ້ອງກັບຄວາມພິການ ແມ່ນຍັງບໍ່ທັນກ້ວາງຂວາງເທື່ອ. ຕົວຢ່າງ, ເຈົ້າໜ້າທີ່ຄົນໜຶ່ງກ່າວວ່າ:

ພວກເຮົາຍັງບໍ່ມີການຢັ້ງຢືນໃດໆຈາກລັດຖະບານເທື່ອ, ມີພຽງແຕ່ການເປັນສະມາຊິກຂອງສະມາຄົມຄົນພິການລາວ ເທົ່ານັ້ນ. ບັດສະມາຊິກນີ້ ສາມາດຢືນຢັນໄດ້ວ່າທ່ານມີຄວາມພິການ. ເຖິງຢ່າງໃດກໍ່ຕາມ, ການເຂົ້າເຖິງສິດທິປະໂຫຍດພິເສດ ອາດຍັງມີຄວາມຈຳກັດ [ແລະ] ໃນບາງພື້ນທີ່ໃນຂັ້ນທ້ອງຖິ່ນ ການເຂົ້າເຖິງການບໍລິການ ຫຼື ສິດທິທີ່ກົດໝາຍວ່າດ້ວຍຄົນພິການກຳນົດໄວ້ ອາດຈະຍັງຂາດຢູ່.

ໃນຈຳນວນຜູ້ທີ່ເວົ້າວ່າບໍ່ມີຂັ້ນຕອນ ແລະ ຜູ້ທີ່ສາມາດອະທິບາຍກົນໄກອອກບັດຂອງສະມາຄົມຄົນພິການລາວ, ພະນັກງານບາງຄົນໄດ້ຊີ້ໃຫ້ເຫັນຄວາມເຂົ້າໃຈໃນລະດັບກາງກ່ຽວກັບຄວາມພິການ: ຕົວຢ່າງ: ໃນການຕອບຄຳຖາມກ່ອນໜ້າ (ກ່ອນຜູ້ສຳພາດຍົກຫົວຂໍ້ຄວາມພິການມາສົນທະນາ), ພະນັກງານຜູ້ໜຶ່ງໄດ້ເວົ້າວ່າ ໃນຄວາມຮັບຜິດຊອບຂອງລັດຖະບານທີ່ກ່ຽວຂ້ອງກັບ ລບຕ ແມ່ນການໂຄສະນາປູກຈິດສຳນຶກກ່ຽວກັບສິດທິຂອງຄົນພິການ, ພະນັກງານຈຳນວນໜຶ່ງໄດ້ເວົ້າວ່າມີການບັນທຶກຕິດຕາມຈຳນວນຜູ້ພິການຢູ່ໃນຂົງເຂດຂອງເຂົາເຈົ້າ.

## ການສົນທະນາກ່ຽວກັບຄຳຖາມທີ 5

ລັດຖະບານແຫ່ງ ສປປ ລາວ ໄດ້ຍຶດໝັ້ນຕໍ່ຄຳໝາຍໝັ້ນຂອງຕົນຕໍ່ຄົນທີ່ມີຄວາມພິການໃນເປົ້າໝາຍການພັດທະນາ ແລະ ພັນທະສາກົນຕ່າງໆ ລວມທັງສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ (CRPD). ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີບົດບາດໃນການຊີ້ນຳ ແລະ ປະສານງານໃນການຄຸ້ມຄອງນະໂຍບາຍ, ຂັ້ນຕອນການຈັດຕັ້ງປະຕິບັດ ແລະ ສິດທິປະໂຫຍດຕ່າງໆສຳລັບຄົນພິການ. ມັນມີຄວາມສຳຄັນໃນການພັດທະນາຍຸດທະສາດແຫ່ງຊາດທີ່ກວ້າງຂຶ້ນ ເຊັ່ນ: ແຜນດຳເນີນງານແຫ່ງຊາດກ່ຽວກັບຄົນພິການ ທີ່ກວມເອົາຂົງເຂດສຳຄັນຕ່າງໆ ເຊັ່ນ: ການປົກປ້ອງທາງສັງຄົມ, ການຈ້າງງານ ແລະ ການຝຶກອົບຮົມວິຊາຊີບ. ການສະໜັບສະໜູນຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກທີ່ມີຄວາມພິການ ຈະເປັນສ່ວນສຳຄັນໃນບູລິມະສິດນີ້ ເຊິ່ງກວ້າງກວ່າການຊ່ວຍເຫຼືອຜູ້ເຄາະຮ້າຍ. ສຳລັບຜູ້ລອດຊີວິດຈາກລະເບີດບໍ່ທັນແຕກທີ່ມີຄວາມພິການ, ກົດໝາຍວ່າດ້ວຍຄົນພິການ (ກົດໝາຍສະບັບເລກທີ 146 ປີ 2018) ກຳນົດໃຫ້ຜູ້ພິການໄດ້ຮັບສິດທິປະໂຫຍດ ແລະ ການສະໜັບສະໜູນຫຼາຍຢ່າງ.

ເຖິງຢ່າງໃດກໍ່ຕາມ, ມັນຍັງມີຊ່ອງຫວ່າງທີ່ສັງເກດເຫັນໄດ້ກ່ຽວກັບສິດທິທີ່ໄດ້ກຳນົດໄວ້ໃນກົດໝາຍ, ຄວາມຮັບຮູ້ກ່ຽວກັບສິດທິເຫຼົ່ານີ້ ແລະ ການເຂົ້າເຖິງຊັບພະຍາກອນ ແລະ ການສະໜັບສະໜູນທີ່ໄດ້ກຳນົດໄວ້ໃນກົດໝາຍ.[48] ຜົນໄດ້ຮັບຈາກການສຶກສາຄົ້ນຄ້ວາຂອງພວກເຮົາ ເນັ້ນໃຫ້ເຫັນເຖິງຊ່ອງຫວ່າງເຫຼົ່ານີ້ ໂດຍສະເພາະແມ່ນຄວາມສັບສົນ ແລະ ຄວາມເຂົ້າໃຈທີ່ຈຳກັດກ່ຽວກັບຂະບວນການ ແລະ ການສະໜັບສະໜູນສຳລັບຄົນທີ່ມີຄວາມພິການ ເຊິ່ງສະແດງໃຫ້ເຫັນເຖິງປະເດັນຕ່າງໆທີ່ຕ້ອງໄດ້ປັບປຸງ.

## ຂໍ້ສະເໜີແນະສຳລັບຄຳຖາມທີ 5

- **ເພີ່ມຄວາມຮັບຮູ້ກ່ຽວກັບນະໂຍບາຍ, ຂະບວນການ ແລະ ສິດທິປະໂຫຍດຂອງຄົນພິການ ໃຫ້ແກ່ອຳນາດການປົກຄອງບ້ານ, ເມືອງ ແລະ ແຂວງ** ເຊິ່ງເປັນຜູ້ປະສານງານຫຼັກໃນການສະໜັບສະໜູນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ. ທັງຜູ້ລອດຊີວິດ ແລະ ເຈົ້າໜ້າທີ່ພາກລັດ ໄດ້ເນັ້ນໜັກເຖິງບົດບາດສຳຄັນທີ່ອຳນາດການປົກຄອງທ້ອງຖິ່ນມີບົດບາດໃນການປະສານງານການສະໜັບສະໜູນຜູ້ລອດຊີວິດ (ກະລຸນາເບິ່ງຄຳຖາມທີ 7), ແຕ່ຄວາມຮັບຮູ້ທີ່ຈຳກັດໃນບັນດາເຈົ້າໜ້າທີ່ພາກລັດ ໄດ້ຊີ້ໃຫ້ເຫັນເຖິງຊ່ອງຫວ່າງ

[48] ຄະນະກຳມະການວ່າດ້ວຍສິດທິຂອງຄົນພິການ. ຂໍ້ສະເໜີແນະຕໍ່ບົດລາຍງານເບື້ອງຕົ້ນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ນະຄອນ ເຈນີວາ, ປະເທດ ສະວິດເຊີແລນ: ຫ້ອງການຂ້າຫຼວງໃຫຍ່ສະຫະປະຊາຊາດເພື່ອສິດທິມະນຸດ (OHCHR), 2022;

ທີ່ສຳຄັນ. ເຖິງວ່າເຈົ້າໜ້າທີ່ພາກລັດບາງຄົນຮູ້ກ່ຽວກັບຂະບວນການໃນການໄດ້ຮັບບັດຄົນພິການຜ່ານສະມາຄົມຄົນພິການລາວ, ແຕ່ເຈົ້າໜ້າທີ່ຫຼາຍຄົນກໍ່ຍັງບໍ່ຮູ້ ຫຼື ຍັງສະແດງຄວາມສັບສົນບາງຢ່າງກ່ຽວກັບນະໂຍບາຍ ແລະ ຂະບວນການດັ່ງກ່າວ.

- **ສື່ສານຂໍ້ມູນອັບເດດກ່ຽວກັບຂະບວນການຕ່າງໆຢ່າງຊັດເຈນ:** ຍ້ອນວ່າລັດຖະບານກຳລັງຢູ່ໃນຂະບວນການປັບປຸງຂັ້ນຕອນທີ່ກ່ຽວຂ້ອງກັບການຢັ້ງຢືນຄວາມພິການ, ມັນຈຶ່ງຈຳເປັນຫຼາຍທີ່ຈະຕ້ອງຮັບປະກັນວ່າ ການອັບເດດນະໂຍບາຍ ແລະ ຂັ້ນຕອນຕ່າງໆ ໄດ້ຖືກສື່ສານເພື່ອຫຼີກລ່ຽງການຂັດຂວາງການເຂົ້າເຖິງສິດທິປະໂຫຍດຕ່າງໆຂອງຜູ້ລອດຊີວິດທີ່ມີຄວາມພິການ ຕື່ມອີກ.

- **ຊີ້ແຈງບົດບາດ, ຄວາມຮັບຜິດຊອບ ແລະ ກົນໄກການປະສານງານ ເພື່ອສະໜັບສະໜູນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກທີ່ມີຄວາມພິການ** ໃຫ້ໄດ້ຮັບການຢັ້ງຢືນຄວາມພິການ, ມີຄວາມເຂົ້າໃຈກ່ຽວກັບສິດທິປະໂຫຍດຕ່າງໆຂອງເຂົາເຈົ້າ ແລະ ສາມາດເຂົ້າເຖິງສິດທິປະໂຫຍດທີ່ເຂົາເຈົ້າມີສິດໄດ້ຮັບ. ບັນດາໜ່ວຍງານ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງກັບການສະໜອງ ແລະ ປະສານງານການສະໜັບສະໜູນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກທີ່ມີຄວາມພິການ ເລີ່ມ ຕັ້ງແຕ່ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ທີ່ປະສານງານກ່ຽວກັບການຊ່ວຍເຫຼືອຜູ້ເຄາະຮ້າຍ, ຈົນເຖິງ ກະຊວງ ຮສສ ທີ່ເປັນຜູ້ຊີ້ນຳດ້ານນະໂຍບາຍ ແລະ ສິດທິປະໂຫຍດຕ່າງໆສຳລັບຜູ້ພິການ, ຈົນເຖິງ ສະມາຄົມຄົນພິການລາວ ທີ່ຮັບເຂົາເຈົ້າເປັນສະມາຊິກຂອງສະມາຄົມ ອາດຕ້ອງມີການອະທິບາຍ ແລະ ການປະສານງານທີ່ຊັດເຈນກວ່າເກົ່າ ເພື່ອໃຫ້ແຕ່ລະໜ່ວຍງານ ແລະ ເຈົ້າໜ້າທີ່ໆກ່ຽວຂ້ອງທຸກພາກສ່ວນ ສາມາດມີບົດບາດໃນການສະໜັບສະໜູນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກທີ່ມີຄວາມພິການຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ສຳລັບຜູ້ລອດຊີວິດຈາກລະເບີດບໍ່ທັນແຕກທີ່ມີຄວາມພິການ, ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ອາດຈະຕ້ອງປະຕິບັດບົດບາດໃນການປະສານງານທີ່ເຂັ້ມແຂງຂຶ້ນໃນໄລຍະສັ້ນຫຼັງຈາກເກີດອຸບັດຕິເຫດ ເພື່ອຮັບປະກັນວ່າຜູ້ລອດຊີວິດທີ່ມີຄວາມພິການໃໝ່ ໄດ້ເຊື່ອມຕໍ່ກັບສະມາຄົມຄົນພິການລາວ ແລະ ກະຊວງ ຮສສ ເຊິ່ງສາມາດຈັດການ ການເຂົ້າເຖິງ ແລະ ການສະໜອງສິດທິປະໂຫຍດຕ່າງໆ ຢ່າງຕໍ່ເນື່ອງ.

- **ການເຂົ້າເຖິງ:** ການຮັບປະກັນການເຂົ້າເຖິງທາງດ້ານຮ່າງກາຍ, ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ສັງຄົມ ສຳລັບຜູ້ພິການ ແລະ ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ຍັງຄົງເປັນສິ່ງທ້າທາຍຢູ່ໃນຫຼາຍຂະແໜງການ ລວມທັງການເຂົ້າເຖິງການສຶກສາ, ການຈ້າງງານ ແລະ ຊີວິດໃນຊຸມຊົນ.

- **ສະໜັບສະໜູນຄູອາຈານໃຫ້ເສີມສ້າງການສຶກສາຮຽນຮ່ວມສຳລັບເດັກພິການ:** ນອກຈາກການຝຶກອົບຮົມເພື່ອໃຫ້ຄູອາຈານມີການຈັດການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ (EORE) ໃນໂຮງຮຽນແລ້ວ, ຕ້ອງສ້າງຄວາມສາມາດໃຫ້ຄູອາຈານ ເພື່ອຈັດໃຫ້ມີການສຶກສາຮຽນຮ່ວມ ແລະ ການສະໜັບສະໜູນເດັກຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກໄດ້ດີຂຶ້ນ ທັງສຳລັບການສິດສອນ ແລະ ການເຊື່ອມໂຍງເດັກພິການເຂົ້າໃນຫ້ອງຮຽນ ແລະ ກິດຈະກຳຕ່າງໆ ຂອງໂຮງຮຽນ.

# ຄຳຖາມບົດຄົ້ນຄ້ວາ ທີ6:

ອຸປະຕິເຫດ ມີຜົນກະທົບໃນໄລຍະຍາວ ຕໍ່ຊີວິດການເປັນຢູ່ຂອງຜູ້ລອດຊີວິດ ແລະ ຄອບຄົວເຂົາເຈົ້າ ແນວໃດແດ່ ແລະ ເຂົາເຈົ້າມີສ່ວນຮ່ວມໃນໂຄງການສະໜັບສະໜູນການດຳລົງຊີວິດ ໂຄງການໃດແດ່?

# 6. ອຸປະຕິເຫດ ມີຜົນກະທົບໃນໄລຍະຍາວ ຕໍ່ຊີວິດການເປັນຢູ່ຂອງຜູ້ລອດຊີວິດ ແລະ ຄອບຄົວເຂົາເຈົ້າ ແນວໃດແດ່ ແລະ ເຂົາເຈົ້າມີສ່ວນຮ່ວມໃນໂຄງການສະໜັບສະໜູນການດຳລົງຊີວິດ ໂຄງການໃດແດ່?

ເພື່ອຕອບຄຳຖາມນີ້, ການວິເຄາະໄດ້ໃຊ້ທັງຂໍ້ມູນດ້ານຄຸນນະພາບ ແລະ ຂໍ້ມູນດ້ານປະລິມານ ເພື່ອບັນທຶກຜົນກະທົບທາງດ້ານເສດຖະກິດ-ສັງຄົມທີ່ຮ້າຍແຮງ ແລະ ຍືດເຍື້ອຍາວນານຈາກເຫດການອຸປະຕິເຫດລະເບີດບໍ່ທັນແຕກ. ຜົນການສຶກສາຄົ້ນຄ້ວາ ໄດ້ລະບຸລາຍລະອຽດວ່າການບາດເຈັບໄດ້ທຳລາຍສະຖຽນລະພາບທາງດ້ານເສດຖະກິດ, ການບາດເຈັບບັງຄັບໃຫ້ຜູ້ລອດຊີວິດປ່ຽນໄປເຮັດວຽກ "ເບົາບາງ" ແລະ ເຮັດໃຫ້ສູນເສຍລາຍໄດ້ ເຊິ່ງເຮັດໃຫ້ຄົວເຮືອນມີລາຍໄດ້ຕໍ່າ ແລະ ມີໜີ້ສິນເພີ່ມຂຶ້ນ. ມີພຽງຜູ້ລອດຊີວິດຄົນດຽວເທົ່ານັ້ນ ທີ່ສາມາດເຂົ້າເຖິງການສະໜັບສະໜູນດ້ານການດຳລົງຊີວິດ. ໃນສະພາບການທີ່ມີຊ່ອງຫວ່າງໃນການສະໜັບສະໜູນດ້ານການດຳລົງຊີວິດນີ້, ຢູ່ໃນບົດລາຍງານພາກນີ້ ຈະເນັ້ນໃຫ້ເຫັນບົດບາດທີ່ສຳຄັນຂອງສະມາຊິກໃນຄອບຄົວ ທີ່ຕ້ອງແບກຮັບພາລະໃໝ່ໃນຖານະເປັນຜູ້ຫາລາຍໄດ້ຫຼັກ ແລະ ເປັນຜູ້ດູແລຄອບຄົວ.

## ຜົນໄດ້ຮັບຈາກຄຳຖາມທີ 6

### ການຫຼຸດລົງຂອງຄວາມໝັ້ນຄົງທາງດ້ານເສດຖະກິດ ສຳລັບຜູ້ລອດຊີວິດທີ່ເຮັດແຕ່ວຽກງານບໍ່ໜັກ

ອຸປະຕິເຫດ ລບຕ ໄດ້ສົ່ງຜົນກະທົບຕໍ່ຄວາມໝັ້ນຄົງທາງດ້ານເສດຖະກິດຂອງຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າ, ແຕ່ຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າ ກໍ່ສາມາດປັບຕົວໃນຫຼາຍດ້ານເຊັ່ນກັນ. ສຳລັບຜູ້ລອດຊີວິດຈຳນວນຫຼາຍ, ອຸປະຕິເຫດໄດ້ນຳໄປສູ່ການປ່ຽນແປງໃນວິທີການສ້າງລາຍຮັບຂອງຄອບຄົວຂອງເຂົາເຈົ້າ ແລະ ຈຳນວນລາຍຮັບຂອງເຂົາເຈົ້າ. ຜູ້ລອດຊີວິດທີ່ປະເຊີນກັບຂໍ້ຈຳກັດທາງດ້ານຮ່າງກາຍພາຍຫຼັງຈາກອຸປະຕິເຫດ ໄດ້ອະທິບາຍວ່າເຂົາເຈົ້າ "ບໍ່ສາມາດຫາເງິນໄດ້" ເທົ່າກັບທີ່ເຂົາເຈົ້າເຄີຍຫາໄດ້ກ່ອນເກີດອຸປະຕິເຫດ. ການປ່ຽນກັນໃນການເຮັດວຽກແບບເບົາບາງນີ້ ສ່ວນຫຼາຍແມ່ນປ່ຽນກັນລະຫວ່າງຄູ່ສົມລົດ ຫຼື ລະຫວ່າງສະມາຊິກໃນຄອບຄົວຄົນອື່ນໆທີ່ມີບົດບາດໃໝ່ໃນການເປັນຜູ້ຫາລາຍໄດ້ໃນຄອບຄົວ ຫຼື ຜູ້ຫາລາຍໄດ້ພຽງແຕ່ຄົນດຽວໃນຄອບຄົວ. ທ້າວ ຄຳດີ ໄດ້ອະທິບາຍເຖິງການປ່ຽນແປງນີ້ສຳລັບຄອບຄົວຂອງລາວ ແລະ ຊີວິດຂອງເມຍຂອງລາວວ່າມີການປ່ຽນແປງແນວໃດແດ່:

> ຫຼັງຈາກເຫດການອຸປະຕິເຫດດັ່ງກ່າວ, ຊີວິດຄອບຄົວຂອງຂ້ອຍມີການປ່ຽນແປງຫຼາຍ. ຂ້ອຍບໍ່ສາມາດເຮັດວຽກໄດ້ຫຼາຍເທົ່າກັບທີ່ຂ້ອຍເຄີຍເຮັດມາກ່ອນ, ດັ່ງນັ້ນ ຂ້ອຍຈຶ່ງບໍ່ມີເຂົ້າ/ອາຫານພຽງພໍ ແລະ ຕ້ອງຊື້ຕື່ມອີກ. ນອກຈາກນີ້, ຂ້ອຍບໍ່ມີລາຍໄດ້ຫຼາຍເທົ່າກັບທີ່ຂ້ອຍເຄີຍຫາໄດ້. ດ້ວຍເຫດນີ້, ເມຍຂອງຂ້ອຍຈຶ່ງຕ້ອງເຮັດວຽກໜັກຂຶ້ນເພື່ອຫາລາຍໄດ້ ເພາະຂ້ອຍບໍ່ສາມາດເຮັດວຽກໜັກໄດ້ຄືແຕ່ກ່ອນ.

ຜູ້ລອດຊີວິດ ອະທິບາຍເຖິງຂໍ້ຈຳກັດທາງດ້ານຮ່າງກາຍທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການຫາລາຍໄດ້ ແລະ ຕໍ່ການມີສ່ວນຮ່ວມໃນກິດຈະກຳອື່ນໆຂອງເຂົາເຈົ້າ ໂດຍກ່າວວ່າຂໍ້ຈຳກັດນັ້ນແມ່ນຄວາມບໍ່ສາມາດເຮັດວຽກໜັກໄດ້ ແລະ ຈຳເປັນຕ້ອງໄດ້ເຮັດແຕ່ວຽກເບົາເທົ່ານັ້ນ.

ການເຮັດວຽກເບົາມັກຈະຖືກຕີຄວາມໝາຍວ່າເປັນຍ້ອນການບາດເຈັບທາງຮ່າງກາຍ ແລະ ຍ້ອນອາການຕ່າງໆທີ່ເກີດຈາກອຸປະຕິເຫດ ເຊັ່ນ: ການບໍ່ສາມາດເຄື່ອນໄຫວໄດ້ຢ່າງປົກກະຕິ, ຄວາມອິດເມື່ອຍ ແລະ ການຫຼຸດລົງຂອງການໄດ້ຍິນ ຫຼື ການເບິ່ງເຫັນ. ສົມໃຈ ໄດ້ອະທິບາຍເຖິງການປ່ຽນແປງຂອງການສ້າງລາຍຮັບຈາກການເຮັດວຽກເບົາ.

> ຊີວິດຂອງຂ້ອຍບໍ່ຄືເກົ່າອີກຕໍ່ໄປ. ປະຈຸບັນນີ້ຂ້ອຍບໍ່ໄດ້ໄປຕະຫຼາດເພື່ອຫາເງິນຄືແຕ່ກ່ອນແລ້ວ ເພາະຂ້ອຍເມື່ອຍງ່າຍ. ປະຈຸບັນ, ຂ້ອຍເຮັດວຽກເບົາຢູ່ໃນບ້ານ ເຊິ່ງຂ້ອຍຮັບຈ້າງເຮັດວຽກຢູ່ໃກ້ເຮືອນຂອງຂ້ອຍ ເຊັ່ນ: ປູກເຂົ້າ. ແຕ່ກ່ອນ, ລາຍຮັບຂອງຂ້ອຍໄດ້ປະມານ 2 ລ້ານກວ່າກີບ, ແຕ່ປະຈຸບັນແມ່ນບໍ່ແນ່ນອນ. ບາງເດືອນຂ້ອຍມີລາຍໄດ້ປະມານ 400,000 ຫາ 500,000 ກີບ, ບາງເດືອນຂ້ອຍມີລາຍໄດ້ພຽງແຕ່ 300,000 ຫາ 400,000 ກີບຈາກການຂາຍກີບ, ຈີ່ນາຍ ໃນບ້ານ.

ເຖິງແມ່ນວ່າຜູ້ລອດຊີວິດຈຳນວນຫຼາຍສະແດງຄວາມກັງວົນກ່ຽວກັບການຫຼຸດລົງຂອງລາຍໄດ້ຂອງຄອບຄົວຂອງເຂົາເຈົ້າ, ແຕ່ສິ່ງສຳຄັນທີ່ຕ້ອງຮູ້ແມ່ນ ຜູ້ລອດຊີວິດທີ່ບໍ່ມີຂໍ້ຈຳກັດທາງດ້ານຮ່າງກາຍຈາກອຸປະຕິເຫດຂອງເຂົາເຈົ້າ ໄດ້ອະທິບາຍວ່າ "ເຂົາເຈົ້າມີການດຳລົງຊີວິດເປັນປົກກະຕິ." ໃນຫຼາຍໆກໍລະນີ, ຜູ້ລອດຊີວິດໄດ້ລາຍງານວ່າ ຄວາມສາມາດໃນການສ້າງລາຍໄດ້ຂອງເຂົາເຈົ້າໄດ້ຮັບຜົນກະທົບທັນທີທັນໃດຈາກອຸປະຕິເຫດ ແຕ່ການສ້າງລາຍໄດ້ຂອງເຂົາເຈົ້າກໍ່ກັບຄືນສູ່ສະພາບເດີມເມື່ອເຂົາເຈົ້າຫາຍດີຈາກການບາດເຈັບດັ່ງກ່າວ. ດັ່ງທີ່ ນາງແສງຈັນ ໄດ້ບອກວ່າ, *"ຕອນຂ້ອຍໄດ້ຮັບບາດເຈັບໃໝ່ໆ, ຂ້ອຍບໍ່ສາມາດເຮັດວຽກໜັກໄດ້, ບໍ່ສາມາດເຮັດໄຮ່, ເຮັດສວນ, ຫຼື ເຮັດວຽກເຮືອນໄດ້ ເຊັ່ນ: ໄປຫາຟືນ ແລະ ໄປຕັກນໍ້າ, ຜົວຂອງຂ້ອຍໄດ້ຊ່ວຍຂ້ອຍເຮັດວຽກທັງໝົດນີ້. ຫຼັງຈາກຂ້ອຍຫາຍດີຈາກບາດເຈັບແລ້ວ, ຂ້ອຍກໍ່ສາມາດເຮັດວຽກໄດ້ຕາມປົກກະຕິ."* ຈາກການກ່າວມານີ້, ນາງ ແສງຈັນ ໄດ້ອະທິບາຍວ່າ ນາງບໍ່ສາມາດເຮັດວຽກໜັກໄດ້ແນວໃດແດ່ ແຕ່ກໍສາມາດກັບຄືນໄປເຮັດວຽກງານເຫຼົ່ານັ້ນໄດ້ພາຍຫຼັງທີ່ລາວຫາຍດີແລ້ວ.

ຮູບທີ 9 ສະແດງໃຫ້ເຫັນເຖິງການປ່ຽນແປງຂອງຄ່າໃຊ້ຈ່າຍໃນຄົວເຮືອນ ທີ່ເກີດຂຶ້ນຫຼັງຈາກການບາດເຈັບຈາກອຸປະຕິເຫດ ລບຕ, ສະທ້ອນໃຫ້ເຫັນເຖິງຜົນກະທົບທາງດ້ານເສດຖະກິດຈາກອຸປະຕິເຫດດັ່ງກ່າວ. ສຳລັບຜູ້ໃຫຍ່, ຄ່າໃຊ້ຈ່າຍດ້ານອາຫານຍັງຄົງເປັນຄ່າໃຊ້ຈ່າຍສູງສຸດ, ໂດຍເພີ່ມຂຶ້ນເລັກນ້ອຍ (ຈາກ 81% ເປັນ 84%), ໃນຂະນະທີ່ການໃຊ້ຈ່າຍດ້ານການສຶກສາຫຼຸດລົງຢ່າງຫຼວງຫຼາຍ (ຈາກ 47% ເປັນ 25%). ລາຍຈ່າຍດ້ານເຄື່ອງນຸ່ງຫົ່ມ ແລະ ການລ້ຽງສັດ ຫຼຸດລົງ, ແຕ່ການໃຊ້ຈ່າຍດ້ານກະສິກຳເພີ່ມຂຶ້ນ (ຈາກ 25% ເປັນ 41%), ອັນອາດຈະສະທ້ອນໃຫ້ເຫັນເຖິງການປັບຕົວຂອງຊີວິດການເປັນຢູ່. ຄ່າໃຊ້ຈ່າຍດ້ານທີ່ຢູ່ອາໄສ ແລະ ຄ່າໃຊ້ຈ່າຍ "ອື່ນໆ" ມີການເພີ່ມຂຶ້ນເລັກນ້ອຍ, ສະແດງໃຫ້ເຫັນເຖິງຄວາມຕ້ອງການໃຫມ່ຫຼັງຈາກການບາດເຈັບ. ໃນບັນດາຜູ້ລອດຊີວິດທີ່ເປັນເດັກ, ການໃຊ້ຈ່າຍດ້ານອາຫານ (89%) ແລະ ດ້ານການສຶກສາ (50%) ແມ່ນຍັງຄືເກົ່າ, ແຕ່ຄ່າໃຊ້ຈ່າຍດ້ານກະສິກຳ ແລະ ທີ່ຢູ່ອາໄສຫຼຸດລົງ, ໃນຂະນະທີ່ການໃຊ້ຈ່າຍ "ອື່ນໆ" ເພີ່ມຂຶ້ນ, ເຊິ່ງອາດຈະເປັນຍ້ອນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການປິ່ນປົວ ຫຼື ການຟື້ນຟູ. ໂດຍລວມແລ້ວ, ການບາດເຈັບຈາກອຸປະຕິເຫດ ລບຕ ເຮັດໃຫ້ມີການປ່ຽນແປງໃນການໃຊ້ຈ່າຍ, ໂດຍສະເພາະສຳລັບຜູ້ໃຫຍ່ ຄ່າໃຊ້ຈ່າຍໄດ້ປ່ຽນຈາກຄວາມຈຳເປັນໄລຍະຍາວ ເຊັ່ນ: ການສຶກສາໄປໃຊ້ຈ່າຍໃນສິ່ງຈຳເປັນອື່ນໆ ແລະ ການຟື້ນຟູ.

ຂໍ້ມູນສະແດງໃຫ້ເຫັນວ່າ ການຄອບຄອງຊັບສິນຂອງຄົວເຮືອນສ່ວນໃຫຍ່ແມ່ນມີຄວາມສະຖຽນ ທັງໄລຍະກ່ອນ ແລະ ຫຼັງເຫດການອຸປະຕິເຫດ ລບຕ, ໂດຍມີການປ່ຽນບາງສ່ວນເທົ່ານັ້ນ. ໃນກຸ່ມປະຊາກອນຕົວຢ່າງຜູ້ໃຫຍ່ (n=32), ການເປັນເຈົ້າຂອງໂທລະສັບມືຖື ແລະ ລົດຈັກ ຍັງຄົງມີສູງ ແລະ ບໍ່ປ່ຽນແປງ ໂດຍຢູ່ທີ່ 84% ແລະ 81% ຕາມລຳດັບ, ສະແດງໃຫ້ເຫັນເຖິງບົດບາດສຳຄັນຂອງທັງສອງສິ່ງນີ້. ການ

ເປັນເຈົ້າຂອງການສັດລ້ຽງມີການເພີ່ມຂຶ້ນເລັກນ້ອຍຈາກ 69% ເປັນ 75%, ອາດຈະຊີ້ໃຫ້ເຫັນເຖິງການຫັນໄປສູ່ການສ້າງລາຍໄດ້ຂອງທ້ອງຖິ່ນ, ຄອບຄົວ. ໃນຂະນະດຽວກັນ, ການເປັນເຈົ້າຂອງລົດຖີບຫຼຸດລົງຈາກ 28% ເປັນ 19% ແລະ ການເປັນເຈົ້າຂອງວິທະຍຸຫຼຸດລົງຢ່າງຫຼວງຫຼາຍຈາກ 16% ເປັນ 6%, ສະແດງໃຫ້ເຫັນເຖິງການຄວາມສຳຄັນກັບຊັບສິນທີ່ມີມູນຄ່າຕ່ຳ ແລະ ບໍ່ຈຳເປັນ ໜ້ອຍລົງ ຫຼັງຈາກເກີດອຸປະຕິເຫດ.

ໃນບັນດາຜູ້ລອດຊີວິດທີ່ເປັນເດັກ, ການເປັນເຈົ້າຂອງລົດຈັກ ແລະ ໂທລະສັບມືຖືແມ່ນສູງຫຼາຍ, ການເປັນເຈົ້າຂອງລົດຈັກແມ່ນຢູ່ທີ່ 94% ແລະ ການເປັນເຈົ້າຂອງໂທລະສັບມືຖືເພີ່ມຂຶ້ນເລັກນ້ອຍຈາກ 89% ເປັນ 94%. ການເປັນເຈົ້າຂອງຕູ້ເຢັນເພີ່ມຂຶ້ນຈາກ 56% ເປັນ 72%, ສະແດງໃຫ້ເຫັນວ່າ ບາງຄົວເຮືອນອາດຈະລົງທຶນໃນການເກັບຮັກສາອາຫານເພື່ອເປັນວິທີໃນການຟື້ນຟູ. ການເປັນເຈົ້າຂອງລົດໄຖນາ ແລະ ສັດລ້ຽງ ແມ່ນຢູ່ໃນລະດັບຍັງຄົງທີ່, ໃນຂະນະທີ່ການເປັນເຈົ້າຂອງໂທລະທັດຫຼຸດລົງເລັກນ້ອຍຈາກ 33% ເປັນ 28%. ແນວໂນ້ມເຫຼົ່ານີ້ ຊີ້ໃຫ້ເຫັນວ່າ ຄົວເຮືອນມີແນວໂນ້ມທີ່ຈະຮັກສາ ຫຼື ລົງທຶນໃສ່ຊັບສິນທີ່ມີຄ່າສູງ, ມີປະໂຫຍດ ແລະ ຫຼຸດຄວາມສຳຄັນຂອງສິ່ງຂອງທີ່ບໍ່ຈຳເປັນ ໜ້ອຍລົງ ຫຼັງຈາກໄດ້ຮັບບາດເຈັບຈາກອຸປະຕິເຫດ ລບຕ.

*ຮູບທີ 9: ບັນດາລາຍການໃຊ້ຈ່າຍຕ່າງໆໃນໄລຍະກ່ອນ ແລະ ຫຼັງເກີດອຸປະຕິເຫດ ລບຕ*



*ຮູບທີ 10: ສິ່ງຂອງທີ່ຄອບຄົວຜູ້ລອດຊີວິດ ເປັນເຈົ້າຂອງໃນໄລຍະກ່ອນ ແລະ ຫຼັງເກີດອຸປະຕິເຫດ ລບຕ*






ຕາຕະລາງທີ 11: ສະແດງໃຫ້ເຫັນການປ່ຽນແປງໃນແຫຼ່ງລາຍຮັບຫຼັກຂອງຄົວເຮືອນໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ ສຳລັບຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ສະແດງໃຫ້ເຫັນການຫັນປ່ຽນແຫຼ່ງລາຍຮັບຫຼັກຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ສະມາຊິກໃນຄົວເຮືອນ ຫຼັງເຫດການອຸປະຕິເຫດ ລບຕ. ໃນບັນດາຜູ້ລອດຊີວິດທີ່ເປັນເດັກ ຫຼື ຜູ້ດູແລເດັກ, ການເຮັດກະສິກຳປູກຝັງດ້ວຍຕົນເອງ ເປັນແຫຼ່ງລາຍຮັບທີ່ກ່າວເຖິງຫຼາຍທີ່ສຸດກ່ອນທີ່ຈະເກີດອຸປະຕິເຫດ (44%) ແຕ່ຫຼຸດລົງເປັນ 34% ຫຼັງຈາກອຸປະຕິເຫດ, ອັນນີ້ອາດຈະເປັນຍ້ອນການຫຼຸດຜ່ອນຄວາມສາມາດທາງດ້ານຮ່າງກາຍ. ອັດຕາການຫວ່າງງານ ມີການເພີ່ມຂຶ້ນຢ່າງຫຼວງຫຼາຍຈາກ 6% ເປັນ 31%, ສະທ້ອນໃຫ້ເຫັນເຖິງການສູນເສຍລາຍໄດ້ທີ່ສຳຄັນ. ກິດຈະກຳທຸລະກິດຂະໜາດນ້ອຍ ແລະ ສະຖານະພາບການເປັນນັກສຶກສາ ໄດ້ຫາຍໄປທັງໝົດ, ໃນຂະນະທີ່ການດຳລົງຊີວິດທີ່ພໍຢູ່ລອດ ໄດ້ເພີ່ມຂຶ້ນເລັກນ້ອຍຈາກ 12% ເປັນ 16%. ສຳລັບສະມາຊິກຄົວເຮືອນອື່ນໆ, ການເຮັດກະສິກຳປູກຝັງດ້ວຍຕົນເອງ ແມ່ນຍັງເປັນທີ່ນິຍົມຢູ່ ແຕ່ຫຼຸດລົງເລັກນ້ອຍຈາກ 72% ເປັນ 66%. ການດຳລົງຊີວິດແບບພໍຢູ່ລອດ ເພີ່ມຂຶ້ນຈາກ 28% ເປັນ 34%, ເຊິ່ງຊີ້ໃຫ້ເຫັນເຖິງການຫັນປ່ຽນໄປສູ່ຍຸດທະສາດການຢູ່ລອດແບບປະຢັດຊັບພະຍາກອນທີ່ມີຢ່າງຈຳກັດ. ສະຖານະພາບຂອງການເປັນນັກຮຽນຫຼຸດລົງຈາກ 25% ເປັນ 16%, ອາດຈະຊີ້ໃຫ້ເຫັນວ່າເດັກອອກຈາກໂຮງຮຽນເພື່ອຊ່ວຍຄອບຄົວ. ການປ່ຽນແປງເຫຼົ່ານີ້ ຊີ້ໃຫ້ເຫັນເຖິງຜົນກະທົບທາງດ້ານເສດຖະກິດຢ່າງກວ້າງຂວາງຈາກອຸປະຕິເຫດ ລບຕ ນອກຈາກຜົນກະທົບໂດຍກົງໃນທັນທີ ຕໍ່ຜູ້ລອດຊີວິດ.

*ຕາຕະລາງທີ 11: ແຫຼ່ງລາຍຮັບຫຼັກໃນຄົວເຮືອນໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ ສຳລັບຜູ້ລອດຊີວິດທີ່ເປັນຜູ້ໃຫຍ່*

| ແຫຼ່ງລາຍຮັບຫຼັກ | ກ່ອນອຸປະຕິເຫດ | | ຫຼັງອຸປະຕິເຫດ | |
|---|---|---|---|---|
| | n | % | n | % |
| **ຜູ້ລອດຊີວິດ** | | | | |
| ຊາວກະສິກອນ (ເປັນເຈົ້າຕົນເອງ) | 14 | 43.7 | 11 | 34.4 |
| ຊາວກະສິກອນ (ເຮັດວຽກໃຫ້ກັບບໍລິສັດ) | 1 | 3.1 | 2 | 6.2 |
| ການປະມົງ | 0 | 0 | 0 | 0 |
| ທຸລະກິດຂະໜາດນ້ອຍ | 3 | 9.4 | 0 | 0 |
| ພະນັກງານລັດ | 0 | 0 | 0 | 0 |
| ບໍລິສັດເອກະຊົນ | 1 | 3.1 | 0 | 0 |
| ຢູ່ແບບຫາມື້ກິນມື້ | 4 | 12.5 | 5 | 15.6 |
| ນັກຮຽນ | 3 | 9.4 | 0 | 0 |
| ຫວ່າງງານ | 2 | 6.2 | 10 | 31.2 |
| ອື່ນໆ | 4 | 12.5 | 4 | 12.5 |
| **ຜູ້ອື່ນໃນຄົວເຮືອນ** | | | | |

| | | | | |
|---|---|---|---|---|
| ຊາວກະສິກອນ (ເປັນເຈົ້າຕົນເອງ) | 23 | 71.9 | 21 | 65.6 |
| ຊາວກະສິກອນ (ເຮັດວຽກໃຫ້ກັບບໍລິສັດ) | 2 | 6.3 | 1 | 3.1 |
| ການປະມົງ | 0 | 0 | 0 | 0 |
| ທຸລະກິດຂະໜາດນ້ອຍ | 0 | 0 | 0 | 0 |
| ພະນັກງານລັດ | 1 | 3.1 | 2 | 6.3 |
| ບໍລິສັດເອກະຊົນ | 3 | 9.4 | 2 | 6.3 |
| ຢູ່ແບບຫາມື້ກິນມື້ | 9 | 28.1 | 11 | 34.4 |
| ນັກຮຽນ | 8 | 25.0 | 5 | 15.6 |
| ຫວ່າງງານ | 7 | 21.9 | 6 | 18.8 |
| ອື່ນໆ | 6 | 18.8 | 5 | 15.6 |

ຕາຕະລາງທີ 12 ສະແດງເຖິງແຫຼ່ງລາຍຮັບຂອງຜູ້ເບິ່ງແຍງຫຼັກໆ ແລະ ສະມາຊິກຄອບຄົວຄົນອື່ນໆ ຂອງຜູ້ລອດຊີວິດທີ່ເປັນເດັກຈາກອຸປະຕິເຫດລະເບີດບໍ່ທັນແຕກ (ລບຕ) ໃນໄລຍະກ່ອນ ແລະ ຫຼັງເກີດອຸປະຕິເຫດ ລບຕ. ໃນບັນດາຜູ້ດູແລເດັກ, ການເຮັດກະສິກຳປູກຝັງດ້ວຍຕົນເອງ ຍັງຄົງເປັນແຫຼ່ງລາຍຮັບທີ່ກ່າວເຖິງຫຼາຍທີ່ສຸດ, ເຊິ່ງເພີ່ມຂຶ້ນເລັກນ້ອຍຈາກ 39% ເປັນ 44%. ພະນັກງານລັດ ແລະ ຢູ່ແບບຫາມື້ກິນມື້ ແມ່ນຍັງຄົງທີ່ ໂດຍທີ່ຢູ່ທີ່ 17%, ບໍ່ມີການລາຍງານກ່ຽວກັບການຫວ່າງງານ ຫຼື ສະຖານະພາບການເປັນນັກຮຽນເລີຍ. ຜູ້ດູແລເດັກຄົນໜຶ່ງໄດ້ລາຍງານກ່ຽວກັບແຫຼ່ງ "ອື່ນໆ" ກ່ອນເກີດອຸປະຕິເຫດ ເຊິ່ງບໍ່ມີການລາຍງານພາຍຫຼັງເກີດອຸປະຕິເຫດ. ສຳລັບສະມາຊິກຄອບຄົວຄົນອື່ນໆ, ແຫຼ່ງລາຍຮັບຍັງມີຄວາມໝັ້ນຄົງ. ການເຮັດກະສິກຳປູກຝັງດ້ວຍຕົນເອງ ແລະ ຢູ່ແບບຫາມື້ກິນມື້ ກວມ 33% ທັງກ່ອນ ແລະ ຫຼັງເກີດອຸປະຕິເຫດ, ໃນຂະນະທີ່ການຫວ່າງງານເພີ່ມຂຶ້ນເລັກໜ້ອຍຈາກ 22% ຫາ 28%. ສະຖານະພາບການເປັນນັກຮຽນ, ພະນັກງານລັດ ແລະ ທຸລະກິດຂະໜາດນ້ອຍ ຍັງມີໜ້ອຍ ຫຼື ບໍ່ມີເລີຍ. ໂດຍລວມແລ້ວ, ຂໍ້ມູນນີ້ ຊີ້ໃຫ້ເຫັນວ່າລາຍໄດ້ຂອງຄົວເຮືອນມີການປ່ຽນແປງເລັກໜ້ອຍເທົ່ານັ້ນ, ເຖິງວ່າອັດຕາການຫວ່າງງານຈະມີການເພີ່ມຂຶ້ນເລັກນ້ອຍກໍ່ຕາມ, ອັນນີ້ອາດຊີ້ໃຫ້ເຫັນເຖິງຄວາມເຄັ່ງຕຶງທາງດ້ານເສດຖະກິດທີ່ເພີ່ມຫຼາຍຂຶ້ນ.

*ຕາຕະລາງທີ 12: ແຫຼ່ງລາຍຮັບຫຼັກໃນຄົວເຮືອນໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ ສຳລັບຜູ້ລອດຊີວິດທີ່ເປັນເດັກ*

| ແຫຼ່ງລາຍຮັບຫຼັກ | ກ່ອນອຸປະຕິເຫດ | | ຫຼັງອຸປະຕິເຫດ | |
|---|---|---|---|---|
| | n | % | n | % |
| **ຜູ້ດູແລເດັກ** | | | | |
| ຊາວກະສິກອນ (ເປັນເຈົ້າຕົນເອງ) | 7 | 38.9 | 8 | 44.4 |

| | | | | |
|---|---|---|---|---|
| ຊາວກະສິກອນ (ເຮັດວຽກໃຫ້ກັບ ບໍລິສັດ) | 2 | 11.1 | 2 | 11.1 |
| ການປະມົງ | 0 | 0 | 0 | 0 |
| ທຸລະກິດຂະໜາດນ້ອຍ | 1 | 5.6 | 1 | 5.6 |
| ພະນັກງານລັດ | 3 | 16.7 | 3 | 16.7 |
| ບໍລິສັດເອກະຊົນ | 1 | 5.6 | 1 | 5.6 |
| ຢູ່ແບບຫາມື້ກິນມື້ | 3 | 16.7 | 3 | 16.7 |
| ນັກຮຽນ | 0 | 0 | 0 | 0 |
| ຫວ່າງງານ | 0 | 0 | 0 | 0 |
| ອື່ນໆ | 1 | 5.6 | 0 | 0 |
| **ຜູ້ອື່ນໃນຄົວເຮືອນ** | | | | |
| ຊາວກະສິກອນ (ເປັນເຈົ້າຕົນເອງ) | 6 | 33.3 | 6 | 33.3 |
| ຊາວກະສິກອນ (ເຮັດວຽກໃຫ້ກັບ ບໍລິສັດ) | 1 | 5.6 | 1 | 5.6 |
| ການປະມົງ | 0 | 0 | 0 | 0 |
| ທຸລະກິດຂະໜາດນ້ອຍ | 0 | 0 | 0 | 0 |
| ພະນັກງານລັດ | 0 | 0 | 0 | 0 |
| ບໍລິສັດເອກະຊົນ | 1 | 5.6 | 1 | 5.6 |
| ຢູ່ແບບຫາມື້ກິນມື້ | 6 | 33.3 | 6 | 33.3 |
| ນັກຮຽນ | 1 | 5.6 | 1 | 5.6 |
| ຫວ່າງງານ | 4 | 22.2 | 5 | 27.8 |
| ອື່ນໆ | 0 | 0 | 0 | 0 |

## ລາຍຮັບ, ໜີ້ສິນ ແລະ ພາວະການສູນເສຍໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ

ຮູບທີ 11 ສະແດງເຖິງລາຍຮັບຕໍ່ເດືອນໂດຍປະມານຂອງຄອບຄົວຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ເທົ່ານັ້ນ ທັງໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ. ຂໍ້ມູນນີ້ສະແດງໃຫ້ເຫັນເຖິງການປ່ຽນແປງເລັກນ້ອຍໄປສູ່ກຸ່ມລາຍຮັບຕໍ່າຫຼັງຈາກອຸປະຕິເຫດ ລບຕ. ຄົວເຮືອນທີ່ມີລາຍ

ໄດ້ແຕ່ 0 ຫາ 1,600,000 ກີບ ເພີ່ມຂຶ້ນຈາກ 47% ເປັນ 53%, ໃນຂະນະທີ່ຄົວເຮືອນທີ່ມີລາຍໄດ້ແຕ່ 1,600,001 ຫາ 5,000,000 ກີບ ຫຼຸດລົງຈາກ 47% ເປັນ 41%. ສັດສ່ວນຂອງລາຍໄດ້ 5,000,001 ຫາ 15,000,000 ກີບ ຍັງຄົງບໍ່ປ່ຽນແປງ ໂດຍຢູ່ທີ່ 6%, ແລະ ບໍ່ມີຄອບຄົວໃດລາຍງານວ່າມີລາຍໄດ້ເກີນ 15,000,000 ກີບ ໃນເວລາເຮັດການສຳຫຼວດ. ການປ່ຽນແປງເຫຼົ່ານີ້ ຊີ້ໃຫ້ເຫັນເຖິງການຫຼຸດລົງເລັກນ້ອຍຂອງລາຍໄດ້ຫຼັງຈາກອຸປະຕິເຫດ ລບຕ.

ໜີ້ສິນໄດ້ເພີ່ມຂຶ້ນໃນຄອບຄົວຜູ້ລອດຊີວິດທັງຜູ້ໃຫຍ່ ແລະ ເດັກ ຫຼັງຈາກອຸປະຕິເຫດ ລບຕ. ໃນບັນດາຄອບຄົວຜູ້ລອດຊີວິດຜູ້ໃຫຍ່, ໜີ້ສິນເພີ່ມຂຶ້ນຈາກ 34% ເປັນ 53%, ໃນຂະນະທີ່ຄອບຄົວຜູ້ລອດຊີວິດທີ່ເປັນເດັກເພີ່ມຂຶ້ນຈາກ 39% ເປັນ 44%.

*ຮູບທີ 11: ລາຍຮັບຕໍ່ເດືອນ ແລະ ໜີ້ສິນຂອງຄົວເຮືອນໃນໄລຍະ**ກ່ອນ** ແລະ **ຫຼັງ**ເກີດອຸປະຕິເຫດ ລບຕ*




ຂໍ້ມູນສະແດງໃຫ້ເຫັນເຖິງການປ່ຽນແປງຂອງໜີ້ສິນຂອງຄົວເຮືອນ ທັງຄອບຄົວຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກ ຫຼັງຈາກອຸປະຕິເຫດ ລບຕ. ໃນບັນດາຄອບຄົວຜູ້ໃຫຍ່, ຈຳນວນຂອງຜູ້ຕອບຄຳຖາມລາຍງານວ່າ ມີໜີ້ສິນເພີ່ມຂຶ້ນຈາກ n=11 ກ່ອນທີ່ຈະເກີດອຸປະຕິເຫດ ມາເປັນ n=17 ຫຼັງຈາກເກີດອຸປະຕິເຫດ ລບຕ.

ຈຳນວນໜີ້ສິນແມ່ນເພີ່ມຂຶ້ນພາຍຫຼັງເກີດອຸປະຕິເຫດ ລບຕ, ໂດຍມີການຫັນປ່ຽນຢ່າງເຫັນໄດ້ຊັດເຈັນໃນດ້ານປະລິມານ ແລະ ການແຈກກະຈາຍ. ໃນບັນດາຄອບຄົວຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່, ຫນີ້ສິນບໍ່ພຽງແຕ່ເປັນສິ່ງທີ່ພົບເຫັນຫຼາຍຂຶ້ນເທົ່ານັ້ນ, ແຕ່ຍັງເພີ່ມໄປສູ່ລະດັບທີ່ສູງຂຶ້ນໄປອີກ. ໜີ້ສິນຫຼັງຈາກອຸປະຕິເຫດ ລບຕ ທີ່ພົບເລື້ອຍທີ່ສຸດແມ່ນ 2,000,000 ຫາ <5,000,000 ກີບ (35.3%), ມີກໍລະນີໜີ້ສິນໃໝ່ເກີດຂຶ້ນໃນຂອບເຂດ 5,000,000 ຫາ <10,000,000 ກີບ ແລະ ຫຼາຍກ່ວາ 10,000,000 ກີບ, ເຊິ່ງເປັນລະດັບທີ່ບໍ່ເຄີຍມີການລາຍງານມາກ່ອນ.

ຢູ່ໃນຄອບຄົວທີ່ຜູ້ລອດຊີວິດເປັນເດັກ, ໜີ້ສິນໄດ້ເພີ່ມຂຶ້ນເລັກນ້ອຍ ແຕ່ເປັນຈຳນວນໜ້ອຍລົງ. ໜີ້ສິນຫຼັງຈາກອຸປະຕິເຫດ ລບຕ ສ່ວນໃຫຍ່ (62.5%) ຫຼຸດລົງໃນຂອບເຂດ 180,000 ຫາ <500,000 ກີບ, ໃນຂະນະທີ່ລະດັບໜີ້ສິນທີ່ສູງຂຶ້ນໃນໄລຍະກ່ອນອຸປະຕິເຫດ ລບຕ ໄດ້ຫຼຸດລົງ.

ໂດຍລວມແລ້ວ, ໜີ້ສິນໄດ້ຫຼາຍຂຶ້ນຫຼັງຈາກອຸປະຕິເຫດ ລບຕ, ຄອບຄົວທີ່ຜູ້ລອດຊີວິດເປັນຜູ້ໃຫຍ່ມີແນວໂນ້ມທີ່ຈະສະສົມໜີ້ສິນຫຼາຍກວ່າເກົ່າ, ໃນຂະນະທີ່ຄອບຄົວທີ່ຜູ້ລອດຊີວິດເປັນເດັກມີລະດັບໜີ້ສິນຫຼຸດລົງ.

*ຕາຕະລາງທີ 13: ຈຳນວນໜີ້ສິນໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ ຂອງຄົວເຮືອນຜູ້ໃຫຍ່ ແລະ ເດັກ*

| | ກ່ອນອຸປະຕິເຫດ | | ຫຼັງອຸປະຕິເຫດ | |
|---|---|---|---|---|
| | n | % | n | % |
| **ຈຳນວນໜີ້ຂອງຄອບຄົວຜູ້ໃຫຍ່ (ກີບ)** | (n=11) | | (n=17) | |
| <180,000 | - | - | | |
| 180,000- <500,000 | 3 | 27.3 | 4 | 23.5 |
| 500,000-<1,000,000 | 3 | 27.3 | 2 | 11.8 |
| 1,000,000-<2,000,000 | 2 | 18.2 | 3 | 17.6 |
| 2,000,000-<5,000,000 | 3 | 27.3 | 6 | 35.3 |
| 5,000,000-<10,000,000 | - | - | 1 | 5.9 |
| >10,000,000 | - | - | 1 | 5.9 |
| **ຈຳນວນໜີ້ຂອງຄອບຄົວເດັກ (ກີບ)** | (n=7) | | (n=8) | |
| <180,000 | 1 | 14.3 | - | - |
| 180,000- <500,000 | 2 | 28.6 | 5 | 62.5 |
| 500,000-<1,000,000 | - | - | 1 | 12.5 |
| 1,000,000-<2,000,000 | - | - | 1 | 12.5 |
| 2,000,000-<5,000,000 | 3 | 42.9 | - | - |
| 5,000,000-<10,000,000 | 1 | 14.3 | 1 | 12.5 |
| >10,000,000 | - | - | - | - |

## ສະມາຊິກຄອບຄົວໄດ້ໃຫ້ການສະໜັບສະໜູນອັນສຳຄັນແກ່ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ການແບກຮັບພາລະໃນການປັບຕົວກັບວິທີການດຳລົງຊີວິດ.

ຜູ້ລອດຊີວິດສ່ວນໃຫຍ່ ໄດ້ລະບຸວ່າສະມາຊິກຄອບຄົວເປັນຜູ້ອຳນວຍຄວາມສະດວກສຳຄັນໃນການຟື້ນຟູ ແລະ ການກັບຄືນສູ່ສັງຄົມຂອງເຂົາເຈົ້າ. ຄອບຄົວໃຫ້ການຊຸກຍູ້ແກ່ຜູ້ລອດຊີວິດ, ສະຫນັບສະຫນູນການສ້າງລາຍໄດ້ຂອງຄອບຄົວ, ເຮັດຫນ້າທີ່ຫຼາຍຂຶ້ນໃນການສະຫນັບສະຫນູນບຳລຸງຮັກສາຄອບຄົວ ແລະ ໃນການຊ່ວຍເຫຼືອການປິ່ນປົວ ແລະ ການດູແລສຸຂະພາບຂອງຜູ້ລອດຊີວິດ. ທ້າວ ບຸນມີ ໄດ້ອະທິບາຍວ່າຄອບຄົວຂອງລາວ ໄດ້ໃຫ້ກຳລັງໃຈ ແລະ ໃຫ້ການສະໜັບສະໜູນການປິ່ນປົວຂອງລາວແນວໃດ, ລາວກ່າວວ່າ *ພາຍຫຼັງເກີດອຸປະຕິເຫດ, ຄອບຄົວ ແລະ ອ້າຍເອື້ອຍນ້ອງຂອງຂ້ອຍ ໄດ້ໃຫ້ການສະໜັບສະໜູນ. ເຂົາເຈົ້າໄດ້ຊ່ວຍໃນການປິ່ນປົວຂອງຂ້ອຍ, ໄປຢ້ຽມຢາມຂ້ອຍ, ແລະຊຸກຍູ້ຂ້ອຍໃຫ້ມີຄວາມເຂັ້ມແຂງ, ຕົວຢ່າງ, ຂະເຈົ້າສະໜັບສະໜູນຂ້ອຍໂດຍການເວົ້າວ່າ, "ຂໍໃຫ້ເຈົ້າດີໄວໆ ເດີ້."*

ເມື່ອຜູ້ລອດຊີວິດມີຂໍ້ຈຳກັດດ້ານຄວາມສາມາດໃນການຫາເງິນໃຫ້ໄດ້ເທົ່າກັບຕອນກ່ອນເກີດອຸປະຕິເຫດ, ສະມາຊິກໃນຄອບຄົວໄດ້ຮັບຜິດຊອບ ໃນການສ້າງລາຍຮັບ ໂດຍບໍ່ຄຳນຶງເຖິງວ່າເຂົາເຈົ້າເປັນຜູ້ຫາລ້ຽງຄອບຄົວມາກ່ອນ ຫຼື ບໍ່ກໍ່ຕາມ. ທ້າວ ຄຳດີ ໄດ້ເລົ່າເຖິງການປ່ຽນແປງດັ່ງກ່າວທີ່ມີຕໍ່ຄອບຄົວຂອງລາວ ວ່າ: *"ພາຍຫຼັງເກີດອຸປະຕິເຫດ, ບົດບາດຂອງສະມາຊິກໃນຄອບຄົວຂອງຂ້ອຍກໍ່ປ່ຽນໄປ, ລູກ ແລະ ເມຍຂອງຂ້ອຍໄດ້ກາຍເປັນບຸກຄົນສຳຄັນ (ຜູ້ຫາລ້ຽງຄອບຄົວ) ເພາະວ່າຂ້ອຍບໍ່ສາມາດເຮັດໃນສິ່ງທີ່ຂ້ອຍເຄີຍເຮັດໄດ້ອີກຕໍ່ໄປ."*

ນອກຈາກການສະໜັບສະໜູນຂອງສະມາຊິກໃນຄອບຄົວໃນການສ້າງລາຍຮັບໃຫ້ແກ່ຄອບຄົວ, ຄອບຄົວຍັງມີໜ້າທີ່ຮັບຜິດຊອບເພີ່ມເຕີມຂຶ້ນຢູ່ໃນຄົວເຮືອນ. ນາງ ແສງຈັນ ໄດ້ເລົ່າຄວາມຮູ້ສຶກກ່ຽວກັບຄອບຄົວຂອງນາງວ່າ: *"ຄອບຄົວເບິ່ງແຍງຂ້ອຍດີກວ່າແຕ່ກ່ອນ, ພວກເຂົາບໍ່ໃຫ້ຂ້ອຍເຮັດວຽກເຮືອນຫຼາຍ."* ສຳລັບຜູ້ລອດຊີວິດບາງຄົນ, ການເພີ່ມຄວາມຮັບຜິດຊອບໃນການເຮັດວຽກໃຫ້ແກ່ສະມາຊິກຄອບຄົວໄດ້ສິ້ນສຸດລົງ ພາຍຫຼັງທີ່ຜູ້ລອດຊີວິດໄດ້ຫາຍດີ. ຢ່າງໃດກໍຕາມ, ສຳລັບຜູ້ລອດຊີວິດທີ່ມີອາການເຈັບເປັນເວລາດົນນານ, ການເພີ່ມຄວາມຮັບຜິດຊອບໃນການເຮັດວຽກໃຫ້ແກ່ສະມາຊິກຄອບຄົວໄດ້ກາຍເປັນການແຈກຢາຍໜ້າທີ່ໃໝ່ໃຫ້ຄົນໃນຄອບຄົວ.

ນອກຈາກການປ່ຽນແປງໃນການມອບໂອນໜ້າທີ່ວຽກງານໃນຄອບຄົວ ແລະ ໃນບ່ອນເຮັດວຽກແລ້ວ, ໃນກໍລະນີທີ່ຜູ້ລອດຊີວິດໄດ້ຮັບບາດເຈັບສາຫັດແມ່ນ ສະມາຊິກໃນຄອບຄົວຍັງໄດ້ຊ່ວຍເຫຼືອຜູ້ລອດຊີວິດໃນການຮັກສາສຸຂະອະນາໄມປະຈຳວັນ ແລະ ຊ່ວຍໃນການປິ່ນປົວພະຍາດ ນຳອີກ. ດັ່ງທີ່ ນາງ ແສງຈັນ ໄດ້ເລົ່າໃຫ້ຟັງວ່າ: *"ຂ້ອຍຕື່ນມາ ຂ້ອຍເຮັດຫຍັງບໍ່ໄດ້ ຜົວຂອງຂ້ອຍຕ້ອງເຮັດທຸກຢ່າງໃຫ້ຂ້ອຍ ເຊັ່ນ: ພາຂ້ອຍໄປຫ້ອງນ້ຳ, ລ້າງໜ້າ, ອາບນ້ຳ, ແຕ່ງກິນ ແລະ ແຕ່ງໂຕໃຫ້ຂ້ອຍ ເປັນເວລາໜຶ່ງເດືອນ."* ທ້າວ ສົມໃຈ ໄດ້ເນັ້ນໃຫ້ເຫັນເຖິງວິທີທີ່ເມຍຂອງລາວຊ່ວຍໃນການດູແລທາງການແພດຂອງລາວ ໂດຍອະທິບາຍວ່າ *"ເມຍຂ້ອຍເບິ່ງແຍງສຸຂະພາບຂອງຂ້ອຍ. ລາວມັກຈະຖາມວ່າຂ້ອຍຢາກກິນຫຍັງພິເສດ ແລະ ຖາມຂ້ອຍກ່ຽວກັບອາການຂອງຂ້ອຍ ຫຼື ຂ້ອຍຢາກໄປຫາໝໍບໍ່."*

ໃນເລື່ອງເລົ່າຂອງ ນາງ ແສງຈັນ, ທ້າວ ສົມໃຈ ແລະ ທ້າວ ຄຳດີ ທີ່ເລົ່າຢູ່ໃນບົດລາຍງານໃນພາກນີ້, ພວກເຮົາຍົກໃຫ້ເຫັນເຖິງວິທີທີ່ຜູ້ລອດຊີວິດສາມາດເພິ່ງພາຄອບຄົວຂອງເຂົາເຈົ້າສຳລັບການສະໜັບສະໜູນປະເພດຕ່າງໆ. ອີງຕາມຄວາມຕ້ອງການຂອງຜູ້ລອດຊີວິດ, ສະມາຊິກໃນຄອບຄົວໄດ້ຊ່ວຍຮັບປະກັນວ່າ ເຂົາເຈົ້າປະຕິບັດຕາມການປິ່ນປົວທາງການແພດ, ຮັບຜິດຊອບສຳລັບວຽກງານໃນຄອບຄົວໃໝ່ ຫຼື ວຽກງານອື່ນໆ ແລະ ໃຫ້ການຊຸກຍູ້ທີ່ສຳຄັນຕໍ່ຜູ້ລອດຊີວິດໃນການຟື້ນຟູຂອງເຂົາເຈົ້າ.

## ມີພຽງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ພຽງຄົນດຽວເທົ່ານັ້ນ ທີ່ລາຍງານວ່າໄດ້ຮັບການສະໜັບສະໜູນດ້ານການດຳລົງຊີວິດ.

ທັງການສຳຫຼວດດ້ານປະລິມານ ແລະ ການສຳພາດດ້ານຄຸນນະພາບ ໄດ້ຖາມຜູ້ລອດຊີວິດ (ຫຼື ຜູ້ດູແລເຂົາເຈົ້າ)ວ່າເຂົາເຈົ້າໄດ້ຮັບການສະໜັບສະໜູນປະເພດໃດແດ່ ແລະ ການສະໜັບສະໜູນນັ້ນມາຈາກແຫຼ່ງໃດແດ່.

ມີພຽງຜູ້ຕອບແບບສອບຖາມທີ່ເປັນຜູ້ໃຫຍ່ຄົນດຽວເທົ່ານັ້ນ ທີ່ລາຍງານວ່າໄດ້ຮັບການສະໜັບສະໜູນດ້ານການດຳລົງຊີວິດ; ຜູ້ຕອບແບບສອບຖາມຄົນນີ້ໄດ້ລາຍງານ (ພາຍໃຕ້ ຄຳຕອບ "ອື່ນໆ") ວ່າໄດ້ຮັບການສະໜັບສະໜູນສັດລ້ຽງຈາກສະມາຄົມຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດ (QLA). ບໍ່ມີຜູ້ຕອບແບບສອບຖາມຄົນໃດລາຍງານວ່າໄດ້ຮັບການສະໜັບສະໜູນດ້ານທຸລະກິດຂະໜາດນ້ອຍ. ຜູ້ລອດຊີວິດອີກ 2 ຄົນທີ່ຖືກສຳພາດໄດ້ກ່າວວ່າມີໂຄງການຝຶກອົບຮົມດ້ານການດຳລົງຊີວິດ ຫຼື ທັກສະ ທີ່ຈັດຂຶ້ນຢູ່ໃນບ້ານຂອງເຂົາເຈົ້າ, ແຕ່ວ່າໂຄງການຝຶກອົບຮົມເຫຼົ່ານີ້ ບໍ່ໄດ້ແມ່ນສະເພາະສຳລັບ ຫຼື ແນໃສ່ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ. ຜູ້ລອດຊີວິດທັງ 2 ຄົນບໍ່ໄດ້ເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ, ແຕ່ຄູ່ສົມລົດຂອງໜຶ່ງຄົນໄດ້ເຂົ້າຮ່ວມ.

ເມື່ອຖາມວ່າເຂົາເຈົ້າຕ້ອງການການສະໜັບສະໜູນປະເພດໃດ, ຜູ້ລອດຊີວິດໄດ້ເວົ້າເຖິງການສະໜັບສະໜູນທີ່ກ່ຽວຂ້ອງກັບການປັບປຸງຊີວິດການເປັນຢູ່ ຫຼື ຄວາມສາມາດໃນການສ້າງລາຍໄດ້ ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານການເງິນ ແລະ ການລ້ຽງດູຄອບຄົວຂອງເຂົາເຈົ້າຢ່າງຕໍ່ເນື່ອງ. (ກະລຸນາເບິ່ງຂໍ້ມູນເພີ່ມເຕີມຢູ່ຜົນການສຶກສາຄົ້ນຄ້ວາ, ການສົນທະນາ ແລະ ຂໍ້ສະເໜີແນະ ພາຍໃຕ້ຄຳຖາມທີ 8.)

### ປະເພດ ແລະ ແຫຼ່ງສະໜັບສະໜູນອື່ນໆ

ລອດຊີວິດໄດ້ຖືກຖາມວ່າ ເຂົາເຈົ້າໄດ້ຮັບການສະໜັບສະໜູນຈາກລັດຖະບານ, ຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຈາກຄະນະກຳມະການໃນຂັ້ນບ້ານ ຫຼື ບໍ່ ແລະ ເຂົາເຈົ້າໄດ້ຮັບການຊ່ວຍເຫຼືອປະເພດໃດແດ່ ເຊັ່ນ: ການຊ່ວຍເຫຼືອດ້ານການເງິນ, ອາຫານ, ການຝຶກອົບຮົມການດຳລົງຊີວິດ, ຢາປົວພະຍາດ, ການສະໜັບສະໜູນທຸລະກິດຂະໜາດນ້ອຍ, ການຊ່ວຍເຫຼືອດ້ານການຂົນສົ່ງ ຫຼື ການຊ່ວຍເຫຼືອປະເພດອື່ນໆ. ການວິເຄາະຂໍ້ມູນທັງດ້ານຄຸນນະພາບ ແລະ ປະລິມານ ໄດ້ຊີ້ໃຫ້ເຫັນວ່າມີຄວາມບໍ່ສອດຄ່ອງກັນໃນວິທີທີ່ຜູ້ລອດຊີວິດລະບຸປະເພດການຊ່ວຍເຫຼືອຂອງເຂົາເຈົ້າ ແລະ ການລະບຸແຫຼ່ງທີ່ມາຂອງການຊ່ວຍເຫຼືອ ອາດຈະບໍ່ສອດຄ່ອງກັນສະເໝີໄປກັບວິທີການທີ່ພາກສ່ວນກ່ຽວຂ້ອງຂອງຂະແໜງການໄດ້ໄຈ້ແຍກບັນດາແຫຼ່ງຂອງການສະໜັບສະໜູນ. ໃນການສຳພາດ, ຜູ້ລອດຊີວິດມັກກ່າວວ່າ ເຂົາເຈົ້າບໍ່ສາມາດຈື່ໄດ້ວ່າແມ່ນໃຜໃຫ້ການສະໜັບສະໜູນ. ມັນອາດຈະເປັນສິ່ງທ້າທາຍສຳລັບຜູ້ລອດຊີວິດທີ່ຈະຕອບຄຳຖາມພະນັກງານພາກລັດໃນກໍລະນີເຂົາເຈົ້າໄດ້ຮັບການສະໜັບສະໜູນທີ່ສະໜອງໃຫ້ໂດຍຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ຫຼື ເປັນສ່ວນໜຶ່ງຂອງໂຄງການທີ່ສອດຄ່ອງກັບນະໂຍບາຍຂອງລັດຖະບານແຕ່ຄຸ້ມຄອງໂດຍອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ. ດ້ວຍເຫດຜົນນີ້, ໃນບົດລາຍງານນີ້ ພວກເຮົາຈຶ່ງເນັ້ນໃສ່ປະເພດຂອງການສະໜັບສະໜູນທີ່ໄດ້ຮັບ ແລະ ລະດັບການສະໜັບສະໜູນໂດຍລວມທີ່ໄດ້ຮັບ ຫຼາຍກວ່າຄວາມແຕກຕ່າງຂອງແຫຼ່ງສະໜັບສະໜູນ.

ໂດຍລວມແລ້ວ, ຫຼາຍກວ່າສອງສ່ວນສາມຂອງຜູ້ລອດຊີວິດຜູ້ໃຫຍ່ ແລະ ເດັກ ລາຍງານວ່າໄດ້ຮັບການສະໜັບສະໜູນ. ໃນບັນດາກຸ່ມປະຊາກອນຕົວຢ່າງທັງ 2 ກຸ່ມ, ໜ້ອຍກວ່າເຄິ່ງໜຶ່ງຂອງຜູ້ລອດຊີວິດ (44%) ລາຍງານວ່າໄດ້ຮັບການສະໜັບສະໜູນຈາກຫຼາຍກວ່າໜຶ່ງແຫຼ່ງ.

ໃນບັນດາຜູ້ລອດຊີວິດທີ່ເປັນຜູ້ໃຫຍ່, 69% (22 ຄົນ) ໄດ້ຮັບການສະໜັບສະໜູນຈາກຢ່າງຫນ້ອຍ 1 ໃນ 3ແຫຼ່ງ (ລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ຫຼື ຄະນະກຳມະການຂັ້ນບ້ານ), ແລະ 31% (10 ຄົນ) ບໍ່ໄດ້ລາຍງານວ່າໄດ້ຮັບການສະໜັບສະໜູນໃດໆ. ເຖິງຢ່າງໃດກໍ່ຕາມ, ຜູ້ຕອບແບບສອບຖາມ 10 ຄົນ ທີ່ຕອບວ່າເຂົາເຈົ້າບໍ່ໄດ້ຮັບການສະໜັບສະໜູນ ໄດ້ລະບຸໃນການຕອບຄຳຖາມຂອງແບບສອບຖາມ ຫຼື ໃນການສຳພາດ ຫຼື ທັງສອງຢ່າງວ່າ *ເຂົາເຈົ້າໄດ້ຮັບການສະໜັບສະໜູນ*, ດັ່ງນັ້ນຈຳນວນຜູ້ທີ່ບໍ່ໄດ້ຮັບການສະໜັບສະໜູນ ອາດມີຄວາມຄາດເຄື່ອນຍ້ອນຄວາມສັບສົນກ່ຽວກັບຄຳຖາມ. ໃນບັນດາຜູ້ລອດຊີວິດ 22 ຄົນ ທີ່ລາຍງານວ່າໄດ້ຮັບການສະໜັບສະໜູນນັ້ນ, 14 ຄົນ ລາຍງານວ່າໄດ້ຮັບການສະໜັບສະໜູນຈາກ 1ແຫຼ່ງ ແລະ 8 ຄົນ ລາຍງານວ່າໄດ້ຮັບການສະໜັບສະໜູນຈາກ 2 ແຫຼ່ງ. ບໍ່ມີຜູ້ລອດຊີວິດລາຍງານວ່າໄດ້ຮັບການສະໜັບສະໜູນຈາກທັງ 3 ແຫຼ່ງ - ລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຄະນະກຳມະການຂັ້ນບ້ານ.

ການສຳຫຼວດບໍ່ໄດ້ເປີດໂອກາດໃຫ້ຜູ້ລອດຊີວິດໄດ້ເລົ່າເຖິງເຫດຜົນວ່າເປັນຫຍັງເຂົາເຈົ້າຈຶ່ງບໍ່ໄດ້ຮັບການສະໜັບສະໜູນ. ເຖິງຢ່າງໃດກໍ່ຕາມ, ມີຄຳອະທິບາຍທີ່ເປັນໄປໄດ້ບາງຢ່າງ ແລະ ມັນອາດຈະມີຄຳອະທິບາຍທີ່ແຕກຕ່າງກັນຫຼາຍຢ່າງ ສຳລັບກໍລະນີທີ່ແຕກຕ່າງກັນ. ໃນກໍລະນີໜຶ່ງ, ອຸປະຕິເຫດດັ່ງກ່າວເກີດຈາກບຸກຄົນອື່ນທີ່ກຳລັງຊອກຫາເສດເຫຼັກ ເຊິ່ງເປັນພຶດຕິກຳທີ່ອາດເປັນປັດໄຈທີ່ເຮັດໃຫ້ບໍ່ໄດ້ຮັບການຄຸ້ມຄອງດ້ານການປິ່ນປົວ. ຂໍ້ມູນອື່ນໆ ຍັງຊີ້ໃຫ້ເຫັນວ່າ ໃນບັນດາກຸ່ມຜູ້ລອດຊີວິດ 8 ຫາ 10 ຄົນນີ້, ການບາດເຈັບມີຄວາມຮຸນແຮງໜ້ອຍກວ່າກຸ່ມປະຊາກອນຕົວຢ່າງອື່ນໆ. ຕົວຢ່າງ, ມີ 7 ຄົນໄດ້ຮັບການປິ່ນປົວທາງການແພດຂັ້ນພື້ນຖານເທົ່ານັ້ນ ເຊັ່ນ ການອະນາໄມບາດແຜ, ການຄວບຄຸມບໍ່ໃຫ້ເລືອດອອກ ຫຼື ໃຫ້ຢາ ຫຼື ການປະສົມປະສານຂອງການປິ່ນປົວເຫຼົ່ານີ້ ແລະ ມີພຽງແຕ່ 3 ຄົນເທົ່ານັ້ນ (30%) ໄດ້ໄປໂຮງໝໍແຂວງ ທຽບກັບ 51% ຂອງຜູ້ທີ່ລາຍງານວ່າໄດ້ຮັບການສະໜັບສະໜູນ. ໜຶ່ງໃນຈຳນວນຜູ້ລອດຊີວິດໄດ້ກ່າວວ່າ ໄດ້ຮັບການປິ່ນປົວດູແລຈາກແພດໝໍຢູ່ໃນສະຖານທີ່ເກີດເຫດ ແລະ ຫຼັງຈາກນັ້ນ ກໍ່ບໍ່ຕ້ອງການການປິ່ນປົວທາງການແພດຕື່ມອີກ.

ເຄື່ອງມືການສຳຫຼວດສຳລັບເດັກ ແລະ ຜູ້ເບິ່ງແຍງດູແລເດັກ ໄດ້ຖາມຜູ້ເບິ່ງແຍງດູແລເດັກ ວ່າ ເດັກ ຫຼື ຄົວເຮືອນໄດ້ຮັບການສະໜັບສະໜູນຫຍັງແດ່ຈາກ 3 ແຫຼ່ງ ເຊັ່ນ: ລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ຫຼື ຄະນະກຳມະການຂັ້ນບ້ານ ແລະ ຖ້າໄດ້ຮັບ, ມີປະເພດການສະໜັບສະໜູນໃດແດ່. ໃນຈຳນວນ 18 ຄອບຄົວຜູ້ລອດຊີວິດທີ່ເປັນເດັກໃນກຸ່ມປະຊາກອນຕົວຢ່າງ, 72% (13 ຄົນ) ລາຍງານວ່າໄດ້ຮັບການສະໜັບສະໜູນຈາກຢ່າງຫນ້ອຍ 1 ແຫຼ່ງ, ແລະ 28% (5 ຄົນ) ລາຍງານວ່າບໍ່ໄດ້ຮັບການສະໜັບສະໜູນຈາກແຫຼ່ງໃດເລີຍ. ໃນຈຳນວນ 13 ຄອບຄົວທີ່ໄດ້ລາຍງານວ່າໄດ້ຮັບການສະໜັບສະໜູນ, ມີ 8 ຄອບຄົວໄດ້ລາຍງານວ່າໄດ້ຮັບຈາກພຽງແຫຼ່ງດຽວ; 4 ລາຍງານວ່າໄດ້ຮັບມັນມາຈາກ 2 ແຫຼ່ງ; 1 ລາຍງານວ່າໄດ້ຮັບມັນຈາກທັງ 3 ແຫຼ່ງ.

ຕາຕະລາງທີ 14: ຜູ້ລອດຊີວິດທີ່ໄດ້ຮັບການສະໜັບສະໜູນ ແລະ ຈຳນວນແຫຼ່ງທີ່ໄດ້ຮັບການສະໜັບສະໜູນ (ຈາກລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຄະນະກຳມະການຂັ້ນບ້ານ)

| | ຜູ້ໃຫຍ່ | | ເດັກ | |
|---|---|---|---|---|
| | n | % | n | % |
| ການສະໜັບສະໜູນໃດໜຶ່ງ | 22 | 69% | 13 | 72% |
| ບໍ່ໄດ້ຮັບການສະໜັບສະໜູນ | 10 | 31% | 5 | 28% |
| | | | | |
| ຈາກ 1 ແຫຼ່ງ | 14 | 44% | 8 | 44% |
| ຈາກ 2 ແຫຼ່ງ | 8 | 25% | 4 | 22% |
| ຈາກ 3 ແຫຼ່ງ | 0 | 0% | 1 | 6% |

*ຕາຕະລາງທີ 15: ຈຳນວນ ແລະ ສັດສ່ວນຂອງຜູ້ລອດຊີວິດທີ່ໄດ້ຮັບການສະໜັບສະໜູນ ແລະ ປະເພດຂອງການສະໜັບສະໜູນ*

| | **ຜູ້ໃຫຍ່ (n=32)** | | | **ຄົວເຮືອນຜູ້ລອດຊີວິດທີ່ເປັນເດັກ (n=18)** | | |
|---|---|---|---|---|---|---|
| | **ຈຳນວນ** | **% ຂອງຜູ້ໃຫຍ່ທັງໝົດ (32)** | **% ຜູ້ທີ່ໄດ້ຮັບການສະໜັບສະໜູນ (22)** | **ຈຳນວນ** | **% ຄົວເຮືອນຜູ້ລອດຊີວິດທີ່ເປັນເດັກທັງໝົດ (18)** | **% ຄົວເຮືອນທີ່ໄດ້ຮັບການສະໜັບສະໜູນ (13)** |
| **ການສະໜັບສະໜູນໃດໜຶ່ງ** | **22** | **69%** | **100%** | **13** | **72%** | **100%** |
| **ການສະໜັບສະໜູນໃດດ້ານການເງິນ** | 14 | 44% | 64% | 10 | 56% | 77% |
| **ຢາປິ່ນປົວ** | 12 | 38% | 55% | 5 | 28% | 38% |
| **ການຂົນສົ່ງ** | 9 | 28% | 41% | 1 | 6% | 8% |

| | | | | | | |
|---|---|---|---|---|---|---|
| ອາຫານ | 5 | 16% | 23% | 1 | 6% | 8% |
| ອື່ນໆ | 6 | 19% | 27% | 0 | 0% | 0% |
| ການປະກອບ ເອກະສານ ແລະ ການສື່ງຕໍ່ | 3 | 9% | 14% | 2 | 11% | 15% |
| ການສະໜັບສະໜູນ ດ້ານຊີວິດການເປັນຢູ່ | 1 | 3% | 5% | 0 | 0% | 0% |
| ການສະໜັບສະໜູນ ທຸລະກິດຂະໜາດ ນ້ອຍ | 0 | 0% | 0% | 0 | 0% | 0% |
| *ໝາຍເຫດ: ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ສາມາດບອກການຊ່ວຍເຫຼືອຫຼາຍກວ່າ 1 ປະເພດຕໍ່ 1 ແຫຼ່ງ, ໃນຂະນະທີ່ຄອບຄົວຜູ້ລອດຊີວິດທີ່ເປັນເດັກສາມາດບອກໄດ້ພຽງແຕ່ປະເພດ 1 ເທົ່ານັ້ນຕໍ່ແຕ່ລະແຫຼ່ງທີ່ເຂົາເຈົ້າບອກວ່າໄດ້ຮັບການຊ່ວຍເຫຼືອ.* | | | | | | |

ປະເພດຂອງການຊ່ວຍເຫຼືອທີ່ໄດ້ຮັບການລາຍງານຫຼາຍທີ່ສຸດ ທີ່ທັງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ຄອບຄົວຜູ້ລອດຊີວິດທີ່ເປັນເດັກໄດ້ຮັບແມ່ນການສະໜັບສະໜູນທາງດ້ານການເງິນ, ການສະໜັບສະໜູນດ້ານຢາປິ່ນປົວຖືກລາຍງານວ່າເປັນອັນດັບ2 ຈາກທັງ2ກຸ່ມປະຊາກອນຕົວຢ່າງ. ເນື່ອງຈາກວິທີການບັນທຶກຂໍ້ມູນມີຄວາມແຕກຕ່າງເລັກນ້ອຍ, ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ສາມາດບອກໄດ້ຫຼາຍກວ່າ 1 ປະເພດຂອງການສະໜັບສະໜູນຈາກແຕ່ລະແຫຼ່ງທີ່ເຂົາເຈົ້າໄດ້ຮັບ, ໃນຂະນະທີ່ຄອບຄົວຜູ້ລອດຊີວິດທີ່ເປັນເດັກສາມາດບອກໄດ້ພຽງແຕ່ 1 ປະເພດຂອງການສະໜັບສະໜູນຈາກແຕ່ລະແຫຼ່ງທີ່ເຂົາເຈົ້າບອກວ່າໄດ້ຮັບການຊ່ວຍເຫຼືອ. ໃນບັນດາກຸ່ມຜູ້ໃຫຍ່, ການສະຫນັບສະຫນູນປະເພດທົ່ວໄປ ລວມມີທັງການສະຫນັບສະຫນູນດ້ານການຂົນສົ່ງ, ອາຫານ ແລະ ປະເພດອື່ນໆ.

ໃນທັງ 2 ກຸ່ມປະຊາກອນຕົວຢ່າງ, ຜູ້ຕອບຄຳຖາມຈຳນວນຫນ້ອຍໄດ້ລາຍງານວ່າ ຄະນະກຳມະການຂັ້ນບ້ານໄດ້ໃຫ້ການສະໜັບສະໜູນເຂົາເຈົ້າປະກອບເອກະສານ ແລະ ການສົ່ງຕໍ່ (ເຫຼົ່ານີ້ໃນເບື້ອງຕົ້ນຖືກໃສ່ລະຫັດເປັນ "ອື່ນໆ" ແຕ່ໄດ້ລາຍງານແຍກຕ່າງຫາກໃນ ຕາຕະລາງທີ 15: ຂ້າງເທິງນີ້ ຍ້ອນຄວາມສອດຄ່ອງທີ່ເກີດຂື້ນຈາກຄຳຕອບ). ຢ່າງໃດກໍຕາມ, ຈຳນວນຜູ້ທີ່ລາຍງານການສະໜັບສະໜູນນີ້ອາດຈະຕໍ່າກວ່າຄວາມເປັນຈິງ ເນື່ອງຈາກບໍ່ໄດ້ຖືກຖາມເຖິງໂດຍເຈາະຈົງ ແລະ ແຫຼ່ງສະໜັບສະໜູນອື່ນໆ (ເຊັ່ນ ການປິ່ນປົວ, ການຊ່ວຍເຫຼືອດ້ານການເງິນ) ມັກຈະຕ້ອງອາໄສການສົ່ງຕໍ່.

ໃນບັນດາການສະໜັບສະໜູນປະເພດ "ອື່ນໆ" ມີຜູ້ຕອບຄຳຖາມ 4 ຄົນ ລາຍງານກ່ຽວກັບຈຳນວນເງິນທີ່ໄດ້ຮັບການສະໜັບສະໜູນ; ຫນຶ່ງໃນຈຳນວນເຫຼົ່ານີ້ ໄດ້ກ່າວວ່າເປັນການສະໜັບສະໜູນ "ພິທີທາງສາສະໜາ".

## ການຊ່ວຍເຫຼືອຂອງຊຸມຊົນຕໍ່ກັບຜູ້ລອດຊີວິດມີຄວາມຫຼາກຫຼາຍ, ເຊິ່ງສົ່ງຜົນຕໍ່ການກັບຄືນສູ່ຊຸມຊົນຂອງຜູ້ລອດຊີວິດ.

ສະມາຊິກຊຸມຊົນ ໃຫ້ການສະໜັບສະໜູນແກ່ຜູ້ລອດຊີວິດຫຼັງຈາກອຸປະຕິເຫດຂອງເຂົາເຈົ້າ, ເຖິງແມ່ນວ່າປະເພດ ແລະ ລະດັບຂອງການສະໜັບສະໜູນຈະແຕກຕ່າງກັນ ກໍ່ຕາມ. ບັນດາຜູ້ລອດຊີວິດໄດ້ລາຍງານວ່າ ສະມາຊິກໃນຊຸມຊົນໄດ້ໄປຢາມເຂົາເຈົ້າຫຼັງຈາກເກີດອຸປະຕິເຫດ, ໃຫ້ກໍາລັງໃຈ, ສະແດງໃຫ້ເຫັນຄວາມເປັນຫ່ວງຂອງເຂົາເຈົ້າ ແລະ ໃຫ້ສິ່ງຂອງຈໍານວນໜຶ່ງໃຫ້ຄອບຄົວຜູ້ລອດຊີວິດ ເຊັ່ນ: ໝາກໄມ້. ທ້າວ ຄໍາດີ ເວົ້າເຖິງການໃຫ້ກໍາລັງໃຈທີ່ໄດ້ຮັບຈາກຊຸມຊົນຂອງລາວ ຫຼັງຈາກເກີດອຸປະຕິເຫດ ໂດຍເລົ່າວ່າ *"ໝູ່ເພື່ອນໃນຊຸມຊົນກໍ່ສະແດງຄວາມເປັນຫ່ວງເປັນໃຍໂດຍການຖາມກ່ຽວກັບອາການເຈັບເປັນດີຂຶ້ນບໍ່ ແລະ ຖາມກ່ຽວກັບສິ່ງທີ່ເກີດຂຶ້ນກັບຂ້ອຍ, ຄໍາເວົ້າດີໆຂອງເຂົາເຈົ້າເຮັດໃຫ້ຂ້ອຍຮູ້ສຶກດີໃຈ ແລະ ມີກໍາລັງໃຈດີຂຶ້ນ, ເຂົາເຈົ້າ ບອກຂ້ອຍວ່າ ຢ່າຍອມແພ້ ເພາະເຂົາເຈົ້າເຊື່ອວ່າທຸກຢ່າງຈະດີຂຶ້ນ ແລະ ກັບຄືນສູ່ສະພາບປົກກະຕິໄດ້."*

ຈາກການຢ້ຽມຢາມຂອງສະມາຊິກໃນຊຸມຊົນ, ຜູ້ລອດຊີວິດຈໍານວນໜຶ່ງຊີ້ໃຫ້ເຫັນວ່າ ຍາດພີ່ນ້ອງຂອງເຂົາເຈົ້າມີແນວໂນ້ມທີ່ຈະສະໜັບສະໜູນໃນລັກສະນະນີ້ຫຼາຍກ່ວາ. ທ້າວ ສົມໃຈ ອະທິບາຍເຖິງເລື່ອງນີ້ວ່າ: *"ມີບາງຄົນມາຢາມ ແລະ ຖາມອາການຂອງຂ້ອຍ, ແນວໃດກໍ່ຕາມ, ຜູ້ທີ່ມາຢ້ຽມຢາມຂ້ອຍສ່ວນຫຼາຍແມ່ນຍາດພີ່ນ້ອງຢູ່ໃນບ້ານເທົ່ານັ້ນ."* ໂດຍລວມແລ້ວ, ຜູ້ລອດຊີວິດໄດ້ເວົ້າກ່ຽວກັບການມາຢ້ຽມຢາມຊຸມຊົນ ແລະ ຍາດພີ່ນ້ອງ ພ້ອມທັງການໃຫ້ກໍາລັງໃຈ ແລະ ສະແດງຄວາມເປັນຫ່ວງ ເຊິ່ງເປັນຮູບແບບໜຶ່ງຂອງການສະໜັບສະໜູນຫຼັງຈາກເກີດອຸປະຕິເຫດຂອງເຂົາເຈົ້າ ແລະ ຜູ້ລອດຊີວິດຍັງໄດ້ເນັ້ນເຖິງຄວາມສໍາຄັນຂອງການສະໜັບສະໜູນທາງສັງຄົມສໍາລັບການກັບຄືນສູ່ຊຸມຊົນຂອງເຂົາເຈົ້າ ພາຍຫຼັງຈາກເກີດອຸປະຕິເຫດ.

ສິ່ງສໍາຄັນທີ່ຕ້ອງຮັບຮູ້ແມ່ນ ຜູ້ລອດຊີວິດບາງຄົນປະສົບກັບປະຕິກິລິຍາທາງລົບຈາກສະມາຊິກຊຸມຊົນຂອງເຂົາເຈົ້າ. ນາງ ແສງຈັນ ໄດ້ເລົ່າກ່ຽວກັບການຮັບມືຕໍ່ອຸປະຕິເຫດຂອງນາງວ່າ: *"ແຕ່ບາງຄົນ [ສະມາຊິກໃນຊຸມຊົນ] ຈະເວົ້າວ່າຂ້ອຍເປັນພາລະໃຫ້ຜົວ ແລະ ລູກຂອງຂ້ອຍ, ໂດຍກ່າວວ່າ: 'ຕາຍດີກວ່າ ແລະ ມັນຈະສະບາຍກວ່າ.' ຂ້ອຍຄິດວ່າເຂົາເຈົ້າພຽງແຕ່ເວົ້າໃນສິ່ງທີ່ເຮັດໃຫ້ຂ້ອຍເຈັບປວດເທົ່ານັ້ນເອງ.* ໃນຖ້ອຍຄໍານີ້, ນາງ ແສງຈັນ ໄດ້ຍົກໃຫ້ເຫັນຄໍາເວົ້າຂອງສະມາຊິກໃນຊຸມຊົນວ່າ ມັນສົ່ງຜົນກົງກັນຂ້າມກັບຖ້ອຍຄໍາຂອງທ້າວ ຄໍາດີ, ຄວາມຈິງແລ້ວ ເຫັນວ່າຄໍາເວົ້າຂອງສະມາຊິກຊຸມຊົນນັ້ນບໍ່ໄດ້ໃຫ້ກໍາລັງໃຈແຕ່ຢ່າງໃດເລີຍ.

ໃນເວລາເລົ່າເຖິງການຊ່ວຍເຫຼືອຈາກສັງຄົມ, ຜູ້ລອດຊີວິດທີ່ເປັນເດັກໄດ້ສົນທະນາກ່ຽວກັບມິດຕະພາບຂອງເຂົາເຈົ້າທີ່ມີການປ່ຽນແປງ ຫຼື ບໍ່ປ່ຽນແປງຄືແນວໃດແດ່ ຫຼັງຈາກເກີດອຸປະຕິເຫດ. ຜູ້ລອດຊີວິດທີ່ເປັນເດັກສ່ວນຫຼາຍມັກຈະສົນທະນາກ່ຽວກັບການມີໝູ່ເພື່ອນໜ້ອຍລົງຫຼັງຈາກເກີດອຸປະຕິເຫດຂອງເຂົາເຈົ້າ ຫຼື ບໍ່ມີການປ່ຽນແປງຫຍັງເລີຍໃນຄວາມສໍາພັນຂອງເຂົາເຈົ້າກັບໝູ່ເພື່ອນຂອງເຂົາເຈົ້າ. ໃນຫຼາຍໆກໍລະນີ, ມິດຕະພາບຂອງເຂົາເຈົ້າພາຍຫຼັງເກີດອຸປະຕິເຫດ ແມ່ນໄດ້ຮັບອິດທິພົນຈາກຄວາມພິການທີ່ເກີດຈາກອຸປະຕິເຫດ. ດັ່ງທີ່ຜູ້ລອດຊີວິດທີ່ເປັນເດັກບາງຄົນກ່າວວ່າ, *"ມັນບໍ່ແຕກຕ່າງກັນລະຫວ່າງກ່ອນ ແລະ ຫຼັງເກີດອຸປະຕິເຫດ ເພາະວ່າຂ້ອຍບໍ່ມີການບາດເຈັບທີ່ໃຫຍ່ຫຼວງ. ຂ້ອຍໄປໂຮງຮຽນທຸກໆມື້ ແລະ ຫຼິ້ນກັບໝູ່ເພື່ອນຂອງຂ້ອຍເປັນປົກກະຕິ."* ໃນທາງກົງກັນຂ້າມ, ທ້າວ ແກ້ວ ໄດ້ຮັບບາດເຈັບສາຫັດກວ່າ ເຊິ່ງມີອິດທິພົນຕໍ່ມິດຕະພາບຂອງລາວ: *"ຂ້ອຍໄປໂຮງຮຽນເປັນປົກກະຕິ, ຢູ່ໂຮງຮຽນທຸກຢ່າງກໍ່ຍັງປົກກະຕິດີ, ແຕ່ກ່ອນ ພວກເຮົາເປັນເພື່ອນທີ່ດີ ແລະ ໃຊ້ເວລາທີ່ດີຮ່ວມກັນ, ແຕ່ຫຼັງຈາກເກີດອຸປະຕິເຫດລະເບີດ ໝູ່ເພື່ອນຂອງຂ້ອຍມັກຢອກຂ້ອຍ ແລະ ເຮັດໃຫ້ຂ້ອຍຮູ້ສຶກບໍ່ສະບາຍໃຈ,*

*ຂ້ອຍບໍ່ມັກວິທີການທີ່ເຂົາເຈົ້າລໍ້ລຽນຂ້ອຍ."* ໃນກໍລະນີນີ້, ການຈຳແນກທີ່ຜູ້ລອດຊີວິດປະສົບ ໄດ້ນຳໄປສູ່ຄວາມຮູ້ສຶກທີ່ບໍ່ດີຕໍ່ມິດຕະພາບເຫຼົ່ານັ້ນ.

ໂດຍລວມແລ້ວ, ການກັບຄືນສູ່ສັງຄົມຊຸມຊົນຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກ ແມ່ນຂຶ້ນກັບການຕອບສະໜອງຂອງຊຸມຊົນ ວ່າໄດ້ຮັບການອຳນວຍຄວາມສະດວກ ຫຼື ອຸປະສັກ. ຖ້າສະມາຊິກຊຸມຊົນສະແດງຄວາມເອົາໃຈໃສ່ຕໍ່ສະຫວັດດີການຂອງຜູ້ລອດຊີວິດ, ການສະໜັບສະໜູນທາງສັງຄົມນີ້ ມັກຈະໄດ້ຮັບຜົນໃນທາງບວກຈາກຜູ້ລອດຊີວິດ. ສິ່ງທີ່ກົງກັນຂ້າມ ກໍ່ອາດເປັນຈິງໄດ້ເຊັ່ນກັນ; ເມື່ອຜູ້ລອດຊີວິດປະສົບກັບການຈຳແນກ ຫຼື ຮັບຮູ້ທັດສະນະຄະຕິທາງລົບ ແລະ ການຂາດການສະໜັບສະໜູນທາງສັງຄົມຈາກເພື່ອນມິດຂອງເຂົາເຈົ້າ, ເຂົາເຈົ້າຈະໄດ້ຮັບປະສົບການທາງລົບຫຼາຍຂຶ້ນ.

## ອຸປະຕິເຫດ ສົ່ງຜົນຕໍ່ຄວາມສາມາດໃນການຮຽນຮູ້ ແລະ ການຫຼິ້ນຂອງເດັກ

ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ໄດ້ເວົ້າເຖິງເລື້ອຍໆກ່ຽວກັບຜົນກະທົບຂອງອຸປະຕິເຫດທີ່ເກີດຂຶ້ນກັບເຂົາເຈົ້າ ທີ່ມີຕໍ່ຄວາມສາມາດໃນການເຮັດວຽກຂອງເຂົາເຈົ້າ ແລະ ຕໍ່ການເຮັດວຽກຄົວເຮືອນ ແລະ ກິດຈະກຳໃນຊຸມຊົນ. ກົງກັນຂ້າມ ຜູ້ລອດຊີວິດທີ່ເປັນເດັກສ່ວນຫຼາຍຈະເວົ້າເຖິງຜົນກະທົບຕໍ່ຄວາມສາມາດໃນການຮຽນຮູ້ ແລະ ການເຂົ້າສັງຄົມກັບໝູ່ເພື່ອນຂອງເຂົາເຈົ້າ. ເຖິງແມ່ນວ່າສ່ວນໃຫຍ່ (ແຕ່ບໍ່ແມ່ນໝົດທຸກຄົນ) ໄດ້ເວົ້າເຖິງການກັບຄືນໄປໂຮງຮຽນຫຼັງເກີດອຸປະຕິເຫດ, ແຕ່ຜູ້ລອດຊີວິດທີ່ເປັນເດັກຫຼາຍຄົນບອກວ່າ ຄວາມສາມາດໃນການຮຽນຮູ້ຂອງເຂົາເຈົ້າໄດ້ປ່ຽນແປງຍ້ອນອຸປະຕິເຫດ. ເຂົາເຈົ້າກ່າວເຖິງຄວາມຫຍຸ້ງຍາກໃນການຂຽນຍ້ອນຄວາມພິການທາງດ້ານຮ່າງກາຍ ແລະ ຄວາມຫຍຸ້ງຍາກໃນການຈື່ຈຳ ແລະ ຄວາມເຂົ້າໃຈຢ່າງໄວວາ ຍ້ອນຜົນກະທົບຈາກອຸປະຕິເຫດ ແລະ ບອກວ່າຄວາມຫຍຸ້ງຍາກເຫຼົ່ານີ້ມີອິດທິພົນຕໍ່ການຮຽນຂອງເຂົາເຈົ້າ. ທ້າວ ແກ້ວ ໄດ້ອະທິບາຍເຖິງການປ່ຽນແປງຂອງການຮຽນຮູ້ລະຫວ່າງກ່ອນ ແລະ ຫຼັງເກີດອຸປະຕິເຫດ, ລາວເວົ້າເຖິງທັດສະນະຂອງໝູ່ເພື່ອນກ່ຽວກັບຄວາມສາມາດໃນການຮຽນຂອງລາວ: *"ການຮຽນຂອງຂ້ອຍບໍ່ດີຄືເກົ່າ. ເບິ່ງຄືວ່າຂ້ອຍລືມງ່າຍຂຶ້ນ, ແລະ ຄິດອອກໄດ້ຊ້າລົງ. ກ່ອນໜ້ານີ້, ໝູ່ຂອງຂ້ອຍມັກຖາມຂ້ອຍກ່ຽວກັບບົດຮຽນ, ແຕ່ຕອນນີ້ ເຂົາເຈົ້າບໍ່ຄ່ອຍຈະຖາມຂ້ອຍເລີຍ."* ດ້ວຍວິທີນີ້, ຜູ້ລອດຊີວິດທີ່ເປັນເດັກຈຶ່ງມັກຮູ້ສຶກວ່າ ຄວາມສາມາດໃນການຮຽນຮູ້ຂອງເຂົາເຈົ້າມີການຫຼຸດລົງຍ້ອນອຸປະຕິເຫດ ແລະ ປະສົບກັບຄວາມຫຍຸ້ງຍາກຫຼາຍຂຶ້ນໃນການເຮັດວຽກບ້ານ ຫຼື ບົດຝຶກຫັດຂອງເຂົາເຈົ້າ.

ນອກຈາກປະສົບການຂອງເຂົາເຈົ້າກັບການປ່ຽນແປງຄວາມສາມາດໃນການຮຽນຮູ້ແລ້ວ, ຜູ້ລອດຊີວິດທີ່ເປັນເດັກຍັງໄດ້ເວົ້າກ່ຽວກັບຜົນກະທົບຕໍ່ຄວາມສາມາດໃນການຫຼິ້ນ ແລະ ການເຂົ້າສັງຄົມກັບຫມູ່ເພື່ອນຂອງເຂົາເຈົ້າ ຕື່ມອີກ. ເຖິງວ່າຈະມີຜູ້ລອດຊີວິດບາງຄົນທີ່ບໍ່ໄດ້ຮັບບາດເຈັບຮ້າຍແຮງ ເຊິ່ງເຂົາເຈົ້າສາມາດສືບຕໍ່ຫຼິ້ນໄດ້ຕາມປົກກະຕິ, ແຕ່ເດັກບາງຄົນກໍ່ບໍ່ສາມາດເຮັດໄດ້ຄືແນວນັ້ນ. ທ້າວ ບຸນມີ ກໍ່ໄດ້ເວົ້າເຖິງຄວາມສາມາດໃນການຫຼິ້ນຄືກັນກັບການຫຼິ້ນທີ່ເຂົາເຈົ້າເຄີຍເຮັດກ່ອນເກີດອຸປະຕິເຫດ ໂດຍເວົ້າວ່າ "ກ່ອນເກີດອຸປະຕິເຫດ, ຂ້ອຍສາມາດຫຼິ້ນເຕະບານ ແລະ ກິລາອື່ນໆໄດ້ຄືກັບຄົນທຳມະດາ, ແຕ່ຕອນນີ້ຂ້ອຍເຮັດບໍ່ໄດ້." ຈາກນັ້ນ ບຸນມີ ໄດ້ອະທິບາຍລະອຽດເຖິງຂໍ້ຈຳກັດຕ່າງໆໃນການເຂົ້າຮ່ວມການຫຼິ້ນ ຕື່ມອີກ.

> ມີບາງກິດຈະກຳບາງຢ່າງ ທີ່ຂ້ອຍບໍ່ສາມາດເຂົ້າຮ່ວມໄດ້ເນື່ອງຈາກຂໍ້ຈຳກັດທາງດ້ານຮ່າງກາຍຂອງຂ້ອຍ ເຊັ່ນ: ບັນຫາກ່ຽວກັບຂາທີ່ເຮັດໃຫ້ຂ້ອຍບໍ່ສາມາດຫຼິ້ນກິລາ ຫຼື ກິດຈະກຳບາງຢ່າງ ເຊັ່ນ: ບານເຕະ ແລະ ແລ່ນ. ແນວໃດກໍ່ຕາມ, ຂ້ອຍສາມາດຫຼິ້ນກິລາປະເພດອື່ນແທນເຊັ່ນ: ບານບ້ວງ.

ບຸນມີ ຍອມຮັບວ່າ ຍັງມີວິທີອື່ນໆທີ່ລາວຈະມີສ່ວນຮ່ວມ, ແຕ່ຂໍ້ຈຳກັດນີ້ ກໍຖືເປັນເລື່ອງທີ່ສຳຄັນສຳລັບຜູ້ລອດຊີວິດຄົນນີ້, ເນື່ອງຈາກໄດ້ຖືກກ່າວໄວ້ຢູ່ໃນຄຳຕອບຂອງເຂົາເຈົ້າ.

## ການສົນທະນາກ່ຽວກັບຄຳຖາມທີ 6

ອຸປະຕິເຫດຈາກ ລບຕ ມັກຈະເຮັດໃຫ້ຄວາມໝັ້ນຄົງຂອງເສດຖະກິດຄອບຄົວຫຼຸດລົງ. ຜູ້ລອດຊີວິດທີ່ມີຄວາມບົກຜ່ອງຊຳເຮື້ອມັກຈະປ່ຽນຈາກການໃຊ້ແຮງງານຫນັກໄປສູ່ວຽກເບົາ ເຊັ່ນ: ກະສິກຳຂະໜາດນ້ອຍ ຫຼື ວຽກງານທ້ອງຖິ່ນ, ສ້າງລາຍຮັບຕ່ຳ ແລະ ບໍ່ສະໝ່ຳສະເໝີ. ຄອບຄົວປັບຕົວໂດຍການແຈກຢາຍວຽກງານໃຫ້ກັບຄູ່ສົມລົດ, ໂດຍສະເພາະແມ່ນແມ່ຍິງ ຖືວ່າມີພາລະບົດບາດໃນການສ້າງລາຍຮັບຕົ້ນຕໍ. ໂດຍທົ່ວໄປແລ້ວ ບົດບາດເຫຼົ່ານີ້ເຮັດໃຫ້ລາຍຮັບບໍ່ສະໝ່ຳສະເໝີ ແລະ ຕ່ຳລົງ, ເຮັດໃຫ້ຄອບຄົວບໍ່ສາມາດບັນລຸມາດຕະຖານການດຳລົງຊີວິດດັ່ງທີ່ເຄີຍມີກ່ອນໜ້າການເກີດອຸບັດເຫດ.

ຮູບແບບການໃຊ້ຈ່າຍສະແດງໃຫ້ເຫັນວ່າ ອຸປະຕິເຫດສົ່ງຜົນຕໍ່ບູລິມະສິດຂອງຄົວເຮືອນ. ມີການຫັນປ່ຽນໄປສູ່ຄວາມຕ້ອງການທັນທີທັນໃດ ເຊັ່ນ: ອາຫານ, ທີ່ພັກອາໃສ ແລະ ການກະເສດ ເຊິ່ງມັກຈະແລກມາດ້ວຍການລົງທຶນໄລຍະຍາວ ເຊັ່ນ: ການສຶກສາ. ໂດຍທົ່ວໄປແລ້ວ ການເປັນເຈົ້າຂອງຊັບສິນຈະຈັດລຳດັບຄວາມສຳຄັນຂອງລາຍການທີ່ເປັນປະໂຫຍດ, ມີມູນຄ່າສູງ (ລົດຈັກ, ໂທລະສັບມືຖື, ສັດລ້ຽງ), ໃນຂະນະທີ່ສິ່ງຂອງທີ່ມີມູນຄ່າຕ່ຳພັດມີສັດສ່ວນຫຼຸດລົງ, ສະທ້ອນໃຫ້ເຫັນເຖິງຍຸດທະສາດການຮັບມືກັບບັນຫາທີ່ເປັນຮູບປະທຳ. ການແລກປ່ຽນເຫຼົ່ານີ້ ສະແດງໃຫ້ເຫັນເຖິງວິທີທີ່ຄົວເຮືອນປັບຕົວກັບການບາດເຈັບ ໂດຍການຕອບສະໜອງຄວາມຕ້ອງການອັນຮີບດ່ວນ ໂດຍບໍ່ຄຳນຶງເຖິງໂອກາດໃນອະນາຄົດ, ເຮັດໃຫ້ເກີດວົງຈອນຂອງຄວາມທຸກຍາກຢ່າງຕໍ່ເນື່ອງ ແລະ ການຫຼຸດລົງຂອງຊັບພະຍາກອນມະນຸດ.

ໜີ້ສິນເປັນຕົວຊີ້ວັດອີກອັນໜຶ່ງທີ່ບົ່ງບອກເຖິງຄວາມສ່ຽງ. ຫຼັງຈາກອຸປະຕິເຫດ, ລະດັບຫນີ້ສິນຂອງຄອບຄົວຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ແລະ ເດັກມີການເພີ່ມສູງຂຶ້ນ, ໂດຍຄອບຄົວຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ຕ້ອງແບກຮັບພາລະໜີ້ສິນຫຼາຍກວ່າເກົ່າ. ສຳລັບຫຼາຍໆຄົນ, ການກູ້ຢືມໄດ້ກາຍເປັນກົນໄກການແກ້ໄຂບັນຫາລາຍໄດ້ທີ່ຫຼຸດລົງ ແລະ ຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນ. ເຖິງວ່າບັນຫານີ້ຈະສະທ້ອນໃຫ້ເຫັນເຖິງຄວາມຕັ້ງໃຈຂອງຄົວເຮືອນທີ່ຈະແກ້ໄຂວິກິດທີ່ເກີດຂຶ້ນ, ແຕ່ມັນມີຄວາມສ່ຽງຫຼາຍຂຶ້ນຕໍ່ຄວາມບໍ່ຫມັ້ນຄົງທາງດ້ານການເງິນໃນໄລຍະຍາວ.

ໃນໄລຍະ 5 ປີຜ່ານມາ ເຊິ່ງເປັນໄລຍະທີ່ພວກເຮົາເອົາຂໍ້ມູນໃນໄລຍະນີ້ມາໃຊ້ສຳລັບບົດລາຍງານສະບັບນີ້ ສະແດງໃຫ້ເຫັນວ່າ ປະເທດລາວໄດ້ປະເຊີນໜ້າກັບສິ່ງທ້າທາຍ ແລະ ການປ່ຽນແປງຢ່າງຫຼວງຫຼາຍ ເຊິ່ງຊ່ວຍເຮັດໃຫ້ພວກເຮົາສາມາດວິເຄາະສະພາບການກ່ຽວກັບປະສົບການທາງເສດຖະກິດຂອງຜູ້ລອດຊີວິດ. ໃນລະຫວ່າງປີ 2020 ຫາ 2025, ປະເທດລາວໄດ້ປະເຊີນກັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ການເໜັງຕີງຂອງອັດຕາເງິນເຟີ້ ແລະ ຄວາມກ້າວໜ້າທີ່ສຳຄັນໃນການເຊື່ອມຕໍ່ດີຈີຕອລ, ທັງໝົດເຫຼົ່ານີ້ໄດ້ສົ່ງຜົນຕໍ່ສະພາບເສດຖະກິດຂອງຄົວເຮືອນ, ການເຂົ້າເຖິງການບໍລິການ ແລະ ໂອກາດໃນການເຂົ້າເຖິງທາງດ້ານການເງິນ. ການເຂົ້າໃຈປັດໄຈກ່ຽວກັບສະພາບການທີ່ກວ້າງຂຶ້ນເຫຼົ່ານີ້ ມີຄວາມສຳຄັນສຳລັບການຕີຄວາມຫມາຍຂອງຮູບແບບ ແລະ ແນວໂນ້ມທີ່ສັງເກດເຫັນໃນຂໍ້ມູນ. ຄວາມກົດດັນຈາກອັດຕາເງິນເຟີ້ເຮັດໃຫ້ສະພາບເສດຖະກິດສັບສົນຫຼາຍຂຶ້ນຕື່ມອີກ, ເຊິ່ງສ່ວນຫນຶ່ງແມ່ນຍ້ອນການເພີ່ມຂຶ້ນຂອງອັດຕາເງິນເຟີ້ຍ້ອນການຊຶອກການສະໜອງທົ່ວໂລກແລະຜົນກະທົບຂອງໂລກລະບາດຕໍ່ຕະຫຼາດພາຍໃນ. ໃນປີ 2022, ອັດຕາເງິນເຟີ້ທີ່ສູງຂຶ້ນເນື່ອງຈາກພາວະຊັອກທາງດ້ານການຈັດຊື້-ຈັດຫາ ແລະ ຍ້ອນຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ ທີ່ມີຕໍ່ການຕະຫຼາດພາຍໃນປະເທດ. ໃນປີ 2022, ອັດຕາເງິນເຟີ້ທີ່ສູງຂຶ້ນເຖິງ 22.95% ຈາກ 3.75% ໃນປີ 2021, ອັດຕາເງິນເຟີ້ທີ່ສູງຂຶ້ນສູງສຸດໃນປີ 2023 ຢູ່ທີ່ 31.23% ກ່ອນ

ທີ່ຈະຫຼຸດລົງເປັນ 23.13% ໃນປີ 2024.[49] ການຄາດຄະເນໃນເດືອນສິງຫາປີ 2025 ອັດຕາເງິນເຟີ້ໃນປະຈຸບັນຢູ່ທີ່ 5,0%.[50] ແນວໂນ້ມຫຼ້າສຸດເຫຼົ່ານີ້ ເຮັດໃຫ້ງົບປະມານຂອງຄົວເຮືອນມີຄວາມເຄັ່ງຕຶງ ແລະ ສົ່ງຜົນກະທົບຕໍ່ກຳລັງການຊື້ຂອງປະຊາກອນ. ໃນສະພາບການດັ່ງກ່າວ , ປະສົບການຂອງຜູ້ລອດຊີວິດຈາກສະພາບເສດຖະກິດທີ່ຊຸດໂຊມລົງ ອາດຈະສອດຄ່ອງກັບທ່າອ່ຽງທີ່ກວ້າງຂວາງ. ໃນຂະນະດຽວກັນ, ສະພາບແວດລ້ອມທາງເສດຖະກິດມະຫາພາກຍິ່ງເຮັດໃຫ້ວິກິດທາງດ້ານການເງິນ ຂອງຄອບຄົວຜູ້ເຄາະຮ້າຍປະສົບຄວາມຮຸນແຮງຫຼາຍຂຶ້ນ ແລະ ຍິ່ງເພີ່ມທະວີຫຼາຍຂຶ້ນ .

## ຂໍ້ສະເໜີແນະສຳລັບຄຳຖາມທີ 6

- **ປະເມີນຄວາມຕ້ອງການ ແລະ ຊ່ອງທາງທີ່ເປັນໄປໄດ້ ເພື່ອສະເໜີການຊ່ວຍເຫຼືອດ້ານການເງິນ ແລະ ການບັນເທົາໜີ້ສິນ ຢ່າງມີເປົ້າໝາຍ.** ບາງຄົວເຮືອນທີ່ໄດ້ຮັບຜົນກະທົບຈາກອຸປະຕິເຫດລະເບີດບໍ່ທັນແຕກ ອາດຈະມີໜີ້ສິນຫຼາຍຂຶ້ນຫຼັງຈາກເກີດອຸປະຕິເຫດ, ບໍ່ວ່າຈະກ່ຽວຂ້ອງກັບຄວາມສັບສົນກ່ຽວກັບຄ່າໃຊ້ຈ່າຍໃນການປິ່ນປົວທີ່ສາມາດຂໍການຊົດເຊີຍໄດ້, ການສູນເສຍລາຍໄດ້ ຫຼື ຄ່າໃຊ້ຈ່າຍອື່ນໆ. ໜີ້ສິນອາດເພີ່ມຄວາມສ່ຽງທາງເສດຖະກິດໃນໄລຍະຍາວ, ຂັດຂວາງຄວາມສາມາດຂອງຜູ້ລອດຊີວິດໃນການລົງທຶນໃນທາງເລືອກອື່ນໆສຳລັບການດຳລົງຊີວິດ ແລະ ເພີ່ມຄວາມສ່ຽງອື່ນໆ ເຊັ່ນ: ອາການແຊກຊ້ອນທາງການແພດເນື່ອງຈາກພາວະທາງໂພຊະນາການ ຫຼື ສຸຂະອະນາໄມທີ່ບໍ່ດີ ຫຼື ອຸປະຕິເຫດລະເບີດບໍ່ທັນແຕກທີ່ເກີດຈາກການເຮັດວຽກກະສິກຳ ຫຼື ການໄປຊອກຫາອາຫານ ຢູ່ໃນພື້ນທີ່ທີ່ມີຄວາມສ່ຽງສູງ.

- **ປະເມີນໂອກາດສຳລັບການດຳລົງຊີວິດ, ການຝຶກອົບຮົມ ແລະ ການພັດທະນາເສດຖະກິດ ທີ່ກົງກັບເປົ້າໝາຍ ແລະ ປັບປ່ຽນໃຫ້ເໝາະສົມຕາມຄວາມຈຳເປັນ.** ບັນດາຜູ້ລອດຊີວິດ ແລະ ເຈົ້າໜ້າທີ່ພາກລັດ (ເບິ່ງຄຳຖາມທີ 7, ຂ້າງລຸ່ມ) ໄດ້ເຫັນດີນຳກັນເຖິງຄວາມຈຳເປັນໃນການຊ່ວຍເຫຼືອ ເພື່ອຊ່ວຍຜູ້ລອດຊີວິດຈາກ ລບຕ ພັດທະນາທັກສະໃນການສ້າງລາຍໄດ້. ເຖິງຢ່າງໃດກໍ່ຕາມ, ຄວາມຕ້ອງການຂອງຜູ້ລອດຊີວິດແມ່ນມີຄວາມແຕກຕ່າງກັນ ແລະ ຈຳເປັນຕ້ອງປັບການຊ່ວຍເຫຼືອໃຫ້ເໝາະສົມກັບສະພາບການທ້ອງຖິ່ນ ແລະ ສະພາບຂອງຜູ້ລອດຊີວິດແຕ່ລະຄົນ. ເນື່ອງຈາກວິທີການແບບດຽວກັນອາດຈະບໍ່ໄດ້ຜົນສຳລັບທຸກຄົນ, ພາກສ່ວນກ່ຽວຂ້ອງຄວນຊອກຫາວິທີການຕ່າງໆເພື່ອເຊື່ອມໂຍງຜູ້ລອດຊີວິດກັບການສະໜັບສະໜູນ. ການໃຫ້ຊ່ວຍເຫຼືອນີ້ ອາດປະກອບມີທຶນການສຶກສາເພື່ອເດີນທາງໄປຮ່ວມໂຄງການການຝຶກອົບຮົມ, ໂຄງການຝຶກອົບຮົມແບບ "ເຄື່ອນທີ່" ທີ່ຈັດຂຶ້ນຢູ່ໃນແຂວງ ຫຼື ສະຖານທີ່ຕ່າງໆ ແບບໝູນວຽນ ຫຼື ການຝຶກອົບຮົມແບບສ່ວນບຸກຄົນໃນພາກພື້ນດຽວກັນ. ການພັດທະນາ "ບັນຊີລາຍການ" ທາງເລືອກໃນການເຂົ້າເຖິງການສະໜັບສະໜູນປະເພດຕ່າງໆ ສາມາດຊ່ວຍໃຫ້ຜູ້ມີສ່ວນຮ່ວມກຳນົດໂອກາດ, ວິທີການທົດລອງ ແລະ ສ້າງສິ່ງທີ່ເໝາະສົມກັບຄວາມຕ້ອງການທີ່ແຕກຕ່າງກັນໃນສະພາບການທີ່ແຕກຕ່າງກັນ.

- **ພິຈາລະນາເສັ້ນທາງເພື່ອເຊື່ອມໂຍງຜູ້ລອດຊີວິດ ຫຼື ໃຫ້ສິດພິເສດໃນການເຂົ້າເຖິງໂຄງການທີ່ມີຢູ່ແລ້ວ.** ເຈົ້າໜ້າທີ່ພາກລັດ ໄດ້ຕັ້ງຂໍ້ສັງເກດວ່າ ບາງໂຄງການ ພັດທະນາຊີວິດການເປັນຢູ່ ແລະ ເສດຖະກິດ ແນໃສ່ເປົ້າໝາຍຄອບຄົວທີ່ທຸກຍາກ ແຕ່ບໍ່ຈຳເປັນຕ້ອງເລັ່ງເປົ້າໃສ່ມີຜູ້ລອດຊີວິດຈາກ ລບຕ. ເນື່ອງຈາກຜູ້ລອດຊີວິດຈາກ ລບຕ ບໍ່ແມ່ນກຸ່ມປະຊາກອນກຸ່ມດຽວ ແຕ່ເປັນກຸ່ມປະຊາກອນນ້ອຍໆທີ່ຢູ່ກະແຈກກະຈາຍຢູ່ຕາມພູມສັນຖານຕ່າງໆ ແລະ ມີຄວາມຕ້ອງການທີ່ຫຼາກຫຼາຍ ໃນໄລຍະເວລາທີ່ແຕກຕ່າງກັນ, ສະນັ້ນ ມັນບໍ່ໜ້າຈະເປັນໄປໄດ້ວ່າ ວິທີການ ຫຼື ແຜນງານດຽວກັນ ຈະສາມາດກຳນົດເປົ້າໝາຍຜູ້ລອດຊີວິດຈຳນວນ

---

[49] ທະນາຄານໂລກ, ອັດຕາເງິນເຟີ້, ລາຄາຜູ້ບໍລິໂພກສຳລັບສາທາລະນະລັດປະຊາທິປະໄຕປະຊາຊົນລາວ [FPCPITOTLZGLAO], ຄົ້ນຂໍ້ມູນມາຈາກ FRED, Federal Reserve Bank of St. https://fred.stlouisfed.org/series/FPCPITOTLZGLAO?

[50] ເສດຖະສາດການຄ້າ, n.d. ອັດຕາເງິນເຟີ້ຂອງລາວ. https://tradingeconomics.com/laos/inflation-cpi

**ຄຳຖາມບົດຄົ້ນຄວ້າ ທີ 6:**

ຫຼວງຫຼາຍໄດ້ຢ່າງມີປະສິດທິພາບດ້ວຍການເຝິກອົບຮົມ ຫຼື ການສະໜັບສະໜູນໃນເວລາດຽວກັນ. ດັ່ງນັ້ນ, ມັນອາດຈະມີປະສິດທິພາບຫຼາຍຂຶ້ນ ຖ້າຮັບປະກັນວ່າຜູ້ລອດຊີວິດຈາກ ລບຕ ມີຄວາມເຊື່ອມໂຍງທີ່ດີກັບໂຄງການທີ່ມີຢູ່ແລ້ວ ເຊັ່ນ ອາດມີການເພີ່ມເກນການຄັດເລືອກກຸ່ມເປົ້າໝາຍທີ່ຄວບຄຸມຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ຫຼື ຜູ້ທີ່ສູນເສຍສະມາຊິກໃນຄອບຄົວ ເຂົ້າໃນເງື່ອນໄຂການກຳນົດເປົ້າໝາຍ (ຕົວຢ່າງ , ນອກຈາກຄວາມທຸກຍາກ).

## ຄຳຖາມບົດຄົ້ນຄ້ວາ ທີ7:

ຍຸດທະສາດຂອງອຳນາດການປົກຄອງທ້ອງຖິ່ນໃນການສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ມີຫຍັງແດ່?

# 7. ຍຸດທະສາດຂອງອຳນາດການປົກຄອງທ້ອງຖິ່ນໃນການສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ມີຫຍັງແດ່?

ໃນພາກນີ້ຂອງບົດລາຍງານ ໄດ້ສັງລວມປະສົບການຂອງຜູ້ລອດຊີວິດ ແລະ ທັດສະນະຂອງເຈົ້າໜ້າທີ່ພາກລັດໃນຂັ້ນທ້ອງຖິ່ນ ຢູ່ໃນຂັ້ນບ້ານ, ເມືອງ ແລະ ແຂວງ. ຜົນການສຶກສາຄົ້ນຄ້ວາ ໄດ້ຢືນຢັນບົດບາດທີ່ສຳຄັນ ແລະ ການມີສ່ວນຮ່ວມຂອງອຳນາດການປົກຄອງບ້ານ ທີ່ເຮັດໜ້າທີ່ເປັນຜູ້ປະສານງານທີ່ສຳຄັນສຳລັບການຕອບສະໜອງຊ່ວຍເຫຼືອໃນທັນທີ, ການບໍລິຈາກຂອງຊຸມຊົນ ແລະ ການສົ່ງຕໍ່ໄປຫາການຊ່ວຍເຫຼືອຢູ່ພາຍນອກ. ເຖິງຢ່າງໃດກໍ່ຕາມ, ການວິເຄາະຍັງເປີດເຜີຍວ່າ ການສະໜັບສະໜູນແມ່ນມີລັກສະນະສະເພາະ ທີ່ອີງໃສ່ການຕັດສິນໃຈຈາກສູນກາງ ແລະ ບໍ່ສອດຄ່ອງກັບປັດໃຈຕ່າງໆ ເຊັ່ນ: ງົບປະມານຂອງລັດຖະບານໃນທ້ອງຖິ່ນ, ການມີໂຄງການຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານທີ່ເຄື່ອນໄຫວຢູ່ໃນພື້ນທີ່ ແລະ ການຕັດສິນໃຈຈາກຂັ້ນສູນກາງ ເຊິ່ງສິ່ງຜົນເຮັດໃຫ້ມີການປ່ຽນແປງຕ່າງໆ.

## ຜົນໄດ້ຮັບຈາກຄຳຖາມທີ 7

### ຜູ້ລອດຊີວິດເວົ້າວ່າ ອຳນາດການປົກຄອງບ້ານມີບົດບາດສຳຄັນໃນການປະສານງານສຳລັບການຊ່ວຍເຫຼືອ.

ອຳນາດການປົກຄອງບ້ານ ມີບົດບາດສຳຄັນໃນການເຂົ້າເຖິງການດູແລທາງການແພດ ແລະ ການຊ່ວຍເຫຼືອດ້ານການເງິນ ໃຫ້ແກ່ຜູ້ລອດຊີວິດ. ຕົວຢ່າງ, ຜູ້ລອດຊີວິດຫຼາຍຄົນລາຍງານວ່າ ໄດ້ຮັບເງິນບໍລິຈາກທີ່ລະດົມມາຈາກຊຸມຊົນໂດຍນາຍບ້ານ. ທ້າວ ຄຳດີ ໄດ້ຍົກໃຫ້ເຫັນຂະບວນການນີ້ໃນຖ້ອຍຄຳຕໍ່ໄປນີ້: *"ຊຸມຊົນກໍ່ໃຫ້ການສະໜັບສະໜູນຂ້ອຍ ຄືກັນ. ອຳນາດການປົກຄອງບ້ານໄດ້ເກັບເງິນບໍລິຈາກ* 10.000 *ກີບຕໍ່ຄອບຄົວ ເພື່ອຊ່ວຍບັນເທົາທຸກ, ແຕ່ຂ້ອຍຍັງບໍ່ຮູ້ວ່າຄອບຄົວຂອງຂ້ອຍໄດ້ຮັບຈາກຊາວບ້ານທັງໝົດເທົ່າໃດ ເພາະຕອນນັ້ນຂ້ອຍເຈັບຫຼາຍ."* ນອກຈາກນັ້ນ, ອຳນາດການປົກຄອງບ້ານໄດ້ປະສານງານ ເພື່ອໃຫ້ຜູ້ລອດຊີວິດສາມາດເຂົ້າເຖິງລະບົບການຊ່ວຍເຫຼືອ. ທ້າວ ຄຳດີ ກ່າວຕໍ່ໄປວ່າ *"ພາຍຫຼັງເກີດອຸປະຕິເຫດລະເບີດ, ອຳນາດການປົກຄອງບ້ານ ໄດ້ຊ່ວຍປະສານສົມທົບກັບໂຄງການເພື່ອຮັບເອົາການຊ່ວຍເຫຼືອ."* ໃນຄວາມເປັນຈິງ, ຜູ້ລອດຊີວິດໄດ້ແນະນຳໃຫ້ຜູ້ລອດຊີວິດຄົນອື່ນໆ ໃຫ້ເວົ້າກັບອຳນາດການປົກຄອງບ້ານເພື່ອຮັບປະກັນການເຂົ້າເຖິງການຊ່ວຍເຫຼືອ. ດັ່ງທີ່ຜູ້ລອດຊີວິດຄົນໜຶ່ງໄດ້ເວົ້າວ່າ, *"ຂ້ອຍຈະແນະນຳເຂົາເຈົ້າໃຫ້ໄປຫາອົງການເກັບກູ້ລະເບີດ ຫຼື ໂຄງການ ລບຕ ເພື່ອຂໍຄວາມຊ່ວຍເຫຼືອ, ເຂົາເຈົ້າຈະປະສານງານການຊ່ວຍເຫຼືອໃຫ້ແກ່ເຈົ້າ."* ສະຫຼຸບແລ້ວ, ໃນຫຼາຍກໍລະນີ ອຳນາດການປົກຄອງບ້ານເຮັດໜ້າທີ່ເປັນຜູ້ປະສານງານໃນລະບົບ, ເຊື່ອມຕໍ່ຜູ້ລອດຊີວິດໄປຫາການຊ່ວຍເຫຼືອ ແລະ ໂດຍການເຮັດແນວນັ້ນ ໄດ້ອຳນວຍຄວາມສະດວກໃນການຟື້ນຟູຄົນເຈັບໃນຊຸມຊົນຂອງເຂົາເຈົ້າ.

### ການລາຍງານຂອງເຈົ້າໜ້າທີ່ພາກລັດທີ່ສອດຄ່ອງກັບການບອກເລົ່າຂອງຜູ້ລອດຊີວິດ ທີ່ເນັ້ນໃຫ້ເຫັນເຖິງການຕັດສິນໃຈຈາກສູນກາງ

ເຈົ້າໜ້າທີ່ພາກລັດໃນຂັ້ນທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ກໍໄດ້ໃຫ້ສຳພາດກ່ຽວກັບການຊ່ວຍເຫຼືອ ຜູ້ລອດຊີວິດຈາກອຸປະຕິເຫດ ລບຕ.

ຜູ້ຕອບຄຳຖາມຈາກພາກລັດ ຍັງໄດ້ເນັ້ນໜັກເຖິງບົດບາດຂອງຜູ້ນຳໃນຂັ້ນບ້ານ ໃນການຊ່ວຍເຫຼືອຜູ້ລອດຊີວິດຕື່ມຂໍ້ມູນໃສ່ເອກະສານທີ່ຈຳເປັນ ແລະ ເຮັດໜ້າທີ່ເປັນຜູ້ປະສານງານ ຫຼື ຜູ້ອຳນວຍຄວາມສະດວກໃນການຊ່ວຍເຫຼືອ, ເຊິ່ງສະທ້ອນໃຫ້ເຫັນຢູ່ໃນປະສົບການຂອງຜູ້ລອດຊີວິດທີ່ໄດ້ກ່າວມາຂ້າງເທິງ. ນອກຈາກນັ້ນ, ສ່ວນໃຫຍ່ໄດ້ກ່າວເຖິງບົດບາດສຳຄັນຂອງເຂົາເຈົ້າໃນການລາຍງານອຸປະຕິເຫດ ອີກດ້ວຍ.

ເຖິງຢ່າງໃດກໍ່ຕາມ, ປະເດັນທີ່ສຳຄັນທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ໃນການລາຍງານຂອງເຈົ້າໜ້າທີ່ພາກລັດແມ່ນວ່າ ເຂົາເຈົ້າສົ່ງຕໍ່ໄປຫາຂັ້ນເທິງເພື່ອຕັດສິນໃຈກ່ຽວກັບການສະໜັບສະໜູນ ແລະ ການຊ່ວຍເຫຼືອ. ຜູ້ນຳໃນຂັ້ນບ້ານ ລາຍງານໃຫ້ຂັ້ນເມືອງເພື່ອຊີ້ນຳ; ເຈົ້າໜ້າທີ່ຂັ້ນເມືອງລາຍງານໃຫ້ເຈົ້າໜ້າທີ່ຂັ້ນແຂວງເພື່ອຕິດຕາມ ຊີ້ນຳ ແລະ ເຈົ້າໜ້າທີ່ແຂວງລາຍງານວ່າເຂົາເຈົ້າສົ່ງຕໍ່ໄປຫາຂັ້ນສູນກາງ. ຕົວຢ່າງ ເຈົ້າໜ້າທີ່ແຂວງ ທ່ານໜຶ່ງ ໄດ້ລາຍງານວ່າ: "ປົກກະຕິ ເມື່ອເກີດອຸປະຕິເຫດ ຂ້ອຍແນະນຳໃຫ້ເມືອງ ກະກຽມ ທັງບົດລາຍງານອຸປະຕິເຫດ ແລະ ໜັງສືສະເໜີຂໍຄວາມຊ່ວຍເຫຼືອ ໄປພ້ອມໆກັນ ແລ້ວນຳໄປສົ່ງໃຫ້ແຂວງ. ຂ້າພະເຈົ້າບໍ່ມີລາຍຊື່ອົງການຈັດຕັ້ງທີ່ຈະຊ່ວຍໃຫ້ເຂົາເຈົ້າໄປຊອກຫາການສະໜັບສະໜູນ. ຂ້າພະເຈົ້າພຽງແຕ່ລາຍງານໂດຍກົງກັບສູນກາງ." ເຈົ້າໜ້າທີ່ຈຳນວນໜ້ອຍໜຶ່ງກ່າວວ່າ ສາມາດຕິດຕໍ່ກັບອົງການຈັດຕັ້ງໃດໜຶ່ງ ຫຼື ຂະແໜງການສາທາລະນະສຸກ, ແຕ່ສັງເກດເຫັນວ່າ ຄຳຕອບຂອງເຈົ້າໜ້າທີ່ພາກລັດແຕ່ລະຄົນກ່ຽວກັບວິທີທີ່ເຂົາເຈົ້າສະໜອງການຊ່ວຍເຫຼືອ ໄດ້ກ່າວວ່າການຕັດສິນໃຈກ່ຽວກັບການຊ່ວຍເຫຼືອ ຕ້ອງແມ່ນຂັ້ນສູງກວ່າເປັນຜູ້ຕັດສິນ, ຕົວຢ່າງ, ເຈົ້າໜ້າທີ່ຂັ້ນເມືອງ ໄດ້ອະທິບາຍວ່າ:

> ພວກເຮົາມີສະຖານທີ່ປິ່ນປົວ ເພື່ອຊ່ວຍເຂົາເຈົ້າໄດ້ຮັບການປິ່ນປົວຢູ່ຂັ້ນເມືອງ. ຖ້າຂ້າພະເຈົ້າພົບກັບຜູ້ນຳຊຸມຊົນຄົນອື່ນທີ່ຕ້ອງການຊ່ວຍເຫຼືອຜູ້ລອດຊີວິດ ລບຕ ໃນຊຸມຊົນຂອງເຂົາເຈົ້າ. ຂ້າພະເຈົ້າຈະແນະນຳໃຫ້ເຂົາເຈົ້າກະກຽມເອກະສານເພື່ອຢັ້ງຢືນອຸປະຕິເຫດ ແລະ ຮັກສາໃບຮັບເງິນການປິ່ນປົວ ເພື່ອຂໍຮັບການຊົດເຊີຍຄືນຈາກ ສະຖາບັນວິໄຈ ແລະ ຝຶກອົບຮົມ JSI, Inc [ຜ່ານກອງທຶນຊ່ວຍເຫຼືອຄ່າປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ]. ກ່ຽວກັບການໃຫ້ການຊ່ວຍເຫຼືອປະເພດອື່ນນັ້ນ, ຂ້າພະເຈົ້າບໍ່ຮູ້ວ່າມີຢູ່ ຫຼື ບໍ່, ແຕ່ຂ້າພະເຈົ້າຈະແນະນຳໃຫ້ສົ່ງໃບຄຳຮ້ອງໄປຫາເມືອງ, ຈາກນັ້ນຂ້າພະເຈົ້າຈະຊ່ວຍສົ່ງໃບຄຳຮ້ອງດັ່ງກ່າວໄປໃຫ້ ຄຊກລ ຢູ່ສູນກາງພິຈາລະນາ ຖ້າເຂົາເຈົ້າມີແຫຼ່ງຊ່ວຍເຫຼືອ. ຢ່າງໃດກໍຕາມ, ໃນໄລຍະຜ່ານມາຂ້ອຍບໍ່ໄດ້ເຄີຍເຫັນເລີຍ.

ພະນັກງານລັດ ຍັງໄດ້ຖືກຖາມເຖິງການສະໜັບສະໜູນທີ່ມີໃຫ້ແກ່ຜູ້ລອດຊີວິດ ບໍ່ວ່າຈະມາຈາກລັດຖະບານ ຫຼືຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ. ໃນແງ່ຂອງການຊ່ວຍເຫຼືອຜູ້ລອດຊີວິດໂດຍລັດຖະບານ, ຄຳຕອບແມ່ນແຕກຕ່າງກັນ. ເຈົ້າໜ້າທີ່ບາງຄົນລາຍງານວ່າ ເຂົາເຈົ້າບໍ່ມີງົບປະມານທີ່ຈະໃຫ້ການສະໜັບສະໜູນຜູ້ລອດຊີວິດ, ບາງຄົນເວົ້າວ່າ "ບາງຄັ້ງ" ຫຼື "ຖ້າຫາກພວກເຮົາມີງົບປະມານ" ເຂົາເຈົ້າກໍຈະໃຫ້ການສະໜັບສະໜູນດ້ານການເງິນ. ໃນກໍລະນີທີ່ຊັບພະຍາກອນຂາດແຄນ, ເຈົ້າໜ້າທີ່ເວົ້າວ່າ ເຂົາເຈົ້າໄປຢ້ຽມຢາມ ແລະ ໃຫ້ກຳລັງໃຈແກ່ຜູ້ລອດຊີວິດ; ດັ່ງທີ່ຈະໄດ້ສົນທະນາໃນພາກຕໍ່ໄປ, ເລື່ອງເລົ່າຂອງຜູ້ລອດຊີວິດຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການໄປຢ້ຽມຢາມ ແລະ ການຊຸກຍູ້ໃຫ້ກຳລັງໃຈຜູ້ລອດຊີວິດ. ຕົວຢ່າງ, ເຈົ້າໜ້າທີ່ຄົນໜຶ່ງໄດ້ບອກວ່າ ສຳລັບພາກລັດ, ພວກເຮົາຈະໄປຢ້ຽມຢາມທຸກກໍລະນີ ແລະ ບາງຄັ້ງຖ້າພວກເຮົາມີງົບປະມານ, ພວກເຮົາຈະມີເຂົ້າ ແລະ ເຄື່ອງນຸ່ງຫົ່ມ ຫຼື ເງິນຈຳນວນໜຶ່ງ ເພື່ອມອບໃຫ້ຄອບຄົວຜູ້ລອດຊີວິດ. ເຈົ້າໜ້າທີ່ບາງຄົນກ່າວເຖິງບາງໜ່ວຍງານທີ່ອາດຈະໃຫ້ການສະໜັບສະໜູນ, ຕົວຢ່າງ: ສະຫະພັນແມ່ຍິງລາວ ແລະ ອີກອົງການໜຶ່ງທີ່ເຂົາເຈົ້າອ້າງເຖິງແມ່ນໂຄງການ SwissContact ທີ່ປະຕິບັດໂດຍຮ່ວມມືກັບລັດຖະບານ ເພື່ອສະໜອງການຝຶກອົບຮົມວິຊາຊີບ, ເຖິງວ່າໂຄງການນີ້ຈະບໍ່ໄດ້ເຈາະຈົງເປົ້າໝາຍໃສ່ຜູ້ລອດຊີວິດຈາກ ລບຕ ແຕ່ເນັ້ນໃສ່ຄອບຄົວທຸກຍາກກໍ່ຕາມ.

ສຳລັບການສະໜັບສະໜູນຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ປະມານເຄິ່ງໜຶ່ງຂອງເຈົ້າໜ້າທີ່ພາກລັດ ໄດ້ລາຍງານການສະໜັບສະໜູນຫຼາຍປະເພດຈາກຫຼາຍຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອີກເຄິ່ງໜຶ່ງລາຍງານວ່າການສະໜັບສະໜູນຈາກ ຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ມີພຽງແຕ່ກອງທຶນການປິ່ນປົວ ເທົ່ານັ້ນ.[51] ຜູ້ທີ່ຮູ້ກ່ຽວກັບຫຼາຍແຫຼ່ງຂອງການສະໜັບສະໜູນໄດ້ກ່າວເຖິງ ສະມາຄົມຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດ (ການລັງງສັດ), ອົງການ Terra Renaissance (ການລ້ຽງເຜີ້ງ), ອົງການ COPE (ຂາທຽມ), ໂຄງການ ໂອກາດ ຂອງ USAID (ການລ້ຽງສັດ, ການສະໜັບສະໜູນທາງດ້ານການເງິນ, ການຟື້ນຟູໜ້າທີ່ການ),[52] ແລະ ກຸ່ມທີ່ເຮັດກ່ຽວເກັບກູ້ລະເບີດ (ການຂົນສົ່ງໄປໂຮງໝໍ ແລະ ອາຫານຢູ່ໂຮງໝໍ).

ໃນຫຼາຍໆຫົວຂໍ້, ລວມທັງການສະໜັບສະໜູນຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ການສະໜັບສະໜູນຈາກລັດຖະບານ ແລະ ບົດບາດຂອງລັດຖະບານ, ຄຳຕອບຂອງຜູ້ຕອບຄຳຖາມ ໄດ້ວາດພາບກ່ຽວກັບການສະໜອງການສະໜັບສະໜູນທີ່ບໍ່ສອດຄ່ອງກັນ ແລະ ມີການປ່ຽນແປງ ໂດຍອີງໃສ່ປັດໃຈຕ່າງໆເຊັ່ນ: ສະຖານທີ່ຕັ້ງພູມສັນຖານ, ເຊິ່ງໂຄງການຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານດຳເນີນການຢູ່ໃນພື້ນທີ່ໃດໜຶ່ງ ແລະ ໃນເວລາໃດໜຶ່ງ, ງົບປະມານຂອງລັດຖະບານ ແລະ ການຕັດສິນໃຈຂອງເຈົ້າໜ້າທີ່ໃນລະດັບສູງກວ່າ.

## ການສົນທະນາກ່ຽວກັບຄຳຖາມທີ 7

ໃນເອກສານ ເສັ້ນທາງສູ່ຄວາມປອດໄພ III ກຳນົດເປົ້າໝາຍນະໂຍບາຍເພື່ອຮັບປະກັນຜູ້ລອດຊີວິດຈາກ ລບຕ ທັງໝົດໄດ້ຮັບການສະໜັບສະໜູນເປັນຢ່າງດີ, ໂດຍມີເປົ້າໝາຍຍ່ອຍ ພາຍໃຕ້ເປົ້າໝາຍນີ້ທີ່ກວມເອົາການບໍລິການທີ່ກວ້າງຂວາງ, ລວມທັງການຕອບສະໜອງການຊ່ວຍເຫຼືອໃນທັນທີທັນໃດ (ຈຸດປະສົງຍ່ອຍທີ 3.1); ການດູແລທາງການແພດ, ການຟື້ນຟູທາງດ້ານຮ່າງກາຍ ແລະ ການດູແລທາງດ້ານຈິດໃຈ - ສັງຄົມ (ຈຸດປະສົງຍ່ອຍທີ 3.2); ແລະ ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ໂອກາດການຈ້າງງານສຳລັບຜູ້ລອດຊີວິດ ແລະ ຄອບຄົວຂອງຜູ້ເຄາະຮ້າຍ (ຈຸດປະສົງຍ່ອຍທີ 3.3). ເປົ້າໝາຍທີ່ວາງຄາດໝາຍສູງ ເຫຼົ່ານີ້ ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນທີ່ໜ້າຊົມເຊີຍ ແລະ ເຂັ້ມແຂງ ຂອງລັດຖະບານໃນການສະໜັບສະໜູນຜູ້ລອດຊີວິດ ແລະ ຄອບຄົວຂອງຜູ້ເຄາະຮ້າຍ; ແນວໃດກໍ່ຕາມ ຄວາມມຸ່ງໝັ້ນ ແລະ ການວາງຄາດໝາຍທີ່ສູງເຫຼົ່ານີ້ ອາດຈະບໍ່ສອດຄ່ອງກັບຊັບພະຍາກອນທີ່ຈຳເປັນເພື່ອໃຫ້ສາມາດບັນລຸວິໄສທັດຂອງ ເສັ້ນທາງສູ່ຄວາມປອດໄພ III ຢ່າງສົມບູນ. ດັ່ງທີ່ເອກະສານດັ່ງກ່າວໄດ້ສະແດງໃຫ້ເຫັນໃນແຜນການທີ່ຜ່ານມາ, "ງົບປະມານ, ບຸກຄະລາກອນ, ພາຫະນະ, ອຸປະກອນ ແລະ ການພັດທະນາເຕັກໂນໂລຊີເພື່ອແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ຍັງມີຄວາມຈຳກັດ ແລະ ມີຄວາມຫຍຸ້ງຍາກ."[53] ເຊັ່ນດຽວກັນ, ແຜນການດັ່ງກ່າວໄດ້ຊີ້ໃຫ້ເຫັນເຖິງຄວາມຕ້ອງການໃນການຊ່ວຍເຫຼືອດ້ານການເງິນຈາກຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນໃນໄລຍະຈັດຕັ້ງປະຕິບັດແຜນການປະຈຸບັນ. ບົດລາຍງານຈາກການປຶກສາຫາລືກັນໃນລະດັບຊາດວ່າດ້ວຍການຊ່ວຍເຫຼືອຜູ້ເຄາະຮ້າຍ

---

[51] ກອງທຶນປິ່ນປົວຂອງສະຫະລັດອາເມລິກາ ສຳລັບ ຜູ້ເຄາະຮ້າຍ ຈາກ ລບຕ ທີ່ໄດ້ຮັບທຶນຈາກກະຊວງການຕ່າງປະເທດສະຫະລັດ ແລະ ບໍລິຫານໂດຍ JSI ໃນລາວ. ກະລຸນາ ຮູ້ໄວ້ວ່າໃນຂະນະທີ່ JSI ຄຸ້ມຄອງກອງທຶນ, ແຕ່ຜູ້ຕອບຄຳຖາມບາງຄົນທີ່ລາຍງານການສະໜັບສະໜູນນີ້ ບໍ່ສາມາດຈື່ໄດ້ວ່າມັນແມ່ນ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ໃດແທ້.

[52] ໂຄງການນີ້ໄດ້ສິ້ນສຸດລົງໃນຕົ້ນເດືອນກຸມພາ 2025.

[53] ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) (2021) ເສັ້ນທາງສູ່ຄວາມປອດໄພ III, ໜ້າ 12

ຂອງສູນປະຕິບັດການລະເບີດຂອງພາກພື້ນອາຊຽນຍັງໄດ້ສັງເກດເຫັນສິ່ງທ້າທາຍຈຳນວນຫນຶ່ງຂອງປະເທດທີ່ກຳລັງປະເຊີນກັບການສະແຫວງຫາການບໍລິການຊ່ວຍເຫຼືອຜູ້ເຄາະຮ້າຍທີ່ສົມບູນແບບ, ລວມທັງ "ທຶນ ແລະ ຊັບພະຍາກອນທີ່ຈຳກັດ; "ຄວາມສາມາດທີ່ຈຳກັດຂອງພະນັກງານ ແລະ ຜູ້ໃຫ້ບໍລິການ, ໂດຍສະເພາະໃນຂົງເຂດພິເສດເຊັ່ນ: ການຟື້ນຟູ, ການສະໜັບສະໜູນທາງດ້ານຈິດໃຈ ແລະ ການສຶກສາຮຽນຮ່ວມ;" "ຂາດຄວາມຮັບຮູ້ກ່ຽວກັບການບໍລິການຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ຂະບວນການສະເໜີຮັບການບໍລິການ; ແລະ "ຊ່ອງຫວ່າງໃນການສະໜອງການສະໜັບສະໜູນຮອບດ້ານ, ໂດຍສະເພາະແມ່ນການຝຶກອົບຮົມວິຊາຊີບ, ການຟື້ນຟູເສດຖະກິດ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ."[54] ເມື່ອພິຈາລະນາເຖິງຄວາມເປັນຈິງຂອງຊັບພະຍາກອນທີ່ຈຳກັດ, ການປັບປຸງການຊ່ວຍເຫລືອຜູ້ລອດຊີວິດ ຈຳເປັນຕ້ອງໄດ້ຄົ້ນຫາ ຈຸດທີ່ເປັນກາງ ລະຫວ່າງຄວາມປາຖະຫນາ ແລະ ຄວາມເປັນໄປໄດ້ ແລະ ຕ້ອງມີການຕັດສິນໃຈທີ່ທ້າທາຍ ກ່ຽວກັບການຈັດສັນຊັບພະຍາກອນທີ່ຂາດແຄນຢ່າງເໝາະສົມທີ່ສຸດ.

ອຳນາດການປົກຄອງຂັ້ນແຂວງ, ເມືອງ ແລະ ທ້ອງຖິ່ນ ມີບົດບາດສຳຄັນໃນການປະສານງານສຳລັບການສະໜັບສະໜູນຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກ ແລະ ຄອບຄົວຂອງເຂົາເຈົ້າ ເຊິ່ງເປັນຈຸດທີ່ໄດ້ຮັບຮູ້ ຈາກຜູ້ໃຫ້ສຳພາດທີ່ມາຈາກພາກລັດເອງ ແລະ ຜູ້ລອດຊີວິດ. ໃນຖານະທີ່ເປັນອຳນາດການປົກຄອງທີ່ໃກ້ຊິດກັບຜູ້ລອດຊີວິດ, ຄວາມຕ້ອງການຂອງຜູ້ລອດຊີວິດ ແລະ ການບໍລິການ ແລະ ການຊ່ວຍເຫຼືອທີ່ມີຢູ່, ພາກສ່ວນກ່ຽວຂ້ອງເຫຼົ່ານີ້ ຈຶ່ງຕ້ອງເປັນຈຸດສຳຄັນໃນການຊ່ວຍເຫຼືອຜູ້ເຄາະຮ້າຍ ຢ່າງມີປະສິດທິພາບ, ມີການປະສານງານສອດຄ່ອງ ແລະ ມີຄວາມເໝາະສົມ.

## ຂໍ້ສະເໜີແນະສຳລັບຄຳຖາມທີ 7

- **ສ້າງຄວາມເຂັ້ມແຂງດ້ານການປະສານງານ ແລະ ການເຊື່ອມໂຍງໃນທ້ອງຖິ່ນ:** ມີໂອກາດທີ່ຈະໜູນໃຊ້ຜູ້ມີບົດບາດໃນຂັ້ນຊຸມຊົນເຊັ່ນ: ຄະນະກຳມະການຂັ້ນບ້ານ ເປັນຈຸດສິ່ງຕໍ່ທີ່ມີປະສິດທິຜົນ ແລະ ເປັນຕົວເຊື່ອມໂຍງພາຍໃນເຄືອຂ່າຍສະໜັບສະໜູນທີ່ກວ້າງຂວາງ. ແນວໃດກໍຕາມ, ເຈົ້າໜ້າທີ່ໃນຂັ້ນທ້ອງຖິ່ນໄດ້ລາຍງານວ່າ, ເຂົາເຈົ້າໄດ້ເລື່ອນເວລາການປະສານງານ ແລະ ການສະໜັບສະໜູນໄປຍັງໜ່ວຍງານພາກລັດໃນຂັ້ນສູງຂຶ້ນ. ໃນຂະນະທີ່ການລວມສູນນີ້ ອາດຈະເປັນປະໂຫຍດບາງຢ່າງສຳລັບການປະສານງານມາດຕະຖານ, ແຕ່ອາດຈະມີໂອກາດທີ່ການໃຫ້ຜູ້ກ່ຽວຂ້ອງໃນທ້ອງຖິ່ນມີສ່ວນຮ່ວມໂດຍກົງ ເພື່ອສະໜັບສະໜູນຜູ້ລອດຊີວິດ ຈະຊ່ວຍເຮັດໃຫ້ການສະໜອງການສະໜັບສະໜູນມີປະສິດທິພາບຫຼາຍຂຶ້ນ, ເນື່ອງຈາກວ່າ ພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນຮູ້ສະພາບການຂອງເຂົາເຈົ້າ ແລະ ຮູ້ຄວາມຕ້ອງການຂອງຜູ້ລອດຊີວິດເປັນຢ່າງດີ.
- **ສ້າງວິທີການເຮັດວຽກແບບປະສົມປະສານ:** ພູມສັນຖານຂອງການບໍລິການໃນປະຈຸບັນ ປະສົບກັບບັນຫາການປະສານງານ ແລະ ການຂະຫຍາຍຕົວທີ່ບໍ່ສະໝໍ່າສະເໝີ ເຖິງແມ່ນວ່າຈະມີການມີສ່ວນຮ່ວມຈາກລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ພາກສ່ວນກ່ຽວຂ້ອງໃນຊຸມຊົນ ກໍ່ຕາມ. ມັນຮຽກຮ້ອງໃຫ້ມີວິທີການ ແລະ ນະໂຍບາຍທີ່ມີການເຊື່ອມໂຍງເຂົ້າກັນຫລາຍຂັ້ນ

[54] ສູນປະຕິບັດງານລະເບີດຝັງດິນພາກພື້ນອາຊີ (2023). ບົດລາຍງານກອງປະຊຸມທີ່ປຶກສາຫາລືໃນລະດັບຊາດ ສປປ ລາວ https://aseanmineaction.org/wp-content/uploads/2025/09/ARMAC_LAO_PDR_Victim_Assistance_National_Consultative_Meeting_Report.pdf

**ຄຳຖາມບົດຄົ້ນຄວ້າ ທີ 7:**

ເຊິ່ງໄດ້ຮັບການອຳນວຍຄວາມສະດວກຈາກ ຄຊກລ ທີ່ປະສົມປະສານການສະໜັບສະໜູນຊ່ວຍເຫຼືອທັງດ້ານຮ່າງກາຍ, ຈິດໃຈ ແລະ ເສດຖະກິດ-ສັງຄົມ ເຂົ້າກັນຢ່າງສະໝ່ຳສະເໝີ ທັງຢູ່ໃນຄວາມພະຍາຍາມຂອງລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ/ອົງການຈັດຕັ້ງທາງສັງຄົມ).

# ຄຳຖາມບົດຄົ້ນຄ້ວາ ທີ 8:

ຜູ້ເຄາະຮ້າຍຈາກ ລບຕ ຮູ້ສຶກວ່າເຂົາເຈົ້າຕ້ອງການການຊ່ວຍເຫຼືອອັນໃດແດ່ ເພື່ອປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ?

# 8. ຜູ້ເຄາະຮ້າຍຈາກ ລບຕ ຮູ້ສຶກວ່າເຂົາເຈົ້າຕ້ອງການການຊ່ວຍເຫຼືອອັນໃດແດ່ ເພື່ອປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ?

ພາກສຸດທ້າຍຂອງການສຶກສາຄົ້ນຄວ້ານີ້ ແມ່ນໄດ້ຕອບຄຳຖາມຂອງບົດຄົ້ນຄ້ວາທີ 8, ໂດຍເນັ້ນໃສ່ຄວາມຕ້ອງການສະເພາະຂອງຜູ້ລອດຊີວິດທີ່ລະບຸໂດຍເຂົາເຈົ້າເອງ. ຂໍ້ມູນດ້ານຄຸນນະພາບນີ້ ມີຄວາມສຳຄັນສຳລັບການອອກແບບໂຄງການໃນອະນາຄົດ, ໂດຍເນັ້ນໃຫ້ເຫັນເຖິງຄວາມປາຖະໜາຢ່າງແຮງກ້າສຳລັບການສະໜັບສະໜູນໃນໄລຍະຍາວ ແລະ ການປະຕິບັດຕົວຈິງໃນ 3 ຂົງເຂດຫຼັກຄື: ການສະໜັບສະໜູນດ້ານເສດຖະກິດ ແລະ ການດຳລົງຊີວິດ (ເຊັ່ນ: ການຝຶກອົບຮົມວິຊາຊີບ ແລະ ການສະໜອງທຶນສຳລັບທຸລະກິດ), ການເຂົ້າເຖິງການສຶກສາ ແລະ ການຟື້ນຟູສຸຂະພາບ ແລະ ການປິ່ນປົວດູແລທາງການແພດຢ່າງຕໍ່ເນື່ອງ. ເປົ້າໝາຍຂອງພາກນີ້ ແມ່ນເພື່ອສະໜອງແຜນງານທີ່ຊັດເຈນ ແລະ ເນັ້ນໃສ່ຜູ້ລອດຊີວິດເປັນໃຈກາງ ເພື່ອສ້າງຄວາມເຂັ້ມແຂງ ໃນຄວາມພະຍາຍາມໃນການປະສານງານຊ່ວຍເຫຼືອຜູ້ເຄາະຮ້າຍ.

## ຜົນໄດ້ຮັບຈາກຄຳຖາມທີ 8

### ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ມີຄວາມປາດຖະນາໄດ້ຮັບການສະໜັບສະໜູນເພື່ອປັບປຸງຊີວິດການເປັນຢູ່ ແລະ ຄຸນນະພາບຊີວິດ

ເພື່ອລະບຸຄວາມຕ້ອງການທີ່ຍັງບໍ່ໄດ້ຮັບການຕອບສະໜອງຂອງຜູ້ລອດຊີວິດ, ຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ໄດ້ຖືກຖາມວ່າ "ຖ້າໃນອະນາຄົດເຈົ້າຈະໄດ້ຮັບການສະໜັບສະໜູນຊ່ວຍເຫຼືອເພີ່ມເຕີມຈາກຊຸມຊົນ ແລະ ລັດຖະບານ, ແມ່ນຫຍັງທີ່ຈະຊ່ວຍເຈົ້າໄດ້?" ຄຳຕອບຂອງຜູ້ລອດຊີວິດໂດຍທົ່ວໄປຕົກຢູ່ໃນ 2 ປະເດັນ ທີ່ທັບຊ້ອນກັນ ຄື: ການສະໜັບສະໜູນເພື່ອຊ່ວຍໃຫ້ເຂົາເຈົ້າສາມາດສ້າງລາຍຮັບຂອງຕົນເອງ ແລະ ການສະໜັບສະໜູນເພື່ອປັບປຸງຄຸນນະພາບຊີວິດຂອງເຂົາເຈົ້າ.

ຄຳແນະນຳຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ສຳລັບການສະໜັບສະໜູນທີ່ກ່ຽວຂ້ອງກັບການສ້າງລາຍຮັບ ປະກອບມີສິ່ງຕ່າງໆ ເຊັ່ນ ວຽກງານ ຫຼື ການຝຶກອົບຮົມສຳລັບຕົນເອງ ຫຼື ສຳລັບສະມາຊິກໃນຄອບຄົວ; ລ້ຽງສັດເພື່ອຫາລ້ຽງຊີບ ແລະ ການຊ່ວຍເຫຼືອທາງດ້ານການເງິນເພື່ອຊ່ວຍຄ່າໃຊ້ຈ່າຍໃນການເລີ່ມຕົ້ນທຸລະກິດ ຫຼື ອຸປະກອນສຳລັບການເຮັດສວນ. ຕົວຢ່າງ, ຄຳເວົ້າຂອງຜູ້ລອດຊີວິດບາງຄົນ ມີດັ່ງນີ້:

> ຖ້າມີນະໂຍບາຍ ຫຼື ການສະໜັບສະໜູນຈາກລັດຖະບານ ຫຼື ພາກສ່ວນອື່ນໆ, ຂ້ອຍຢາກຂໍທຶນເພື່ອຊື້ສັດມາລ້ຽງ ແລະ ຂາຍ ເພື່ອຂ້ອຍຈະສາມາດຫາເງິນໃຊ້ໃນຊີວິດປະຈຳວັນໄດ້ ເພາະມັນຍາກທີ່ຈະຫາລາຍໄດ້ຈາກວິທີອື່ນ. ຂ້ອຍຢາກໄດ້ຮັບຄວາມຊ່ວຍເຫຼືອໃນການເອົາສະເກັດລະເບີດອອກຈາກຮ່າງກາຍຂອງຂ້ອຍ ເພາະຂ້ອຍຮູ້ສຶກມຶນຊາຢູ່ຕະຫຼອດເວລາ ໃນຊ່ວງລະດູຝົນ, ຂ້ອຍຈຳເປັນຕ້ອງໄດ້ນອດເພື່ອບັນເທົາອາການເຈັບ.

> ຂ້ອຍຢາກໃຫ້ໂຄງການໃຫ້ການຊ່ວຍເຫຼືອດ້ານການເງິນແກ່ຂ້ອຍເພື່ອລ້ຽງສັດ ເຊັ່ນ: ງົວ ແລະ ໝູ. ມັນຈະຊ່ວຍສ້າງລາຍໄດ້ໃຫ້ແກ່ຄອບຄົວ.

> ຖ້າເປັນໄປໄດ້, ຂ້ອຍຢາກໄດ້ທຶນເພື່ອເລີ່ມຕົ້ນທຸລະກິດຂະໜາດນ້ອຍ (ການຄ້າຂາຍ) ເຊັ່ນ: ການເປີດຮ້ານອາຫານຢູ່ໜ້າເຮືອນຂອງຂ້ອຍ. ຂໍ້ຈຳກັດຫຼັກໆໃນຕອນນີ້ແມ່ນການຂາດແຄນທຶນ.

ຂ້ອຍຢາກໃຫ້ໂຄງການສະໜັບສະໜູນຂ້ອຍໃນການຊອກວຽກເຮັດງານທຳ. ຂ້ອຍຢາກເຮັດວຽກໃນໂຄງການ ເກັບກູ້ລະເບີດ ເພື່ອຂ້ອຍຈະສາມາດສ້າງລາຍໄດ້ໃຫ້ກັບຄອບຄົວຂອງຂ້ອຍ.

ຂ້ອຍຢາກໄດ້ຮັບການຝຶກອົບຮົມວິຊາຊີບ, ໂດຍສະເພາະແມ່ນການຝຶກອົບຮົມທັກສະທີ່ເໝາະສົມກັບສະພາບສຸຂະພາບໃນປະຈຸບັນຂອງຂ້ອຍ. ຂ້ອຍມີແນວຄວາມຄິດທີ່ຈະເປີດຮ້ານຂາຍເຄື່ອງຍ່ອຍ ແລະ ເຄື່ອງສຳອາງຢູ່ເຮືອນ.

ແນວຄວາມຄິດຂອງຜູ້ລອດຊີວິດສຳລັບການສະໜັບສະໜູນທີ່ສອດຄ່ອງກັບການປັບປຸງຄຸນນະພາບຊີວິດ ລວມມີຄຳແນະນຳຕ່າງໆ ເຊັ່ນ: ທີ່ຢູ່ອາໄສໃໝ່, ຍານພາຫະນະທີ່ປັບຕົວເຂົ້າກັບຄວາມສາມາດທາງດ້ານຮ່າງກາຍຂອງເຂົາເຈົ້າ, ການປິ່ນປົວທາງການແພດເພີ່ມເຕີມ (ມັກຈະໝາຍເຖິງການເອົາສະເກັດລະເບີດອອກ) ແລະ ການເກັບກູ້ ລບຕ ໃນດິນອ້ອມເຮືອນ ແລະ ໃນຊຸມຊົນຂອງເຂົາເຈົ້າ.

## ເດັກຜູ້ລອດຊີວິດແບ່ງປັນກ່ຽວກັບຄວາມຝັນຂອງເຂົາເຈົ້າ

ເດັກທີ່ລອດຊີວິດຈາກເຫດການອຸປະຕິເຫດ ລບຕ ໄດ້ຖືກຖາມກ່ຽວກັບຄວາມຫວັງ ແລະ ຄວາມຝັນຂອງເຂົາເຈົ້າໃນອະນາຄົດ ເຊິ່ງຖືວ່າເປັນວິທີທີ່ເປັນມິດກັບເດັກ ແລະ ຄຳນຶງເຖິງບາດແຜທາງດ້ານຈິດໃຈຂອງເຂົາເຈົ້າ ເພື່ອໃຫ້ເຂົ້າໃຈວ່າການສະໜັບສະໜູນອັນໃດທີ່ອາດຈະຕ້ອງມີເພື່ອໃຫ້ເຂົາເຈົ້າມີຊີວິດທີ່ມີຄວາມສຸກ, ມີສຸຂະພາບດີ ແລະ ມີປະສິດທິພາບ. ເດັກໄດ້ສະແດງເຖິງຄວາມປາຖະໜາທີ່ຈະສືບຕໍ່ການສຶກສາຂອງເຂົາເຈົ້າ ແລະ ມີຄວາມຝັນກ່ຽວກັບການເຮັດວຽກປະເພດຕ່າງໆ ລວມທັງຊ່າງສ້ອມແປງລົດ, ເປັນເຈົ້າໜ້າທີ່ຕຳຫຼວດ, ທະຫານ ແລະ ເປັນແພດໝໍ.

ເດັກຜູ້ລອດຊີວິດຄົນໜຶ່ງ ທີ່ໄດ້ຮັບບາດເຈັບຈາກອຸປະຕິເຫດ ເຊິ່ງເຮັດໃຫ້ເຂົາເຈົ້າບໍ່ສາມາດເຮັດວຽກຢູ່ນອກບ້ານກັບຄອບຄົວໄດ້ກ່າວວ່າ *"ຄວາມຝັນຂອງຂ້ອຍແມ່ນການເປັນນັກຮຽນທີ່ມີຄວາມສາມາດ ແລະ ຢາກເປັນພະນັກງານທີ່ມີເງິນເດືອນ. ຂ້ອຍບໍ່ມັກວຽກທີ່ໃຊ້ແຮງງານ ເຊັ່ນ: ການກະສິກຳ ຫຼື ການເຮັດສວນ."*

ເມື່ອພິຈາລະນາອາການສະແດງອອກທາງຮ່າງກາຍ ແລະ ຈິດໃຈຂອງເດັກ ແລະ ຄວາມປາຖະໜາຂອງເຂົາເຈົ້າ ທີ່ຢາກມີສ່ວນຮ່ວມໃນການສຶກສາ ແລະ ການຈ້າງງານຢ່າງມີປະສິດຕິພາບ, ຄວາມຕ້ອງການຂອງເດັກໄດ້ສະທ້ອນເຖິງຄວາມຕ້ອງການຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ສຳລັບການສະໜັບສະໜູນທີ່ຈະປັບປຸງຄຸນນະພາບຊີວິດ (ເຊັ່ນ: ການຈັດການກັບອາການເຈັບປວດ; ການເຂົ້າເຖິງການສະໜັບສະໜູນ) ແລະ ການດຳລົງຊີວິດໃນໄລຍະຍາວ.

## ເຈົ້າໜ້າທີ່ພາກລັດສະໜັບສະໜູນໃຫ້ມີການຊ່ວຍເຫຼືອຜູ້ລອດຊີວິດໃຫ້ຫຼາຍຂຶ້ນ

ເມື່ອຖາມເຈົ້າໜ້າທີ່ພາກລັດວ່າ ຜູ້ລອດຊີວິດຈາກ ລບຕ ຢູ່ໃນເຂດທີ່ເຂົາເຈົ້າເຮັດວຽກຕ້ອງການການຊ່ວຍເຫຼືອທີ່ຈຳເປັນ ປະເພດໃດແດ່. ເຈົ້າໜ້າທີ່ສ່ວນໃຫຍ່ໄດ້ຕອບຄຳຖາມ ພ້ອມກັບຄຳແນະນຳທີ່ກວມເອົາການຊ່ວຍເຫຼືອທີ່ຫຼາກຫຼາຍ. ຄຳແນະນຳຂອງເຈົ້າຫນ້າທີ່ພາກລັດກ່ຽວກັບການຊ່ວຍເຫຼືອທີ່ຈຳເປັນທີ່ຜູ້ລອດຊີວິດຕ້ອງການນັ້ນສອດຄ່ອງກັບຄຳແນະນຳຂອງຜູ້ລອດຊີວິດໃນແງ່ຂອງການສະໜັບສະໜູນເພື່ອຊ່ວຍໃຫ້ພວກເຂົາສ້າງລາຍຮັບ (ຕົວຢ່າງ ກອງທຶນເລີ່ມຕົ້ນທຸລະກິດ, ການຝຶກອົບຮົມວິຊາຊີບ). ການຊ່ວຍເຫຼືອເພື່ອປັບປຸງຊີວິດການເປັນຢູ່ໄດ້ຖືກກ່າວເຖິງໃນລະດັບຕໍ່າ ແລະ ມີຮູບແບບທີ່ແຕກຕ່າງເລັກນ້ອຍຈາກການສະແດງອອກຂອງຜູ້ລອດຊີວິດ, ເຖິງແມ່ນວ່າມີຄວາມຄ້າຍຄືກັນກໍ່ຕາມ: ເຈົ້າຫນ້າທີ່ໄດ້ກ່າວເຖິງການປິ່ນປົວທາງການແພດສຳລັບສະເກັດລະເບີດ ແລະ ການສະໜັບສະໜູນທາງດ້ານການເງິນ ເພື່ອຊົດເຊີຍການສູນເສຍໃນຂະນະທີ່ຜູ້ເຄາະຮ້າຍກຳລັງຟື້ນຟູຕົນເອງ. ພິເສດແມ່ນ ເຈົ້າຫນ້າທີ່ພາກລັດຈຳນວນບໍ່ຫນ້ອຍໄດ້ລະບຸຢ່າງຈະແຈ້ງກ່ຽວກັບ

ຄວາມຕ້ອງການໃນການສະໜັບສະໜູນດ້ານສຸຂະພາບຈິດ ແລະ ການສະໜັບສະໜູນທາງດ້ານຈິດໃຈ ໃຫ້ແກ່ບັນດາຜູ້ຖືກເຄາະຮ້າຍ, ອັນນີ້ຊີ້ໃຫ້ເຫັນເຖິງຄວາມຮັບຮູ້ທົ່ວໄປກ່ຽວກັບຄວາມຕ້ອງການດ້ານນີ້ ແລະ ການສະໜັບສະໜູນທີ່ຈຳເປັນ. ມັນແຕກຕ່າງຈາກຜູ້ລອດຊີວິດເອງ ທີ່ບໍ່ໄດ້ກ່າວເຖິງການສະໜັບສະໜູນປະເພດນີ້ໂດຍກົງ ແຕ່ເວົ້າກ່ຽວກັບຄວາມຢ້ານກົວ.

ເຈົ້າໜ້າທີ່ພາກລັດຫຼາຍທ່ານຍັງໄດ້ເນັ້ນໜັກເຖິງຄວາມຈຳເປັນໃນການປັບປຸງການສະໜັບສະໜູນໃຫ້ເໝາະສົມກັບຄວາມຕ້ອງການຂອງແຕ່ລະບຸກຄົນ ແລະ ໃຫ້ເໝາະສົມກັບສະພາບການສະເພາະໃນທ້ອງຖິ່ນ. ຕົວຢ່າງ, ມີຄົນໜຶ່ງເວົ້າວ່າ

> ພວກເຮົາຈຳເປັນຕ້ອງໄດ້ສັງເກດເບິ່ງຊີວິດຂອງເຂົາເຈົ້າ ແລະ ຊຸມຊົນຂອງເຂົາເຈົ້າ ເພື່ອຮັບປະກັນສິ່ງທີ່ພວກເຮົາສະໜັບສະໜູນໃຫ້ເຂົາເຈົ້າເປັນປະໂຫຍດຫຼາຍ ແລະ ມີຄວາມຍືນຍົງ. ຕົວຢ່າງ: ຖ້າທ່ານເອົາສັດໃຫ້ເຂົາເຈົ້າ ແຕ່ສັດຕາຍຍ້ອນບໍ່ຮູ້ວິທີດູແລ ຫລື ຖ້າທ່ານສະໜັບສະໜູນທາງດ້ານການເງິນໃຫ້ເປີດຮ້ານນ້ອຍໆ ຫຼື ໃຫ້ການຝຶກອົບຮົມການຕັດຫຍິບ ແຕ່ເຂົາເຈົ້າອາໄສຢູ່ເຂດຫ່າງໄກສອກຫຼີກ ຈະມີໃຜມາຊື້ສິນຄ້າ. ຖ້າທ່ານໃຫ້ການຝຶກອົບຮົມວິຊາຊີບໃຫ້ເຂົາເຈົ້າ, ທ່ານຈຳເປັນຕ້ອງຊ່ວຍເຂົາເຈົ້າຊອກຫາຕະຫຼາດເພື່ອຈຳໜ່າຍຜົນຜະລິດ.

ເຊັ່ນດຽວກັນ, ເຈົ້າໜ້າທີ່ຜູ້ໜຶ່ງສະເໜີໃຫ້ເຮັດການສຳຫຼວດເພື່ອກຳນົດຄວາມຕ້ອງການ, ໃນຂະນະທີ່ອີກຄົນໜຶ່ງແນະນຳວ່າລັດຖະບານຕ້ອງການງົບປະມານເພື່ອດຳເນີນການຕິດຕາມຜູ້ລອດຊີວິດເປັນປະຈຳ ເພື່ອກວດເບິ່ງຄວາມຕ້ອງການຂອງພວກເຂົາ. ເຈົ້າໜ້າທີ່ອີກຄົນນຶ່ງສະເໜີໃຫ້ມີຄລີນິກເຄື່ອນທີ່ ໄປຢ້ຽມຢາມເຂດຊົນນະບົດ ແລະ ໃຫ້ການຕິດຕາມຜູ້ລອດຊີວິດ, ໂດຍໃຫ້ຂໍ້ສັງເກດວ່າ ຊາວບ້ານບໍ່ຢາກເດີນທາງເພື່ອໄປຕິດຕາມການປິ່ນປົວ ຫຼື ຮັບການຊ່ວຍເຫຼືອ.

ເຈົ້າໜ້າທີ່ພາກລັດ ຍັງໄດ້ກ່າວເຖິງຄວາມສຳຄັນຂອງການຮັບປະກັນການສຶກສາຂອງເດັກຢ່າງຕໍ່ເນື່ອງ. ຕົວຢ່າງ, ເຂົາເຈົ້າໄດ້ອ້າງເຖິງເດັກທີ່ເປັນລູກຂອງຜູ້ເຄາະຮ້າຍຜູ້ໃຫຍ່ທີ່ເສຍຊີວິດໃນອຸປະຕິເຫດ ລບຕ ແລະ ເດັກທີ່ປະສົບກັບອຸປະຕິເຫດທີ່ຮ້າຍແຮງດ້ວຍຕົນເອງ ແລະ ຈຳເປັນຕ້ອງຕັດແຂນຂາ ແລະ ອອກຈາກໂຮງຮຽນຍ້ອນຖືກລໍ້ລຽນຢູ່ໃນໂຮງຮຽນ.

ສຸດທ້າຍ, ນອກຈາກຄວາມຕ້ອງການຊ່ວຍເຫຼືອໂດຍກົງຂອງຜູ້ເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າແລ້ວ, ເຈົ້າໜ້າທີ່ພາກລັດຍັງໄດ້ຮຽກຮ້ອງໃຫ້ມີການເກັບກູ້ ລບຕ ແລະ ການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດ ໃນຂົງເຂດພື້ນທີ່ຂອງເຂົາເຈົ້າ. ເຈົ້າໜ້າທີ່ທ່ານໜຶ່ງເລົ່າວ່າ:

> ຄວນມີການຜັນຂະຫຍາຍການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຢ່າງກວ້າງຂວາງ. ຍ້ອນວ່າ ໃນໄລຍະຜ່ານມາ ມີຫຼາຍອົງການຈັດຕັ້ງ ຫຼື ຂະແໜງການທີ່ກ່ຽວຂ້ອງ ໄປເຮັດວຽກໂຄສະນາໃນບ້ານຂອງພວກເຮົາ ເພື່ອໃຫ້ຂໍ້ມູນດັ່ງກ່າວ ແລະ ຂ້າພະເຈົ້າເອງບໍ່ເຄີຍເຂົ້າຮ່ວມກິດຈະກຳດັ່ງກ່າວ. ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຄວນເນັ້ນໃສ່ວິທີການລາຍງານກ່ຽວກັບ ລບຕ, ຜົນກະທົບຂອງ ລບຕ ແລະ ວິທີການຢູ່ຢ່າງປອດໄພຈາກອຸປະຕິເຫດ.

## ການສົນທະນາກ່ຽວກັບຄຳຖາມທີ 8

ການທຳຄວາມເຂົ້າໃຈກ່ຽວກັບຊີວິດປະຈຳວັນຂອງຜູ້ລອດຊີວິດໃນໄລຍະກ່ອນ ແລະ ຫຼັງອຸປະຕິເຫດ ລບຕ ເຜີຍໃຫ້ເຫັນເຖິງຜົນກະທົບທາງດ້ານເສດຖະກິດ ແລະ ສັງຄົມໃນໄລຍະຍາວ ຈາກລະເບີດທີ່ຕົກຄ້າງຈາກສົງຄາມ. ກ່ອນເກີດອຸປະຕິເຫດ ລບຕ ຜູ້ລອດຊີວິດຫຼາຍຄົນໄດ້ອາໄສການເຮັດໄຮ່ເຮັດນາເພື່ອລ້ຽງຊີບ, ເຮັດວຽກໃຊ້ແຮງງານ ແລະ ສາມາດໃຊ້ຈ່າຍໃນຄອບຄົວໃນລະດັບປານກາງ ໂດຍສະເພາະແມ່ນການໃຊ້

ຈ່າຍດ້ານອາຫານ, ການສຶກສາ ແລະ ການກະສິກຳ. ພາລະກິດປະຈຳວັນເຫຼົ່ານີ້ມີຄວາມສ່ຽງຢູ່ແລ້ວ ຈະໄດ້ຮັບຜົນກະທົບຈາກການບາດເຈັບ ຍ້ອນວ່າຄວາມພິການທາງຮ່າງກາຍ ແລະ ການບາດເຈັບ ໄດ້ຫຼຸດຄວາມສາມາດຂອງເຂົາເຈົ້າໃນການສ້າງລາຍໄດ້ລົງ, ຫັນປ່ຽນຜູ້ລອດຊີວິດຈາກຜູ້ທີ່ເປັນຫຼັກໃນການທຳມາຫາກິນ ມາເປັນຜູ້ເພິ່ງພາອາໄສຜູ້ອື່ນໃນຄອບຄົວ ແລະ ເຮັດໃຫ້ມີຜົນກະທົບຕໍ່ການເຄື່ອນໄຫວໃນຄອບຄົວ. ດັ່ງນັ້ນ, ຮູບແບບຂອງການໃຊ້ຈ່າຍໃນຄົວເຮືອນມີການປ່ຽນແປງ, ການມີສ່ວນຮ່ວມໃນຊຸມຊົນຫຼຸດລົງ ແລະ ຄວາມຢູ່ດີກິນດີໂດຍລວມຂອງຄົວເຮືອນຫຼຸດລົງ. ອຸປະຕິເຫດ ລບຕ ຈຶ່ງບໍ່ພຽງແຕ່ເຮັດໃຫ້ເກີດຄວາມເສຍຫາຍໃນທັນທີທັນໃດເທົ່ານັ້ນ ແຕ່ຍັງສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ ແລະ ຄວາມສາມາດເພິ່ງພາຕົນເອງໄດ້ ໃນໄລຍະຍາວອີກດ້ວຍ. ໃນຂະນະທີ່ຜູ້ລອດຊີວິດບາງຄົນຟື້ນຕົວແລະກັບຄືນສູ່ຊີວິດການເປັນຢູ່ຄືກ່ອນອຸປະຕິເຫດ, ມີຫຼາຍຄົນຕ້ອງປະເຊີນກັບຂໍ້ຈຳກັດໃນການປ່ຽນແປງບົດບາດຂອງຄົນໃນຄົວເຮືອນ, ການຫຼຸດຜ່ອນລາຍໄດ້, ແລະ ຂໍ້ຈຳກັດໃນການມີສ່ວນຮ່ວມໃນຊຸມຊົນ.

ການມີຄອບຄົວທີ່ມີຫຼາຍລຸ້ນຄົນ ແລະ ມີຄວາມສົມບູນ ຖືເປັນປັດໃຈສຳຄັນສຳລັບຄວາມສາມາດຟື້ນຕົວຂອງຜູ້ລອດຊີວິດ ໂດຍການໃຫ້ການຊ່ວຍເຫຼືອທີ່ສຳຄັນ, ແບ່ງປັນຄວາມຮັບຜິດຊອບໃນການເບິ່ງແຍງດູແລ ແລະ ຄວາມຮັບຜິດຊອບດ້ານລາຍຮັບ. ໂດຍທົ່ວໄປແລ້ວຄອບຄົວເດັກຍັງຄົງຢູ່ໃນສະພາບແວດລ້ອມຄອບຄົວທີ່ໝັ້ນຄົງ, ໄດ້ຮັບສະໜັບສະໜູນທາງດ້ານການຟື້ນຟູຈິດໃຈຂອງເຂົາເຈົ້າ. ຄວາມໝັ້ນຄົງດ້ານທີ່ຢູ່ອາໄສພາຍໃນຊຸມຊົນທີ່ມີມາແຕ່ດົນນານ ໄດ້ເສີມສ້າງຄວາມເຂັ້ມແຂງດ້ານການປົກປ້ອງເຫຼົ່ານີ້, ເສີມຂະຫຍາຍການດູແລຢ່າງຕໍ່ເນື່ອງ ແລະ ອຳນວຍຄວາມສະດວກໃຫ້ແກ່ການຟື້ນຟູໜ້າທີ່ການ, ການສຶກສາ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ ແລະ ສັງຄົມ ແບບເຊິ່ງໜ້າ. ຄວາມຕໍ່ເນື່ອງດັ່ງກ່າວເປັນພື້ນຖານໃຫ້ແກ່ການແຊກແຊງຊ່ວຍເຫຼືອຂອງຊຸມຊົນ, ການຕິດຕາມໄລຍະຍາວ ແລະ ການເຊື່ອມໂຍງກັນຂອງການຟື້ນຟູ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ ເຂົ້າໄປໃນຊີວິດປະຈຳວັນໃນບ້ານຂອງເຂົາເຈົ້າ.

ຜົນກະທົບໃນໄລຍະຍາວຈາກລະເບີດບໍ່ທັນແຕກ ອາດສົ່ງຜົນກະທົບໃນໄລຍະຍາວຕໍ່ການສຶກສາ. ການວິເຄາະທາງດ້ານເສດຖະກິດສະແດງໃຫ້ເຫັນວ່າ ການຕົກຄ້າງຂອງ ລບຕ ໃນປະເທດລາວ ເຮັດໃຫ້ການລະດັບການສຶກສາຫຼຸດລົງ[55] ໂດຍຈຳກັດປະສິດທິພາບການເຮັດກະສິກຳ; ເດັກມັກຈະຖືກໃຫ້ອອກໂຮງຮຽນເພື່ອຊ່ວຍເຫຼືອວຽກງານກະສິກຳທີ່ໃຊ້ແຮງງານໃນສະພາບແວດລ້ອມທີ່ບໍ່ປອດໄພ. ອັນນີ້ຊີ້ໃຫ້ເຫັນເຖິງວ່າ ລບຕ ບໍ່ພຽງແຕ່ເປັນໄພຂົ່ມຂູ່ທາງຮ່າງກາຍເທົ່ານັ້ນ ແຕ່ຍັງກໍ່ໃຫ້ເກີດວົງຈອນຂອງການຢຸດການຮຽນ ແລະ ມີຄວາມທຸກຍາກຫຼາຍຂຶ້ນ.

ອຸປະຕິເຫດ ລບຕ ມີຜົນກະທົບຢ່າງກວ້າງຂວາງ ແລະ ໃນໄລຍະຍາວ ເຊິ່ງມີຜົນກະທົບໃນວົງກ້ວາງຂຶ້ນນອກຈາກການບາດເຈັບທາງຮ່າງກາຍ , ຜົນກະທົບຕໍ່ເສດຖະກິດຂອງຄົວເຮືອນ, ຄວາມສາມາດຊ່ວຍເຫຼືອຕົນເອງໃນການເຮັດວຽກ ແລະ ສະຫວັດດີການທາງດ້ານຈິດໃຈ. ຜູ້ລອດຊີວິດ ແລະ ຄອບຄົວສາມາດປັບຕົວໄດ້ໂດຍຜ່ານການແບ່ງປັນວຽກງານ, ການປ່ຽນແປງໃນການໃຊ້ຈ່າຍ ແລະ ການມີສ່ວນຮ່ວມຂອງຊຸມຊົນ , ແຕ່ກໍ່ຍັງມີຄວາມສ່ຽງຢູ່, ໂດຍສະເພາະແມ່ນໃນກໍລະນີທີ່ຂາດແຄນການຟື້ນຟູ, ອຸປະກອນຊ່ວຍເຫຼືອ ຫຼື ການຊ່ວຍເຫຼືອໃນໄລຍະຍາວ. ໂຄງການທີ່ລວມເອົາການສະໜັບສະໜູນຊີວິດການເປັນຢູ່, ການຜ່ອນໜີ້ສິນ, ການຟື້ນຟູ ແລະ ການດູແລທາງດ້ານຈິດໃຈ ເຂົ້າໃນເຄືອຂ່າຍຄອບຄົວ ແລະ ຊຸມຊົນ ຖືເປັນສິ່ງຈຳເປັນທີ່ຈະຊ່ວຍໃຫ້ຜູ້ລອດຊີວິດສ້າງຊີວິດຄືນໃໝ່ດ້ວຍທີ່ມີຄວາມໝັ້ນຄົງ ແລະ ມີຄວາມສຸກ.

ການສຶກສາຄົ້ນຄ້ວາຄັ້ງນີ້ ໄດ້ລວບລວມຂໍ້ມູນ ແລະ ຄວາມເຂົ້າໃຈ ຈາກຜູ້ລອດຊີວິດທີ່ປະສົບອຸປະຕິເຫດໃນໄລຍະ 5 ປີທີ່ຜ່ານມາ ແລະ ການອະທິບາຍເຖິງໄລຍະເວລາຫຼັງຈາກອຸປະຕິເຫດວ່າເປັນໄລຍະເວລາຂອງການຟື້ນຟູທີ່ເຄັ່ງຄັດໃນທັນທີ, ແລະ ການປັບຕົວເຂົ້າກັບສະພາບ

[55] Guo, S. (2020). ຜົນກະທົບຈາກລະເບີດບໍ່ທັນແຕກທີ່ມີຕໍ່ການສຶກສາໃນປະເທດລາວ. ວາລະສານເສດຖະສາດການພັດທະນາ, 147, 102527. https://www.sciencedirect.com/science/article/abs/pii/S0304387820301024

"ປົກກະຕິແບບໃຫມ່" ດ້ວຍການປັບຕົວເຂົ້າກັບຊີວິດປະຈຳວັນຕາມຄວາມຈຳເປັນ. ການສຶກສາຄົ້ນຄວ້າຂອງພວກເຮົາ ກວມເອົາທັງໄລຍະເວລາສຸກເສີນ ແລະ ໄລຍະເວລາຫຼັງສະຖານະການສຸກເສີນ (ຫນ້ອຍກວ່າ 5 ປີຫຼັງຈາກເກີດອຸປະຕິເຫດ), ແຕ່ພວກເຮົາບໍ່ສາມາດສະຫຼຸບກ່ຽວກັບປະສົບການຂອງຜູ້ລອດຊີວິດໃນໄລຍະຍາວກ່ອນໜ້ານີ້ໄດ້. ມັນເປັນໄປໄດ້ວ່າປະສົບການ ແລະ ຄວາມຕ້ອງການຂອງຜູ້ລອດຊີວິດມີການປ່ຽນແປງໄປຕາມເວລາ ແລະ ເປັນໄປໄດ້ທີ່ອາດມີຜົນກະທົບທີ່ສະສົມ ແລະ ທະວີຄູນຂຶ້ນ.

## ຂໍ້ສະເໜີແນະສຳລັບຄຳຖາມທີ 8

- **ສະໜັບສະໜູນຜູ້ລອດຊີວິດໃຫ້ເຂົ້າເຖິງການຝຶກອົບຮົມວິຊາຊີບ, ການພັດທະນາຊີວິດການເປັນຢູ່ ແລະ ໂອກາດການຈ້າງງານ:** ຜູ້ລອດຊີວິດສ່ວນໃຫຍ່ຕ້ອງການວິທີທີ່ຈະຊ່ວຍເຫຼືອຕົນເອງ ແລະ ຄອບຄົວຂອງເຂົາເຈົ້າໄດ້ ໂດຍຜ່ານວິທີການທີ່ມີປະໂຫຍດຫຼາຍກວ່າການຊ່ວຍເປັນເງິນເທົ່ານັ້ນ. (ກະລຸນາເບິ່ງຂໍ້ສະເໜີແນະນຳທີ່ກ່ຽວຂ້ອງພາຍໃຕ້ຄຳຖາມທີ 6)

- **ພິຈາລະນາການສະໜັບສະໜູນດ້ານການສຶກສາເພື່ອຮັບປະກັນຄວາມຕໍ່ເນື່ອງຂອງການຮຽນຮູ້ສຳລັບເດັກທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ.** ການສະໜັບສະໜູນດ້ານການສຶກສານີ້ ອາດປະກອບມີການສະໜອງການຮຽນຮູ້ເພີ່ມເຕີມ, ຕາຕະລາງເວລາຮຽນທີ່ດັດປັບໄດ້ ແລະ ການເຂົ້າໄປແຊກແຊງຊ່ວຍເຫຼືອເປົ້າໝາຍທີ່ໄດ້ຮັບຜົນກະທົບຈາກການປ່ຽນແປງທາງເສດຖະກິດຂອງຄົວເຮືອນ. ຕົວຢ່າງ, ຖ້າພໍ່ແມ່ເສຍຊີວິດ ຫຼື ສູນເສຍອາຊີບ ຍ້ອນອຸປະຕິເຫດລະເບີດບໍ່ທັນແຕກ ອາດຈະຕ້ອງມີການສະໜັບສະໜູນເພີ່ມເຕີມ ເພື່ອຮັບປະກັນວ່າເດັກສາມາດສືບຕໍ່ຮຽນໄດ້. ສິ່ງທ້າທາຍນີ້ ອາດຈະຕ້ອງມີການສຳຫຼວດເພີ່ມຕື່ມອີກ ແລະ ໃຊ້ວິທີການສະເພາະບຸກຄົນ ຍ້ອນວ່າ ມັນຍັງບໍ່ຈະແຈ້ງວ່າການລົງທະບຽນຮຽນ ແລະ ການເຂົ້າຮຽນຂອງເດັກໄດ້ຮັບຜົນກະທົບທາງລົບຈາກຄ່າໃຊ້ຈ່າຍໃນການສຶກສາ ຫຼື ຄວາມຕ້ອງການຂອງຄອບຄົວໃນການໃຫ້ເດັກເຮັດວຽກ (ຕົວຢ່າງ, ໃຫ້ເດັກເຮັດວຽກໃນການຊອກຫາອາຫານ) ແລະ ສາເຫດທີ່ແຕກຕ່າງກັນ ກໍອາດຈະຕ້ອງການວິທີແກ້ໄຂທີ່ແຕກຕ່າງກັນ.

- **ພິຈາລະນາວິທີການໃນການຄຸ້ມຄອງບໍລິຫານກໍລະນີ.** ຜູ້ລອດຊີວິດຫຼາຍຄົນໄດ້ລາຍງານປະສົບການໃນທາງບວກກັບຜູ້ນຳຂັ້ນບ້ານທີ່ມີບົດບາດເປັນຜູ້ອຳນວຍຄວາມສະດວກ ແລະ ເຊື່ອມໂຍງ ເພື່ອຊ່ວຍໃຫ້ເຂົາເຈົ້າເຂົ້າເຖິງການບໍລິການ. ເຖິງວ່າມັນບໍ່ແມ່ນຂະບວນການຄຸ້ມຄອງບໍລິຫານກໍລະນີ ທີ່ເປັນທາງການ, ແຕ່ຈຸດເດັ່ນທີ່ເຫັນໄດ້ຊັດເຈນຈາກປະສົບການຂອງຜູ້ລອດຊີວິດຊີ້ໃຫ້ເຫັນເຖິງທ່າແຮງຂອງການສ້າງຂະບວນການທີ່ເປັນລະບົບສຳລັບການບັນທຶກຄວາມຕ້ອງການຂອງຜູ້ລອດຊີວິດ, ເຊື່ອມໂຍງເຂົາເຈົ້າກັບການສະໜັບສະໜູນທີ່ກ່ຽວຂ້ອງ ແລະ ຮັບປະກັນການຕິດຕາມເປັນປະຈຳ, ເປັນໄລຍະ ເພື່ອສະໜັບສະໜູນຄວາມຕ້ອງການໃນໄລຍະຍາວ. ເຈົ້າໜ້າທີ່ພາກລັດ ຍັງໄດ້ຍົກໃຫ້ເຫັນຄວາມຈຳເປັນໃນການປັບປຸງການສະໜັບສະໜູນໃຫ້ເໝາະສົມກັບສະພາບຂອງສ່ວນບຸກຄົນ ແລະ ສະພາບຂອງຊຸມຊົນຂອງຜູ້ລອດຊີວິດ.(ຕົວຢ່າງ, ຕົວເລືອກໃນການຊ່ວຍເຫຼືອທາງດ້ານຊີວິດການເປັນຢູ່ຕ້ອງເໝາະສົມກັບສະພາບຮ່າງກາຍ ແລະ ໂອກາດໃນຕະຫຼາດທ້ອງຖິ່ນ ຂອງຜູ້ລອດຊີວິດ). ທັງຜົນກະທົບທີ່ກວ້າງຂວາງ ແລະ ຍືນຍົງ (ໃນໄລຍະເວລາຫນ້ອຍກວ່າ 5 ປີ) ແລະ ຄວາມເປັນໄປໄດ້ຂອງຄວາມຕ້ອງການທີ່ຍັງມີຢູ່ຢ່າງຕໍ່ເນື່ອງຫຼັງຈາກໄລຍະເວລານີ້ ຊີ້ໃຫ້ເຫັນເຖິງຄວາມຈຳເປັນໃນການຕິດຕໍ່ກັບຜູ້ລອດຊີວິດເປັນປະຈຳ ເພື່ອສອບຖາມກ່ຽວກັບຄວາມຕ້ອງການ ແລະ ການພັດທະນາໃນປະຈຸບັນ . ການເຮັດແບບນີ້ ຍັງຈະຊ່ວຍໃຫ້ມີທ່າແຮງທີ່ຈະເຊື່ອມໂຍງຜູ້ລອດຊີວິດຈາກອຸປະຕິເຫດທີ່ຜ່ານມາເຂົ້າກັບການຊ່ວຍເຫຼືອທີ່ກ່ຽວຂ້ອງ ເມື່ອມີການສະໜອງໃນອະນາຄົດ.

# ສະຫຼຸບ

ການສຶກສາຄົ້ນຄວ້າຄັ້ງນີ້ ໄດ້ວິເຄາະປະສົບການຂອງຜູ້ລອດຊີວິດຈາກອຸປະຕິເຫດລະເບີດບໍ່ທັນແຕກ ປະມານໜຶ່ງສ່ວນສີ່ ໃນໄລຍະເວລາ 5 ປີຜ່ານມາ ຄື 2020 ຫາ 2024. ສິ່ງສຳຄັນແມ່ນ, ການສຶກສາຄົ້ນຄວ້າຄັ້ງນີ້ ໄດ້ລວບລວມທັດສະນະຂອງຜູ້ລອດຊີວິດທັງຜູ້ໃຫຍ່ ແລະ ເດັກ ໂດຍຄຳນຶງເຖິງຄວາມສ່ຽງ, ສິ່ງທ້າທາຍ ແລະ ຜົນກະທົບໄລຍະຍາວ ທີ່ເປັນເອກະລັກສະເພາະຂອງແຕ່ລະກຸ່ມປະຊາກອນ ທີ່ຕ້ອງປະເຊີນ.

ວິທີການສຶກສາຄົ້ນຄວ້າຂອງພວກເຮົາ ໄດ້ຖືກອອກແບບມາເພື່ອປະສົມປະສານ ແລະ ວິເຄາະຂໍ້ມູນທັງດ້ານຄຸນນະພາບ ແລະ ປະລິມານ. ຈຸດປະສົງຂອງຂະບວນການນີ້ ແມ່ນເພື່ອເສີມສ້າງຫຼັກຖານກ່ຽວກັບແນວໂນ້ມ ແລະ ຮູບແບບຕ່າງໆ ຄຽງຄູ່ກັບການພິຈາລະນາຄວາມແຕກຕ່າງ ແລະ ຄວາມແປປວນທີ່ມີຢູ່ໃນການລວບລວມປະສົບການສ່ວນບຸກຄົນ. ທັງການສຶກສາຄົ້ນຄວ້າ ທັງດ້ານປະລິມານ ແລະ ຄຸນນະພາບຂອງພວກເຮົາ ໄດ້ພະຍາຍາມເນັ້ນໃສ່ປະສົບການຂອງຜູ້ລອດຊີວິດເປັນຈຸດໃຈກາງ. ແນວຄວາມຄິດນີ້ ແລະ ທີ່ສຳຄັນກວ່ານັ້ນແມ່ນ ຄຳຄິດເຫັນຂອງຜູ້ລອດຊີວິດເອງ ບໍ່ພຽງແຕ່ເປັນການພິຈາລະນາດ້ານຈັນຍາບັນເທົ່ານັ້ນ, ແຕ່ຍັງເປັນຄວາມຈຳເປັນໃນທາງປະຕິບັດ. ທັດສະນະ ແລະ ຄວາມຄິດເຫັນຂອງຜູ້ລອດຊີວິດ ຕ້ອງເປັນພື້ນຖານທີ່ສຳຄັນສຳລັບຄວາມພະຍາຍາມທີ່ອີງໃສ່ຫຼັກຖານ ເພື່ອສ້າງຄວາມເຂັ້ມແຂງໃນການສະໜັບສະໜູນຜູ້ລອດຊີວິດ ແລະ ປັບປຸງຍຸດທະສາດການປ້ອງກັນອຸປະຕິເຫດ ລບຕ.

ການສຶກສາຄົ້ນຄວ້າຄັ້ງນີ້ ໄດ້ສຳຫຼວດແບບເລິກເຊິ່ງ ແລະ ຄົ້ນພົບທິດທາງທີ່ເປັນໄປໄດ້ຫຼາຍທີ່ສຸດ ສຳລັບການສຶກສາຄົ້ນຄວ້າໃນອະນາຄົດ. ການວິເຄາະໃນຮູບແບບຂອງການປະຕິບັດ ແລະ ການວິເຄາະໃນຮູບແບບຂອງການນຳໄປຈັດຕັ້ງປະຕິບັດ ສາມາດລວມເຂົ້າກັນໃນໂຄງການທີ່ມີຢູ່, ເຊິ່ງສາມາດອຳນວຍຄວາມສະດວກໃນການປັບປຸງຢ່າງຕໍ່ເນື່ອງ ໃນຂະນະດຽວກັນກໍ່ເປີດໂອກາດໃຫ້ມີປະສິດທິພາບຫຼາຍຂຶ້ນ.

# ເອກະສານອ້າງອີງ


Ainamani, H.E., Elbert, T., Olema, D.K. et al. ຄວາມແຕກຕ່າງທາງດ້ານເພດ ໃນການຕອບສະໜອງຕໍ່ການບາດເຈັບທີ່ເກີດຈາກສົງຄາມ ແລະ ໂຣກຄວາມຄຽດ - ການສຶກສາໃນກຸ່ມຊາວອົບພະຍົບ ຄອງໂກ ໃນອູການດາ. BMC Psychiatry 20, 17 (2020). https://doi.org/10.1186/s12888-019-2420-0 https://bmcpsychiatry.biomedcentral.com/articles/10.1186/s12888-019-2420-0

Almarwani, S. M., Hijazi, L. O., Alamer, M. A., Alnwaiser, J. M., Aldakheel, R. A., Alsheikh, K., ... & Alghnam, S. (2020). ຄວາມສຳພັນກັນລະຫວ່າງຄວາມສາມັກຄີໃນຄອບຄົວ ແລະ ຄວາມພິການຫຼັງຈາກການບາດເຈັບທີ່ຮຸນແຮງ: ຜົນການຄົ້ນພົບຈາກສູນການບາດເຈັບລະດັບ I ໃນ Saudi Arabia. ການລະບາດຂອງການບາດເຈັບ, 7(1), 40. https://link.springer.com/article/10.1186/s40621-020-00271-0

ການປະຕິບັດລະເບີດຝັງດິນເອເຊຍ (2025). ຫັນຄວາມເຈັບປວດມາເປັນພະລັງ: ເສັ້ນທາງເດີນຂອງຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ໃນ ສປປ ລາວ. https://aseanmineaction.org/turning-pain-into-power-a-path-forward-for-unexploded-ordnance-survivors-in-lao-pdr/

ສູນປະຕິບັດງານລະເບີດຝັງດິນພາກພື້ນອາຊີ (2023). ບົດລາຍງານກ່ຽວກັບກອງປະຊຸມປຶກສາຫາລືລະດັບຊາດ ສປປ ລາວ. https://aseanmineaction.org/wp-content/uploads/2025/09/ARMAC_LAO_PDR_Victim_Assistance_National_Consultative_Meeting_Report.pdf

Babalola, A. E., Johnson, V., Oromakinde, A., Azeez, O., Aderinto, N., Onasanya, O., & Akinloye, S. (2025). ບົດບາດຂອງພາສາທ້ອງຖິ່ນໃນການໃຫ້ບໍລິການສຸຂະພາບທີ່ມີປະສິດທິພາບ. Discover Public Health, 22(1), 59. https://link.springer.com/article/10.1186/s12982-025-00429-5

Bartram, J., & Cairncross, S. (2010). ສຸຂະອະນາໄມ, ສຸຂາພິບານ, ແລະ ນ້ຳ: ພື້ນຖານສຸຂະພາບທີ່ຖືກລືມ. PLoS Medicine, 7(11), e1000367. https://journals.plos.org/plosmedicine/article?id=10.1371/journal.pmed.1000367

Birmes, P., Raynaud, J. P., Daubisse, L., Brunet, A., Arbus, C., Klein, R., ... & Schmitt, L. (2009ອາການໂຣກຄວາມຄຽດຫຼັງຈາກປະສົບເຫດການສະເທືອນຂ້ວນ (PTSD) ທີ່ຊ້ຳເຮື້ອໃນເດັກມີຄວາມກ່ຽວຂ້ອງກັບການປັບຕົວ ແລະ

ຄວາມສາມັກຄີຂອງຄອບຄົວຂອງເຂົາເຈົ້າ. ວາລະສານສຸຂະພາບຈິດຊຸມຊົນ, 45(4), 290-299. https://link.springer.com/article/10.1007/s10597-008-9166-3

Briiant, A., & Burt, K. B. (2025). ບົດບາດໃນການປົກປ້ອງຄວາມສາມັກຄີຂອງຊຸມຊົນໃນຊົນນະບົດ ແລະ ຕົວເມືອງ: ຜົນສະທ້ອນຕໍ່ສຸຂະພາບຈິດຂອງໄວໜຸ່ມ. ສຸຂະພາບຈິດຂອງເດັກ ແລະໄວໜຸ່ມ, 30(2), 140-148. https://acamh.onlinelibrary.wiley.com/doi/full/10.1111/camh.12764

Chan, Sambath (2013) "ການສຶກສາຄວາມສ່ຽງດ້ານລະເບີດຢູ່ໃນກຳປູເຈຍ," ວາລະສານຂອງ ERW ແລະ ການປະຕິບັດກ່ຽວກັບລະເບີດຝັງດິນ: Vol. 17: ສ. 1 , ມາດຕາ 10. https://commons.lib.jmu.edu/cisr-journal/vol17/iss1/10/

Creswell, J. W., & Plano Clark, V. L. (2018). ອອກແບບ ແລະ ເຮັດບົດຄົ້ນຄວ້າແບບວິທີປະສົມປະສານ (3rd ed.). Thousand Oaks, CA: SAGE.

Durham, J. (2018). ການວິເຄາະຄວາມຕ້ອງການທີ່ບໍ່ທັນໄດ້ຕອບສະໜອງຂອງຜູ້ເຄາະຮ້າຍຈາກ ລບຕ ໃນປະເທດລາວ.ຍັງບໍ່ໄດ້ຕີພິມ.

Fel S, Jurek K, Lenart-Kłoś K. (2022). ຄວາມສຳພັນລະຫວ່າງປັດໃຈສັງຄົມ ແລະ ປະຊາກອນ ກັບພາວະຄວາມຄຽດຫລັງເຫດການສະເທືອນຂັວນ: ການສຶກສາໃນທົ່ວຂະແໜງການກ່ຽວກັບຂໍ້ຂັດແຍ້ງທາງພົນລະເຮືອນໃນ ຢູເຄຣນ. ວາລະສານສາກົນກ່ຽວກັບການວິໄຈສິ່ງແວດລ້ອມ ແລະ ສຸຂະພາບ, 19(5), 2720. doi: 10.3390/ijerph19052720.

Ford JD, Grasso DJ, Elhai JD, Courtois CA. ບັນຫາທາງດ້ານສັງຄົມ, ວັດທະນະທຳ ແລະ ຄວາມຫຼາກຫຼາຍອື່ນໆໃນຂົງເຂດຄວາມຄຽດຈາກເຫດການສະເທືອນຂັວນ. 2015: 503–46. doi: 10.1016/B978-0-12-801288-8.00011-X..

Guo, S. (2020). ຜົນກະທົບຈາກລະເບີດບໍ່ທັນແຕກທີ່ມີຕໍ່ການສຶກສາໃນປະເທດລາວ. ວາລະສານເສດຖະສາດການພັດທະນາ, 147, 102527. https://www.sciencedirect.com/science/article/abs/pii/S0304387820301024

Hasamoh, A., Srivirat, S., & Wichaidit, W. (2025). ຊ່ອງຫວ່າງທາງດິຈິຕອລໃນການສຶກສາອອນໄລນ໌ ໃນໄລຍະການແຜ່ລະບາດຂອງໂຄວິດ-19 ແລະ ຜົນການສຶກສາ: ຜົນການສຳຫຼວດຊຸມຊົນໃນເຂດພາກໃຕ້ທີ່ທຸກຍາກຂອງປະເທດໄທ. ການທົບທວນອາຊະຍາກຳ ແລະ ສັງຄົມອາຊີ, 12(1), 5-5. https://so02.tci-thaijo.org/index.php/IJCLSI/article/view/274842/184024

Hunter, P. R., MacDonald, A. M., & Carter, R. C. (2010). ການສະໜອງນ້ຳ ແລະ ສຸຂະພາບ. ຢາ PLoS, 7(11), e1000361. https://journals.plos.org/plosmedicine/article?id=10.1371/journal.pmed.1000361

Keeley, R. (2024). ການສຶກສາຄວາມຮູ້, ທັດສະນະຄະຕິ ແລະ ການປະຕິບັດ. UNDP. https://www.undp.org/sites/g/files/zskgke326/files/2024-10/kap_final_19.08.2024.pdf

# ເອກະສານອ້າງອີງ


Kemp, S. (2025). ດິຈິຕອລ 2025 ລາວ. ບົດລາຍງານຂໍ້ມູນ. https://datareportal.com/reports/digital-2025-laos

ການຕິດຕາມກວດກາລະເບີດຝັງດິນ ແລະ ລະເບີດກະປາງ (2014). ການຕິດຕາມກວດກາລະເບີດກະປາງ 2014: ຈຳນວນຜູ້ເສຍຊີວິດ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. https://archives2.the-monitor.org/en-gb/reports/2014/cluster-munition-monitor-2014/casualties-victim-assistance

ການຕິດຕາມກວດກາລະເບີດຝັງດິນ ແລະ ລະເບີດກະປາງ (2022). ການຕິດຕາມກວດກາລະເບີດກະປາງ 2022: ຜົນກະທົບ. https://archives2.the-monitor.org/en-gb/reports/2022/cluster-munition-monitor-2022/the-impact.aspx

ຕິດຕາມກວດກາລະເບີດຝັງດິນ ແລະລະເບີດກະປາງ. ຂໍ້ມູນຈາກ ສປປ ລາວ. https://the-monitor.org/country-profile/lao-pdr/impact?year=2023

ມະຖຸຈັນ (Mathouchanh), P. (2025) ການເດີນທາງ 15 ປີ: ເລື່ອງຂອງ ສປປ ລາວ ພາຍໃຕ້ສົນທິສັນຍາວ່າດ້ວຍລະເບີດລູກຫວ່ານ (2010-2025). ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ). ) ແລະ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ (UNDP) ປະຈຳ ສປປ ລາວ. https://nra.gov.la/resources/WorkingGroup/15-Year%20Journey%20report.pdf

ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ). (2021). ເສັ້ນທາງກ້າວສູ່ຄວາມປອດໄພ III: ແຜນຍຸດທະສາດແຫ່ງຊາດວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງໃນ ຢູ່ ສປປ ລາວ ໄລຍະ 2021-2030. ວຽງຈັນ. https://nra.gov.la/resources/Strategy/SPF%20III%20Eng%20version%20on%2019.1.2023.pdf

ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, 2022. ບົດລາຍງານປະຈຳປີ 2022 ຂອງຂະແໜງ ລບຕ. (ສະບັບພາສາອັງກິດ). https://nra.gov.la/resources/AnnualReports/English/2022%20UXO%20SECTOR%20ANNUAL%20REPORT%20(ENG).pdf

ຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, 2023. ບົດລາຍງານປະຈຳປີ 2023 ຂອງຂະແໜງ ລບຕ. http://www.nra.gov.la/resources/AnnualReports/English/UXO%20Sector%20Annual%20Report%202023_ENG.pdf

Omam, LA., Jarman, E., O'Laughlin, K.N. et al. ຮູບແບບການໃຫ້ບໍລິການໃນການດູແລສຸຂະພາບຂັ້ນຕົ້ນໃນສະພາບການທີ່ໄດ້ຮັບຜົນກະທົບຈາກຂໍ້ຂັດແຍ່ງໃນອາຟຣິກາ: ການທົບທວນລະບົບ. Confl Health 17, 34 (2023).

https://doi.org/10.1186/s13031-023-00533-w

Scherer, N., Chanthakoummane, K., Homsana, A., Carew, M., Siengsounthone, L., Kuper, H, Soukkhaphone, B., Banks, L. M. (2025). ອັດຕາການແຜ່ລະບາດ, ຕົວຄາດຄະເນ ແລະ ຜົນກະທົບຈາກການຈໍາແນກຕໍ່ເດັກພິການທີ່ລາຍງານໃນ ສປປ ລາວ: ການວິເຄາະແບບຫຼາຍຂະແໜງການໃນແຂວງຊຽງຂວາງ. ວາລະສານ ຄວາມພິການ ແລະ ສຸຂະພາບ. 101963. 10.1016/j.dhjo.2025.101963.

Sommer, M., Caruso, B. A., Sahin, M., Calderon, T., Cavill, S., Mahon, T., & Phillips-Howard, P. A. (2016). ເວລາສໍາລັບການປະຕິບັດໃນລະດັບໂລກ: ການແກ້ໄຂຄວາມຕ້ອງການການຄຸ້ມຄອງສຸຂະອະນາໄມປະຈໍາເດືອນຂອງເດັກຍິງຢູ່ໃນໂຮງຮຽນ. ຢາ PLoS, 13(2), e1001962. https://journals.plos.org/plosmedicine/article?id=10.1371/journal.pmed.1001962

Southivong B, Ichikawa M, Nakahara S, Southivong C. ການສຶກສາຊຸມຊົນໃນທຸກພາກສ່ວນກ່ຽວກັບໂຣກຄວາມຄຽດຫຼັງຈາກປະສົບເຫດການສະເທືອນຂວັນ ແລະ ການຊ່ວຍເຫຼືອຂອງສັງຄົມໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ອົງການຈັດຕັ້ງສຸຂະພາບໂລກ Bull. 2013 ຕຸລາ 1;91(10:765-72. doi: 10.2471/BLT.12.115311.

ເສດຖະສາດການຄ້າ, n.d. ອັດຕາເງິນເຟີ້ຂອງລາວ. https://tradingeconomics.com/laos/inflation-cpi

ອົງການສະຫະປະຊາຊາດເພື່ອການພັດທະນາ (2022). ເອກະສານໂຄງການ: ການສະໜັບສະໜູນປະສິດທິພາບ ແລະ ປະສິດທິຜົນໃນຂະແໜງການ ລບຕ ປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍພັດທະນາແບບຍືນຍົງທີ 18 ແລະ ເສັ້ນທາງກ້າວສູ່ຄວາມປອດໄພ III (SPF III). https://www.undp.org/sites/g/files/zskgke326/files/2022-10/UXO%20Project%20Document%202022-2026_countersigned.pdf

ຢູນິເຊັບ (2005). ການປະເມີນຜົນໂຄງການສຶກສາຄວາມສ່ຽງ ລບຕ ທີ່ຮອງຮັບໂດຍ Unicef ໃນ ສປປ ລາວ. ເຈນີວາ: UNICEF. https://evaluationreports.unicef.org/GetDocument?documentID=5625&fileID=30760

ຢູນິເຊັບ (2025) "80 ສ່ວນຮ້ອຍຂອງໄວໜຸ່ມສາມາດລະບຸຄວາມສ່ຽງຈາກວັດຖຸລະເບີດ ແຕ່ວ່າໄວໜຸ່ມຈໍານວນຫຼາຍພັດເຮັດໃຫ້ຕົນເອງເປັນອັນຕະລາຍ." https://www.unicef.org/ukraine/en/press-releases/80-cent-adolescents-can-identify-explosive-ordnance-risks-too-many-expose-themselves

Van Deursen, A.J., & Van Dijk, J.A. (2019). ຊ່ອງຫວ່າງທາງດິຈິຕອນລະດັບທໍາອິດປ່ຽນຈາກຄວາມບໍ່ສະເໝີພາບໃນການເຂົ້າເຖິງທາງກາຍໄປສູ່ຄວາມບໍ່ສະເໝີພາບໃນການເຂົ້າເຖິງວັດຖຸ. ສື່ໃໝ່ ແລະ ສັງຄົມ, 21(2), 354-375. https://journals.sagepub.com/doi/full/10.1177/1461444818797082

Werner K, Kak M, Herbst CH, Lin TK. ບົດບາດຂອງການດູແລໂດຍພະນັກງານສາທາລະນະສຸກໃນຊຸມຊົນ ໃນສະພາບການຫຼັງການເກີດຂໍ້ຂັດແຍ້ງ: ການທົບທວນຢ່າງເປັນລະບົບ. ແຜນນະໂຍບາຍສຸຂະພາບ. 2023 Feb 13;38(2):261-274. doi: 10.1093/heapol/czac072.

ທະນາຄານໂລກ, ອັດຕາເງິນເຟີ້, ລາຄາຜູ້ບໍລິໂພກສໍາລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ [FPCPITOTLZGLAO], ຂໍ້ມູນມາຈາກ FRED, Federal Reserve Bank of St. https://fred.stlouisfed.org/series/FPCPITOTLZGLAO

ອົງການອະນາໄມໂລກ. (2018). ຄໍາແນະນໍາກ່ຽວກັບສຸຂາພິບານ ແລະ ສຸຂະພາບ. ໃນຄໍາແນະນໍາກ່ຽວກັບສຸຂາພິບານ ແລະ ສຸຂະພາບ (ໜ້າ 220-220). https://www.who.int/publications/i/item/978924151470

Wyper, R. B. (2012). ການສຶກສາຄົ້ນຄວ້າຜົນກະທົບດ້ານສຸຂະພາບຂອງຜູ້ເຄາະຮ້າຍຈາກລະເບີດຝັງດິນ/ລະເບີດບໍ່ທັນແຕກ ຕໍ່ກັບກຸ່ມຄົນພິການອື່ນ. ຜົນໄດ້ຮັບດ້ານສຸຂະພາບ ແລະ ຄຸນນະພາບຂອງຊີວິດ, 10(1), 121. https://link.springer.com/article/10.1186/1477-7525-10-121

Ye, Y., Li, Y., Jin, S., Huang, J., Ma, R., Wang, X., & Zhou, X. (2023). ໜ້າທີ່ຂອງຄອບຄົວ ແລະ ຄວາມຜິດກະຕິຈາກຄວາມກົດດັນຫລັງການບາດເຈັບໃນເດັກ ແລະ ໄວລຸ້ນ: ການວິເຄາະ meta. ການບາດເຈັບ, ຄວາມຮຸນແຮງ ແລະ ການລ່ວງລະເມີດ, 24(5), 3151-3169. https://journals.sagepub.com/doi/abs/10.1177/15248380221126182

Zhao, Q., Xu, S., Aziz, N., He, J., & Wang, Y. (2022). ວັດທະນະທໍາພາສາທ້ອງຖິ່ນ ແລະ ການນໍາໃຊ້ບໍລິການສາທາລະນະສຸກ ຂອງຊາວອົບພະຍົບໃນຊົນນະບົດ: ຄວາມເຂົ້າໃຈຈາກປະເທດຈີນ. Frontiers in Public Health, 10, 985343. https://www.frontiersin.org/journals/public-health/articles/10.3389/fpubh.2022.985343/full

# ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ ກ: ເຄື່ອງມືສໍາລັບການເກັບຂໍ້ມູນ

# ເອກະສານຊ້ອນທ້າຍ ກ: ເຄື່ອງມືສໍາລັບການເກັບກໍາຂໍ້ມູນ

## ແບບສອບຖາມສໍາລັບຜູ້ລອດຊີວິດຈາກ ລບຕ

**ເຄື່ອງມືສໍາພາດຜູ້ລອດຊີວິດຈາກ ລບຕ**

| ລດ. | ຄໍາຖາມ | ຄໍາຕອບ | ຂ້າມ |
|---|---|---|---|
| ຂໍ້ຄວາມສໍາລັບຜູ້ສໍາພາດ | | | |
| ຂອບໃຈຜູ້ເຂົ້າຮ່ວມ (ຜູ້ຖືກສໍາພາດ) ທີ່ຍິນຍອມເຂົ້າຮ່ວມການສໍາພາດ. ກະລຸນາບອກໃຫ້ຜູ້ເຂົ້າຮ່ວມຮັບຮູ້ວ່າທ່ານຈະເລີ່ມຈາກການອະທິບາຍເຖິງວິທີການ ແລະ ເຫດຜົນຂອງການສໍາພາດນີ້.<br>ການກະຕຸ້ນກ່ອນເລີ່ມສໍາພາດ:<br>● ບອກໃຫ້ຜູ້ເຂົ້າຮ່ວມຮູ້ວ່າ ພວກເຂົາບໍ່ຈໍາເປັນຕ້ອງຕອບໃຫ້ຖືກໃຈນັກຄົ້ນຄວ້າ ຫຼື ຜູ້ສໍາພາດ<br>● ອະທິບາຍເປົ້າໝາຍຂອງການຄົ້ນຄວ້າ ແລະ ແຜນການລາຍງານຂໍ້ມູນ<br>● ທົບທວນແບບຟອມຂໍຍິນຍອມການສໍາພາດ<br>● ອະທິບາຍແຜນການຮັກສາຂໍ້ມູນແບບປິດເປັນຄວາມລັບ<br>● ຂໍໃຫ້ຜູ້ເຂົ້າຮ່ວມໃຊ້ນາມສົມມຸດ<br>● ແຈ້ງໃຫ້ຜູ້ເຂົ້າຮ່ວມຮູ້ກ່ອນເຂົ້າສູ່ຫົວຂໍ້ທີ່ອາດມີຄວາມອ່ອນໄຫວ<br>● ແຈ້ງໃຫ້ຜູ້ຖືກສໍາພາດຮູ້ວ່າ ພວກເຂົາສາມາດ (a) ຂ້າມຄໍາຖາມການສໍາພາດ, (b) ຖາມຄໍາຖາມ, (c) ຢຸດ ຫຼື ອອກຈາກການສໍາພາດໃນເວລາໃດກໍໄດ້ | | | |
| 901 | ທ່ານໄດ້ທົບທວນໃບຍິນຍອມ ແລະໄດ້ຮັບການຍອມຮັບຈາກຜູ້ຖືກສໍາພາດເພື່ອສືບຕໍ່ການສໍາພາດແລ້ວບໍ? | ບໍ່ ........ 0<br>ແມ່ນ ........ 1 | |
| 999 | ຊື່ຜູ້ສໍາພາດ | ຊື່ ........ 1<br>ຊື່ ........ 2<br>ຊື່ ........ 3<br>ຊື່ ........ 4<br>ຊື່ ........ 5 | |
| ລດ. | ຄໍາຖາມ | ຄໍາຕອບ | ຂ້າມ |
| ໂມດູລ 1: ຄໍາຖາມດ້ານປະລິມານ | | | |
| ພາກທີ 1: ຂໍ້ມູນການສໍາພາດ | | | |

| | | | |
|---|---|---|---|
| ໝາຍເຫດສຳລັບຜູ້ສຳພາດ: ບັນທຶກຂໍ້ມູນກ່ຽວກັບສະຖານທີ່ກຳລັງສຳພາດ. ທ່ານບໍ່ຈຳເປັນຕ້ອງຖາມຂໍ້ມູນນີ້ຈາກຜູ້ຕອບ ເນື່ອງຈາກເປັນສ່ວນໜຶ່ງຂອງການຄັດເລືອກຕົວຢ່າງ, ແຕ່ຂໍໃຫ້ຖາມຜູ້ຕອບຖ້າທ່ານບໍ່ແນ່ໃຈ. | | | |
| 101 | ລະຫັດການສຳພາດ | | |
| 102 | ວັນທີສຳພາດ | ເພີ່ມວັນທີ (ວັນ, ເດືອນ, ປີ) | |
| 103 | ແຂວງ<br><br>ເລືອກໄດ້ຢ່າງດຽວ. | ສະຫວັນນະເຂດ.................................... 1<br>ຄຳມ່ວນ............................................. 2<br>ເຊກອງ .............................................. 3<br>ສາລະວັນ........................................... 4<br>ຊຽງຂວາງ.......................................... 5<br>ວຽງຈັນ............................................. 6<br>ອື່ນໆ (ລະບຸ)....................................... 99 | |
